# الإسلام للمبتدئين

تأليف : عبدالله بن عبدالمالك

ترجمة : أمو مصطفى فريدة بنت صالح

مراجعة: نور محمد صالح بن صالح

فريق اللغة لاو بموقع دار الإسلام

www.islamhouse.com

1445 - 2023

# ອິສລາມເບື້ອງຕົ້ນ

ໂດຍ: ອັບດຸລລໍຫ໌ ທຽນຮຸ່ງເຮືອງ

ກວດກາ: ຕຸກຕາ ແສງພະຈັນ

ຮຽບຮຽງ: ນູຣ ແສງສະຫວ່າງ

ເວັບໄຊດ໌ ອິສລາມມິກເຮົາສ໌ / ພາສາລາວ

www.islamhouse.com

2023 – 1445

بسم الله الرحمن الرحيم

ດ້ວຍພຣະນາມຂອງອັລລໍຫ໌

ຜູ້ຊົງເມດຕາ ຜູ້ຊົງກະລຸນາປານີສະເໝີ

# ສະລະບັນ

**ເລື່ອງ** **ເລກໜ້າ**


**1. ເປັນຫຍັງ ຕ້ອງເປັນອິສລາມ?**

1.1 ແລ້ວເປັນຫຍັງຕ້ອງເປັນສາສະໜາອິສລາມ?.................................................. 1

1.2 ອິສລາມ ແລະ ຄວາມສຸກແທ້ຈິງ.............................................................. 3

**2. ຄຳພີອັລກຸຣອານ ແລະ ສຸນນະຫ໌**.......................................................... 10

2.1 ລັກສະນະສາຄັນຂອງຄາພີອັລກຸຣອານ ..................................................... 10

2.2 ຄວາມມະຫັດສະຈັນທາງດ້ານວິທະຍາສາດໃນຄາພີອັລກຸຣອານ ............................. 13

**3. ສຸນນະຫ໌ ແນວທາງຂອງທ່ານສາດສະດາທູດ**.............................................. 20

3.1 ຄວາມສາຄັນຂອງການຍຶດໝັ້ນສຸນນະຫ໌ ແນວທາງຂອງທ່ານສາດສະດາທູດ :............. 21

**4. ເຕົາຮີດ ຄວາມເຊື່ອໃນຄວາມຫນຶ່ງດຽວຂອງພຣະເຈົ້າ** .................................. 25

4.1 ເຕົາຮີດ ຫລື ການຍອມຮັບຄວາມເປັນຫນຶ່ງດຽວຂອງພຣະເຈົ້າມີ 3 ສ່ວນ ໄດ້ແກ່ :....... 25

4.2 **ຫລັກສັດທາ 6 ປະການ** .................................................................. 29

4.2.1 ສັດທາເຊື່ອວ່າອັລລໍຫ໌ເປັນພຣະເຈົ້າ..................................................... 29

4.2.2 ການສັດທາຕໍ່ເທວະທູດ (ມາລາອິກະຫ໌) ............................................... 31

4.2.3 ການສັດທາຕໍ່ຄຳພີ ........................................................................ 32

4.2.4 ການສັດທາຕໍ່ສາດສະນະທູດ.............................................................. 34

4.2.5 ການສັດທາຕໍ່ມື້ສິ້ນໂລກ.................................................................. 35

4.2.6 ການສັດທາເຊື່ອຕໍ່ການກຳນົດຂອງພຣະເຈົ້າ ............................................ 36

4.3 **ຫລັກການອິສລາມ ພາກປະຕິບັດ**....................................................... 38

4.3.1 ການປະຕິຍານຕົນ ......................................................................... 38

4.3.2 ການລະມາດ................................................................................ 39

4.3.3 ພາສີຊະກາດ ............................................................................... 39

4.3.4 ການຖືສິ້ນອົດໃນເດືອນຣໍມາດອນ ....................................................... 40

4.3.5 ການໄປເຮັດຮັຈຫ໌ ........................................................ 40
**5. ພຣະນາມ ຊື່ຂອງພຣະເຈົ້າທີ່ງົດງາມ** ........................................................ 42
5.1 ເຮົາມາຮູ້ຈັກຊື່ພຣະນາມຂອງພຣະເຈົ້າບ້າງສ່ວນ ........................................................ 44
5.2 ຂໍ້ດີຂອງການຮູ້ຊື່ພຣະນາມຂອງອັລລໍຫ໌ ........................................................ 48
**6. ສິນທຳ ແລະ ສາມັນສຳນຶກໃນໃຈ (ອັລ-ອິຫ໌ຊານ)** ........................................................ 52
6.1 ສິນລະທຳທີ່ສາຄັນ........................................................ 53
6.2 ຄວາມອົດທົນ (ຊ໊ອບຣ໌) ........................................................ 55
6.3 ຄວາມບໍລິສຸດໃຈ "ອັລ-ອິກລ້າສ" ........................................................ 56
6.4 ການມອບຫມາຍວາງໃຈຕໍ່ອັລລໍຫ໌ "ການຕະວັກກັນ" ........................................................ 57
6.5 ການຂອບໃຈ "ຊຸໂກຣ" ........................................................ 59
**7. ອິບາດະຫ໌** ........................................................ 62
7.1 ການເຮັດຄວາມດີ ແລະ ພິທີທາງສາສະໜາ........................................................ 62
7.2 ການເຮັດຄວາມສະອາດ ແລະ ການອາບນ້ຳລະມາດ........................................................ 64
7.2.1 ການເຮັດຄວາມສະອາດໃນຮູບແບບຕ່າງໆ........................................................ 65
7.2.2 ວິທີ່ການອາບນ້າລະມາດ (ຍົກຮະດັສນ້ອຍ)........................................................ 66
7.2.3 ວິທີ່ອາບນ້າ (ຍົກຮະດັສໃຫຍ່) ........................................................ 66
**8. ການລະມາດ**........................................................ 67
8.1 ຂໍ້ດີຂອງການລະມາດ :........................................................ 67
8.2 ລະບຽບເງື່ອນໄຂທີ່ຕ້ອງສຳນຶກຄິດກ່ອນທີ່ຈະລະມາດ :........................................................ 68
8.3 ວິທີການລະມາດ........................................................ 70
8.4 ສາເຫດທີ່ເຮັດໃຫ້ເສຍການລະມາດ ........................................................ 72
**9. ການຈ່າຍພາສີຊະກາດ**........................................................ 76
9.1 ຈ່າຍໃຫ້ໃຜ?........................................................ 76
9.2 ພາສີຊະກາດປະເພດຕ່າງ ໆ :........................................................ 77

9.3 ເຫດຜົນທີ່ຕ້ອງມີການບັງຄັບຈ່າຍພາສີຊະກາດ : ........................................ 78
**10. ການຖືສິ້ນອົດໃນເດືອນຣໍມາດອນ** ........................................ 79
10.1 ຄວາມປະເສີດຂອງເດືອນຣໍມາດອນ : ........................................ 79
10.2 ຂໍ້ດີຂອງການຖືສິ້ນອົດ : ........................................ 80
10.3 ສິ່ງທີ່ເຮັດໃຫ້ເສຍການຖືສິ້ນອົດ : ........................................ 81
10.4 ຜູ້ທີ່ໄດ້ຮັບການຍົກເວັ້ນບໍ່ໃຫ້ຖືສິ້ນອົດ : ........................................ 82
10.5 ຂໍ້ຕັດສິນສາຫລັບຜູ້ທີ່ບໍ່ຖືສິ້ນອົດໃນເດືອນຣໍມາດອນ : ........................................ 82
**11. ການປະຕິບັດພິທີຮັດ** ........................................ 83
**12. ການດະອະຫ໌ ເຊີນຊວນສູ່ສາສະຫນາຂອງພຣະເຈົ້າ** ........................................ 85
12.1 ຄວາມສາຄັນຂອງການເຜີຍແຜ່ສາສະຫນາອິສລາມ ........................................ 87
**13. ຊີວະປະຫວັດທ່ານສາດສະດາທູດມຸຮັມມັດ** ........................................ 88
13.1 ການເຜີຍແຜ່ທີ່ເມືອງມັກກະຫ໌ແບ່ງອອກເປັນ 2 ໄຍລຍະ ຄື : ........................................ 90
13.2 ການເຜີຍແຜ່ອິສລາມໃນເມືອງມາດີນະຫ໌ ........................................ 91
13.3 ການພິສິດເມືອງມັກກະຫ໌ ........................................ 93
13.4 ເຫດການຮັດອາລາ ........................................ 94
13.5 ຄວາມສາພັນຂອງທ່ານສາດສະດາທູດມູຮັມຫມັດ ແລະ ພຣະເຢຊູ ........................................ 96
13.6 ທ່ານສາດສະດາທູດ "ມຸຮັມມັດ" ໃນຖານະບຸກຄົນຜູ້ມີອິດທິພົນອັນດັບຫນຶ່ງຂອງໂລກ. . 98
13.7 ຂໍ້ມູນການພັນລະນາຂອງທ່ານສາດສະດາທູດມຸຮາມັດ. ........................................ 98

## 1. ເປັນຫຍັງ ຕ້ອງເປັນອິສລາມ?

ອິສລາມເປັນສາສະໜາທີ່ຂະຫຍາຍແລະເຕີບໃຫຍ່ໄວທີ່ສຸດໃນໂລກຕາມການລາຍງານຂອງໂລກຕະເວັນຕົກ ແລະ ອາເມຣິກາ

### 1.1 ແລ້ວເປັນຫຍັງຕ້ອງເປັນສາສະໜາອິສລາມ?

ເພາະອິສລາມເປັນສາສະໜາດຽວທີ່ມີລັກການໃຫ້ຄວາມເປັນໜຶ່ງຕໍ່ພຣະເຈົ້າຢ່າງສົມບູນແບບ ໂດຍປະຕິເສດສິ່ງຄ່ຽງຄູ່ອື່ນໆ ກັບພຣະເຈົ້າທັ້ງຫມົດ ຄຳພີອັລກຸຣອານກ່າວໄວ້ວ່າ "ຫາກໃນຟາກຟ້າ ແລະ ໂລກມີພຣະເຈົ້າອື່ນນອກຈາກອັລລໍຫ໌ ທ້ອງຟ້າ ແລະ ໂລກກໍ່ຈະຖືກທຳລາຍ"

ອິສລາມຍັງເປັນສາສະໜາທີ່ຊັດເຈນທີ່ສຸດໃນການໃຫ້ຄວາມຫມາຍກັບຄາວ່າ **'ພຣະເຈົ້າທີ່ແທ້ຈິ່ງ'** ທີ່ບໍ່ມີຜູ້ໃດຄູ່ຄວນແກ່ການບູຊາກາບໄຫວນອກຈາກພຣະອົງ 'ອັລລໍຫ໌' ພຣະອົງໄດ້ກ່າວໄວ້ໃນຄຳພີອັລກຸຣອານວ່າ "ຢ່າໄດ້ສັດທາພຣະເຈົ້າສອງພຣະອົງ ເພາະແທ້ຈິ່ງພຣະອົງຄືພຣະເຈົ້າພຽງອົງດຽວ ດັ່ງນັ້ນຈົ່ງມາຫາເຮົາເຖີດ"

ຄາພີຂອງພຣະອົງຄື **'ອັລກຣຸອານ'** ເປັນຄຳເວົ້າຂອງພຣະເຈົ້າທີ່ພຣະອົງໃຫ້ສາດສະດາທູດມູຮຳຫມັດມາເຜີຍແຜ່ ເປັນຄຳພີເລັ່ມດຽວທີ່ບໍ່ມີການປ່ຽນແປງ ຫລື ດັດແປງ ຫລື ສັງຂະຍະນາມາກ່ອນ ເປັນຄຳພີທີ່ບໍ່ມີຄວາມຂັດແຍ້ງພາຍໃນລະຫວ່າງຖອຍຄຳສຳນວນຕ່າງໆ ພຣະອົງກ່າວວ່າ "ເຮົາຄືຜູ້ປະທານອັລກຸຣອານ ແລ້ວເຮົາຈະເປັນຜູ້ຮັກສາມັນເອງ" ນອກຈາກນີ້ຄາພີອັລກຣຸອານຫຍັງມີສັດຈະທຳຄວາມຈິ່ງທີ່ສອດຄ້ອງກັບວິທະຍາສາດສະໄຫມ່ຢ່າງຫລວງຫລາຍ

ສາດສະດາທູດ (ພາສາອາຫຼັບເອີ້ນວ່າ ນະບີ) ຂອງພຣະເຈົ້າຄື **'ມູຮຳຫມັດ'** ເຊິ່ງເປັນມະນຸດຜູ້ທີ່ດີເລີດປະເສີດທີ່ສຸດ ຊີວະປະຫວັດຂອງທ່ານເປັນຫລັກຖານທີ່ດີທີ່ສຸດຕໍ່ຄວາມດີເລີດນີ້ ແມ້ແຕ່ສັດຕູຂອງທ່ານຍັງຮັບຮ້ອງເຖິງມາລະຍາດສັດຈະທຳອັນດີງາມຂອງທ່ານ ອັລກຸຣອານກ່າວວ່າ "ພວກເຂົາບໍ່ໄດ້ພິຈາລະນາຄາພີອັລກຸຣອ່ານແດ່ວ່າ ຫລືຫົວໃຈຂອງພວດເຂົາຖືກປິດພະນຶກເອົາໄວ້" ໂອງການນີ້ກຳລັງສອນໃຫ້ເຮົາໃຊ້ສະຕິປັນຍາມັນສະມອງ ໃນການພິຈາລະນາໃຊ້ຄວາມຄິດ ແລະບົ່ງບອກວ່າສາສະໜາອິສລາມນັ້ນດຳລົງຢູ່ໃນຫລັກຖານທີ່ຖືກຕ້ອງ

ອິສລາມຄືສາສະໜາແຫ່ງທາມະຊາດ ອັລລໍຫ໌ໄດ້ກ່າວວ່າ **"ພວກທ່ານຈົ່ງຫັ່ນຫນ້າສູ່ສາສະຫນາອັນທີ່ຖືກຕ້ອງແລະທ່ຽງແທ້ ອັນເປັນທາມະຊາດທີ່ອັລລໍຫ໌ພຣະເຈົ້າໄດ້ສ້າງມະນຸດດ້ວຍທຳມະຊາດນັ້ນ"**

ການສັດທາຕໍ່ພຣະເຈົ້າ ແລະ ຍອມຮັບໃນຄວາມເປັນພຣະເຈົ້າພຽງຫນຶ່ງດຽວຂອງພຣະອົງຄືພື້ນຖານທີ່ມີໃນສ່ວນເລິກໃນຫົວໃຈຂອງມະນຸດທຸກຄົນ ສ່ວນຄວາມເຊື່ອອື່ນທີ່ມັນນອກເຫນືອຈາກ

ນີ້ແມ່ນຄວາມເຊື່ອທີ່ມັນແຊກເຂົ້າມາຈາກສາເຫດສະພາບແວດລ້ອມທີ່ຄົນອາໄສຢູ່ ດັ່ງທີ່ທ່ານນະບີມູຮຳຫມັດກ່າວວ່າ "ເດັກນ້ອຍທຸກຄົນນັ້ນຈະຖືກກຳເນີດຕາມທຳມະຊາດ ຫລັງຈາກນັ້ນຜູ້ເປັນພໍ່ແມ່ຈະເປັນຄົນສ້າງໃຫ້ເດັກນັ້ນເປັນ ຊາວຍິວ ຫລື ຄຣິດສະຕຽນ ຫລື ລັດທິບູຊາໄຟພາຍຫລັງ" ຜູ້ທີ່ຍອມຮັບເຊື່ອຖືສາດສະໜາອິດສະລາມເອີ້ນວ່າ **'ມຸສລິມ'**

ສາສະຫນາອິສລາມແມ່ນສາສະຫນາທີ່ຮຽກຮ້ອງໃຫ້ມະນຸດໄປສູ່ຄວາມໂອບອ້ອມອາລີແກ່ຜູ້ອື່ນ ຮັກແພງ ແລະ ມອບສິ່ງດີໆ ໃຫ້ແກ່ຜູ້ອື່ນ ຄືດັ່ງທ່ານນະບີກ່າວວ່າ **"ຈົ່ງປະຕິບັດຄົນາມະນຸດດ້ວຍມາລະຍາດທີ່ດີງາມ"**

ອິສລາມສອນໃຫ້ຍິ້ມແຍ້ມ ມີໃບຫນ້າທີ່ແຈ່ມໃສກັບຄົນອື່ນຢ່າງຈິ່ງໃຈ ແລະປະຕິບັດນາຄົນອື່ນຢ່າງອ່ອນໂຍນຖອມຕົນ ແລະ ໃຫ້ກຽດ ອັລກຸຣອານກ່າວໄວ້ວ່າ **"ຈົ່ງເວົ້າຈານາຜູ້ຄົນດີໆ"**

ອິສລາມສອນໃຫ້ເຮົາມີມາລະຍາດທີ່ງົດງາມ ມີຄວາມປະພຶດທີ່ດີກັບຜູ້ຄົນ ທ່ານນະບີມູຮັມຫມັດກ່າວວ່າ **"ເຮົານັ້ນຖືກສົ່ງມາເພື່ອເຕີ່ມເຕັ້ມມາລະຍາດທີ່ດີໃຫ້ສົມບູນ"**

ສາສະຫນາອິສລາມຍັງສອນໃຫ້ເຮົານັ້ນໃຫ້ກຽດກັບຜູ້ໃຫຍ່ແລະຜູ້ສູງອາຍຸ ທ່ານສາດສະດາທູດກ່າວວ່າ **"ຄົນທີ່ບໍ່ມີຄວາມເມດຕາຕໍ່ເດັກ ບໍ່ໃຫ້ກຽດຜູ້ໃຫຍ່ ຍອມບໍ່ແມ່ນພວກຂອງເຮົາ!"**

ອິສລາມຍັງສອນໃຫ້ເຮົາເຮັດດີກັບຄອບຄົວ ສາມີ ພັນລະຍາ ແລະ ລູກໆ ທ່ານນາບີກ່າວວ່າ **"ຄົນທີ່ດີທີ່ສຸດຄື ຄົນທີ່ດີທີ່ສຸດກັບຄົວຄອບຕົວເອງ"**

ອິສລາມຫຍັງສອນໃຫ້ເຮົາມີຄວາມເສຍສະຫລະ ບໍລິຈາກໃຫ້ແກ່ຜູ້ອ່ອນແອ ຜູ້ທຸກຍາກ ແລະ ຊ່ວຍເຫລືອຜູ້ທຸກຍາກຂັດສົນ ແມ່ຮ້າງ ອັລລໍຮ໌ໄດ້ກ່າວໃນຄຳພີອັລກຸຣອານວ່າ **"ຜູ້ສັດທາທັ້ງຫລາຍຈົ່ງບໍລິຈາກ ຈາກສິ່ງທີ່ເຮົາປະທານໃຫ້ແກ່ທ່ານ ກ່ອນທີ່ບໍ່ມີການຄ້າຂາຍ ຫລື ຄວາມເປັນມິດ ຄວາມຊ່ວຍເຫລືອໃດໆ ໃນມື້ນັ້ນ"**

ອິສລາມຍັງສອນເລື່ອງຄວາມເທົ່າທຽມລະຫວ່າງມະນຸດທຸກຄົນ ບໍ່ມີການແບ່ງແຍກໃດໆ ລະຫວ່າງຄົນຜິວຂາວ ຜິວດຳ ຄົນລາວ ຄົນຝຣັ່ງ ຄົນຕ່າງຊາດ ສິ່ງດຽວທີ່ຈະແບ່ງແຍກລະດັບຊົນຊັ້ນໄດ້ກໍ່ຄືຄວາມຍຳເກງຕໍ່ພຣະເຈົ້າ ທ່ານນະບີມູຮຳຫມັດກ່າວວ່າ "ມະນຸດທັ້ງຫລາຍ ພຣະເຈົ້າຂອງພວກທ່ານນັ້ນມີຫນຶ່ງດຽວ ບັນພະບຸລຸດຂອງທ່ານກໍ່ມີຫນຶ່ງດຽວ ທຸກໆຄົນເປັນລູກຫລານອາດັມ ອາດັມນັ້ນຖືກສ້າງມາຈາກດິນ ຄົນອາຫຣັບກໍ່ບໍ່ໄດ້ແມ່ນວ່າຈະດີໄປກວ່າຄົນທີ່ບໍ່ເປັນຄົນອາຫຣັບ ຄົນທີ່ບໍ່ແມ່ນຄົນອາຫຣັບກໍ່ບໍ່ແມ່ນຄົນດີກວ່າຄົນທີ່ເປັນຄົນອາຫຣັບ ຄົນຜິວຂາວກໍ່ບໍ່ໄດ້ແມ່ນວ່າຈະດີໄປກວ່າ

ຄົນຜິວດໍາ ຄົນຜິວດໍາກໍ່ບໍ່ໄດ້ແມ່ນວ່າຈະດີໄປກວ່າຄົນຜິວຂາວ ຍົກເວັ້ນດ້ວຍຄວາມຍໍາເກງຕໍ່ພຣະເຈົ້າທີ່ມີໃນຕົວຂອງເຂົາຄົນນັ້ນໆ"

ອິສລາມເປັນສາສະໜາທີ່ຕັ້ງຈຸດປະສົງໃນການມີຊີວິດຢູ່ວ່າ **"ເຮົາບໍ່ໄດ້ສ້າງມະນຸດ ແລະ ຜີ (ຈິນ) ມາເພື່ອສິ່ງອື່ນໃດ ນອກຈາກເພື່ອບູຊາເຄົາລົບຕໍ່ພຣະເຈົ້າ"**

ອິສລາມສອນໃຫ້ເຮົານັ້ນມີສຸຂະພາບທີ່ດີແຂງແຮງໂດຍການກິນອາຫານທີ່ດີທີ່ ທ່ານນະບີມູຮໍາໝັດສອນວ່າ "ມະນຸດນັ້ນມີທ້ອງເປັນພາຊະນະທີ່ໂຫດຮ້າຍທີ່ສຸດ ມະນຸດນັ້ນພຽງພໍແລ້ວທີ່ຈະກິນອາຫານພຽງເລັກນ້ອຍເພື່ອໃຫ້ມີເຫື່ອແຮງໃນການໃຊ້ຊີວິດຕໍ່ໄປ ແຕ່ຖ້າຫາກເຮັດແນວນັ້ນບໍ່ໄດ້ກໍ່ໃຫ້ຈົ່ງກະເພາະໄວ້ເປັນສາມສ່ວນ ໜຶ່ງສ່ວນສາມຂອງອາຫານ ແລະ ໜຶ່ງສ່ວນສາມຂອງນໍ້າ ແລະ ໜຶ່ງສ່ວນສາມຂອງອາກາດຫາຍໃຈກໍ່ພໍ"

ອິສລາມນັ້ນຍັງສົ່ງເສີມໃຫ້ອອກກໍາລັງກາຍ ເຊັ່ນ ລອຍນໍ້າ ຍິງທະນູ ຂີ່ມ້າ ແລະ ຫ້າມບໍ່ໃຫ້ຫຍຸ້ງກ່ຽວກັບສິ່ງມຶນເມົາ ການຜິດປະເວນີ ການສູບຢາສູບ ອັລລໍຫ໌ໄດ້ກ່າວວ່າ **"ພຣະອົງຊົງອານຸຍາດສິ່ງທີ່ດີ ແລະ ບໍ່ອານຸຍາດໃນສິ່ງທີ່ບໍ່ດີ"**

ດ້ວຍຄໍາສອນອັນປະເສີດເຫລົ່ານີ້ ອິສລາມຈຶ່ງເປັນສາສະໜາທີ່ຂະຫຍາຍໄດ້ຢ່າງວ່ອງໄວ ແລະກວ້າງຂວາງທີ່ສຸດໃນໂລກ ເຖິງອາດຈະປະເຊີນກັບກະແສສ້າງຄວາມລັງກຽດຕໍ່ສາສະໜາອິສລາມທົ່ວໂລກກໍ່ຕາມ

## 1.2 ອິສລາມ ແລະ ຄວາມສຸກແທ້ຈິ່ງ

ຄວາມສຸກນັ້ນແຕກຕ່າງກັນໄປໃນແຕ່ລະຄົນ ບ້າງຄົນນັ້ນຄວາມສຸກ ສາມາດເບິ່ງໄດ້ຈາກຊັບສິ້ນເງິນທອງ ບ້າງຄົນເບິ່ງໄດ້ຈາກຄວາມສຸກໃນການມີຊື່ສຽງ ບ້າງຄົນເບິ່ງໄດ້ຈາກຄວາມສຸກທີ່ມີອໍານາດ ມີພຽງມະນຸດສ່ວນນ້ອຍເທົ່ານັ້ນທີ່ຮູ້ຄວາມໝາຍຂອງຄວາມສຸກທີ່ແທ້ຈິ່ງ

ຄວາມສຸກທີ່ແທ້ຈິ່ງ ແມ່ນຢູ່ໃນການນອບນ້ອມຕໍ່ພຣະເຈົ້າ ແລະ ຢູ່ໃນການປະຕິບັດເຊື່ອຟັງຕໍ່ພຣະເຈົ້າ ພຣະເຈົ້າກ່າວວ່າ **"ຜູ້ທີ່ຕ້ອງການສິ່ງດີໆ ໃນໂລກນີ້ ແທ້ຈິ່ງແລ້ວພຣະເຈົ້າມີສິ່ງດີທັ້ງໂລກນີ້ແລະໂລກໜ້າ"**

ດັ່ງນັ້ນ ທ່ານຈະບໍ່ພົບຄວາມສຸກໃດໆ ຍົກເວັ້ນການປະຕິບັດຕົນຢ່າງດີແລະສົມບູນແບບເພື່ອພຣະເຈົ້າຕາມວິທີທາງທີ່ພຣະເຈົ້າຕ້ອງການ ດັ່ງທີ່ພຣະອົງໄດ້ກ່າວໄວ້ວ່າ **"ດັ່ງນັ້ນ ຜູ້ໃດທີ່**

**ປະຕິບັດຕາມທາງຂອງເຮົາ ເຂົານັ້ນຈະບໍ່ລົງທາງ ແລະຈະພົ້ນທຸກ ແລະຜູ້ໃດທີ່ຜິ້ນຫຼັງອອກຈາກການລໍາລຶກເຖິ່ງເຮົາ ການໃຊ້ຊີວິດຂອງເຂົາກໍ່ຈະຄັບແຄບ"**

ດັ່ງນັ້ນ ທຸກໆຄົນ ທີ່ນອບນ້ອມຕໍ່ພຣະເຈົ້າແລະປະຕິບັດຕາມວິທີທາງຂອງພຣະເຈົ້າ ຈຶ່ງຈະເປັນຜູ້ຄົນທີ່ຫ່າງໄກຈາກຄວາມທົນທຸກທີ່ສຸດ ບໍ່ວ່າຈະໂລກນີ້ແລະໂລກຫນ້າ ສ່ວນໃຜທີ່ອອກຫ່າງຈາກການຍອມຮັບວ່າຕົນເອງເປັນບ່າວຂອງພຣະເຈົ້າ ເຂົານັ້ນກໍ່ຈະໃຊ້ຊີວິດຢ່າງທຸກຍາກລາບາກແລະຄັບແຄບ ຈະເຫັນວ່າສະຖິຕິຂອງຜູ້ທີ່ຂ້າຕົວຕາຍຫລາຍທີ່ສຸດນັ້ນຢູ່ໃນກຸ່ມຄົນທີ່ບໍ່ມີສາສະຫນາ ບໍ່ນັບຖືພຣະເຈົ້າ ຫລືນັບຖືພຣະເຈົ້າຢ່າງຫລວງຫລາຍແບບຜິດໆ ຫລາຍກວ່າຜູ້ທີ່ນັບຖືສາສະຫນາອິສລາມ ເຖິງຈະແມ່ນວ່າປະເທດຂອງຄົນທີ່ບໍ່ເຊື່ອສັດທາໃນພຣະເຈົ້າ ຈະຮັ່ງມີລໍາລວຍພຽງໃດກໍ່ຕາມ ແລະ ມີສິ່ງທີ່ອໍານວຍຄວາມສະດວກຢ່າງຫລວງຫລາຍກໍ່ຕາມ

ພຣະເຈົ້າໄດ້ກ່າວວ່າ **"ຜູ້ທີ່ເຮັດຄວາມດີບໍ່ວ່າຈະເປັນຜູ້ຊາຍຫລືຜູ້ຫຍິງ ແລະສັດທາ ເຮົາຈະໃຫ້ເຂົາໄດ້ໃຊ້ຊີວິດທີ່ດີ ແລະ ຕອບແທນເຂົາດ້ວຍສິ່ງທີ່ດີທີ່ເຂົາເຮັດອີກ"**

ດັ່ງນັ້ນ ຈຶ່ງມີ 2 ເງື່ອນໄຂເພື່ອໃຫ້ເຮົາໄປສູ່ຄວາມສຸກທີ່ແທ້ຈິງ :

1. ສັດທາຕໍ່ພຣະເຈົ້າ

2. ເຮັດຄວາມດີ

ທ່ານຈະເຫັນວ່າການປະຕິບັດຕົນທີ່ດີຕາມຄາສັ່ງຂອງພຣະເຈົ້ານັ້ນລ້ວນແຕ່ນາມາເຊິ່ງຄວາມສຸກ ການອ່ານຄໍາພີອັລກຣຸອານຫລືຟັງກໍ່ໄດ້ຄວາມສຸກ ການລະມາດກໍ່ໄດ້ຄວາມສຸກ ການຖືສິ້ນອົດ (ອົດອາຫານ) ການບໍລິຈາກ ຫລື ການປະກອບພິທີຮັດກໍ່ລ້ວນແຕ່ໄດ້ຄວາມສຸກທັ້ງນັ້ນ ແຕ່ກໍ່ຕ້ອງປະຕິບັດສິ່ງເຫລົ່ານີ້ຕາມທີ່ພຣະອົງໄດ້ສັ່ງສອນເອົາໄວ້

ທ່ານສາດສະດາທູດແມ່ນຄົນທຸກຍາກ ລູກໆ ຂອງທ່ານສ່ວນໃຫຍ່ເສຍຊີວິດກ່ອນທ່ານອີກ ທ່ານຖືກພີ່ນ້ອງບ້ານເມືອງຂອງທ່ານຂັບໄລ່ແລະເຮັດສົງຄາມ ເຖິ່ງຈະເປັນແນວນັ້ນກໍ່ຕາມທ່ານຫຍັງເປັນຜູ້ທີ່ມີຄວາມສຸກທີ່ສຸດໃນໂລກ ທ່ານສາດສະດາທູດກ່າວວ່າ **"ຄວາມສຸກຂອງຂ້ອຍຢູ່ທີ່ການລະມາດ"** ນັ້ນໝາຍຄວາມວ່າການລະມາດ (ເຊິ່ງຫມາຍເຖິງ ການຂໍພອນຕໍ່ພຣະເຈົ້າ) ສາຫລັບທ່ານສາດສະດາທູດແລ້ວເປັນຄວາມສຸກທີ່ສຸດໃນຊີວິດຂອງທ່ານ ຖ້າຫາກມີເລື່ອງຮ້າຍບໍ່ດີຄັດຄ້ອງໃຈໃດໆທ່ານຈະເຂົ້າຫາການລະມາດ ເພາະທ່ານເຈີຄວາມສຸກໃນການລະມາດ

ມີສະຫາຍ (ຊໍຮາບະຫ໌) ທ່ານຫນຶ່ງກ່າວວ່າເມື່ອທ່ານຮູ້ສຶກອຸກໃຈທ່ານກໍ່ຈະໄປລະມາດບ້າງເພື່ອທ່ານໄດ້ເອີ້ຍກ່າວໄປສູ່ຜູ້ຄົນທີ່ລະມາດວ່າ **"ຈົ່ງຮຽກຮ້ອງຕົວເຮົາໄປສູ່ຄວາມສະຫງົບສຸກເຖີດ ດ້ວຍການລະມາດ"**

ມະນຸດນັ້ນຕ້ອງພົບເຈີປັນຫາໃນຊີວິດຢ່າງຫລວງຫລາຍ ແຕ່ເຮົາຄວນປະເຊີນຫນ້າກັບປັນຫາສິ່ງເຫລົ່າດ້ວຍການເຂົ້າຫາຜູ້ເປັນພຣະເຈົ້າ ດ້ວຍກັບການປະຕິບັດຕົວທີ່ດີກັບພຣະອົງ ທ່ານນະບີກ່າວວ່າ **"ສະພາບປ່າວຄົນຫນຶ່ງຈະໄດ້ໃກ້ຊິດກັບພຣະເຈົ້າຫລາຍທີ່ສຸດນັ້ນກໍ່ຄືລະຫວ່າງກົມກາບຕໍ່ພຣະເຈົ້າ"** ດັ່ງນັ້ນ ຈົ່ງຂໍຕໍ່ພຣະເຈົ້າໃຫ້ຫລາຍໆ ດ້ວຍການຂໍພອນນີ້ເອງແຫລະ ປັນຫາຊີວິດຢ່າງຫລວງຫລາຍກໍ່ຈະຖືກຈັດການໄປ

ທ່ານນະບີນັ້ນຈະມັກເບິ່ງໂລກໃນແງ່ດີຢູ່ສະເຫມີ ທ່ານເຄີຍເອີ້ຍກ່າວໄວ້ວ່າ **"ຜູ້ສັດທານັ້ນຫນ້າແປກຫລາຍ ທຸກໆ ເລື່ອງຍອມມີເລື່ອງດີສະເຫມີສໍາຫລັບເຂົາ ຜູ້ສັດທາຫາກເຂົາໄດ້ເຈີຄວາມສຸກເຂົາກໍ່ຈະຂອບໃຈເຂົາກໍ່ຈະໄດ້ຄວາມດີ ຫາກພົບເຈີເລື່ອງຮ້າຍເຂົາກໍ່ອົດທົນເຂົາກໍ່ຈະໄດ້ຮັບຄວາມດີ"**

ດັ່ງນັ້ນ ຜູ້ທີ່ນ້ອບນອມຕໍ່ພຣະເຈົ້າເປັນມຸສລິມກໍ່ຈະໃຊ້ຊີວິດຢ່າງມີຄວາມສຸກຢູ່ຢ່າງສະເຫມີເຖິງອາດຈະພົບເຈີໄພພິບັດເລື່ອງຮ້າຍໆ ເລື່ອງໃດກໍ່ຕາມ ເພາະມຸສລິມຜູ້ທີ່ນັບຖືອິສລາມນັ້ນຍອມສັດທາຕໍ່ກົດກໍາຫນົດເລື່ອງດີແລະບໍ່ດີຈາກພຣະເຈົ້າ ແລະພໍໃຈກັບສິ່ງທີ່ພຣະເຈົ້າກໍາຫນົດໃຫ້ ນີ້ຄືສາເຫດຫນຶ່ງທີ່ນໍາໄປສູ່ຄວາມສຸກທີ່ແທ້ຈິງ ຄວາມພຶງພໍໃຈທີ່ພົບເຈີໃນຊີວິດປະຈາວັນນັ້ນແຫລະຄືເສັ້ນທາງໄປສູ່ຄວາມສຸກ

ຄົນແບບນີ້ມັກເບິ່ງໂລກໃນແງ່ບວກເບິ່ງຂ້າມຄວາມມືນມອງໃນຊີວິດ ເພາະຜູ້ສັດທາຍອມຮູ້ດີວ່າເລື່ອງຮ້າຍທີ່ພົບເຈີບໍ່ໄດ້ຕັດສິ້ນຊີວິດ ແລະບໍ່ສາມາດຫລີກພົ້ນໄດ້ ສ່ວນສິ່ງທີ່ພຣະເຈົ້າບໍ່ໄດ້ກໍາຫນົດໄວ້ໃຫ້ຕ້ອງພົບເຈີເຂົາກໍ່ບໍ່ສາມາດພົບເຈີຫລືໄຂ້ວຄວ້າມັນໄດ້

ນອກຈາກນີ້ຄວາມສຸກຕາມຄາສອນຂອງອິສລາມຍັງໄດ້ມາຈາກການປະຕິບັດຕົວທີ່ດີນາຜູ້ອື່ນ ການພົບເຈີຜູ້ຄົນດ້ວຍໃບຫນ້າທີ່ຍິ້ມແຍມແຈ່ມໃສ **'ການຍິ້ມ'** ແມ່ນການບໍລິຈາກປະເພດຫນຶ່ງຕາມຄໍາສອນອິສລາມ ທ່ານສາສະດາທູດກ່າວວ່າ **"ການຍິ້ມຂອງທ່ານທີ່ໃຫ້ພີ່ນ້ອງມຸສລິມຂອງທ່ານນັ້ນຖືວ່າເປັນການບໍລິຈາກທານ"** ນັ້ນກໍ່ຍ້ອນການຍິ້ມນັ້ນສ້າງຄວາມສາພັນທີ່ດີໃຫ້ເຊິ່ງກັນແລະກັນ

ການຍິ້ມແຍມແມ່ນຫມາຍເຖິງຄວາມສະຫງົບສຸກ ຄົນທີ່ມັກຍິ້ມແຍມແຈ່ມໃສຄືຜູ້ທີ່ມີແຕ່ຄົນຮັກ ໃຜພົບເຫັນກໍ່ມີຄວາມຜ່ອນຄາຍອົບອຸ່ນ ແລະເຫັນຄວາມສຸກຢູ່ໃບຫນ້າຂອງເຂົາ ການຍິ້ມ

ແຍມນັ້ນຈະສິ່ງຜົນຕໍ່ຄວາມຮັກທີ່ກົ້ມກ່ຽວນຳຜູ້ອື່ນສ້າງຄວາມສຸກສູ່ຜູ້ສັດທາ ດັ່ງທີ່ທ່ານສາດສະດາທູດກ່າວວ່າ **"ສິ່ງທີ່ພຣະເຈົ້າຮັກຫລາຍປະການຫນຶ່ງ ກໍ່ຄືການສ້າງຄວາມສຸກສູ່ຫົວໃຈຂອງຜູ້ສັດທາ ພະຍາຍາມກຳຈັດຄວາມມືນມອງເຊິ່ງກັນແລະກັນ ຊົດໃຊ້ຫນີ້ໃຫ້ແກ່ກັນ ລ້ຽງອາຫານໃຫ້ແກ່ກັນ"**

ຄວາມສຸກອີກປະການຫນຶ່ງທີ່ອິສລາມສອນຄື 'ການທັກທາຍເຊິ່ງກັນແລະກັນເມື່ອພົບເຈີກັນ' ການທັກທາຍກັນຕາມປະເພນີຂອງອິສລາມນັ້ນແມ່ນການກ່າວຄຳວ່າ **"ອັສສະລາມມຸ ອະໄລກຸມ"** ເອີ້ນວ່າ **"ການໃຫ້ສະລາມ"**

ການໃຫ້ສະລາມຄືການຂໍພອນໃຫ້ກັນແລະກັນໃຫ້ພົບເຈີແຕ່ຕວາມປອດໄພສຸກສະບາຍດີໃນຊີວິດ ທ່ານສາດສະດາທູດກ່າວວ່າ "ຂໍສາບານເລີຍວ່າພວກເຈົ້າຈະບໍ່ໄດ້ເຂົ້າສະຫວັນເດັດຂາດຈົນກວ່າພວກທ່ານຈະສັດທາ ແລະພວກທ່ານຈະບໍ່ສັດທາຫາກພວກທ່ານບໍ່ຮັກເຊິ່ງກັນແລະກັນ...ໃຫ້ເຮົາບອກພວກທ່ານບໍ່? ໃນສິ່ງທີ່ພວກທ່ານເຮັດແລ້ວຈະຮັກເຊິ່ງກັນແລະກັນ **"ນັ້ນກໍ່ຄືຈົ່ງທັກທາຍກັນໃຫ້ສະລາມກັນຫລາຍໆ"**

ການໃຫ້ຄາສະລາມຖືເປັນຫລັກປະກັນຄວາມປອດໄພຕໍ່ສັງຄົມເຊິ່ງຈະນາໄປສູ່ຄວາມສຸກລະຫວ່າງໃນສັງຄົມ ອິສລາມຢັງສອນໃຫ້ມີຈິດໃຈຮັກໃນວຽກງານອາສາໂດຍບໍ່ຕ້ອງຫວັງຜົນຕອບແທນ ບໍ່ວ່າຈະເປັນການຊ່ວຍເຫລືອຜູ້ທີ່ທຸກຍາກຂາດເຂີນ ການຊ່ວຍເຫລືອຄົນທຸກ ການຊ່ວຍເຫລືອເດັກນ້ອຍກຳພ້າ ຄວາມສຸກທີ່ໄດ້ຈາກການໃຫ້ ສ້າງຄວາມຮູ້ສຶກແກ່ຜູ້ທີ່ໄດ້ຮັບວ່າຕົນເອງກໍ່ມີຄຸນຄ່າ ທ່ານສາດສະດາທູດກ່າວວ່າ "ຜູ້ທີ່ກຳຈັດຄວາມເສົ້າໂສກມົນມອງປັນຫາໃຫ້ແກ່ພີ່ນ້ອງຜູ້ສັດທາຄົນຫນຶ່ງ ພຣະເຈົ້າກໍ່ຈະກຳຈັດປັນຫາໃຫ້ເຂົາໃນວັນສິ້ນໂລກ (ໂລກໜ້າ) ຜູ້ທີ່ສ້າງຄວາມສະດວກໃຫ້ແກ່ຜູ້ທີ່ມີຄວາມຫຍຸ້ງຍາກໃນຊີວິດ ພຣະເຈົ້າກໍ່ຈະໃຫ້ຄວາມສະດວກແກ່ເຂົາທັ້ງໃນໂລກນີ້ແລະໂລກຫນ້າ ຜູ້ທີ່ປົກປິດຂໍ້ຜິດພາດຂອງພີ່ນ້ອງມຸສລິມ ພຣະເຈົ້າກໍ່ຈະປົກປິດຂໍ້ຜິດພາດຂອງເຂົາທັ້ງໂລກນີ້ແລະໂລກຫນ້າ **"ພຣະເຈົ້າຈະຊ່ວຍເຫລືອບ່າວຂອງພຣະອົງຕາບໃດທີ່ບ່າວຄົນນັ້ນຫຍັງຊ່ວຍເຫລືອພີ່ນ້ອງຂອງເຂົາ"** ນັ້ນກໍ່ຍ້ອນໂລກທາງຈິດໃຈມັກມີສາເຫດການຖືກກະທາທາງຄວາມຮູ້ສຶກໂດຍການຫລຸດຄຸນຄ່າຂອງຕົນເອງ

ຄວາມສຸກອີກປະການຫນຶ່ງທີ່ອິສລາມສອນນັ້ນກໍ່**ຄື 'ການເຊື່ອມສຳພັນກັບຍາດຕິພີ່ນ້ອງ'** ການເຊື່ອມສຳພັນລະຫວ່າງຄອບຄົວແລະຍາດຕິພີ່ນ້ອງຖືວ່າເປັນສິ່ງທີ່ອິສລາມບັງຄັບໃຫ້ຜູ້ສັດທາທຸກຄົນຕ້ອງເຮັດ ບໍ່ວ່າຈະດ້ວຍການສ້າງຄວາມສຸກໃຫ້ກັນແລະກັນຫລືການແບ່ງປັນສິ່ງດີໆ ໃຫ້ແກ່ກັນ ແລ້ວພຣະເຈົ້າກໍ່ຈະມອບປັດໄຈຍັງຊີບແລະອາຍຸທີ່ຍືນຍາວໃຫ້ແກ່ຜູ້ເຮັດດີເຊັ່ນນີ້ ທ່ານນາບີ

ກ່າວວ່າ **"ຜູ້ທີ່ຕ້ອງການໃຫ້ໄດ້ຮັບປັດໄຈທີ່ກວ້າງຂວາງແລະມີອາຍຸຍື່ນຍາວ ກໍ່ຈົ່ງເຊື່ອມສໍາພັນເຄືອຍາດພີ່ນ້ອງ"**

ຄວາມສຸກອີກປະການຫນຶ່ງທີ່ອິສລາມສອນຄື **'ການປະຕິບັດລະຫມາດໃນມັສຍິດ (ຫລືໂບດຂອງອິສລາມ)'** ນັ້ນກໍ່ເພາະວ່າໃນເວລາມຸສລິມລະຫມາດຖືວ່າເຂົາຢູ່ພາຍໃຕ້ການຄຸ້ມຄອງຂອງພຣະເຈົ້າ ເພາະວ່າເຂົານັ້ນແມ່ນກໍາລັງລໍາລຶກຕໍ່ພຣະເຈົ້າຢູ່ ການລາລຶກຕໍ່ພຣະເຈົ້ານັ້ນເປັນສິ່ງຫນຶ່ງທີ່ຈະກໍາຈັດຄວາມໂສກເສົ້າມົນມອງຮັກສາຈິດໃຈ ແລະເຮັດໃຫ້ຈິດໃຈພົບເຈີຄວາມສະຫງົບ

ຄວາມສຸກຄວາມອີກປະການຫນຶ່ງທີ່ອິສລາມສອນກໍ່ຄື **'ການເບິ່ງແຍ້ງເດັກກໍາພ້າ'** ນັ້ນກໍ່ຍ້ອນມັນສົ່ງຜົນຕໍ່ຈິດໃຈຂອງເດັກກໍາພ້າ

ນອກຈາກນີ້ຍັງມີຄວາມສຸກອີກຫລວງຫລາຍ ເຊັ່ນ **'ການເຂົ້າຮ່ວມການຮຽນການສອນສາສະຫນາ ຫຼື ຮຽນຄໍາພີອັລກຸຣອານ'** ນັ້ນກໍ່ຍ້ອນບັນດາເທວະທູດໃນສະຫວັນ (ມາລາອິກະຫ໌) ຈະເຂົ້າມາຮ່ວມວົງຮຽນນໍາ ເຖິງມະນຸດອາດຈະເບິ່ງບໍ່ເຫັນ ຄວາມສະຫງົບສຸກຈະປົກຄຸ້ມພວກເຂົາສັບພະສິ່ງທັ້ງຫລາຍຈະຂໍພອນແລະສັນລະເສີນໃຫ້ແກ່ນັກນຶກສາເຫລົ່ານີ້

ອິສລາມຍັງສອນໃຫ້ເຮົານັ້ນສັ່ງໃຊ້ເພື່ອນມະນຸດໃນສິ່ງທີ່ດີ ແລະຫ້າມປາມໃນສິ່ງບໍ່ດີໂດຍຄໍາເວົ້າວ່າຈາທີ່ອ່ອນໂຍນແລະຫນຸ່ມນອນຈິ່ງໃຈ

**ຂັ້ນໄດສູ່ຄວາມສະຫງົບສຸກໃນຊີວິດ :**

1. ຮູ້ຈັກພຣະເຈົ້າຜູ້ສ້າງ
2. ສັດທາຕໍ່ພຣະອົງພຽງຜູ້ດຽວ ບໍ່ເຊື່ອຖືສິ່ງອື່ນຄູ່ຄ່ຽງກັບພຣະເຈົ້າ
3. ປະຕິບັດຕົນເປັນບ່າວກັບພຣະເຈົ້າພຽງຜູ້ດຽວ
4. ປະຕິບັດຕາມຄໍາສັ່ງຂອງພຣະອົງ ແລະ ຫລີ້ກລ້ຽງສິ່ງທີ່ພຣະອົງສັ່ງຫ້າມ
5. ສັດທາຕໍ່ບັນດາສາດສະດາທູດຂອງພຣະອົງທັ້ງຫມົດ
6. ລໍາລຶກຫາພຣະອົງໃຫ້ຫລາຍໆ ຂອບໃຈ ແລະ ສັນລະເສີນຕໍ່ພຣະອົງ
7. ຂໍອະໄພໂທດຕໍ່ພຣະເຈົ້າໃຫ້ຫລາຍໆ
8. ຮັກຄົນອື່ນຄືດັ່ງທີ່ຮັກຕົນເອງ

9. ມີມາລະຍາດທີ່ດີ ຈິດໃຈທີ່ງົດງາມ ປະດັບປະດາໄປດ້ວຍຄວາມມີກຽດ ຄວາມບໍລິສຸດ ຄວາມໂອບອອມອາລີ ການຫວັງສິ່ງດີໆ ໃຫ້ແກ່ຄົນອື່ນ

10. ມີຄວາມຈິ່ງໃຈບໍລິສຸດໃຈຄວາມຍໍາເກງ ມີຄວາມຮູ້ ມີຄວາມອົດທົນ ມີຄວາມຊື່ສັດ ຄວາມນ້ອບນອມ ຄວາມຍຸຕິທໍາ ແລະ ມີສະຕິປັນຍາ

ຖ້າຫາກມະນຸດຮູ້ເຖິງເປົ້າຫມາຍແທ້ຈິ່ງຂອງຊີວິດແລ້ວດັ່ງທີ່ພຣະເຈົ້າກ່າວວ່າ **"ເຮົາບໍ່ໄດ້ສ້າງຜີ (ຈິນ) ແລະ ມະນຸດມາເພື່ອສິ່ງອື່ນໃດນອນຈາກມາບູຊາ ແລະ ເຄົາລົບ"** ແລະຖ້າມະນຸດນັ້ນໄດ້ເຮັດຕາມເປົ້າຫມາຍນີ້ເຂົານັ້ນກໍ່ຈະມີຄວາມສຸກທັ້ງໂລກນີ້ແລະໂລກຫນ້າ... ສິ່ງເຫລົ່ານີ້ບໍ່ໄດ້ຫມາຍຄວາມວ່າມະນຸດນັ້ນຈະມູ່ງຫມາຍແຕ່ການປະຕິບັດຕົນເຮັດຄວາມດີຕໍ່ພຣະເຈົ້າເທົ່ານັ້ນໂດຍບໍ່ສົນໃຈການໃຊ້ຊີວິດໃນໂລກນີ້ ແຕ່! ພຣະເຈົ້າສັ່ງໃຫ້ມະນຸດຕ້ອງມີຄວາມສົມດຸນ ມີຄວາມເປັນກາງລະຫວ່າງສອງດ້ານນີ້ : ນັ້ນກໍ່ຄືການເຮັດຄວາມດີຕໍ່ພຣະເຈົ້າ ແລະ ການໃຊ້ຊີວິດໃນໂລກນີ້ເພາະພຣະເຈົ້າໄດ້ກ່າວວ່າ **"ພຣະອົງຄືຜູ້ສ້າງພວກທ່ານຈາກໂລກ ແລະໃຫ້ພວກທ່ານນັ້ນໄດ້ໃຊ້ຊີວິດໃນໂລກນີ້** ເຊັ່ນດຽວກັບອັລກຣຸອານໄດ້ຖືກປະທານລົງມາກໍ່ຄື **"ຈົ່ງອ່ານດ້ວຍກັບພຣະນາມຂອງພຣະເຈົ້າຜູ້ຊົງສ້າງ"** ພຣະເຈົ້າຊົງໃຫ້ກຽດອາດັມເຫນືອເທວະດາໃນສະຫວັນກໍ່ຍ້ອນວ່າອາດັມມີຄວາມຮູ້ ພຣະເຈົ້າໄດ້ກ່າວວ່າ "ພຣະອົງໄດ້ສອນໃຫ້ອາດັມຮູ້ຊື່ສິ່ງຕ່າງໆ ແລ້ວໃຫ້ທາທາຍກັບເທວະດາໃນສະຫວັນໂດຍກ່າວວ່າ : ບອກເຮົາເບິ່ງດູ ວ່າຊື່ສິ່ງຕ່າງໆເຫລົ່ານີ້ແມ່ນຫຍັງຖ້າຫາກພວກທ່ານເວົ້າຄວາມຈິ່ງ" ແຕ່ເທວະດາໃນສະຫວັນກໍ່ບໍ່ສາມາດຕອບຊື່ສິ່ງຕ່າງໆໄດ້ຍ້ອນບໍ່ມີຄວາມຮູ້

ທ່ານສາດສະດາທູດຢັງກ່າວວ່າ **"ຜູ້ສັດທາທີ່ແຂງແຮງຍອມດີ ແລະ ເປັນທີ່ຮັກຕໍ່ອັລລໍຫ໌ຫລາຍກວ່າຜູ້ສັດທາທີ່ອ່ອນແອ"** ດັ່ງນັ້ນ ຜູ້ສັດທາຈຶ່ງຈາເປັນຕ້ອງສະແຫວງຫາອະລິຍະທໍາຄວາມຮຸ່ງເຮືອງ ມຸສລິມຕ້ອງເປັນຄົນຜູ້ຮູ້ຕ້ອງມີການສຶກສາເພື່ອຈະໄດ້ຮັບໃຊ້ສັງຄົມແລະສາສະຫນາຂອງຕົນ ຜູ້ສັດທາທີ່ຮັ່ງມີຕ້ອງບໍລິຈາກຊ່ວຍເຫລືອກັບຜູ້ທຸກຍາກ ແລະຕ້ອງຊ່ວຍເຫລືອກັນເຜີຍແຜ່ສາສະຫນາຂອງພຣະເຈົ້າ

ຄວາມແຕກຕ່າງລະຫວ່າງຜູ້ສັດທາຕໍ່ພຣະເຈົ້າແລະຜູ້ບໍ່ໄດ້ສັດທາຕໍ່ພຣະເຈົ້ານັ້ນກໍ່ຄື **'ຜູ້ສັດທາ'** ຖ້າໄດ້ເຮັດສິ່ງໃດກໍ່ຈະຕັ້ງໃຈເຮັດເພື່ອໃຊ້ຊີວິດທັ້ງໂລກນີ້ແລະໂລກຫນ້າທັ້ງສອງ ເຂົາກໍ່ຈະຈິ່ງໃຈໃນການບໍລິຈາກເຮັດຄວາມດີນໍາຫມູ່ມະນຸດ ທ່ານສາດສະດາກ່າວວ່າ **"ການທີ່ທ່ານຖິ້ມສັບ**

**ສິ້ນໃຫ້ພີ່ນ້ອງຫລັງທີ່ຕົວທ່ານຕາຍ ດີກວ່າປ່ອຍໃຫ້ພີ່ນ້ອງທຸກຍາກແບກຫນ້າໄປຂໍນາຄົນອື່ນ"**

ເປົ້າຫມາຍຂອງຜູ້ສັດທານັ້ນບໍ່ແມ່ນແຕ່ຜູ້ສັດທາຕ້ອງປະຕິບັດຕົນເຮັດຄວາມດີຕໍ່ພຣະເຈົ້າເທົ່ານັ້ນໂດຍບໍ່ສາມາດຜ່ອນຄາຍ ຫລື້ທ່ຽວຫລິ້ນມ່ວນຊື່ນ ມັນບໍ່ແມ່ນແບບນັ້ນ ເພາະທ່ານສາດສະດາທູດກໍ່ຍັງເຄີຍຫົວເຣາະມ່ວນຊື່ນ ເວົ້າຈາຕະລົກກັບສະຫາຍຂອງທ່ານ ພຽງແຕ່ທ່ານຈະເວົ້າແຕ່ຄວາມຈິ່ງເທົ່ານັ້ນ ອາດຈະຫລິ້ນຕະລົກກໍ່ຕາມ ບໍ່ວ່າຈະກັບພັນລະຍາຂອງທ່ານ ຫລືລູກໆຂອງທ່ານ ຫລືພີ່ນ້ອງສະຫາຍຂອງທ່ານ ທ່ານກໍ່ເວົ້າຢອກຫົວໄປນໍາພວກເຂົາ

ເຄີຍມີເລື່ອງເລົ່າວ່າມີສະຫາຍຂອງສາດສະດາທູດຄົນຫນື່ງໂສກເສົ້າເພາະບ້າງເທື່ອເຂົາກໍ່ມີຄວາມສຸກຫລາຍ ແຕ່ບ້າງເທື່ອເຂົາກໍ່ຢ້ານໄຟນາລົກຫລາຍ ເຂົາຮູ້ສຶກວ່າເຂົາເປັນຄົນສອງຫນ້າ ທ່ານສາດສະດາທູດຈື່ງປອບໃຈເຂົາວ່າ : ບໍ່ເປັນຫຍັງ ເພາະມຸສລິມຕ້ອງຮູ້ຈັກກາລະເທສະ ເວລາຫລິ້ນເວລາຈິ່ງຈັ່ງ

ທ່ານສາດສະດາທູດຍັງກ່າວວ່າ "ທ່ານມີຫນ້າທີ່ປະຕິບັດຕໍ່ຮ່າງກາຍຂອງທ່ານ ມີຫນ້າທີ່ຕ້ອງປະຕິບັດຕໍ່ຫນ່ວຍຕາຂອງທ່ານ ມີຫນ້າທີ່ຕ້ອງປະຕິບັດຕໍ່ແຂກຂອງທ່ານ ມີຫນ້າທີ່ຕ້ອງປະຕິບັດກັບເມຍຂອງທ່ານ ດັ່ງນັ້ນ ຈິ່ງຕາມຫນ້າທີ່ທີ່ມີຕໍ່ທຸກສິ່ງ" ດັ່ງນັ້ນ ຜູ້ສັດທາຖ້າຮອດເວລາຕ້ອງປະຕິບັດຕົນເຮັດດີຕໍ່ພຣະເຈົ້າກໍ່ຈະຕ້ອງເຮັດຕາມບົດບາດຢ່າງສຸດຄວາມສາມາດ ຖ້າຕ້ອງຮັກສາຊີວິດຮ່າງກາຍກໍ່ຕ້ອງເຮັດຫນ້າທີ່ສຸດຄວາມສາມາດ ຫລືຖ້າຕ້ອງເຮັດດີຕໍ່ຄອບຄົວຕອນຢູ່ໃນຄອບຄົວຫລືຢູ່ນໍາຫມູ່ຄູ່ກໍ່ຕ້ອງປະຕິບັດຕາມຫນ້າທີ່ນັ້ນຕາມຄວາມສາມາດ

ແຕ່ສາຄັນຕ້ອງຮັກສາຄວາມເປັນກາງ ບໍ່ຫລາຍໄປຫລືນ້ອຍເກີນໄປ ເພາະສາສະຫນາອິສລາມຄືສາສະຫນາແຫ່ງຄວາມສົມດຸນຫລືຄວາມເປັນກາງຕໍ່ທຸກສິ່ງ ພຣະເຈົ້າໄດ້ກ່າວໃນອັລກຸຣອານວ່າ **"ເຊັ່ນນີ້ແຫລະ ທີ່ເຮົາໄດ້ໃຫ້ພວກທ່ານເປັນປະຊາຊາດທີ່ດາເນີນຕາມສາຍກາງ"** ຜູ້ທີ່ປະຕິດບັດຕາມວິທີທາງຂອງສາຍກາງນີ້ເຂົາຈະໄດ້ຮັບຄວາມສຸກທັ້ງໂລກນີ້ແລະໂລກຫນ້າ

ຂໍໃຫ້ພຣະເຈົ້າຈົ່ງອວຍພອນໃຫ້ເຮົາໄດ້ຢູ່ສະຫວັນອັນສູງຂອງພຣະອົງດ້ວຍເຖີດ ອາມີນ

## 2. ຄໍາພີອັລກຸຣອານ ແລະ ສຸນນະຫ໌

### ຄໍາພີອັລກຸຣອານ

ຄາພີອັລກຸຣອານຄືຄາເວົ້າຂອງພຣະເຈົ້າທີ່ບໍ່ສາມາດຮຽນແບບຖອຍຄາສານວນໄດ້ ອັລກຸຣອານຄືຄໍາພີທີ່ພຣະເຈົ້າໄດ້ໃຊ້ໃຫ້ຜີຟ້າ (ມະລາອິກະຣ໌) ທີ່ຊື່ວ່າ 'ຍີບບາຣີນ' ນໍາມາໃຫ້ແກ່ທ່ານສາດສະດາທູດມູຮໍາຫມັດ ແລະ ຖືກສົ່ງຕໍ່ເຜີຍແຜ່ມາຮອດຍຸກເຮົາ ແລະ ຍຸກຕໍ່ຍຸກ ການອ່ານອັລກຸຣອານຈະໄດ້ຮັບຜົນລະບຸນຕາມຕົວອັກສອນທີ່ອ່ານ

### *ຄວາມປະເສີດຂອງຄໍາພີອັລກຸຣອານ*

ພຣະເຈົ້າໄດ້ປະທານຄາພີອັລກຸຣອານເປັນທາງນາໃຫ້ແກ່ມະນຸດປະຊາຊາດ ເປັນຄາເຊີນສູ່ການຍອມຮັບຄວາມເປັນຫນຶ່ງດຽວຂອງພຣະເຈົ້າ, ການປະຕິບັດຕົນເປັນບ່າວທີ່ດີຂອງພຣະເຈົ້າ, ແລະເພື່ອສ້າງກົດເກນກົດຫມາຍໃນການໃຊ້ຊີວິດ, ແລະເພື່ອກໍາຫນົດສິລະທໍາ ສິດທິຫນ້າທີ່ຕ່າງໆ, ແລະເພື່ອບອກເຫລົ່າຊີວະປະຫວັດຂອງສາດສະດາທູດຄົນກ່ອນໆ ແລະຮ່ວມເຖິງຄົນຍຸກກ່ອນໃນດິນແດນຕ່າງໆ ກ່ອນສະໄຫມທ່ານສາດສະດາທູດມູຮໍາຫມັດ ເພື່ອນໍາມາເປັນອຸທາຮອນ ແລະ ເພື່ອມາເປັນບົດຮຽນໃນການໃຊ້ຊີວິດ

ຄາພີອັລກຸຣອານຍັງໄດ້ເວົ້າເຖິງທ່ານສາດສະດາທູດມູຮາຫມັດແລະບັນດາສະຫາຍຂອງທ່ານແລະເວົ້າຮອດອະພິນິຫານຕ່າງໆ ທີ່ເກີດຂຶ້ນກັບທ່ານສາດສະດາທູດ ແລະ ຫຍັງໄດ້ເວົ້າເຖິງເລື່ອງຕ່າງໆຕໍ່ພາຍໃນອານາຄົດທີ່ຈະເກີດຂຶ້ນນໍາອີກ

ຄາພີອັລກຸຣອານຍັງຖືກປະທານມາເພື່ອສ້າງລະບົບໃນການໃຊ້ຊີວິດບອກເຫລົ່າເຖິງຂໍ້ມູນທີ່ສໍາຄັນທີ່ມາຂອງມະນຸດ ແລະ ຊີວິດຂອງມະນຸດຫລັງຄວາມຕາຍຈະໄປໃສຕໍ່ໄປ

ອັລກຸຣອານຫຍັງເວົ້າເຖິງຈິດວິນຍານທີ່ສູງສົ່ງ, ຄຸນນະທໍາອັນດີງາມ, ການສຶກສາຫາຄວາມຮູ້ການໃຊ້ສະຕິປັນຍາ, ການເຂົ້າສັງຄົມ ຖ້າຫາກຜູ້ອ່ານໄດ້ອ່ານຢ່າງລະອຽດໄຕ່ຕອງແລ້ວນໍາມາໃຊ້ກໍ່ຕ້ອງເກີດສິ່ງທີ່ດີງາມແນ່ນອນ

## 2.1 ລັກສະນະສາຄັນຂອງຄາພີອັລກຸຣອານ

### 1. ໄດ້ຮັບການປົກປັກຮັກສາຈາກພຣະເຈົ້າ

ອັລລໍຫ໌ໄດ້ໃຫ້ຄາຫມັ້ນສັນຍາວ່າຈະປົກປັກຮັກສາຄາພີອັລກຸຣອານຈາກການແຕ່ງເຕີມການສູນເສຍ ຫຼື ດັດແປງ ເປັນການຍື່ນຢັ້ນຄໍາເວົ້າຂອງພຣະອົງໃນຄໍາພີວ່າ

**"ເຮົານັ້ນໄດ້ປະທານຄໍາພີອັລກຸຣອານ ແລະເຮົາຈະເປັນຜູ້ຮັກສາເອງ"** (ອັລຮິຈຣ໌ : 9)

ໃນຂະນະທີ່ຄຳພີກ່ອນຫນ້າທ່ານສາດສະດາທູດມູຮຳຫມັດພຣະເຈົ້າບໍ່ໄດ້ເອີ້ຍປາກວ່າຈະຮັກສາ ແຕ່ໃຫ້ຜູ້ຄົນໃນຍຸກນັ້ນຮັກສາກັນເອງ ເຮັດໃຫ້ຄຳພີໄບເບີນທັ້ງພັນທະສັນຍາເກົ່າ ແລະ ພັນທະສັນຍາໄຫມ່ໄດ້ຮັບການແຕ່ງເຕີ່ມ ແລະ ດັດແປງເປັນຈຳນວນຫລວງຫລາຍ ແລະໄດ້ມີຄວາມຂັດແຍ້ງພາຍໃນສຳນວນກັນເອງຢ່າງຫລວງຫລາຍ ແຕກຕ່າງຈາກຄຳພີອັລກຸຣອານ ຄາພີອັລກຸຣອານຕ້ອງປະເຊີນກັບສັດຕູຈຳນວນຫລາຍທີ່ພະຍາຍາມດອຍຄ່າແລະກ່າວຮ້າຍ ຫລືພະຍາຍາມປ້ອມແປງ ແຕ່ສຸດທ້າຍກໍ່ບໍ່ມີໃຜສາມາດເຮັດຕາມຈຸດປະສົງໄດ້ພຽງແຕ່ຄົນດຽວ ແມ້ແຕ່ການປ່ຽນຕົວອັກສອນຫນຶ່ງໃຫ້ເປັນຕົວອັກສອນຫນຶ່ງກໍ່ບໍ່ສາມາດເຮັດໄດ້

## 2. ການອ່ານ ແລະ ຟັງ ທ່ອງຈຳອັລກຸຣອານນັ້ນແມ່ນໄດ້ຜົນລະບຸນ

ພຣະອົງອັລລໍຫ໌ໄດ້ໃຫ້ສັນຍາຈະໃຫ້ຜົນລະບຸນຈານວນຫລວງຫລາຍກັບຜູ້ທີ່ອ່ານອັລກຸຣອານ ແລະຜູ້ທີ່ສອນ ຫລືຜູ້ທີ່ຟັງອັລກຸຣອານ ພຣະອົງສັນຍາວ່າຈະໃຫ້ໄດ້ຮັບຜົນລະບຸນເພີ່ມທະວີຄູນ ແລະໄດ້ຮັບການຊ່ວຍເຫລືອໃນມື້ສິ້ນໂລກ ແລະຈະໄດ້ເຂົ້າສະຫວັນໃນມື້ສິ້ນໂລກ ຈະໄດ້ຮັບແສງລັດສະຫມີ ໄດ້ຮັບການຄຸ້ມຄອງຄອບຄົວແລະສັບສິ້ນທັ້ງໃນໂລກນີ້ ແລະໄດ້ຮັບຜົນລະບຸນຢ່າງຫລວງຫລາຍໃນໂລກຫນ້າ ທ່ານສາດສະດາທູດໄດ້ກ່າວວ່າ **"ຜູ້ທີ່ອ່ານຕົວອັກສອນຫນຶ່ງແມ້ພຽງແຕ່ຕົວອັກສອນດຽວຂອງຄຳພີອັລກຸຣອານເຂົາກໍ່ຈະໄດ້ຮັບ 1 ຜົນລະບຸນ"** ເຊິ່ງຈະໄດ້ເພີ່ມເປັນສິບເທົ່າ ຕົວຢ່າງຄື ຄຳວ່າ (ອະລິຟ ລາມ ມີມ) ບໍ່ໄດ້ແມ່ນຕົວອັກສອນດຽວ ແຕ່ມີ (ອະລິຟ) ເປັນຕົວອັນສອນຫນຶ່ງ (ລາມ) ຕົວອັກສອນຫນຶ່ງ (ມີມ) ຕົວອັກສອນຫນຶ່ງ

## 3. ການສະແດງອອກຂອງການເປັນບ່າວດ້ອຍກັບການອ່ານອັລກຸຣອານ

ນັ້ນກໍ່ຍ້ອນພິທີ່ກາທາງສາສະຫນາບາງຢ່າງຕ້ອງໃຊ້ຄາພີອັລກຸຣອານ ເຊັ່ນ ການລະມາດ ຫລືການຂໍພອນຕໍ່ພຣະເຈົ້າປະຈຳວັນ ພຣະເຈົ້າໄດ້ກ່າວໄວ້ໃນຄຳພີວ່າ **"ຈົ່ງລະຫມາດຕັ້ງແຕ່ຕອນສວຍຈົນຮອດກາງຄືນ ແລະຈົ່ງລະມາດຍາມເຊົ້າມືດ ເພາະການລະມາດຍາມເຊົ້າມືດນັ້ນຈະໄດ້ຮັບການຮັບຮອງ"** (ອັລອິສຣໍ : 78)

ພຣະເຈົ້າໄດ້ກ່າວອີກວ່າ **"ຜູ້ທີ່ອ່ານຄຳພີຂອງພຣະເຈົ້າແລະດຳລົງໃນການລະຫມາດ ແລະບໍລິຈາກໃນສິ່ງທີ່ພຣະເຈົ້າມອບໃຫ້ບໍ່ວ່າຈະເປີດເຜີຍຫລືປິດບັງ (ລັບໆ) ຫວັງວ່າເຂົາຈະໄດ້ຮັບການຄ້າທີ່ບໍ່ຂາດທຶນ"**

### 4. ຈະໄດ້ຮັບການຊ່ວຍເຫລືອຈາກອັລກຸຣອານໃນມື້ສິ້ນໂລກ (ອາຄິເຣາະຫ໌)

ອັລກຸຣອານຈະມາຊ່ວຍເຫລືອຜູ້ທີ່ອ່ານອັລກຸຣອານໃນມື້ສິ້ນໂລກ ດັ່ງນັ້ນຜູ້ທີ່ອ່ານອັລກຸຣອານຫລາຍໆ ແລະ ທ່ອງຈຳ ຫລື ໄຕ່ຕ່ອງວິເຄາະ ທ່ານສາດສະດາທູດກ່າວວ່າ *"ຄຳພີອັລກຸຣອານຈະມາຫາເຂົາໃນມື້ສິ້ນໂລກ ແລະ ກ່າວວ່າ"* ***(ໂອ້ພຣະເຈົ້າໄດ້ໂປຣດປົດປ່ອຍເຂົາເຖີດ)***

*ແລ້ວເຂົາກໍ່ຈະໄດ້ຮັບມົງກຸດອັນມີກຽດ*

*ຄຳພີຈະກ່າວອີກວ່າ (ໂອ້ພຣະເຈົ້າຈົ່ງເພີ່ມໃຫ້ເຂົາອີກ)*

*ເຂົາກໍ່ຈະໄດ້ຮັບເສື້ອຄຸ້ມອັນມີກຽດ*

*ຄຳພີກ່າວຕໍ່ອີກວ່າ (ໂອ້ພຣະເຈົ້າຈົ່ງພາກພູມໃຈເຂົາ)*

*ພຣະເຈົ້າກໍ່ຈະພາກພູມໃຈເຂົາ*

*ແລ້ວກໍ່ມີສຽງກ່າວກັບເຂົາວ່າ (ຂຶ້ນມາຈົ່ງອ່ານ ແລະຂຶ້ນໄປສູງຂຶ້ນອີກ) ໃນທຸກໆ ວັກທີ່ເຂົາອ່ານເຂົາຈະໄດ້ຮັບຄວາມດີ"*

ເຫດການນີ້ເກີດຂຶ້ນໃນມື້ສິ້ນໂລກ ໃນທາມກາງການລໍຄອຍຖ້າຄາພິພາກສາຕໍ່ຫນ້າສັບພະສິ່ງທັ້ງຫລາຍ ໂດຍມີເທວະທູດ (ມະລາອິກະຫ໌) ເປັນພະຍານ ຮອດຄົນທີ່ອ່ານອັລກຸຣອານວ່າເຂົານັ້ນຈະໄດ້ຮັບກຽດໃຫ້ມີຖານະດອນອັນສູງສົງໃນມື້ນັ້ນ

### 5. ຄຳພີອັລກຸຣອານຄືລັດຖະທຳມະນູນ ກົດຫມາຍຂອງຊີວິດ

ຄາພີອັລກຸຣອານມີຄາສອນທີ່ຄອບຄຸ້ມທຸກດ້ານຂອງຊີວິດບໍ່ວ່າຈະໃນດ້ານການສັດທາ, ພິທີກຳທາງສາສະຫນາ, ດ້ານຈະລິຍະທຳ, ຄຸນນະທຳ, ທຸລະກຳການຄ້າ, ຄອບຄົວ, ການແຕ່ງງງານ, ມໍລະດົກ, ການຊື້ຂາຍ ແລະອື່ນໆ

### 6. ຈິດໃຈຈະໄດ້ຮັບຄວາມສະຫງົບສຸກໃນຂະນະອ່ານອັລກຸຣອານ

ອັລກຸຣອານຄືຫມູ່ຍາມໂດ່ດດ່ຽວ ອັລກຸຣອານຄືຢາຮັກສາຈິດໃຈຂອງຜູ້ສັດທາ ພຣະເຈົ້າກ່າວວ່າ **"ໂດຍການລະນຶກຫາພຣະເຈົ້າຫົວໃຈກໍ່ຈະສະຫງົບສຸກ"** (ອັຣຣ໋ອ໌ດຸ : 28)

ດັ່ງນັ້ນ ຖ້າຜູ້ສັດທາພຽງອ່ານຄຳພີອັລກຸຣອານເຂົາກໍ່ຈະຮູ້ສຶກເຖິງແສງສະຫວາງທີ່ສ່ອງມາຫາເຂົາ ຄວາມມືດຈະຖືກກຳຈັດອອກໄປ ເພາະທຸກໆ ໃນອັກສອນຂອງອັລກຸຣອານນັ້ນມີຜົນລະບຸນ ແລະຖານະດອນອັນສູງສົງ ພຣະເຈົ້າຈະໃຫ້ຜູ້ທ່ອງຈຳອັລກຸຣອານໄດ້ຮັບຖານະສູງຂຶ້ນຕາມລະດັບທີ່

ເຂົ້າຫ່ອງຈຳໄດ້ໃນມື້ສິ້ນໂລກ ຈົນຮອດລະດັບສູງສຸດນັ້ນກໍ່ຄືທ່ອງຈຳໄດ້ທັງເຫລັ້ມ ນີ້ຄືຄວາມປະເສີດສຸດບໍ່ມີຄວາມປະເສີດໃດທີ່ຈະທຽບເທົ່າໄດ້ອີກແລ້ວ ຄຳພີອັລກຸຣອານເປັນຄືນ້ຳທີ່ລໍ່ລ້ຽງຈິດວິນຍານຜູ້ທີ່ອ່ານຄຳພີອັລກຸຣອານທຸກໆ ມື້ເຂົາຈະໄດ້ຮັບຄວາມສະຫງົບສຸກໃນຊີວິດ ຄາພີອັລກຸຣອານຈະມາປົກປ້ອງເຂົາໃນມື້ສິ້ນໂລກ ດັ່ງນັ້ນເຂົາກໍ່ບໍ່ຕ້ອງຢ້ານກັງວົນໂສກເສົ້າເສຍໃຈເລີຍໃນມື້ນັ້ນ

**7. ຄຳພີອັລກຸຣອານມີຄວາມມະຫັດສະຈັນຢ່າງຫລວງຫລາຍທາງດ້ານວິທະຍາສາດ**

ພຣະເຈົ້າໄດ້ຊ່ວຍເຫລືອສາດສະດາທູດມູຮາໝັດດ້ວຍກັບຄາພີອັລກຸຣອານໂດຍໃຫ້ຄາພີເປັນຄວາມມະຫັດສະຈັນ ຄຳພີອັລກຸຣອານເປັນຄວາມມະຫັດສະຈັນຈະຄົງຢູ່ຕະຫລອດການເພາະພຣະເຈົ້າໄດ້ທາທາຍຜູ້ບໍ່ສັດທາໃຫ້ປະດິດຜົນງານການຂຽນໃຫ້ມີພາສາຊັ້ນສູງທຽມເທົ່າອັລກຸຣອານແມ້ແຕ່ບົດດຽວ ຫລື ພຽງວັກດຽວ ກໍ່ບໍ່ມີຜູ້ໃດສາມາດເຮັດໄດ້ ເຖິງແມ້ແຕ່ຊາວອາຫຣັບ ຫລືຍຸກທ່ານສາດສະດາມູຮໍາຫມັດທີ່ມີຄວາມຄວາມສາມາດໃນການໃຊ້ພາສາຊັ້ນສູງກໍ່ຕາມ *ໂດຍສະເພາະຍຸກປະຈຸບັນນີ້ວິທະຍາສາດໄດ້ຄົ້ນພົບຄວາມມະຫັດສະຈັນຂອງອັລກຸຣອານ*

## 2.2 ຄວາມມະຫັດສະຈັນທາງດ້ານວິທະຍາສາດໃນຄຳພີອັລກຸຣອານ

ອັລກຸຣອານໄດ້ບອກກ່າວເຖິງຄວາມຮູ້ທາງວິທະຍາສາດຢ່າງຫລວງຫລາຍທັ້ງທີ່ບໍ່ມີເຄື່ອງມືສື່ໃດໆ ໃນຍຸກສາດສະດາທີ່ຈະສາມາດທົດລອງຫລືສັງເກດຈົນນຳໄປສູ່ຂໍ້ມູນແບບນີ້ໄດ້ ນີ້ແມ່ນສິ່ງຫນຶ່ງທີ່ຢືນຢັ້ນແລະພິສູດວ່າຄຳພີອັລກຸຣອານເປັນສິ່ງທີ່ຜູ້ສ້າງຜູ້ເປັນພຣະເຈົ້າໄດ້ສົ່ງປະທານໃຫ້ແກ່ສາດສະດາທູດມູຮັມຫມັດແທ້ຈິ່ງ

***ປະໂຫຍດຂອງການສຶກສາວິທະຍາສາດໃນຄຳພີອັລກຸຣອານ :***

1. ເສີມສ້າງການສັດທາອັນຫນັກແຫນ້ນ

2. ສ້າງອິດທິພົນໃນການເຜີຍແຜ່ສາສະຫນາໃຫ້ແກ່ຄົນທີ່ບໍ່ແມ່ນມຸສລິມ

3. ອະທິບາຍເຖິງຄວາມຄິດການອອກກົດຫມາຍໃນບ້າງຢ່າງ ເຊັ່ນ ການຫ້າມສິ່ງມຶນເມົາ ຫ້າມກິນຊີ້ນຫມູ ດັ່ງຄຳກ່າວຂອງພຣະເຈົ້າວ່າ **"ເຮົາຈະໃຫ້ພວກເຂົາເຫັນສັນຍານຂອງເຮົາທັ້ງໃນຝາກຟ້າ ແລະ ໃນຕົວຂອງພວກເຂົາເອງ ຈົນຮອດການຊັດເຈນວ່າຄາພີອັລກຸຣອານນັ້ນຄືສັດຈະທຳແທ້ຈິ່ງ"** (ຟຸສສິລັດ : 53)

ນັ້ນກໍ່ຍ້ອນສິ່ງຕ່າງໆ ທີ່ເປັນເຄື່ອງພິສູດຢືນຢັ້ນການມີແທ້ຈິ່ງຂອງພຣະເຈົ້ານັ້ນບໍ່ໄດ້ຈຳກັດຢູ່ພຽງຍຸກໃດຍຸກຫນື່ງ ແຕ່ເປັນສິ່ງທີ່ມີຢູ່ໃນທຸກຍຸທຸກການສະໄຫມ່ ເປັນຫລັກຖານພິສູດວ່າອັລກຸຣອານນັ້ນແມ່ນມາຈາກພຣະເຈົ້າແທ້ຈິ່ງ

***ຕົວຢ່າງບ້າງສ່ວນຂອງວິທະຍາສາດທີ່ມີການຄົ້ນພົບໃນອັລກຸຣອານ :***

### *1. ສາເຫດຂອງຄວາມມືດໃນໃຕ້ທ້ອງມະຫາສະຫມຸດ*

ພຣະເຈົ້າໄດ້ກ່າວວ່າ **"ຫລືດັ່ງຄວາມມືດມິດຫລາຍຊັ້ນໃນທ້ອງທະເລອັນເລິກເຊິ່ງມີກະແສຄື້ນປົກປິດ ຂ້າງເທິ່ງນັ້ນກໍ່ຍັງມີກະແສຄື້ນນຳ ຂ້າງເທິ່ງກໍ່ມີຊັ້ນເມກອັນມືດມິດປົກຄຸ້ມຊ້ອນຫຸ້ມກັນ ຖ້າໃຜນຳມືອອກໄປກໍ່ເບິ່ງບໍ່ເຫັນ"** (ອັນນູຣ : 40)

*ວິທະຍາສາດໄຫມ່ຄົ້ນພົບໄດ້ວ່າຄວາມມືດມິດໃຕ້ທ້ອງທະເລນັ້ນມີສາມສາເຫດນຳກັນ :*

1.1 ຊັ້ນເມກເຊິ່ງຈະດູດກື້ນແສງດຕາເວັນ 49%

1.2 ຄື້ນເທິ່ງຊັ້ນຜິວທະເລເຊິ່ງສະທ້ອນແສງດວງຕາເວັນ 5%

1.3 ຄື້ນໃຕ້ທ້ອງທະເລເຊິ່ງເກີດຈາກລະດັບຄວາມຫນ້າແຫນ້ນຂອງນ້ຳທີ່ແຕກຕ່າງກັນໄປໃນແຕ່ລະດັບຄວາມເລິກ ຊັ້ນລະ 40 ເມັດ ເຊິ່ງຄວາມຫນ້າແຫນ້ນຂອງນ້ຳທີ່ແຕກຕ່າງກັນລະດັບຊັ້ນນີ້ຖືກຄົ້ນພົບບໍ່ດົນໂດຍເຄື່ອງມືທາງວິທະຍາສາດທັນສະໄຫມ່ ແລ້ວທ່ານສາດສະດາທູດຈະຮູ້ເລື່ອງດັ່ງກ່າວໄດ້ແນວເມື່ອ 1400 ປີທີ່ແລ້ວໄດ້ແນວໃດ?

ສາເຫດຂອງຄວາມມືດໃຕ້ທ້ອງມະຫາສະຫມຸດນັ້ນຄືຄື້ນໃຕ້ນ້ຳຄື້ນຜິວນ້ຳແລະຊັ້ນເມກມະນຸດຍຸກປະຈຸບັນຍັງບໍ່ສາມາດລົງດຳນ້ຳໂດຍບໍ່ມີເຄື່ອງມືໃຫ້ເລິກກວ່າ 40 ເມັດໄດ້ເລີຍ ແລ້ວທ່ານສາດສະດາຮູ້ຂໍ້ມູນທີ່ເລິກກວ່າ 200 ເມັດທີ່ບໍ່ມີແສງໄດ້ແນວໃດ ນັ້ນຫມາຍຄວາມວ່າທ້ອງທະເລນັ້ນບໍ່ມີແສງມີແຕ່ຄວາມມືດສະຫນິດ ເຊິ່ງສອດຄ້ອງກັບຄຳກ່າວຂອງພຣະເຈົ້າວ່າ "ຖ້າໄດ້ເອົາມືອອກໄປກໍ່ບໍ່ສາມາດເບິ່ງເຫັນໄດ້"

### *2.ການກຳເນີດຂອງຈັກກະວານ*

ວິທະຍາສາດສະໄຫມ່ໄດ້ຄົ້ນພົບວ່າທາດທີ່ໃຫ້ກາເນີດຈັກກະວານນັ້ນມາຈາກກຸ່ມແກັດທີ່ກະແຈກກະຈາຍຢູ່ຕາມຈັກກະວານອັນວ່າງເປົ້າແຕ່ມີລະບຽບ ວັດຖຸຢູ່ເທິ່ງຟາກຟ້າເທິ່ງອາວະກາດກໍ່ເກີດຂຶ້ນຂອງກຸ່ມແກັດ

ອົງການອາກາດນານາຊາດ (ນາຊາ) ໄດ້ປະກາດວ່າທິດສະດີການກາເນີດຈັກກະວານທີ່ເອີ້ນວ່າ **'ການລະເບີດຄັ້ງໃຫຍ່'** ຫຼື **'ບິກແບງ'** ເມື່ອ 13.7 ລ້ານປີທີ່ແລ້ວນັ້ນຄືທິດສະດີທີ່ໜ້າເຊື່ອຖືໄດ້ຫລາຍທີ່ສຸດໃນປະຈຸບັນ ຄືມີການລະເບີດຂອງກຸ່ມທາດທຳອິດຂອງຈັກກະວານແລ້ວກໍ່ຂະຫຍາຍເປັນພະລັງງານແລະທາດຕ່າງໆ ອີກຢ່າງຫລວງຫລາຍໃນທຸກໆ ທິດທາງ ທາດຕ່າງໆ ທີ່ກະຈັດກະຈາຍນັ້ນບ້າງສ່ວນໄດ້ຮ່ວມຕົວກັນເປັນຝຸ່ນເມກ ເບິ່ງຄືກັບຄ້ອນເຊິ່ງກຸ່ມເມກບ້າງສ່ວນນັ້ນໄດ້ຮ່ວມຕົວເປັນດາວເຄາະແລະວັດຖຸເທິງຝາກຟ້າ

ໃນປີ 1989 ອົງການນາຊາໄດ້ສົ່ງກ້ອງໂທລະທັດ ຫລື ກ້ອງເບິ່ງດາວຂະໜາດໃຫຍ່ ໄປເທິງອາວາກາດເພື່ອຄົ້ນຫາທີ່ມາຂອງລັງສີແລະແສງທີ່ມາຕ່າງໆ ຂອງຈັກກະວານ ກ້ອງຈຶ່ງໄດ້ຖ່າຍຮູບຝຸ່ນເມກເປັນຈຳນວນຢ່າງຫລວງຫລາຍໃນຈັກກະວານເຊິ່ງເກີດຈາກຂະບວນການລະເບີດໃນເທື່ອນັ້ນຂະບວນການກໍ່ຕົວຂອງຈັກກະວານດັ່ງກ່າວນັ້ນພຣະເຈົ້າໄດ້ກ່າວເອົາໄວ່ໃນຄຳພີອັລກຸຣອານວ່າ **"ຫລັງຈາກນັ້ນພຣະອົງກໍ່ມຸ້ງໄປຍັງຊັ້ນຝາກຟ້າໃນຂະນະທີ່ມັນຫຍັງເປັນຝຸ່ນຂວັນ ພຣະເຈົ້າຈຶ່ງກ່າວກັບຊັ້ນຟ້າແລະແຜ່ນດິນວ່າ (ຈົ່ງມາຫາບໍ່ວ່າຈະຢາກຫລືບໍ່ຢາກກໍ່ຕາມ) ຝາກຟ້າແລະແຜ່ນດິນຈຶ່ງກ່າວວ່າ (ເຮົາກໍ່ມາຢ່າງເຕັ້ມໃຈ)"** (ຟຸສສິລັດ : 11)

ຈະສັ່ງເກດວ່າຄຳພີອັລກຸຣອານໄດ້ເວົ້າເຖິງເຫດການ ການກໍ່ຕົວຂອງຈັກກະວານນີ້ເປັນກຸ່ມຝຸ່ນຂວັນ

### *3. ພູເຂົາເຮັດໜ້າທີ່ຍຶດແຜ່ນດິນບໍ່ໃຫ້ເຄື່ອນໄຫວ*

ພຣະເຈົ້າໄດ້ກ່າວວ່າ **"ພຣະອົງໄດ້ສ້າງພູເຂົາສູງຢ່າງຫລວງຫລາຍ ເພື່ອບໍ່ໃຫ້ມີການຂະຫຍາຍຫລືຍັບຕົວຕາມການເຄື່ອນໄຫວຂອງພວກທ່ານ"** (ລຸກມານ : 10)

ພຣະອົງໄດ້ກ່າວອີກວ່າ **"ເຮົາບໍ່ໄດ້ເຮັດໃຫ້ໂລກນັ້ນຮາບພຽງດອກຫວາ? ແລະບໍ່ໄດ້ເຮັດໃຫ້ພູເຂົານັ້ນເປັນດັ່ງມຸດທີ່ຕາຕຶ່ງດອກຫວາ?"** (ອັນນະບະອ໌ : 6-7)

ສຳນວນ ຫລື ຄຳຕ່າງໆ ໃນຄຳພີນີ້ໄດ້ອະທິບາຍບົດບາດຂອງພູເຂົາທີ່ມີຕໍ່ໂລກວ່າ : ພູເຂົານັ້ນເປັນສິ່ງທີ່ພຣະເຈົ້າໄດ້ສ້າງມາເປັນຄືດັ່ງສິ່ງທີ່ມາກົດທັບເຄັ່ງພື້ນແຜ່ນດິນໄວ້ບໍ່ໃຫ້ເຄື່ອນໄຫວໄປມາດັ່ງນັ້ນ ພູເຂົາຈຶ່ງປຽບສະເໝືອນມຸດທີ່ປັກລົງພື້ນເພື່ອບໍ່ໃຫ້ເຕັ້ນຫລືຕູບເຄື່ອນໄຫວໄປມາຕາມແຮງຂອງລົມ

ປະຈຸບັນວິທະຍາສາດສະໄໝ່ໄດ້ຄົ້ນພົບແລ້ວວ່າພູເຂົານັ້ນເກີດຈາກການເຄື່ອນຫຍາຍຂອງຊັ້ນຜິວໂລກທາງລຸ່ມທີ່ດັນກັນຈົນພື້ນຜິວທາງເທິງເກີດການຫໍ່ຕົວກັນຂຶ້ນມາເປັນພູເຂົາຄືດັ່ງກັບຜ້າ ຖ້າ

ພູເຂົາສູງແຮງເຄື່ອນໄຫວຂອງພື້ນຜິວໂລກກໍ່ແຮງເບົາລົງເຮັດໃຫ້ມີການເຄື່ອນຕົວແລະແຜ່ນດິນໄຫວນ້ອຍລົງ ດັ່ງນັ້ນ ພູເຂົາຈິ່ງຄືມຸດທີ່ປັກລົງພື້ນຫລືປັກໄວ້ເທິງເຈ້ຍບໍ່ໃຫ້ເຄື່ອນໄຫວໄປໃສ

### *4. ເທິ່ງຊັ້ນບັນຍາກາດຊັ້ນສູງຈະມີອົກຊີແຊນນ້ອຍ*

ວິທະຍາສາດສະໄຫມ່ໄດ້ຄົ້ນພົບວ່າຖ້າຫາກຢູ່ໃນຊັ້ນບັນຍາກາດສູງຫລາຍເທົ່າໃດຄວາມຫນ້າແຫນ້ນຂອງອາກາດແລະອົກຊີແຊນກໍ່ແຮງນ້ອຍລົງຄືກັນ ມະນຸດຈຶ່ງຮູ້ສຶກຫາຍໃຈລາບາກຫຍາກຖ້າຫາກຕ້ອງຂຶ້ນໄປຊັ້ນທີ່ສູງ ພຣະເຈົ້າໄດ້ກ່າວໄວ້ວ່າ **"ຜູ້ໃດທີ່ພຣະອົງຈະນາທາງເຂົາພຣະເຈົ້າກໍ່ຈະເປີດອົກເປີດໃຈໃຫ້ສູ່ອິສລາມ ສ່ວນຜູ້ໃດທີ່ພຣະເຈົ້າຕ້ອງການໃຫ້ເຂົາລົງທາງພຣະເຈົ້າກໍ່ຈະເຮັດໃຫ້ເຂົາຮູ້ສຶກລຳບາກຄັບແຄບ ຄືດັ່ງທີ່ຈະຕ້ອງຂຶ້ນໄປເທິ່ງຟາກຟ້າ" (**ອັລອັນອາມ : 125)

ໃນປະໂຫຍກດັ່ງກ່າວໃນຄຳພີ ພຣະເຈົ້າໄດ້ປຽບທຽບວ່າຜູ້ທີ່ລົງທາງນັ້ນຈະຮູ້ສຶກຫາຍໃຈລຳບາກຍາກ ຄືຕອນກຳລັງຂຶ້ນໄປຊັ້ນບັນຍາກາດສູງໆ ເປັນທີ່ຮູ້ກັນດີວ່າໃນສະໄຫມທ່ານສາດສະດາທູດໃນ 1400 ປີທີ່ແລ້ວຍັງບໍ່ຜູ້ໃດສາມາດຂຶ້ນໄປໄດ້ຊັ້ນບັນຍາກາດສູງໄດ້ເພື່ອຮູ້ຂໍ້ມູນອັນທີ່ລະອຽດເຫລົ່ານີ້ ຈົນມີການປະດິດສ້າງບອນລູນລອຍຂຶ້ນສູ່ເທິ່ງຟາກຟ້າຄັ້ງທຳອິດໃນປີ 1804 ນີ້ເອງ

### *5. ການປະສົມພັນຂອງເກສອນດອກໄມ້*

ວິທະຍາສາດສະໄຫມ່ໄດ້ຄົ້ນຄວ້າວ່າລົມມີສ່ວນພັດພາເກສອນດອກໄມ້ເພດຜູ້ໄປຫາເກສອນເພດເມຍໃນພືດຜັກຕ່າງໆບໍ່ວ່າຈະເປັນພືດດອກໄມ້ຫມາກໄມ້ກໍ່ຕາມ ດັ່ງນັ້ນ ສາຍລົມຈຶ່ງຄືຜູ້ເຮັດຫນ້າທີ່ສື່ກາງໃນການສືບພັນຂອງພືດ ພຣະເຈົ້າໄດ້ກ່າວວ່າ **"ເຮົາໄດ້ສົ່ງສາຍລົມມາເປັນຜູ້ປະສົມພັນເກສອນ"** (ອັລຮິຈຣ໌ : 22)

### *6. ທີ່ມາຂອງຟ້າເຫລື້ອມ ຟ້າຜ່າ*

ວິທະຍາສາດສະໄຫມ່ໄດ້ຄົ້ນຄວ້າວ່າມີກະແສໄຟຟ້າຂົ້ວບວກແລະຂົ້ວລົບ ຖ້າລົມພັດພາໃຫ້ທັ້ງສອງຂົ້ວນັ້ນກໍ່ຈະເຮັດໃຫ້ເກີດປະຕິກິລິຍາທາງໄຟຟ້າເຮັດໃຫ້ເກີດຟ້າຜ່າແລະຝົນຕົກ ເຊິ່ງໄດ້ສອດຄ່ອງກັບຄຳເວົ້າຂອງພຣະເຈົ້າໃນຄຳພີວ່າ **"ເຈົ້າບໍ່ໄດ້ເຫັນວ່າວ່າພຣະເຈົ້າໄດ້ເຄື່ອນຍ້າຍກຸ່ມຫມູ່ເມກ ແລະໄດ້ຮວບຮ່ວມເມກທັ້ງຫລາຍໄວ້ນຳກັນ ແລະໄດ້ເຮັດໃຫ້ມັນເປັນກ້ອນ ແລ້ວທ່ານກໍ່ຈະເຫັນຝົນຕົກລົງມາຈາກກຸ່ມເມກເຫລົ່ານັ້ນ ບ້າງສ່ວນກໍ່ຕົກລົງມາເປັນກ້ອນເຫັບຈາກກ້ອນເມກທີ່ໃຫຍ່ຄືກັບພູເຂົາ ແລ້ວກໍ່ກະທົບກັບກຸ່ມຄົນທີ່ພຣະເຈົ້າປະສົງ ສາຍຟ້າຂອງມັນເກືອບຈະເຮັດໃຫ້ສາຍຕາບອດໄດ້"** (ອັນນູຣ : 43)

## *7. ພັດທະນາການຂອງຕົວອ່ອນໃນທ້ອງ*

ພຣະເຈົ້າໄດ້ກ່າວວ່າ *"ມະນຸດທັ້ງຫລາຍ! ຫາກພວກເຈົ້າຍັງສົງໄສໃນເລື່ອງການຟື້ນຄືນຊີວິດຂຶ້ນໃຫມ່ໃນມື້ສິ້ນໂລກ ກໍ່ຈົ່ງຮູ້ໄວ້ວ່າພວກເຈົ້າໄດ້ສ້າງມາຈາກດິນ ແລ້ວມາເປັນເຊື້ອອາສຸຈິ ແລ້ວມາເປັນກ້ອນເລືອດ ແລ້ວມາເປັນກ້ອນເນື້ອ ບໍ່ວ່າຈະເປັນຕົວອ່ອນທີ່ສົມບູນຫລືບໍ່ສົມບູນກໍ່ຕາມ ເພື່ອໃນພວກເຈົ້າເຫັນເຖິງຄວາມສາມາດຂອງພຣະເຈົ້າ ແລະເພື່ອໃຫ້ຕົວອ່ອນນັ້ນໄດ້ອາໄສຢູ່ໃນມົດລູກຕາມຄວາມປະສົງຂອງພຣະອົງໄດ້ປະສົງຈົນຮອດເວລາທີ່ກຳຫນົດເອົາໄວ້ ແລະ ພຣະອົງກໍ່ຈະນຳພວກທ່ານອອກມາເປັນເດັກນ້ອຍເພື່ອເຕີບໃຫຍ່ພັດທະນາຈົນຮອດໄວທີ່ແຂງແຮງ"* (ອັລຮັຈ: 5)

## *8. ໄລຍະເວລາຂອງການຖືພາ*

ພຣະເຈົ້າກ່າວວ່າ **"ແມ່ທັ້ງຫລາຍໄດ້ໃຫ້ນ້ຳນົມລູກຂອງພວກນາງເປັນເວລາສອງປີເຕັມ ສຳຫລັບຜູ້ທີ່ຕ້ອງການໃຫ້ນົມຢ່າງສົມບູນ"** (ອັລບະກໍຣ໌ : 223)

ພຣະເຈົ້າໄດ້ກ່າວໄວ້ອີກປະໂຫຍກຫນຶ່ງວ່າ **"ໄລຍະເວລາເຊົານົມນັ້ນຄືສອງປີ"** (ລຸກມານ : 14)

ຫລັງຈາກນັ້ນພຣະເຈົ້າໄດ້ກ່າວໄວ້ໃນບົດຫນຶ່ງວ່າ **"ແມ່ໄດ້ຖືພາເດັກຄົນຫນຶ່ງໄດ້ຢ່າງທຸກຫຍາກລຳບາກ ແລະ ເກີດມາຢ່າງເຈັບປວດລຳບາກ ໂດຍການຖືພາແລະໄລຍະເວລາເຊົານົມນັ້ນທັ້ງຫມົດແມ່ນ 30 ເດືອນ"** (ອັລອະຮ໌ກອຟ : 15)

ເມື່ອເຮົານຳຄວາມຫມາຍຈາກປະໂຫຍກຂອງບົດຕ່າງໆ ນີ້ມາຮ່ວມເຂົ້າກັນກໍ່ຈະເຫັນວ່າ : *ສອງປີມີທັ້ງຫມົດ 24 ເດືອນນັ້ນເປັນໄລຍະຂອງການໃຫ້ນົມແມ່ ເຊິ່ງ 30 ເດືອນລົບ 24 ຈະເຫຼືອ 6 ເດືອນ 6 ເດືອນນີ້ຄືໄລຍະເວລາຖືພາທີ່ນ້ອຍທີ່ສຸດທີ່ເດັກນ້ອຍຈະສາມາດເກີດອອກມາຢ່າງປອດໄພໄດ້*

ວິທະຍາສາດສະໄຫມ່ຫາກໍ່ຄົ້ນພົບວ່າໄລຍະເວລາທີ່ເດັກນ້ອຍສາມາດເກີດອອກມາໄດ້ຢ່າງສົມບູນແລະປອດໄພນ້ອຍທີ່ສຸດຄື 6 ເດືອນ ເພາະຖ້າຫາກເກີດກ່ອນຫນ້ານັ້ນແມ່ນການແທ້ງຫລືລຸລູກ ຕົວອ່ອນບໍ່ສາມາດມີຊີວິດໄດ້ຫາກເກີດກ່ອນ 6 ເດືອນ ສ່ວນການເກີດໄລຍະ 6 ເດືອນນີ້ເຖິງອາດຈະກ່ອນຄົບກຳຫນົດເກົ້າເດືອນກໍ່ຕາມກໍ່ຍັງມີໂອກາດທີ່ເດັກນ້ອຍຈະຖືກຳເນີດມາຢ່າງປອດໄພຫາກໄດ້ຮັບຄວາມເບິ່ງແຍ້ງທີ່ດີທາງການແພດ ນີ້ກໍ່ຄືກົດຫມາຍຂອງການແພດຂອງທົ່ວໂລກໃນປະຈຸບັນ

### *9. ນ້ຳເຜິ້ງ*

ພຣະເຈົ້າໄດ້ກ່າວວ່າ *"ເຮົາໄດ້ບັນຊາໃຫ້ເຜິ້ງຍຶດພູເຂົາ, ຕົ້ນໄມ້, ແລະຫລັງຄາເຮືອນຂອງມະນຸດເປັນເຮືອນຂອງພວກມັນ (ເຜິ້ງ) ຫລັງຈາກນັ້ນເຜິ້ງທັງຫລາຍຈົ່ງກິນໝາກໄມ້ ແລະ ບິນໄປຕາມເສັ້ນທາງຂອງພຣະເຈົ້າທີ່ມີໃນສັນຊາດຕະຍານ ໂດຍມີເຄື່ອງດື່ມຢ່າງຫລວງຫລາຍອອກມາຈາກທ້ອງຂອງພວກເຈົ້າເປັນຢາຮັກສາມະນຸດ ນີ້ຄືສັນຍານໜຶ່ງທີ່ສຳຫລັບຜູ້ຄຶດທີ່ໄຕ່ຕອງ"* (ອັນນະຮ໌ລຸ : 68-69)

ວິທະຍາສາດປະຈຸບັນຫາກໍ່ໄດ້ຄົ້ນພົບຄວາມສາຄັນຂອງນ້ຳເຜິ້ງເປັນຢາໃນການໃຊ້ຮັກສາທາງການແພດວ່າ : *ນ້ຳເຜິ້ງນັ້ນສາມາດຮັກສາໂລກໄດ້ຢ່າງຫລວງຫລາຍ ບໍ່ວ່າຈະເປັນໂລກທາງສາຍຕາ, ບາດແຜໄຟໄໝ້, ບາດແຜໃນກະເພາະ, ຊ່ວຍການເຄືອບແຂ້ວ, ປ້ອງກັນບໍ່ໃຫ້ເກີດເຊື້ອແບັດທີເລຍໃນທາງເດີນຫາຍໃຈ ແລະ ໂລກອື່ນໆອີກຢ່າງຫລວງຫລາຍ* ສັບພະຄຸນທາງຢາຂອງນ້ຳເຜິ້ງນີ້ແຕກຕ່າງກັນຕາມສີຂອງນ້ຳເຜິ້ງ ດັ່ງທີ່ພຣະເຈົ້າໄດ້ກ່າວວ່າ **"ຈະມີເຄື່ອງດື່ມຢ່າງຫລວງຫລາຍອອກຈາກທ້ອງຂອງພວກເຈົ້າ"**

### *10. ນົມ*

ພຣະເຈົ້າໄດ້ກ່າວວ່າ **"ໃນບັນດາສັດຕ້ອງຍອມມີຂໍ້ຄິດສາຫລັບພວກເຈົ້າ ໂດຍເຮົາໄດ້ໃຫ້ເຈົ້າດື່ມກິນຈາກທ້ອງຂອງພວກມັນ ເປັນນ້ຳນົມທີ່ບໍລິສຸດທີ່ຢູ່ລະຫວ່າງກາກອາຫານແລະເລືອດ ກໍ່ງ່າຍສຳຫລັບຜູ້ດື່ມກິນ"** (ອັນນະຮ໌ລຸ : 66)

ນັ້ນກໍ່ຍ້ອນວ່າເມື່ອສັດກິນອາຫານລົງໄປມັນຈະປ່ຽນໄປເປັນກາກອາຫານ ເຊິ່ງມັນກໍ່ຄືອາຫານທີ່ຜ່ານການຍ່ອຍອາຫານ ທີ່ເປັນກາກອາຫານນີ້ຈະປ່ຽນເປັນເລືອດເພື່ອໃຫ້ສັດນັ້ນໄດ້ໃຊ້ປະໂຫຍດໂດຍຜ່ານຂະບວນການພາຍໃນຮ່າງກາຍຢ່າງຫລວງຫລາຍຈົນກາຍເປັນນົມ

ພຣະເຈົ້າໄດ້ກ່າວເຖິງຂະບວນການແປເປັນນົມນີ້ວ່າ : ຢູ່ລະຫວ່າງສອງສ່ວນປະສົມຄື **'ກາກອາຫານ'** ແລະ **'ເລືອດ'** ແຕ່ເຖິງແນວນັ້ນມະນຸດເຮົາກໍ່ບໍ່ໄດ້ກິ່ນຂອງກາກອາຫານ ແລະ ບໍ່ໄດ້ຮັບຮູ້ລົດຊາດຂອງເລືອດໃນຂະນະທີ່ເຮົາດື່ມນ້ຳນົມເລີຍ

ມະນຸດທັງຫລາຍສົມຄວນທີ່ຈະພິຈາລະນາເຖິງຄວາມລະອຽດອ່ອນໃນຮ່າງກາຍຂອງສັດທີ່ມີຂະບວນການສ້າງນົມຂຶ້ນມາ ເຊິ່ງເປັນທາງດ້ານວິທະຍາສາດຫາກໍ່ພິສູດໄດ້ເຊິ່ງຜ່ານມາເປັນພັນປີ

### *11. ຊີ້ນຫມູເປັນສາເຫດຂອງເຊື້ອພະຍາດຢ່າງຫລວງຫລາຍ*

ພຣະເຈົ້າໄດ້ກ່າວວ່າ **"ພຣະອົງໄດ້ຫ້າມບໍ່ໃຫ້ກິນສາກຊີບ, ເລືອດ, ຊີ້ນຫມູ, ແລະ ສິ່ງທີ່ຖືກຂ້າບູຊາສິ່ງອື່ນນອກຈາກພຣະເຈົ້າ ແຕ່ຖ້າຫາກຜູ້ໃດຮອດຈຸດເວລາທີ່ຄັບຄັ່ນ ທີ່ບໍ່ແມ່ນການທໍ້ລະມານ ແລະ ການກາຍເປັນຈຸດເປົ້າຫມາຍ ກໍ່ໃຫ້ຮູ້ວ່າພຣະເຈົ້າ ຍອມໃຫ້ອະໄພ"** (ອັນນະຮ໌ລຸ : 115)

ການແພດສະໄຫມ່ໄດ້ຄົ້ນພົບແລ້ວວ່າຊີ້ນຫມູນັ້ນອຸດົມໄປດ້ວຍເຊື້ອພະຍາດຮ້າຍແຮງກວ່າ 450 ພະຍາດ ແມ່ແຕ່ຫມູທີ່ມີຊີວິດນັ້ນກໍ່ຄືສື່ນາພາພະຍາດກວ່າ 57 ພະຍາດສູ່ມະນຸດຊີ້ນ ຫມູຈຶ່ງເປັນຊີ້ນທີ່ສົກກະປົກທີ່ສຸດ ເປັນຊີ້ນທີ່ອຸດົມໄປດ້ວຍພະຍາດແລະຈຸລະຊີບທີ່ເປັນອັນຕະລາຍຈຳນວນຫລາຍ ເປັນປັດໄຈຫນຶ່ງທີ່ສ້າງໃຫ້ເກີດມະເຮັງ

**ດຣ.ຈອນລາສັນ** ນາຍແພດແຫ່ງຫນຶ່ງຂອງເມືອງຮາຍເກັນເບເກັນ ປະເທດເດັນມາກ ໄດ້ກ່າວເຖິງການຄົ້ນພົບເຊື້ອພະຍາດທີ່ອັນຕະລາຍທີ່ມີຢູ່ໃນໂຕຫມູວ່າ : *ເປັນເຊື້ອພະຍາດຊະນິດ 'ພາຊີເນຍ' ເຊິ່ງມີທົ່ວໄປໃນທຳມະຊາດ ແຕ່ວ່າຫມູນັ້ນເປັນພາຫະນະນຳພາເຊື້ອພະຍາດນີ້ໄດ້ດີທີ່ສຸດ ມີການວິໄຈນຳເອົາລີ້ນຫມູຕາມຮ້ານຂ້າຕ່າງໆ ມາທົດລອງ ຜົນປະກົດວ່າເຊື້ອພະຍາດປະເພດນີ້ສາມາດຄົ້ນພົບໄດ້ສູງຫລາຍປະມານ 80-90%*

**ຈະເຫັນໄດ້ວ່າຄຳພີອັລກຸຣອານເຕັມໄປດ້ວຍຄຳເວົ້າໄນໄລຍະເລິກໆຢ່າງຫລວງຫລາຍຂອງການຄົ້ນພົບທາງວິທະຍາສາດໃນປະຈຸບັນ 11 ຂໍ້ທີ່ເຮົາກ່າວມານີ້ເປັນພຽງສ່ວນຫນຶ່ງເທົ່ານັ້ນ**

### 3. ສຸນນະຫ໌ ແນວທາງຂອງທ່ານສາດສະດາທູດ

**'ສຸນນະຫ໌'** ຄືຄຳເວົ້າ, ການກະທຳ, ການຍອມຮັບ, ຫຼືລັກສະນະໃດໆ ກໍ່ຕາມທີ່ມີມາຈາກທ່ານສາດສະດາທູດມູຮຳຫມັດ ເອີ້ນວ່າສຸນນະຫ໌ (ແນວທາງ) ຂອງທ່ານນະບີທັ້ງຫມົດ

**'ຄຳພີອັລກຸຣອານ'** ຄືທີ່ມາອັນດັບທຳອິດຂອງຄຳສອນສາສະໜາອິສລາມ ບໍ່ວ່າຈະໃນດ້ານລະບົບຄວາມເຊື່ອ, ພິທີກຳ, ຫລັກປະຕິບັດຕ່າງໆ ເຊັ່ນດຽວກັນ **'ສຸນນະຫ໌'** ຂອງທ່ານສາດສະດາທູດກໍ່ເປັນທີ່ມາອັນດັບສອງຂອງອິສລາມຮອງມາຈາກຄຳພີອັລກຸຣອານ ອາດປຽບໄດ້ວ່າຄຳພີເປັນຄືທິດສະດີ ແລະ ສຸນນະ (ແນວທາງ) ຄືພາກປະຕິບັດ ເພາະພາລະກິດອັນສາຄັນອັນດັບຫນຶ່ງຂອງທ່ານສາດສະດາທູດຄືການເປັນແບບຢ່າງແລະເຜີຍແຜ່ຄຳສອນ ພຣະເຈົ້າກ່າວໃນຄຳພີວ່າ **"ທ່ານສາດສະດາທູດບໍ່ໄດ້ເວົ້າຈາກອາລົມ ຄາເວົ້າຂອງທ່ານບໍ່ແມ່ນຄາອື່ນໃດນອກຈາກຄາສອນທີ່ມາຈາກພຣະເຈົ້າທີ່ຖືກສົ່ງລົງມາ"** (ອັນນັຈມຸ : 3-4)

ດັ່ງນັ້ນ ເລື່ອງສາສະໜາທີ່ທ່ານເວົ້າມາທັ້ງຫມົດກໍ່ຕ້ອງມາຈາກພຣະເຈົ້າເຊັ່ນດຽວກັບຄຳພີອັລກຸຣອານ ພຣະເຈົ້າໄດ້ກ່າວອີກວ່າ **"ສິ່ງໃດທີ່ທ່ານສາດສະດາທູດໄດ້ນຳມາພວກທ່ານກໍ່ຈົ່ງຍຶດຕາມເອົາໄວ້ ແລະສິ່ງໃດທີ່ທ່ານໄດ້ຫ້າມພວກທ່ານກໍ່ຈົ່ງຫລີກລ້ຽງອອກຫ່າງ"** **(**ອັລຮັຊຣຸ : 7) ນີ້ຄືຄາສັ່ງຂອງອັລລໍຫ໌ໃຫ້ບ່າວຂອງພຣະອົງປະຕິບັດຕາມທ່ານສາດສະດາທູດທຸກຢ່າງທີ່ທ່ານໄດ້ສັ່ງໃຫ້ເຮັດ ຫລື ສັ່ງຫ້າມກໍ່ຕາມ

ພຣະເຈົ້າໄດ້ກ່າວອີກວ່າ **"ເຮົາໄດ້ປະທານຄາພີອັລກຸຣອານແກ່ທ່ານ (ມູຮາຫມັດ) ນັ້ນເພື່ອໃຫ້ທ່ານໄດ້ອະທິບາຍສອນແກ່ມະນຸດປະຊາຊາດໃນສິ່ງທີ່ຖືກສົ່ງມາໃຫ້ແກ່ພວກເຂົາ ເພື່ອທີ່ພວກເຂົາຈະໄດ້ໄຕ່ຕ່ອງ"** (ອັນນະຮ໌ລຸ : 44) ຄວາມຫມາຍຂອງຄາວ່າ **"ເພື່ອໃຫ້ທ່ານອະທິບາຍໃຫ້ແກ່ມະນຸດປະຊາຊາດ"** ນັ້ນກໍ່ຄືແນວທາງສຸນນະຂອງທ່ານສາດສະດາທູດ ຄຳສຳນວນຈາກຄຳພີບົດນີ້ກຳລັງບອກເຮົາວ່າສຸນນະເປັນຜູ້ອະທິບາຍກົດເກນຕ່າງໆ ທີ່ມີໃນຄຳພີອັລກຸຣອານເຊັ່ນຄຳພີບອກໃຫ້ເຮົານັ້ນຕ້ອງລະມາດ ແຕ່ບໍ່ໄດ້ສອນວ່າຕ້ອງລະມາດແນວໃດ? ລະມາດຈັກເທື່ອ? ດັ່ງນັ້ນ ສຸນນະຫ໌ຂອງທ່ານສາດສະດາທູດຈຶ່ງມາສອນລາຍລະອຽດຕ່າງໆ ເຫລົ່ານີ້ ທ່ານສາດສະດາທູດໄດ້ລະຫມາດໃຫ້ສະຫາຍຂອງທ່ານເບິ່ງແລ້ວກໍ່ກ່າວວ່າ **"ຈົ່ງລະຫມາດ(ນະມາຊ) ຄືທີ່ພວກທ່ານເຫັນຂ້ອຍລະຫມາດ"**

ດ້ວຍເຫດນີ້ ການຍຶດຖືສຸນນະຫ໌ແນວທາງຂອງສາດສະດາທູດຈຶ່ງເປັນຫລັກການສຳຄັນຫລາຍຂອງສາສະໜາ ຄືເສັ້ນທາງຂອງການຫລຸດພົ້ນບໍ່ໃຫ້ລົງທາງໃນໂລກນີ້ແລະໂລກຫນ້າ ທ່ານສາດສະດາທູດກ່າວວ່າ **"ເຮົາໄດ້ຖິ້ມໃຫ້ແກ່ພວກທ່ານ ຖ້າຫາກພວກທ່ານຍຶດຫມັ້ນແລ້ວກໍ່ຈະບໍ່**

**ທາງລິງທາງອິກຫລັງຈາກທ່ານສາດສະດາທູດເສຍຊີວິດ ນັ້ນຄື *: ຄາພີຂອງພຣະເຈົ້າ ແລະ ສຸນນະຫ໌ຂອງເຮົາ"***

**3.1 ຄວາມສຳຄັນຂອງການຍຶດຫມັ້ນສຸນນະຫ໌ ແນວທາງຂອງທ່ານສາດສະດາທູດ :**

1. ສຸນນະຫ໌ ຄືທີ່ມາອັນດັບທີ່ສອງຂອງສາສະຫນາອິສລາມ ເປັນຄຳສອນທີ່ມາຈາກພຣະເຈົ້າ ທ່ານສາດສະດາທູດໄດ້ກ່າວວ່າ **"ເຮົາໄດ້ຮັບຄາພີອັລກຸຣອານ ແລະສິ່ງຫນຶ່ງທີ່ຄືກັບຄາພີອັລກຸຣອານ ນັ້ນກໍ່ຄືສຸນນະຫ໌ (ແນວທາງ)**"

2. ສຸນນະຫ໌ ເປັນຄາອະທິບາຍຂະຫຍາຍຖອຍຄາໃນຄາພີອັລກຸຣອານ

3. ທ່ານສາດສະດາທູດໄດ້ສອນເຮົາໃຫ້ຍຶດຫມັ້ນຕໍ່ສຸນນະຫ໌ ໂດຍສະເພາະໃນເວລາເກີດຄວາມຂັດແຍ້ງໃນສັງຄົມ ທ່ານສາດສະດາທູດໄດ້ກ່າວວ່າ **"ພວກທ່ານຈຳເປັນຕ້ອງຍຶດສຸນນະຫ໌ (ແນວທາງ) ຂອງເຮົາ ແລະສຸນນະຫ໌ (ແນວທາງ) ຂອງຜູ້ປົກຄອງຫລັງຈາກເຮົາ"**

4. ການປະຕິບັດຕາມສຸນນະຫ໌ຂອງທ່ານສາດສະດາທູດຄືວິທີການຈະໄດ້ຮັບຄວາມຮັກຈາກອັລລໍຫ໌ຜູ້ເປັນພຣະເຈົ້າ ແລະ ຈະໄດ້ຮັບການອະໄພໂທດຈາກພຣະອົງ ພຣະເຈົ້າກ່າວວ່າ **"ຈົ່ງກ່າວ(ມູຮຳຫມັດ) ຫາກພວກທ່ານຮັກພຣະເຈົ້າຢ່າງແທ້ຈິງ ກໍ່ຈົ່ງປະຕິບັດຕາມເຮົາ (ຫມາຍເຖິງສາດສະດາທູດ) ພຣະເຈົ້າກໍ່ຈະຮັກພວກທ່ານ ແລະອະໄພໂທດຄວາມຜິດບາບໃຫ້ແກ່ພວກທ່ານ ພຣະເຈົ້ານັ້ນເປັນຜູ້ມີຄວາມເມດຕາ ແລະຜູ້ສົງໃຫ້ອະໄພໂທດທີ່ແທ້ຈິ່ງ"** (ອາລຸອິມຣອນ : 31)

5. ການປະຕິບັດຕາມສຸນນະຫ໌ເປັນສາເຫດປະການຫນຶ່ງທີ່ຈະເຮັດໃຫ້ໄດ້ເຂົ້າສະຫວັນ ທ່ານສາດສະດາທູດກ່າວວ່າ **"ປະຊາຊົນທຸກຄົນຂອງເຮົາຈະໄດ້ເຂົ້າສະຫວັນຍົກເວັ້ນແຕ່ຜູ້ທີ່ປະຕິເສດ** ມີຄົນຖາມສາດສະດາທູດວ່າ **ແມ່ນໃຜຄືຜູ້ທີ່ປະຕິເສດບໍ່ເຂົ້າສະຫວັນ?** ທ່ານຕອບວ່າ **ຜູ້ປະຕິບັດຕາມແລະເຊື່ອຟັງເຮົາຈະໄດ້ເຂົ້າສະຫວັນ ຜູ້ໃດທີ່ຝາຟື້ນເຮົານັ້ນແລະຄືຜູ້ປະຕິເສດ"**

ສຸນນະ ຂອງທ່ານສາດສະດາທູດມີອີກຊື່ຫນຶ່ງເອີ້ນວ່າ **'ຫະດີຊ'** ຫມາຍ**ເຖິງ 'ຄຳເວົ້າຂອງສາດສະດາທູດ'**

ຕົວຢ່າງ ຫະດີຊ ຫຼື ຄຳເວົ້າຂອງສາດສະດາທູດ :

1. ທ່ານສາດສະດາທູດກ່າວວ່າ **"ຜູ້ທີ່ເຮົາຮັກຫລາຍທີ່ສຸດ ແລະຈະຢູ່ໄດ້ໃກ້ຕົວຂ້ອຍຫລາຍທີ່ສຸດໃນມື້ສິ້ນໂລກ ຄືຄົນທີ່ມີມາລະຍາດດີທີ່ສຸດ"**

ດັ່ງນັ້ນ ຄົນທີ່ຈະໄດ້ຢູ່ໃກ້ທ່ານສາດສະດາທູດຫລາຍທີ່ສຸດຄືຄົນທີ່ມີລະດັບສິລະທຳທີ່ສູງທີ່ສຸດ ຈະເຫັນໄດ້ວ່າປະເດັ່ນທາງສິລະທຳໃນດ້ານອິສລາມນັ້ນເປັນພື້ນຖານສຳຄັນ ເປັນເສົ້າຫລັກປະການຫນຶ່ງຂອງສາສະຫນາ ດັ່ງນັ້ນ ມຸສລິມທຸກຄົນຈຶ່ງຈຳເປັນມີມາລະຍາດທີ່ດີ ບໍ່ດ່າໃຜ ບໍ່ເວົ້າຂ້ອນນິນທາໃຜລັບຫລັງ ບໍ່ໃສ່ຮ້າຍປ້າຍສີ ບໍ່ທຳຮ້າຍ ຫລື ສ້າງຄວາມລຳຄານຜູ້ໃດ ແລະຕ້ອງມີມາລະຍາດທີ່ດີງາມ

2. ມີຄົນຫນຶ່ງຖາມສາດສະດາທູດວ່າ :

**"ທ່ານສາດສະດາທູດ! ໃຜຄືຄົນທີ່ສົມຄວນເຮັດດີທີ່ສຸດໃຫ້?"**

ທ່ານຕອບວ່າ **"ຄືແມ່ຂອງທ່ານ"** ເຂົາກໍ່ຖາມຕື່ມອີກວ່າ **"ແລ້ວແມ່ນໃຜອີກ?"**

ທ່ານສາດສະດາທູດກໍ່ຕອບອີກວ່າ **"ກໍ່ຄືແມ່ຂອງທ່ານ"**

ແລ້ວເຂົາກໍ່ຖາມອີກວ່າ **"ແມ່ນໃຜອີກ?"** ທ່ານກໍ່ຕອບວ່າ **"ແມ່ຂອງທ່ານ"**

ແລ້ວກໍ່ຖາມຕໍ່ອີກວ່າ **"ແມ່ນໃຜອີກ?"** ທ່ານກໍ່ຕອບວ່າ **"ພໍ່ຂອງທ່ານ"**

ຫະດິຊນີ້ກຳລັງສອນໃຫ້ເຮົາເຮັດດີຕໍ່ພໍ່ແມ່ໂດຍສະເພາະແມ່ ຕ້ອງປະຕິບັດດີບໍ່ວ່າທ່ານທັ້ງສອງຈະບໍ່ແມ່ນມຸສລິມຫລືຜູ້ບໍ່ສັດທາກໍ່ຕາມ ດັ່ງນັ້ນ ເປັນຫນ້າທີ່ຂອງເຮົາທີ່ຕ້ອງຮຽກຮ້ອງທ່ານທັ້ງສອງໃຫ້ມາຟັງຄຳສອນຂອງສາສະຫນາອິສລາມ ແລະອົດທົນຕໍ່ທ່ານທັ້ງສອງ ເຖິງຈະມີເລື່ອງທີ່ລຳຄານບໍ່ດີມາຈາກທ່ານທັ້ງສອງກໍ່ຕາມ

3. ທ່ານສາດສະດາທູດກ່າວວ່າ **"ການບໍລິຈາກທານນັ້ນຈະດັບຄວາມຜິດດັ່ງຄືນ້ຳທີ່ດັບໄຟ"**

ມະນຸດນັ້ນບໍ່ມີໃຜຫລຸດພົ້ນຈາກການກະທຳຜິດບາບ ດັ່ງນັ້ນ ຈົ່ງຮີບຟ້າວໄປສູ່ການບໍລິຈາກທານແກ່ຜູ້ທຸກຫຍາກ ແລະ ຜູ້ຕ້ອງການ ເພາະການບໍລິຈາກທານນັ້ນຍັງນ້ອຍກໍ່ສາມາດຫລຸດບາບນ້ອຍໆ ໄດ້ ແຕ່ການບໍລິຈາກນີ້ກໍ່ຕ້ອງມາຈາກການສາລະພາບຜິດແລະເສຍໃຈກັບພຣະເຈົ້ານຳ

4. ທ່ານສາດສະດາທູດກ່າວວ່າ **"ຄົນທີ່ດີທີ່ສຸດຂອງພວກທ່ານກໍ່ຄືຄົນທີ່ຮຽນແລະສອນອັລກຸຣອານ"**

ດັ່ງນັ້ນ ຄົນທີ່ເປັນມະນຸດທີ່ດີທີ່ສຸດຄືຄົນທີ່ຍຶດຕິດໃນຄຳພີອັລກຸຣອານ ຮັກສາທ່ອງຈຳ ແລະປະຕິບັດຕາມຄຳສອນ ແລະກໍ່ສັ່ງສອນຜູ້ຄົນດ້ວຍຄຳພີອັລກຸຣອານ

5. ທ່ານສາດສະດາທູດກ່າວວ່າ **"ຈົ່ງລະວັງການບຽດບຽນ ເພາະການບຽດບຽນນັ້ນເປັນຄວາມມືດມິດໃນມື້ສິ້ນໂລກ"**

ດັ່ງນັ້ນ ໃຜທີ່ບຽດບຽນເຮັດກະທຳນຳຄົນອື່ນເຂົາກໍ່ຈະໄດ້ຮັບການລົງໂທດຢ່າງແນ່ນອນໃນມື້ສິ້ນໂລກ ບໍ່ສາມາດຫລີກຫນີໄດ້

6. ທ່ານສາດສະດາທູດກ່າວວ່າ **"ພວກທ່ານຈະບໍ່ສັດທາຢ່າງແທ້ຈິງ ຈົນກວ່າພວກທ່ານຈະຮັກກົ່ມກ້ຽວພີ່ນ້ອງຂອງທ່ານຄືທີ່ຮັກແລະໃຫ້ຕົວຂອງທ່ານນັ້ນເອງ"**

ດັ່ງນັ້ນ ການປາດຖະນາດີນຳຄົນອື່ນຈຶ່ງເປັນພື້ນຖານປະການຫນຶ່ງຂອງອິສລາມ ເປັນຈະລິຍະທຳແລະສິລະທຳອັນສູງ

7. ທ່ານສາດສະດາທູດກ່າວວ່າ **"ຜູ້ສັດທາຄືຜູ້ທີ່ຄົນອື່ນຈະປອດໄພຈາກປາກແລະການກະທຳຂອງເຂົາ ສ່ວນຜູ້ທີ່ອົບພະຍົບ (ມາຫາສາດສະດາທູດ) ຄືຜູ້ທີ່ລະຖິ້ມຈາກສິ່ງທີ່ພຣະເຈົ້າຫ້າມ"**

ດັ່ງນັ້ນ ມຸສລິມຜູ້ສັດທາຈະບໍ່ສ້າງຜິດໄພກັບຄົນອື່ນບໍ່ວ່າຈະເປັນດ້ວຍປາກຫຼືມື ແລະ ຈະອອກຫ່າງຈາກການທຳຮ້າຍຜູ້ອື່ນ ສ່ວນຜູ້ທີ່ອົບພະຍົບຫມາຍເຖິງຜູ້ທີ່ຫລີກລ້ຽງສິ່ງທີ່ພຣະເຈົ້າສັ່ງຫ້າມ

8. ທ່ານສາດສະດາທູດກ່າວວ່າ **"ໃຜທີ່ຮຽກຮ້ອງສູ່ທາງນາເຂົາຈະໄດ້ຮັບຜົນລະບຸນຂອງຄົນທີ່ເຮັດຕາມເຂົາ ໂດຍຜົນລະບຸນຂອງພວກເຂົາຈະບໍ່ຫລຸດລົງໄປເລີຍ ສ່ວນໃຜທີ່ຮຽກຮ້ອງພາໄປໃນທາງທີ່ເຮັດຜິດເຂົາກໍ່ຈະໄດ້ຮັບຄວາມຜິດຂອງຄົນທີ່ເຮັດຜິດຄືກັນ ແລະຄວາມຜິດຂອງພວກເຂົາກໍ່ຈະບໍ່ຫລຸດນ້ອຍລົງເລີຍ"**

ດັ່ງນັ້ນ ໃຜທີ່ຮຽກຮ້ອງຜູ້ຄົນສູ່ຄວາມດີເຂົາກໍ່ຈະໄດ້ຮັບຄວາມດີຂອງຄົນທີ່ເຮັດຕາມຄຳສອນຂອງເຂົານຳ ດັ່ງນັ້ນ ກໍ່ຈົ່ງລະວັງຄຳເວົ້າຂອງເຮົາທີ່ເຮົາສອນ ຫລື ເວົ້ານຳຄົນອື່ນ

9. ທ່ານສາດສະດາທູດກ່າວວ່າ **"ຂໍສາບານວ່າຖ້າທຽບໂລກນີ້ແລະໂລກຫນ້າແລ້ວມັນ ກໍ່ຄືການເອົາມືຈຸ່ມລົງໄປໃນນ້ຳທະເລ ລອງເບິ່ງວ່າມັນມີອີ່ຫຍັງຕິດມືຂຶ້ນມານຳ"**

ຫມາຍຄວາມວ່າໂລກດຸນຍາ ຫລື ໂລກນີ້ ນັ້ນບໍ່ສໍ່າສ້ຽວຫນຶ່ງຂອງໂລກຫນ້າເລີຍ ເພາະມັນມີໄລຍະເວລາທີ່ສັ້ນຫລາຍ 60 ປີຫາ 100 ປີ ແຕ່ໂລກຫນ້ານັ້ນບໍ່ມີມື້ສິ້ນສຸດ

10. ທ່ານສາດສະດາທູດກ່າວວ່າ: **“ຜູ້ສັດທານັ້ນຄືແປກແທ້ ທຸກໆ ຢ່າງທີ່ເຂົາເຮັດນັ້ນເປັນສິ່ງທີ່ດີທັ້ງຫມົດ ສະເພາະສຳຫລັບຜູ້ສັດທາເທົ່ານັ້ນ ຖ້າຫາກມີເລື່ອງດີເຂົາກໍ່**

**ຈະຂອບໃຈກໍ່ຈະເປັນຄວາມດີກັບເຂົາອີກ ແຕ່ຖ້າຫາກມີເລື່ອງບໍ່ດີເຂົາກໍ່ຂອບໃຈແລະອົດທົນກໍ່ຈະເປັນເລື່ອງດີສຳຫລັບເຂົາອີກ"**

ດັ່ງນັ້ນບໍ່ວ່າຈະດີ ຫລື ຮ້າຍ ຜູ້ສັດທາກໍ່ຈະເບິ່ງໃນແງ່ບວກວ່າເປັນສິ່ງດີໆ ໃນຊີວິດສະເຫມີ ຜູ້ສັດທາແທ້ຈິ່ງນັ້ນຈະພໍໃຈໃນການກຳຫນົດທຸກສະພາບການ ຂອບໃຈໃນເວລາມີຄວາມສຸກ ແລະຈະອົດທົນໃນເວລາທີ່ເຈີຄວາມທຸກ

**ທີ່ກ່າວມານີ້ແມ່ນຫະດີຊສ່ວນຫນື່ງຂອງທ່ານສາດສະດາທູດ ເຊິ່ງຈານວນຫະດີຊທີ່ມີການບັນທຶກໃນຕຳລາຕ່າງໆ ນັ້ນມີຢ່າງຫລວງຫລາຍເປັນມື່ນເປັນແສນກໍ່ວ່າໄດ້**

## 4. ເຕົາຮີດ ຄວາມເຊື່ອໃນຄວາມຫນຶ່ງດຽວຂອງພຣະເຈົ້າ

**"ເຕົາຮີດ"** ຄວາມເຊື່ອໃນຄວາມຫນຶ່ງດຽວຂອງພຣະເຈົ້າຄືການເຊື່ອວ່າພຣະເຈົ້ານັ້ນມີຫນຶ່ງດຽວ ບໍ່ມີສິ່ງອື່ນຄ່ຽງຄູ່ທຽບເທົ່າພຣະເຈົ້າເລີຍ ບໍ່ວ່າຈະເປັນທາງດ້ານອຳນາດ ຫຼື ການກາບໄຫວບູຊາ ຫຼື ໃນດ້ານພຣະນາມຊື່ ແລະ ຄຸນລັກສະນະຂອງພຣະອົງ.

ສາສະຫນາອິສລາມນັ້ນຄືສາສະຫນາດຽວທີ່ຮຽກຮ້ອງມະນຸດສູ່ການຍອມຮັບຄວາມຈິງຫນຶ່ງດຽວ ພຣະເຈົ້າກ່າວວ່າ **"ຈົ່ງກ່າວເຖີດມູຮາມັດ ວ່າພຣະອົງຄືພຣະເຈົ້າພຽງຫນຶ່ງດຽວ"** (ອັລ-ອິຄລາສ : 1)

ກົງກັນຂ້າມກັບສາສະຫນາອື່ນໆ ດັ່ງນັ້ນໃນອິສລາມຈຶ່ງບໍ່ມີຄວາມເຊື່ອ **'ຕຣີເອກະນຸພາບ'** ຫຼື ເຊື່ອວ່າພຣະເຈົ້າຫນຶ່ງດຽວແຕ່ມີສາມຮ່າງ ຫຼື ເຊື່ອວ່າພຣະເຈົ້າມີຫລາຍພຣະອົງ ແຕ່ອິສລາມເຊື່ອວ່າບໍ່ມີສິ່ງໃດສັກສິດນອກຈາກພຣະເຈົ້າອັລລໍຫ໌ເທົ່ານັ້ນ ພຣະເຈົ້າຊົງກ່າວວ່າ **"ຫາກໃນຊັ້ນຟ້າ ແລະ ແຜ່ນດິນມີພຣະເຈົ້າອື່ນນອກຈາກອັລລໍຫ໌ ແນ່ນອນວ່າທັ້ງຟ້າ ແລະ ແຜ່ນດິນຍອມຖືກທຳລາຍ ອັລລໍຫ໌ຜູ້ເປັນພຣະເຈົ້າຂອງບັນລັງຈະຊົງເປັນຜູ້ບໍລິສຸດຫລາຍກວ່າສິ່ງທີ່ພວກເຂົານຶກຄິດ"** (ອັລ-ອັມບິຍາອ໌ : 22)

### 4.1 ເຕົາຮີດ ຫລື ການຍອມຮັບຄວາມເປັນຫນຶ່ງດຽວຂອງພຣະເຈົ້າມີ 3 ສ່ວນ ໄດ້ແກ່ :

1. ການຍອມຮັບຄວາມເປັນພຣະເຈົ້າຜູ້ມີອຳນາດຄວບຄຸ້ມສັບພະສິ່ງທັ້ງຫລາຍພຽງຜູ້ດຽວ.
2. ການຍອມຮັບວ່າພຣະເຈົ້າສົມຄວນແກ່ການກາບໄຫວບູຊາພຽງຜູ້ດຽວ.
3. ການຍອມຮັບໃນພຣະນາມຊື່ ແລະ ຄຸນລັກສະນະອັນສັກສິດ ວ່າເປັນຂອງພຣະເຈົ້າພຽງຜູ້ດຽວ.

#### 4.1.1 ຄວາມເຊື່ອໃນຄວາມເປັນຫນຶ່ງດຽວຂອງພຣະເຈົ້າໃນດ້ານອຳນາດຄວບຄຸ້ມສັບພະສິ່ງ

ຄື ການຍອມຮັບວ່າພຣະເຈົ້າມີພຽງຫນຶ່ງດຽວ ແລະ ເປັນຜູ້ສ້າງຈັກກະວານທັ້ງຫມົດ ອີກທັ້ງເປັນຜູ້ຄວບຄຸ້ມເບິ່ງແຍງສັບພະສິ່ງທັ້ງຫມົດ ພຣະອົງເປັນຜູ້ໃຫ້ເປັນ ເປັນຜູ້ໃຫ້ຕາຍ ໃຫ້ຄຸນໃຫ້ໂທດແຕ່ພຽງຜູ້ດຽວ ແລະມີອຳນາດເຫນືອທຸກຢ່າງ ຈະເຮັດຫຍັງກໍ່ໄດ້ ໂດຍບໍ່ມີໃຜມີອານາດແບບນີ້ນອກຈາກພຣະອົງພຽງຜູ້ດຽວ.

ສະນັ້ນ, ໃຜທີ່ມີຄວາມເຊື່ອວ່າມີສິ່ງອື່ນທີ່ມີລັກສະນະແບບນີ້ ຫຼື ເຊື່ອວ່າໃນຈັກກະວານນີ້ຫຍັງມີຜູ້ຄວບຄຸ້ມອີກເໜືອນອກຈາກອັລລໍຫ໌ ກໍ່ແປວ່າເຂົາຂາດເຕົາຮີດ (ຄວາມເຊື່ອໃນຫນຶ່ງດຽວ) ໃນສ່ວນນີ້ໄປ ແລະເປັນຜູ້ທີ່ຕັ້ງພາຄີກັບພຣະເຈົ້າ

***ຜົນທີ່ໄດ້ຈາກການຍອມຮັບຄວາມເຊື່ອໃນສ່ວນນີ້ນັ້ນກໍ່ຄື :***

1. ມະນຸດຈະຮູ້ວ່າພຣະເຈົ້າເປັນຜູ້ຄວບຄຸ້ມ ແລະ ກຳຫນົດທຸກຢ່າງ ບໍ່ມີຜູ້ໃດຫລຸດພົ້ນຈາກການກຳຫນົດການເບິ່ງແຍ້ງຈາກພຣະເຈົ້າໄດ້ ອຳນາດຂອງພຣະອົງນັ້ນສາມາດສ້າງ ຫຼື ບັນດານສິ່ງໃດກໍ່ຕາມແລ້ວແຕ່ຈຸດປະສົງຂອງພຣະເຈົ້າ ໂດຍສິ່ງທີ່ພຣະເຈົ້ານັ້ນຄວບຄຸ້ມສອດຄ້ອງກັບເຫດຜົນສະເຫມີ ພຣະເຈົ້າຄືຜູ້ສ້າງສັນທຸກສິ່ງ ແລະ ທຸກສິ່ງນັ້ນເປັນສິ່ງຖືກສ້າງຂອງພຣະເຈົ້າ ທຸກຢ່າງຕ້ອງພຶ່ງພາອາໄສພຣະເຈົ້າໃນການດຳລົງຊີວິດ ບໍ່ມີຜູ້ສ້າງໃດນອກຈາກອັລລໍຫ໌ ບໍ່ມີຜູ້ໃຫ້ອາຫານ ເຄື່ອງດື່ມ ອາກາດ ນອກຈາກອັລລໍຫ໌ ບໍ່ມີຜູ້ຄວບຄຸ້ມບໍລິຫານເບິ່ງແຍ້ງຈັກກະວານນີ້ນອກຈາກພຣະອົງອັລລໍຫ໌ພຽງຜູ້ດຽວ ບໍ່ມີຝຸ່ນເມັດໃດ ຫລື ແມ້ແຕ່ອາຕອມຈະເຄື່ອນໄຫວໄດ້ ຫລື ຢຸດນິ່ງໄດ້ນອກຈາກອຳນາດຂອງອັລລໍຫ໌ເທົ່ານັ້ນ

2. ການມີຄວາມເຊື່ອແບບນີ້ຈະເຮັດໃຫ້ເຮົາຜູກພັນກັບພຣະເຈົ້າຢ່າງຫລວງຫລາຍ ຖ້າຈະຂໍກໍ່ຂໍຈາກພຣະເຈົ້າ ແລະ ພຶ່ງພາພຣະອົງເທົ່ານັ້ນໃນທຸກໆ ດ້ານຂອງຊີວິດ ກ້າທີ່ຈະປະເຊີນຫນ້າກັບສິ່ງທັ້ງຫລາຍທີ່ຈະເກີດຂຶ້ນໃນຊີວິດຢ່າງເດັດດຽວມຸ້ງຫມັ້ນ ແລະ ອົດທົນ

ອິສລາມສອນວ່າຖ້າມະນຸດຈະເຮັດສິ່ງໃດກໍ່ຕ້ອງເຮັດຕາມຫລັກເຫດ ແລະ ຜົນ ທາງວິທະຍາສາດພ້ອມກັບການຂໍກັບພຣະເຈົ້າໃຫ້ການເຮັດສິ່ງນັ້ນບັນລຸເປົ້າຫມາຍໄດ້ ຕໍ່ຈາກນັ້ນອີ່ຫຍັງຈະເກີດຂຶ້ນເຮົາກໍ່ຈະພໍໃຈໃນສິ່ງທີ່ຖືກກຳຫນົດຂອງພຣະເຈົ້າ ເຮົາຈະບໍ່ຕ້ອງການຫລື ຢາກມີໂລບ ໃນສິ່ງທີ່ຢູ່ນຳຄົນອື່ນ ເພາະພຣະເຈົ້າຫຍັງບໍ່ໄດ້ກຳຫນົດໃຫ້ສິ່ງນັ້ນໃຫ້ມາຢູ່ນຳເຮົາ ພຣະອົງຈະເຮັດຫຍັງກໍ່ຕາມແຕ່ຈຸດປະສົງຂອງພຣະອົງຕ້ອງການ ໃຜທີ່ມີຄວາມເຊື່ອແນວນີ້ເຂົາຈາເປັນຕ້ອງຍອມຮັບໃນຄວາມເຊື່ອໃນສ່ວນທີ່ສອງນຳ

### 4.1.2 ຄວາມເຊື່ອໃນຄວາມເປັນຫນຶ່ງດຽວຂອງພຣະເຈົ້າ ໃນຖານະຜູ້ທີ່ຄວນແກ່ການກາບໄຫວບູຊາພຽງຜູ້ດຽວ

ນັ້ນຄື ການເຮັດຄວາມດີ ຫລື ພິທີກຳທາງສາສະຫນາຕ່າງໆ ເພື່ອອັລລໍຫ໌ພຽງແຕ່ຜູ້ດຽວ ບໍ່ກາບໄຫວສິ່ງອື່ນໃດນອກຈາກພຣະອົງອັລລໍຫ໌ ຜູ້ທີ່ມີຄວາມເຊື່ອໃນເຕົາຮີດແນວທາງໃນຂໍນີ້ ເຂົາຈະຕັ້ງໃຈຂໍ ແລະ ມຸ້ງຫມາຍຕໍ່ພຣະເຈົ້າພຽງຜູ້ດຽວ ບໍ່ວ່າຈະເຮັດຫຍັງ ເຊັ່ນ ການລະມາດ, ຂໍພອນ, ບໍລິຈາກທານ, ຖືສິ້ນອົດ ເປັນຕົ້ນ ເຂົາກໍ່ຈະເຮັດເພື່ອອັລລໍຫ໌ຢ່າງບໍລິສຸດໃຈ ຜູ້ທີ່ມີຄວາມເຊື່ອແບບນີ້ຈະ

ຍອມຮັບຄວາມເປັນບ່າວຂອງຕົວເອງຕໍ່ພຣະເຈົ້າພຽງຜູ້ດຽວ ບໍ່ກາບໄຫວສິ່ງອື່ນໃດ ຫລື ຕັ້ງພາຄີຄູ່ຽງຄູ່ກັບພຣະເຈົ້າອີກ.

### 4.1.3 ຄວາມເຊື່ອໃນຄວາມເປັນຫນຶ່ງດຽວຂອງພຣະເຈົ້າ ໃນພຣະນາມຊື່ ແລະ ຄຸນລັກສະນະອັນສັກສິດຂອງພຣະເຈົ້າ

ຄື ການເຊື່ອວ່າ ພຣະນາມຊື່ ແລະ ຄຸນລັກສະນະຕ່າງໆຂອງພຣະເຈົ້າທັ້ງຫລາຍມີຢູ່ນຳພຣະເຈົ້າພຽງຜູ້ດຽວ ບໍ່ມີຜູ້ໃດຈະມີພຣະນາມ ແລະ ລັກສະນະແບບນີ້ຄືພຣະເຈົ້າໄດ້ອີກ ທຸກໆ ພຣະນາມຊື່ຂອງພຣະເຈົ້ານັ້ນແມ່ນຊື່ທີ່ດີທັ້ງຫມົດ ບົ່ງບອກຄວາມສົມບູນແບບບໍ່ມີຂໍ້ຜິດພາດໃດໆ ແລະ ບໍ່ມີສັບພະສິ່ງໃດຈະຄືກັບພຣະເຈົ້າໄດ້ອີກ

ທ່ານສາດສະດາທູດມູຮຳມັດສອນວ່າພຣະເຈົ້ານັ້ນມີ **99 ຊື່** ເຊັ່ນ ຜູ້ຊົງເມດຕາ, ຜູ້ຊົງອະໄພ, ຜູ້ຊົງເປັນລາຊາ, ຜູ້ຊົງເປັນສັນຕິ, ຜູ້ຊົງຍິ່ງໃຫຍ່, ຜູ້ຊົງຄວບຄຸ້ມທຸກສິ່ງ, ຜູ້ຊົງອຳນາດເຫນືອທຸກຢ່າງ ອິສລາມສອນໃຫ້ເຮົານັ້ນເຊື່ອວ່າຊື່ເຫລົ່ານີ້ເປັນຂອງພຣະເຈົ້າພຽງຜູ້ດຽວ ເພື່ອທີ່ມຸສລິມນັ້ນຈະໄດ້ຂໍຄວາມເມດຕາ ແລະ ຂໍອະໄພໂທດນຳພຣະເຈົ້າ ຮ່ວມທັ້ງເຊື່ອວ່າພຣະເຈົ້ານັ້ນມີອຳນາດເຫນືອທຸກສິ່ງເຮັດໄດ້ທຸກຢ່າງຕາມຈຸດປະສົງຄວາມຕ້ອງການ ແລະ ເປັນຜູ້ທີ່ຍິ່ງໃຫຍ່ທີ່ບໍ່ມີຜູ້ໃດເອົາຊະນະເຫນືອໄດ້ ເປັນລາຊາເຫນືອປວງລາຊາທັ້ງຫລາຍ ພຣະອົງຈະເອົາກະສັດໃນໂລກນີ້ມາສືບສວນທຸກຄົນໃນມື້ສິ້ນໂລກ.

***ການມີຄວາມເຊື່ອຕໍ່ເຕົາຮີດໃນສ່ວນນີ້ປະກອບຈາກສອງຫລັກການນີ້ຮ່ວມກັນ ຄື :***

1. ການຍອມຮັບ: ຫມາຍຄວາມວ່າ ຕ້ອງຍອມຮັບຊື່ ແລະ ລັກສະນະຕ່າງໆ ທີ່ພຣະເຈົ້າກ່າວໄວ້ໃນຄຳພີອັລກຸຣອານ ຫລື ສາດສະດາທູດໄດ້ສອນເຮົາ

2. ການເຊື່ອໃນຄວາມບໍລິສຸດຂອງພຣະອົງຈາກຂໍ້ຜິດພາດ ຫລື ຄວາມບໍ່ສົມບູນແບບທັ້ງຫລາຍ: ຄື ຕ້ອງປະຕິເສດໃນສິ່ງທີ່ພຣະເຈົ້າປະຕິເສດໃນສິ່ງທີ່ກ່ຽວກັບລັກສະນະຂອງພຣະເຈົ້າ ເຊັ່ນ ພຣະເຈົ້າກ່າວວ່າ **"ບໍ່ມີສິ່ງໃດຄືກັບພຣະເຈົ້າອີກ"** (ອັຊຊູຣໍ : 11) ປະໂຫຍກດັ່ງກ່າວໃນຄຳພີນັ້ນກຳລັງບອກວ່າພຣະເຈົ້ານັ້ນບໍ່ຄືສິ່ງໃດໆ ທັ້ງຫລາຍໃນຈັກກະວານນີ້ ແລະໃນຂະນະດຽວກັນ ພຣະອົງຍັງເປັນຜູ້ສົມບູນແບບທີ່ສຸດ ບໍ່ມີສິ່ງໃດຄືກັບພຣະອົງ

ຄວາມເຊື່ອສິ່ງນີ້ເປັນສິ່ງທີ່ຫລາຍສາສະຫນານັ້ນບໍ່ມີ ເຊັ່ນ ສາສະຫນາຄຣິດສະຕຽນເຊື່ອວ່າພຣະເຈົ້ານັ້ນມີເມຍ ມີລູກ ຄືກັບຄົນທົ່ວໄປ ສາມາດບໍ່ໃສ່ເສື້ອຜ້າໃຫ້ຄົນອື່ນເຫັນໄດ້ (ປະໂປ້), ສາມາດລັບນອນນຳຄົນອື່ນໄດ້ ພຣະເຈົ້າອາດບໍ່ຈຳເປັນຕ້ອງຮູ້ທຸກຢ່າງກໍ່ໄດ້ ສາມາດອ່ອນແອໄດ້, ອາດຈະເສຍໃຈ, ລືມ, ເສຍດາຍ, ອາດຈະນອນຕື່ນ, ຮ້ອງໄຫ້, ດື່ມເຫລົ້າເມົາຢາ, ເມື່ອຍ, ພັກຜ່ອນ,

ສະບາຍ ຄືກັບມະນຸດກໍ່ໄດ້ທັ້ງຫມົດ ເຊັ່ນໃນຄໍາພີໄບເບິນກ່າວວ່າ ພຣະເຈົ້າໄດ້ສັ່ງໃຫ້ໂຮເຊອາຫລັບນອນນໍາຜູ້ຫຍິງຄົນຫນຶ່ງ ແລະ ສັ່ງໃຫ້ມີລູກນໍາຜູ້ຫຍິງຄົນນັ້ນ ໃນຄໍາພີໄບເບິນນັ້ນຫຍັງກ່າວວ່າ ພຣະເຈົ້ານັ້ນມັກກິນຊີ້ນປີ້ງ, ແລະ ພຣະເຈົ້າກໍ່ເຄີຍຫລິ້ນນໍາເອວາຜູ້ເປັນເມຍຂອງອາດັມ, ເຄີຍມັດຜົມໃຫ້ກັບເອວາ, ແລະມັກຫລິ້ນນາປາຍັກ ແລະຫຍັງບອກວ່າພຣະເຈົ້ານັ້ນຈະອ່ານຄໍາພີໄບເບິນທຸກຄືນກ່ອນນອນ, ບອກວ່າພຣະເຈົ້ານັ້ນບໍ່ມີຄວາມຮູ້ເລື່ອງອານາຄົດ, ວ່າພຣະເຈົ້ານັ້ນມີຮູບຮ່າງຄືກັບປານົກ, ຂຽນຫນັງສືດ້ວຍປີກສໍຄືກັບກັບມະນຸດ, ມັກຂີ້ລືງຂີ້ລືມ, ເຮັດຫຍັງກໍ່ຜິດພາດຫລາຍເທື່ອ ແລ້ວກໍ່ເສຍໃຈ ທັ້ງທີ່ຄວາມຈິງແລ້ວພຣະເຈົ້າຊົງບໍລິສຸດຈາກຄວາມບໍ່ສົມບູນແບບນີ້ທັ້ງຫມົດ

***ຜົນທີ່ໄດ້ຮັບຈາກການມີຄວາມເຊື່ອເຕົາຮີດນີ້ :***

1. ຜູ້ທີ່ຮູ້ຈັກຊື່ ແລະ ລັກສະນະຂອງພຣະເຈົ້າກໍ່ຈະແຮງຮູ້ຈັກພຣະເຈົ້າຫລາຍຂຶ້ນ ເຮັດໃຫ້ເຂົານັ້ນມີຄວາມສັດທາທີ່ເຂັ້ມຂົ້ນຫລາຍຂຶ້ນ ເຮັດໃຫ້ຈິດໃຈນັ້ນເຕັ້ມໄປດ້ວຍຄວາມຮັກ, ຄວາມໃຫ້ກຽດ, ແລະຄວາມນອບນ້ອມຕໍ່ພຣະເຈົ້າຫລາຍຂຶ້ນ ເມື່ອຈະຂໍສິ່ງໃດຕໍ່ພຣະເຈົ້າກໍ່ຈະເອີ້ນຂານພຣະເຈົ້າດ້ວຍກັບຊື່ທີ່ມ່ວນອ່ອນຊ້ອນເຫລົ່ານີ້ ເຊັ່ນດັ່ງທີ່ພຣະເຈົ້າກ່າວວ່າ "**ພຣະເຈົ້ານັ້ນມີຊື່ທີ່ມ່ວນ ແລະງົດງາມຢ່າງຫລວງຫລາຍ ຈົ່ງຂໍພຣະເຈົ້າດ້ວຍການເອີ້ນຊື່ຕ່າງໆເຫລົ່ານີ້.**"

(ອັລອະອ໌ຣອຟ : 180) ເຊັ່ນການກ່າວວ່າ 'ໂອ້ພຣະເຈົ້າຜູ້ປະທານປັດໄຈຊີບ, ຂໍຈົ່ງປະທານປັດໄຈໃຫ້ເຮົາແດ່!' 'ໂອ້ຜູ້ຊົງອະໄພໂທດ, ໂປດອະໄພໃຫ້ແກ່ຂ້ອຍນໍາ!' 'ໂອ້ຜູ້ຊົງເມດຕາສູງ, ໄດ້ໂປຣດເມດຕາຂ້ອຍແດ່!'

## 'ຊິຣິກ' ການຕັ້ງພາຄີສິ່ງອື່ນຄ່ຽງຄູ່ກັບພຣະເຈົ້າ

ການຕັ້ງພາຄີ ເປັນສິ່ງທີ່ກົງກັນຂ້າມກັບເຕົາຮີດ **(ຄວາມເຊື່ອໃນຄວາມເປັນຫນຶ່ງດຽວຂອງພຣະເຈົ້າ)** ຄືການເຊື່ອວ່າມີສິ່ງອື່ນຄືກັບພຣະເຈົ້າໄດ້ໃນຄວາມເຊື່ອ 3 ສ່ວນທີ່ກ່າວມາຂ້າງເທິງ

ດັ່ງນັ້ນ, ຜູ້ທີ່ເຊື່ອວ່າມີພຣະເຈົ້າອື່ນຄືກັບອັລລໍຫ໌ທີ່ສ້າງຈັກກະວານຄືກັນ, ຄວບຄຸ້ມໃຫ້ເປັນໃຫ້ຕາຍຄືກັນ, ຖືວ່າເຂົາຄົນນັ້ນເປັນຜູ້ຕັ້ງພາຄີກັບພຣະເຈົ້າ ເຊັ່ນດຽວກັນ, ໃຜທີ່ບູຊາສິ່ງອື່ນນອກຈາກອັລລໍຫ໌ແລ້ວ ກໍ່ນັບວ່າເຂົາຕັ້ງພາຄີຕໍ່ພຣະເຈົ້າ ຫລືໃຜທີ່ເອີ້ນຂານ ພຣະເຈົ້າດ້ວຍລັກສະນະທີ່ບໍ່ສົມບູນແບບ ກໍ່ນັບວ່າເຂົາຕັ້ງພາຄີຕໍພຣະເຈົ້າຄືກັນ ມຸສລິມຜູ້ສັດທາຕໍ່ພຣະເຈົ້າຈາເປັນຈະບໍ່ຕ້ອງມີຄວາມເຊື່ອຕັ້ງພາຄີເຫລົ່ານີ້ເພື່ອໃຫ້ໄດ້ມີຄວາມສັດທາທີ່ຖືກຕ້ອງ

## 4.2 ຫລັກສັດທາ 6 ປະການ

ທ່ານສາດສະດາທູດມູຮັມຫມັດໄດ້ກ່າວວ່າ "ສັດທາຄືການເຊື່ອວ່າ :

1. ພຣະເຈົ້າຄືອັລລໍຫ໌
2. ເຊື່ອໃນເທວະດາ ຫລື ມາລາອິກະ ຂອງອັລລໍຫ໌
3. ເຊື່ອໃນຄຳພີຂອງອັລລໍຫ໌
4. ເຊື່ອໃນສາດສະດາທູດຂອງອັລລໍຫ໌
5. ເຊື່ອໃນມື້ສິ້ນໂລກ
6. ເຊື່ອວ່າການກຳຫນົດເລື່ອງດີ ແລະບໍ່ດີ ນັ້ນມາຈາກພຣະອົງອັລລໍຫ໌ພຽງຜູ້ດຽວ.

ການສັດທານັ້ນ ຫມາຍຄວາມວ່າຕ້ອງເຊື່ອຢ່າງສົມບູນແບບເຊື່ອຢ່າງປັກໃຈຫນັກແໜ້ນ ບໍ່ມີຄວາມສົງໄສໃດໆຕໍ່ຫລັກການທັ້ງ 6 ປະການນີ້ ບໍ່ແນວນັ້ນຈະບໍ່ເອີ້ນວ່າເປັນມຸສລິມຜູ້ສັດທາໄດ້ ດັ່ງນັ້ນ, ມຸສລິມທີ່ຍັງມີຄວາມຄ້ອງຄ່າໃຈຂໍ້ໃດຂໍ້ຫນຶ່ງຈຳເປັນຕ້ອງສຶກສາຫລັກສັດທາໃນຂໍ້ນັ້ນໃຫ້ຊັດເຈນຢ່າງຮີບດ່ວນເພື່ອຈະບໍ່ໃຫ້ຕົນເອງຕົກສາສະຫນາ

### 4.2.1 ສັດທາເຊື່ອວ່າອັລລໍຫ໌ເປັນພຣະເຈົ້າ

ດັ່ງທີ່ກ່າວມາແລ້ວວ່າການສັດທານັ້ນຄືການເຊື່ອຢ່າງປັກໃຈຫນັກແຫນ້ນ 100% ຕ້ອງເຊື່ອດ້ວຍໃຈ ສະແດງອອກດ້ວຍການກະທຳ ຄວາມເຊື່ອນີ້ອາດຈະຂຶ້ນລົງໄດ້ ຖ້າເຮັດຄວາມດີກໍ່ແຮງສັດທາເຊື່ອກໍ່ຈະຫລາຍຂຶ້ນ ແຕ່ຖ້າຫາກເຮັດບາບກໍ່ຈະມີຄວາມສັດທາຫລຸດລົງ ດັ່ງນັ້ນ, ການສັດທາເຊື່ອວ່າອັລລໍຫ໌ຄືພຣະເຈົ້າ ຄື ການເຊື່ອ ແລະ ຍອມຮັບຫລັກການເຕົາຮີດຂອງ 3 ສ່ວນທີ່ກ່າວມາຂ້າງຕົ້ນແລ້ວ ນັ້ນກໍ່ຄື :

1- ເຊື່ອວ່າພຣະເຈົ້າແມ່ນຜູ້ຄວບຄຸ້ມຈັກກະວານແຕ່ພຽງຜູ້ດຽວ.

2- ເຊື່ອວ່າພຣະເຈົ້າຄູ່ຄວນເຄົາລົບກາບໄຫວບູຊາພຽງຜູ້ດຽວ.

3- ເຊື່ອວ່າພຣະເຈົ້າມີນາມຊື່ ແລະ ຄຸນລັກສະນະອັນສັກສິດພຽງຜູ້ດຽວ ທີ່ມີປະກົດໃນຄາພີອັລກຸຣອານ ແລະ ຄຳເວົ້າຂອງທ່ານສາດສະນະທູດ ຕ້ອງເຊື່ອນາວ່າພຣະເຈົ້າມີທຸກໆຄຸນລັກສະນະທີ່ສົມບູນແບບ ແລະ ປາດສະຈາກທຸກໆ ຄຸນລັກສະນະທີ່ຄືກັບສັບພະສິ່ງທັ້ງຫລາຍ

ການເຊື່ອວ່າພຣະເຈົ້ານັ້ນມີຕົວຕົນຢູ່ແທ້ ເປັນຄວາມເຊື່ອທີ່ມັນຝັງລຶກຢູ່ໃນໃຈຂອງມະນຸດທຸກຄົນ ບໍ່ຈຳເປັນຕ້ອງຊອກຫາຫລັກຖານໃຫ້ເກີດຄວາມວຸ້ນວາຍ ມະນຸດເກືອບທຸກຄົນທີ່ຢູ່ບົນໂລກນີ້ເກືອບທຸກສາສະຫນາ ຈຶ່ງເຊື່ອວ່າມີພຣະເຈົ້າຢູ່ແທ້ຈິ່ງ ພຽງແຕ່ບ້າງສາສະຫນານັ້ນອາດຈະໃຫ້ລັກສະນະພຣະເຈົ້າຜິດແປກໄປ ເຊັ່ນ ວ່າມີລູກ, ຫຼືເຊື່ອວ່າພຣະເຈົ້ານັ້ນມີຫລາຍສິບຫລາຍຮ້ອຍພຣະອົງ ເຊັ່ນສາສະຫນາຮິນດູ, ຫຼືເຊື່ອວ່າພຣະເຈົ້າເກີດຈາກມະນຸດທີ່ເຮັດສະມາທິຈົນບັນລຸພະລັງອຳນາດທີ່ສັກສິດ ເຊັ່ນສາສະຫນາພຸດ

ດັ່ງນັ້ນ, ເມື່ອເວລາມະນຸດນັ້ນມີຄວາມເຊື່ອຢູ່ໃນຈິດໃຈລຶກໆ ວ່າພຣະເຈົ້າມີຕົວຕົນຢູ່ແທ້ ມະນຸດກໍ່ມັກພຶ່ງພາຫາພະເຈົ້າໃນເວລາທີ່ພົບເຈີຄວາມຫຍາກລຳບາກ ເຊັ່ນ ເວລາພົບເຈີເລື່ອງຫນ້າເສົ້າເສຍໃຈ ຫລື ພົບໄພພິບັດ ທຳມະຊາດນີ້ມີຢູ່ນຳມະນຸດທຸກຄົນ ເຖິງວ່າມະນຸດບ້າງຄົນພະຍາຍາມກຳຈັດຄວາມເຊື່ອນີ້ອອກໄປກໍ່ຕາມ

ຕົວຕົນຂອງການມີຂອງມະນຸດນີ້ເອງແຫລະ ຄືຫລັກຖານທີ່ຍິ່ງໃຫຍ່ທີ່ສຸດເຖິງການມີຢູ່ຂອງພຣະເຈົ້າ ຄົນທີ່ໃຊ້ຄວາມຄິດພິຈາລະນາຈະເບິ່ງວ່າປັນຍາ ແລະ ປະສາດສຳພັດອັນລະອຽດອ່ອນຮວມເຖິງລະບົບຕ່າງໆ ທີ່ເຮັດວຽກຢ່າງເຫມາະສົມໃນຮ່າງກາຍເຫລົ່ານັ້ນເປັນຂອງຂັວນທີ່ພຣະເຈົ້າມອບໃຫ້ ແລະບໍ່ມີຜູ້ໃດທີ່ຈະສ້າງສັນຜົນງານແບບນີ້ໄດ້ນອກຈາກຜູ້ເປັນພຣະເຈົ້າພຽງຜູ້ດຽວເທົ່ານັ້ນ ພຣະເຈົ້າກ່າວວ່າ **"ໃນຕົວຂອງພວກເຈົ້າເອງພວກເຈົ້າກໍ່ບໍ່ເບິ່ງແດ່ບໍ່?"** (ອັຊຊາຣິຍາຕ : 21)

ຫຼືຈະເປັນຄວາມເຊື່ອເຫດຜົນງ່າຍໆ ວ່າທຸກສິ່ງທຸກຢ່າງຕ້ອງມີຜູ້ສ້າງ ສັບພະສິ່ງຢ່າງຫລວງຫລາຍໃນໂລກ ແລະ ຈັກກະວານ ທີ່ເຮົາເຫັນທຸກມື້ນີ້ ແນ່ນອນວ່າຕ້ອງມີຜູ້ສ້າງ ຫມູ່ດາວທີ່ໂຄຈ້ອນຕາມວິທີບໍ່ຕຳກັນ ມຸນວຽນຮອບຕົວເກີດເປັນຮອບເດືອນຮອບປີ ເປັນດາວເຫືອນາທາງມະນຸດຍາມຄ່ຳຄືນ ມີດວງດາວທີ່ຫມົດອາຍຸລະເບີດເປັນຫລຸມດຳ ມີດາວເຄາະເກີດໃຫມ່ຢູ່ຕະຫລອດ ທຸກສິ່ງທຸກຢ່າງເຫລົ່ານີ້ບໍ່ອາດຈະເກີດຂຶ້ນໄດ້ດ້ວຍຄວາມບັງເອີນນອກຈາກຈະຕ້ອງມີຜູ້ສ້າງຜູ້ທີ່ມີຄວາມສະຫລຽວສະຫລາດຮອບຮູ້ແລະປານີດລະອຽດອ່ອນ.

ໃນເມື່ອເຫດຜົນງ່າຍໆ ວ່າທຸກສິ່ງຕ້ອງມີຜູ້ສ້າງ ສິ່ງຕ່າງໆ ບໍ່ສາມາດເກີດຂຶ້ນໄດ້ດ້ວຍຕົວມັນເອງ ຫລື ດ້ວຍຄວາມບັງເອີນ ເຊັ່ນ ລົດຍົນທີ່ເຮົາຂັບກໍ່ຕ້ອງມີໂຮງງານຜູ້ຜະລິດ ບໍ່ວ່າເຄື່ອງຄິດເລກຫລື ຄອມພິວເຕີທີ່ເຮັດວຽກຢ່າງລະອຽດຫຍັງຕ້ອງມີຜູ້ສ້າງເລີຍ ການວ່າງເລັກເອົາໄວ້ຈຸດຫນຶ່ງເປັນເວລາຮ້ອຍ ຫຼື ລ້ານປີ ມັນກໍ່ບໍ່ສາມາດກໍ່ຕົວເອງຂຶ້ນມາເປັນເຄື່ອງຄິດເລກໄດ້ເອງ ບໍ່ຕ້ອງໄປເວົ້າຮອດການມີຂຶ້ນມາເອງໂດຍບໍ່ມີວັດຖຸພື້ນຖານໃດໆ ກໍ່ຂຶ້ນມາ ຄືເລີ່ມຈາກສູນນັ້ນເອງ ພຣະເຈົ້າກ່າວວ່າ **"ຫລືສິ່ງເຫລົ່ານັ້ນມີຂຶ້ນມາເອງ? ຫຼື ມັນເປັນຜູ້ສ້າງຂຶ້ນມາເອງຫວາ?"** (ອັຕຕູຣ : 35)

ຄວາມຫມາຍຂອງປະໂຫຍກຄຳພີນັ້ນ ຄື ມະນຸດນັ້ນບໍ່ມີຂຶ້ນມາເອງໂດຍຂາດຜູ້ສ້າງ ແລະເຊັ່ນດຽວກັນ, ມະນຸດກໍ່ບໍ່ໄດ້ສ້າງຕົວເອງ ດັ່ງນັ້ນ,ຈຶ່ງບໍ່ແປກທີ່ຕ້ອງມີພຣະເຈົ້າເປັນຜູ້ສ້າງ ທຸກລະບົບລະບຽບຕ່າງໆ ບໍ່ວ່າຈະເປັນ ດາວເຄາະ, ດາວທີ່ມີແສງ, ດາວທີ່ບໍ່ມີແສງ, ທ້ອງຟ້າ, ຫມູ່ເມກ ເປັນຫລັກຖານອັນຊັດເຈນອັນມີຢູ່ແທ້ຂອງພຣະເຈົ້າຜູ້ສ້າງ ພຣະເຈົ້າກ່າວວ່າ **"ຄືການສ້າງຂອງພຣະເຈົ້າຜູ້ຊົງລະອຽດອ່ອນຕໍ່ທຸກສິ່ງ."** (ອັນນັມລຸ : 88)

ດັ່ງນັ້ນ, ບໍ່ວ່າຈະເປັນດາວເຄາະ ຫຼື ດາວມີແສງ ຫຼືດາວບໍ່ມີແສງ ກໍ່ຈະມີວິທີການໂຄຈ້ອນຂອງຕົວມັນເອງ ບໍ່ລໍາເກີນແຊກແຊ່ງດາວດວງອື່ນເລີຍ ບໍ່ສະນັ້ນຈັກກະວານກໍ່ຈະເກີດຄວາມວຸ້ນວາຍ ພຣະເຈົ້າກ່າວວ່າ **"ດວງອາທິດບໍ່ສົມຄວນລາຫນ້າດວງເດືອນ ກາງຄືນກໍ່ບໍ່ຄວນລາຫນ້າກາງເວັນ ທຸກໆ ຢ່າງຍອມຢູ່ຕາມວິທີ່ຂອງເສັ້ນໂຄຈ້ອນ."** (ສູເຣາະຫ໌ ຍາຊີນ : 40)

### 4.2.2 ການສັດທາຕໍ່ເທວະທູດ (ມາລາອິກະຫ໌)

ການສັດທາຕໍ່ເທວະທູດມາລາອິກະ ຄື ການເຊື່ອວ່າເທວະທູດນັ້ນເປັນສິ່ງຖືກສ້າງເຊັ່ນດຽວກັບມະນຸດ ພຣະເຈົ້ງສ້າງເທວະທູດມາລາອິກະຂຶ້ນມາເພື່ອມາຮັບໃຊ້ເຊື່ອຟັງພຣະເຈົ້າ ແລະ ດາເນີນຕາມຄຳສັ່ງຂອງພຣະເຈົ້າ, ຫ້າມເຮັດຜິດຕໍ່ພຣະເຈົ້າ

ເທວະທູດນັ້ນເປັນສິ່ງທີ່ມີຊີວິດອີກສິ່ງຫນຶ່ງທີ່ມະນຸດບໍ່ສາມາດເບິ່ງເຫັນ ແລະ ເຂົ້າຫາໄດ້ ພຣະເຈົ້າໄດ້ສ້າງເທວະທູດມາລາອິກະຈາກແສງ, ໃຫ້ມີປີກ, ແລະເປັນຜູ້ເບິ່ງແຍ້ງສະຫວັນ ແລະ ນາລົກ, ເປັນຜູ້ປະຕິບັດຕາມຄຳສັ່ງຂອງພຣະເຈົ້າ ເທວະທູດມາລາອິກະບ້າງທ່ານເຮັດຫນ້າທີ່ແບກບັນລັງຂອງພຣະເຈົ້າ, ບ້າງທ່ານຖືກໃຊ້ໃຫ້ເບິ່ງມະນຸດໃຫ້ບັນທຶກຄວາມດີຄວາມຊົ່ວທຸກຢ່າງທີ່ມະນຸດເຮັດ.

ເທວະທູດມາລາອິກະ ນັ້ນມີຈຳນວນຫລວງຫລາຍບໍ່ມີຜູ້ໃດຮູ້ຈຳນວນແທ້ຈິ່ງຢົກເວັ້ນອັລລໍຫ໌ ແຕ່ເທວະທູດມາລາອິກະ ບ້າງສ່ວນນັ້ນພຣະເຈົ້າໄດ້ກ່າວຊື່ ແລະ ຫນ້າທີ່ເອົາໄວ້ ເຊັ່ນ:

**'ເທວະທູດຍິບຣິລ'** ເຮັດຫນ້າທີ່ເອົາຄຳສອນຈາກພຣະເຈົ້າມາສູ່ສາດສະນະທູດ.

**'ເທວະທູດມີກາອີນ'** ເຮັດຫນ້າເບິ່ງແຍງຝົນ ອາຫານ.

**'ເທວະທູດອິສຣໍຟີນ'** ເຮັດຫນ້າທີ່ເປົ່າສັນຍານວັນສິ້ນໂລກ.

**'ເທວະທູດມາລິກ'** ເບິ່ງແຍງນາລົກ.

**'ເທວະທູດຣິດວານ'** ເບິ່ງແຍງສະຫວັນ.

ເທວະທູດບໍ່ມີຄວາມສັກສິດໃດໆ  ບໍ່ມີອຳນາດໃດໆ ຄືພຣະເຈົ້າ ເທວະທູດສາມາດຕາຍໄດ້ແຕ່ຂໍ້ແທ້ຈິງຂອງຕົວຕົນເທວະທູດນັ້ນເປັນແນວໃດມະນຸດນັ້ນກໍ່ບໍ່ສາມາດຮູ້ໄດ້  ຍົກເວັ້ນເທົ່າທີ່ສາດສະນະທູດໄດ້ສອນເຮົາໄວ້ເທົ່ານັ້ນ.

***ຜົນທີ່ໄດ້ຮັບຈາກການເຊື່ອວ່າເທວະທູດນັ້ນມີແທ້:***

1- ເຮັດໃຫ້ຜູ້ສັດທານັ້ນເຊື່ອໃນອຳນາດຄວາມຍິ່ງໃຫຍ່ຂອງພຣະເຈົ້າ ເພາະວ່າເທວະທູດເປັນສິ່ງທີ່ຖືກສ້າງຂອງພຣະເຈົ້າທີ່ຍິ່ງໃຫຍ່ ແລ້ວຜູ້ສ້າງກໍ່ຕ້ອງຍິ່ງໃຫຍ່ໄປກວ່ານັ້ນອີກ ດັ່ງນັ້ນ, ຜູ້ສັດທາກໍ່ຈະໃຫ້ກຽດ ແລະ ຄວາມຫຍິ່ງໃຫຍ່ຕໍ່ພຣະເຈົ້າ

2- ເຮັດໃຫ້ມະນຸດນັ້ນເຊື່ອຟັງຕໍ່ພຣະເຈົ້າ ເພາະໃນເມື່ອເຊື່ອວ່າມີເທວະທູດສ່ວນຫນຶ່ງເຮັດຫນ້າທີ່ບັນທຶກຄວາມດີຄວາມຊົ່ວໃນທຸກສິ່ງທີ່ມະນຸດໄດ້ກະທຳ ກໍ່ຕ້ອງຍອມເຮັດໃຫ້ມະນຸດນັ້ນຢ້ານພຣະເຈົ້າ, ບໍ່ຍາກເຮັດຜິດຕໍ່ພຣະເຈົ້າ ບໍ່ວ່າຈະເປັນທີ່ປົກປິດຫລືເປີດເຜີຍ

3- ຈະເຮັດໃຫ້ມະນຸດນັ້ນອົດທົນເຊື່ອຟັງຕໍ່ພຣະເຈົ້າ ເຮັດໃຫ້ເກີດຄວາມຮູ້ສຶກສະຫງົບທາງຈິດໃຈ ເຊື່ອວ່າເຮົານັ້ນຖືກຝາກຟັງໃຫ້ເທວະທູດເບິ່ງແຍ້ງ ແລະ ເທວະທູດມາລາອິກະນັ້ນກໍ່ເຮັດຫນ້າທີ່ຢ່າງດີ

4- ຈະຂອບໃຈພຣະເຈົ້າທີ່ພຣະເຈົ້ານັ້ນໃຫ້ກຽດມະນຸດເຫນືອເທວະທູດມາລາອິກະ ເຖິງວ່າເທວະທູດຈະມີຄວາມຍິ່ງໃຫຍ່ ແລະ ມີພະລັງອຳນາດຫລາຍກ່ວາກໍ່ຕາມ

### 4.2.3 ການສັດທາຕໍ່ຄຳພີ

ຄຳພີແມ່ນຄຳເວົ້າຂອງພຣະເຈົ້າ  ຜູ້ສັດທານັ້ນຕ້ອງເຊື່ອວ່າຄຳພີທຸກເຫລັ້ມທີ່ພຣະເຈົ້າປະທານລົງມາໃຫ້ສາດສະນະທູດທັ້ງຫລາຍຕະຫລອດຍຸກຕັ້ງແຕ່ອາດີດສະໄຫມທີ່ຜ່ານມາ  ບໍ່ພຽງແຕ່ຄາພີອັລກຸຣອານຂອງສາດສະດາມູຣຳຫມັດທ່ານສຸດທ້າຍເທົ່ານັ້ນ ແລະສິ່ງທີ່ສຳຄັນ,  ຕ້ອງເຊື່ອວ່າຄຳພີອັລກຸຣອານແມ່ນຄຳພີເຫລັ້ມກາດຽວ ແລະ ເປັນເຫລັ້ມສຸດທ້າຍເຊີ່ງມາຍົກເລີກບົດບັນຊາກ່ອນຫນ້າທັ້ງຫມົດ ແລະ ເຊື່ອວ່າຄຳພີອັລກຸຣອານນັ້ນໄດ້ຮັບການປົກປ້ອງຈາກພຣະເຈົ້າຈາກການດັດແປ້ງຫລືປ້ອມແປງ ພຣະເຈົ້າໄດ້ກ່າວວ່າ **"ເຮົາໄດ້ປະທານຄາພີອັລກຸຣອານລົງມາ  ແລ້ວເຮົາຈະເປັນຜູ້ຮັກສາມັນເອງ."** (ອັລຮິຈຣຸ : 9)

ອັລກຸຣອານນັ້ນບໍ່ເຄີຍຖືກສັງຂະຍະນາດັດແປງແຕ່ແນວໃດເລີຍ ບໍ່ຄືຄຳພີໄບເບິນ ທັ້ງພັນທະສັນຍາເກົ່າຂອງໂມເຊ ແລະ ພັນທະສັນຍາໃຫມ່ຂອງພຣະເຢຊູ ນີ້ເປັນຫລັກຖານຫນື່ງທີ່ເປັນສັດຈະທາອັນຖືກຕ້ອງຫນຶ່ງດຽວຂອງອິສລາມ ຄຳພີອັລກຸຣອານນັ້ນເປັນຄຳພີເຫລັ້ມດຽວທີ່ບໍ່ມີການປ່ຽນແປງເລີຍພຽງແຕ່ອັກສອນດຽວກໍ່ຕາມ ໃນຂະນະທີ່ຄຳພີກ່ອນຫນ້ານັ້ນໃນອາດີດໄດ້ຮັບການປ່ຽນແປງເພີ່ມຕື່ມໄປຫມົດແລ້ວ ຕົວຢ່າງທີ່ເຫັນໄດ້ຊັດເຈນກໍ່ຄືຄຳພີໄບເບິນຣ໌ທີ່ພຣະເຈົ້າໄດ້ປະທານໃຫ້ໂມເຊ ແລະ ພຣະເຢຊູ

***ຄຳພີໄບເບິນຣ໌ນັ້ນພຣະເຈົ້າໄດ້ປະທານໃຫ້ທ່ານສາດສະດາທູດ 3 ຄົນ ຄື :***

1- ໂມເຊ (ນະບີມູຊາ) ພຣະເຈົ້າໄດ້ປະທານພັນທະສັນຍາເກົ່າໃຫ້.

2- ເດວິດ (ນະບີດາວູດ) ພຣະເຈົ້າໄດ້ປະທານບົດເພງການສັນລະເສີນໃຫ້.

3- ພຣະເຢຊູ (ນະບີອີຊາ) ພຣະເຈົ້າກໍ່ໄດ້ປະທານພັນທະສັນຍາໃຫມ່ໃຫ້. ເຊິ່ງປະຈຸບັນນີ້ບໍ່ມີເຫລືອອີກແລ້ວ ເພາະພັນທະສັນຍາໃຫມ່ທີ່ມີຢູ່ໃນປະຈຸບັນນັ້ນເປັນຂອງລູກສິດຂອງພຣະເຢຊູ ບໍ່ແມ່ນຄຳເວົ້າຂອງພຣະເຢຊູເອງ

ເຊັ່ນດຽວກັນ, ພຣະເຈົ້າກໍ່ໄດ້ປະທານຄຳພີບ້າງເຫລັ້ມໃຫ້ກັບອັບຣາມ (ນະບີອິບຣໍຮີມ) ແຕ່ຄຳພີອັລກຸຣອານເປັນຄຳພີເຫລັ້ມສຸດທ້າຍ ແລະ ຍົກເລີກບົດບັນຍັດທັ້ງຫມົດໃນກ່ອນຫນ້ານັ້ນ ບໍ່ວ່າຈະແມ່ນຄຳພີໄບເບິນກໍ່ຖືກຍົກເລີກ

***ຫນ້າທີ່ຂອງເຮົາທີ່ຕ້ອງມີຕໍ່ອັລກຸຣອານ :***

1- ຕ້ອງຮັກອັລກຸຣອານ ໃຫ້ກຽດ ແລະ ເຄົາລົບ ນັ້ນກໍ່ຍ້ອນວ່າອັລກຸຣອານຄືຄາເວົ້າຂອງພຣະເຈົ້າເຊິ່ງແມ່ນຄຳເວົ້າທີ່ແທ້ຈິງທີ່ສຸດ

2- ຕ້ອງດຸຫມັ່ນອ່ານອັລກຸຣອານ ແລະໃຊ້ປັນຍາພິຈາລະນາຄວາມຫມາຍພິຈາລະນາເຖິງອຸທາຮອນ ແລະເລື່ອງເລົ່າໃນຍຸກອາດີດເພື່ອເອົາມາເປັນບົດຮຽນໃນຊີວິດເຮົາ

3- ຈຳເປັນຕ້ອງປະຕິບັດຕາມຄຳສັ່ງສອນຕ່າງໆ ໃນຄຳພີອັລກຸຣອານ ແລະໃຊ້ຄາພີອັລກຸຣອານເປັນວິທີທາງໃນການດຳເນີນຊີວິດ

### 4.2.4 ການສັດທາຕໍ່ສາດສະນະທູດ

ແມ່ນການເຊື່ອວ່າພຣະເຈົ້າໄດ້ແຕ່ງຕັ້ງຄົນໆ ຫນຶ່ງໃນກຸ່ມຊົນມະນຸດຊາດໃຫ້ເປັນສາດສະດາທູດ (ພາສາອາຫຼັບເອີ້ນວ່າ ນະບີ) ເພື່ອສອນມະນຸດໃຫ້ຮູ້ຈັກພຣະເຈົ້າທີ່ແທ້ຈິງທີ່ບໍ່ມີພາຄີຄຽງຄູ່ ແລະໃຫ້ມະນຸດປະຕິເສດບໍ່ເຊື່ອຖືສິ່ງສັກສິດອື່ນ

ສາດສະດາທຸກທ່ານເປັນຄົນດີ ຮັກສາຄວາມຈິງ ບໍ່ຂີ້ຕົວະແມ້ແຕ່ເທື່ອດຽວ ເປັນຜູ້ຊີ້ນາມະນຸດໄປສູ່ເສັ້ນທາງທີ່ຖືກຕ້ອງ ພຣະເຈົ້າຍັງໄດ້ໃຫ້ສາດສະດາທູດບາງທ່ານເຮັດການອັດສະຈັນເພື່ອທ້າທາຍມະນຸດທີ່ປະຕິເສດແລະເພື່ອຢືນຢັນຄວາມຈິງ ເຊັ່ນ ໃຫ້ໄມ້ເທົ້າຂອງໂມເຊ (ນະບີມູຊາ) ກາຍຮ່າງເປັນງູໃຫຍ່, ໃຫ້ພະເຍຊູ (ນະບີອີຊາ) ສາມາດຮັກສາຄົນຕາບອດແລະຄົນຕາຍໄດ້, ແລະໃຫ້ນະບີມູຮຳມັດສະແດງການຕັດດວງເດືອນ

ສາດສະດາທູດທຸກທ່ານໄດ້ເຜີຍແຜ່ທຸກຄຳສອນທີ່ພຣະເຈົ້າສັ່ງໃຊ້ໂດຍບໍ່ໄດ້ປົກປິດ ຫຼື ເພີ່ມເຕີມສິ່ງໃດບໍ່ວ່າຈະເປັນອັກສອນດຽວ ບໍ່ມີສາດສະດາທູດທ່ານໃດສອນໃຫ້ມະນຸດປ່ຽນມາກາບໄຫວ້ຕົວເອງ ເຊັ່ນ ພະເຍຊູ (ນະບີອີຊາ) ກໍ່ເປັນພຽງມະນຸດທຳມະດາທີ່ພຣະເຈົ້າແຕ່ງຕັ້ງໃຫ້ເປັນສາດສະດາທູດ ເຮັດຫນ້າທີ່ເຜີຍແພ ບໍ່ໄດ້ເປັນພຣະເຈົ້າ ຫຼື ລູກຂອງພຣະເຈົ້າແຕ່ຢ່າງໃດ ແລະບໍ່ໄດ້ຖືກຕຶງໄມ້ກາງເຂນເສີຍຊີວິດ ແຕ່ຖືກພຣະເຈົ້າຊ່ວຍໃຫ້ໜີໄປໄດ້ແລະໃຫ້ລູກສິດຜູ້ທໍຣະຍົດຖືກຕຶງໄມ້ກາງເຂນແທນ ປັດຈຸບັນນີ້ພະເຍຊູຫຍັງບໍ່ຕາຍແຕ່ພຣະເຈົ້າຮັກສາໄວ້ ແລະໃຫ້ເປີດເຜີຍໂຕອີກເທື່ອຕອນຈະໃກ້ຮອດມື້ສິ້ນໂລກ

ແມ່ຂອງພະເຍຊູແມ່ນ ພຣະແມ່ມາຣຽມ (ມັຣຍັມ) ເປັນຄົນດີທີ່ອາໄສຢູ່ໃນວັດຕະຫລອດບໍ່ໄດ້ແຕ່ງງານນຳໃຜ ແຕ່ພຣະເຈົ້າຕ້ອງການໃຫ້ພຣະເຍຊູເກີດມາໂດຍບໍ່ມີພໍ່ຈິງໃຫ້ມາຣຽມຖືຜາທັນທີບໍ່ໄດ້ມີຜູ້ບ່າວມາແຕະຕ້ອງໂຕແຕ່ຢ່າງໃດ ພຣະເຈົ້າເວົ້າວ່າ **"ສາຫຼັບພຣະເຈົ້າ ນະບີອີຊາ ກໍ່ຄືກັບອາດຳທີ່ພຣະເຈົ້າຊົງສ້າງມາຈາກດິນ ພຣະອົງສັ່ງໃຫ້ມັນເປັນ ແລ້ວມັນກໍ່ເປັນຂຶ້ນມາ."** (ອາລຸອິມຣອນ : 59)

ພະເຍຊູຈະເປີດເຜີຍໂຕອີກເທື່ອຕອນຈະໃກ້ຮອດມື້ສິ້ນໂລກ ເພື່ອມາປົກຄອງໃຫ້ໂລກນີ້ເປັນໄປຕາມສາດສາໜາຂອງນະບີມຸຮຳມັດ ຈາກນັ້ນທ່ານກໍ່ຈະຕາຍຄືຄົນປົກກະຕິ

ຊາວຄຣິດສະຕຽນແລະຊາວຍິວໃນອະດີດເຮັດຮ້າຍ ແລະກ່າວຫາດູຖູກສາດສະນະທູດຢ່າງຫຼວງຫຼາຍ ເຊິ່ງເປັນສິ່ງທີ່ບໍ່ຖືກຕ້ອງ ເພາະສາດສະນະທູດແມ່ນມະນຸດທີ່ສົມບູນແບບທີ່ພຣະເຈົ້າເລືອກມາໃຫ້ເຮັດໜ້າທີ່ທີ່ຍິ່ງໃຫຍ່ທີ່ສຸດ ນັ່ນແມ່ນການເຜີຍແຜ່ຄາສອນແລະເປັນຜູ້ນາແບບຢ່າງແກ່ມະນຸດ ເຊັ່ນ

- ກ່າວຫາວ່າໂນອາ (ນະບີນັວຫ໌) ດື່ມເຫຼົ້າ.

- ກ່າວຫາວ່າໂລດ (ນະບີລູດ) ນອນນຳລູກສາວແລະເກີດລູກ.

-ກ່າວຫາວ່າອີຊາກ (ນະບີອິສຮາກ) ຕົວະອັບຣາມ (ນະບີອິບຣໍຮີມ) ເພາະຕ້ອງການເປັນສາດສະດາທູດ.

- ກ່າວຫາວ່າອາໂຣນ (ນະບີຮາຣູນ) ສ້າງຮູບປັ້ນວົວ.

- ກ່າວຫາວ່າດາວິດ (ນະບີດາວຸດ) ນອນນຳເມຍຂອງທະຫານແລະເກີດລູກ ຈາກນັ້ນດາວິດກໍ່ສັ່ງໃຫ້ຜົວຂອງລາວໄປອອກຕໍ່ສູ້ຈົນຕາຍ ດາວິດເຈິ່ງແຕ່ງງານນຳລາວ.

ຂໍ້ກ່າວຫາທັ້ງຫມົດນີ້ບໍ່ແມ່ນຄວາມຈິງ ແລະ ແມ່ນການກ່າວເທັດແກ່ສາດສະດາທູດທີ່ເປັນແບບຢ່າງຂອງຄວາມດີ.

**4.2.5 ການສັດທາຕໍ່ມື້ສິ້ນໂລກ**

ມື້ສິ້ນໂລກຂອງແຕ່ລະຄົນນັ້ນເລີ່ມຕັ້ງແຕ່ມື້ທີ່ເຂົາເສຍຊີວິດຈົນຮອດມື້ສຸດທ້າຍຂອງໂລກທີ່ທຸກຢ່າງຈະຖືກທຳລາຍ ແລະມະນຸດທຸກຄົນຈະຄື້ນຊີບຂຶ້ນມາໃຫມ່ ແລະ ຮ່ວມຕົວເພື່ອຖ້າຄາພິພາກສາໃນທີ່ແຫ່ງຫນຶ່ງທີ່ຈະຮ່ວມມະນຸດທຸກຄົນຕັ້ງແຕ່ຄົນທຳອິດຈົນຮອດຄົນສຸດທ້າຍເອົາໄວ້ ແລະຈະສິ້ນສຸດເຫດການຂອງການພິພາກສາດ້ວຍການທີ່ມະນຸດທຸກຄົນບໍ່ໄດ້ເຂົ້າສະຫວັນກໍ່ໄດ້ລົງນາລົກເຫດການທີ່ສຳຄັນໃນການພິພາກສາ ເຊັ່ນ ການແຈກບັນຊີຄວາມດີຄວາມຊົ່ວ, ການນຳຄວາມດີຄວາມຊົ່ວມາຊັ່ງນ້ຳຫນັກ, ການຍາງຜ່ານຂ້າມສະພານທີ່ເປັນເສັ້ນທາງຜ່ານຂຸມນາລົກ ແລະ ອື່ນໆ

ທີ່ເອີ້ນວ່າມື້ສິ້ນໂລກເພາະຈະບໍ່ມີມື້ແບບນີ້ອີກແລ້ວ ເປັນມື້ສຸດທ້າຍແທ້ຈິ່ງ ເມື່ອຜູ້ສັດທາແລະເຊື່ອການມີຢູ່ຂອງພຣະເຈົ້າເຂົາກໍ່ຈະຕ້ອງເຊື່ອໃນມື້ສິ້ນໂລກນຳ ເພາະພຣະເຈົ້ານັ້ນຈະບໍ່ປ່ອຍໃຫ້ຄົນເຮັດຊົ່ວຕ້ອງຫລຸດພົ້ນ ແລະ ຕາຍໄປໂດຍທີ່ບໍ່ໄດ້ຮັບການລົງໂທດ ເພາະມັນຂັດຈາກຫລັກຄວາມຍຸຕິທຳຂອງພຣະເຈົ້າ ແລະພຣະເຈົ້າກໍ່ບໍ່ປ່ອຍໃຫ້ຄົນດີທີ່ຕາຍໄປໂດຍບໍ່ໄດ້ຮັບການຕອບແທນໃດ

ພຣະເຈົ້າຈະຄື້ນສິດໃຫ້ກັບທຸກໆ ຄົນ ແລະ ຕອບແທນຜົນການກະທຳຂອງແຕ່ລະຄົນ ດັ່ງນັ້ນຈຶ່ງຕ້ອງມີອີກຊີວິດຫນຶ່ງເອີ້ນວ່າໂລກຫນ້າເປັນໂລກແຫ່ງການຕອບແທນຜົນການກະທຳຄວາມດີ ແລະຄວາມຊົ່ວ

***ຜົນທີ່ໄດ້ຮັບຕໍ່ການສັດທາຕໍ່ວັນສິ້ນໂລກ :***

1- ເພື່ອເຕືອນສະຕິຄົນທີ່ໃຊ້ຊີວິດຢູ່ໃນໂລກນີ້ຢ່າງຟຸ້ມເຟື່ອຍ ແລະ ລົງທາງ ໃຫ້ກັບມາເຄົາລົບພັກດີຕໍ່ພຣະເຈົ້າ ແລະໃຊ້ເວລາທີ່ເຫລືອໃຫ້ເປັນປະໂຫຍດທີ່ສຸດ ເພາະໂລກໜ້າເປັນໂລກອາມະຕະທີ່ຈະບໍ່ມີການເສຍຊີວິດອີກແລ້ວ ບໍ່ມີທາງຫວນຄືນກັບມາເຮັດຄວາມດີ ໃຫມ່ອີກໄດ້ໃນໂລກນີ້

2- ເມື່ອມະນຸດນັ້ນສັດທາມື້ສິ້ນໂລກ ເຂົາກໍ່ຈະໝັ້ນໃຈວ່າຄວາມດີທີ່ເຂົາເຮັດນັ້ນຈະໄດ້ຮັບການຕອບແທນຢ່າງແນ່ນອນ ຄວາມສຸກໃນໂລກນີ້ບໍ່ອາດສົມທຽບກັບຄວາມສຸກຕະຫລອດການໃນໂລກໜ້າໄດ້ ເຊັ່ນດຽວກັນ, ການລົງລືມຢູ່ກັບຄວາມສຸກຊົ່ວຄາວໃນໂລກນີ້ແບບຜິດໆຕະຫລອດຊີວິດກໍ່ບໍ່ທຽບເທົ່າກັບຊີວິດທີ່ຈະຖືກໂຍນລົງໄຟນາລົກພຽງແຕ່ພິບຕາໄດ້ ບໍ່ມີການລົງໂທດໃດໃນໂລກນີ້ຈະທຽບເທົ່າກັບການລົງໂທດໃນໂລກໜ້າໄດ້ ເຊັ່ນດຽວກັນ, ການໄດ້ເຂົ້າສະຫວັນພຽງກະພິບຕາ ຈະເຮັດໃຫ້ຄົນທີ່ເຂົ້າສະຫວັນນັ້ນລືມຄວາມທຸກຄວາມຊົ່ວຮ້າຍທີ່ເຄີຍເກີດຂຶ້ນນຳເຂົາໃນໂລກນີ້

### 4.2.6 ການສັດທາເຊື່ອຕໍ່ການກຳນົດຂອງພຣະເຈົ້າ

ການກຳນົດຂອງພຣະເຈົ້າ ຫມາຍເຖິງ ການທີ່ພຣະເຈົ້າຮອບຮູ້ທຸກຢ່າງໃນອານາຄົດພາຍພາກໜ້າທີ່ຈະເກີດຂຶ້ນ ແລະເມື່ອຮອດເວລາສິ່ງນັ້ນຈະເກີດຂຶ້ນ ພຣະເຈົ້າກໍ່ຈະໃຫ້ມັນເກີດຂຶ້ນດ້ວຍອານາດພະລັງຂອງພຣະເຈົ້າ ນັ້ນກໍ່ຄືທຸກສິ່ງທີ່ເກີດຂຶ້ນໃນຮອບຕົວຂອງເຮົານັ້ນເອງ ບໍ່ວ່າຈະເປັນການເກີດແກ່ເຈັບຕາຍທຸກຢ່າງກໍ່ຕາມ

ດັ່ງນັ້ນ, ມຸສລິມຕ້ອງເຊື່ອຢ່າງຫນັກແຫນ້ນວ່າທຸກສິ່ງທີ່ພຣະເຈົ້າຮອບຮູ້ ແລະໄດ້ການົດໄວ້ເປັນໄປຕາມຄວາມຮູ້ເຫດຜົນ ແລະ ການຈັດການເບິ່ງແຍງຈາກພຣະເຈົ້າ ທຸກຢ່າງທີ່ມະນຸດຄົນໜຶ່ງຈະຕ້ອງພົບເຈີ ບໍ່ວ່າຈະເປັນເລື່ອງດີ ແລະ ບໍ່ດີ ທຸກຢ່າງເປັນສິ່ງທີ່ພຣະເຈົ້າປະຊົງທັ້ງຫມົດ

ມຸສລິມຕ້ອງສັດທາເຊື່ອວ່າບໍ່ວ່າເລື່ອງຫຍັງຈະເກີດຂຶ້ນໃນອາດີດ ປະຈຸບັນ ແລະ ໃນອານາຄົດທຸກຢ່າງພຣະເຈົ້າຮອບຮູ້ມາແລ້ວ ພຣະເຈົ້າຈະຮູ້ວ່າມັນຈະເກີດຂຶ້ນແບບໃດ ເຊັ່ນດຽວກັບທີ່ພຣະເຈົ້າສອນເຮົາໃຫ້ຮູ້ເຖິງຄວາມຮູ້ສຶກຂອງຄົນທີ່ຈະເຂົ້ານາລົກໃນມື້ສິ້ນໂລກຈະເປັນແບບໃດ ຄວາມຮູ້ສຶກຂອງເຂົາທີ່ຢາກມາເຮັດຄວາມດີໃນໂລກນີ້ອີກ ພຣະເຈົ້າໄດ້ກ່າວວ່າ **"ເຖິງວ່າພວກເຂົາຈະຖືກນາກັບມາ ພວກເຂົາກໍ່ຈະກັບມາເຮັດໃນສິ່ງທີ່ເຄີຍຖືກຫ້າມບໍ່ໃຫ້ພວກເຂົາເຮັດອີກຄັ້ງ"** (ອັລອັນອາມ :28) ນັ້ນກໍ່ຄື ເຖິງຈະໄດ້ກັບມາຢູ່ເທິງໂລກນີ້ເຂົາກໍ່ຈະໃຊ້ຊີວິດແບບເກົ່າ ເຮັດຄວາມຊົ່ວອີກຕາມເຄີຍ

ມຸສລິມຕ້ອງສັດທາເຊື່ອວ່າ ພຣະເຈົ້າໄດ້ບັນທຶກຄວາມຮອບຮູ້ທີ່ພຣະອົງຮູ້ເອົາໄວ້ວ່າມັນຈະເກີດຂຶ້ນຈົນຮອດມື້ພິພາກສາເອົາໄວ້ແລ້ວກ່ອນທີ່ພຣະເຈົ້າຈະສ້າງຈັກກະວານ ແລະ ໂລກ ທ່ານສາດສະດາທູດກ່າວວ່າ **"ອັລລໍຫ໌ການົດທຸກສິ່ງເອົາໄວ້ແລ້ວ ກ່ອນທີ່ພຣະອົງຈະສ້າງຊັ້ນຟ້າ ແລະ ແຜ່ນດິນ ເປັນໄລຍະເວລາຫ້າຫມື່ນປີ"**

ມຸສລິມຕ້ອງສັດທາຢ່າງສົມບູນແບບວ່າທຸກຢ່າງທີ່ພຣະເຈົ້າຕ້ອງການຈະຕ້ອງເກີດຂຶ້ນຢ່າງແນ່ນອນ ແຕ່ສິ່ງໃດທີ່ພຣະອົງບໍ່ຕ້ອງການມັນກໍ່ບໍ່ສາມາດເກີດຂຶ້ນໄດ້ ບໍ່ມີສິ່ງໃດເກີດຂຶ້ນພາຍໃຕ້ຂອບເຂດອຳນາດຂອງພຣະເຈົ້າໄດ້ ຍົກເວັ້ນສິ່ງທີ່ພຣະອົງຕ້ອງການ ແລະຊົງປະສົງເທົ່ານັ້ນ

ມຸສລິມຕ້ອງສັດທາວ່າສິ່ງໃດກໍ່ຕາມທີ່ຈະເກີດຂຶ້ນກັບເຂົາ ເຂົາກໍ່ບໍ່ສາມາດຫລຸດພົ້ນຈາກມັນໄດ້ ສ່ວນສິ່ງໃດທີ່ບໍ່ມີທາງເກີດຂຶ້ນແນ່ນອນຕາມຄວາມຮູ້ຂອງພຣະເຈົ້າມັນກໍ່ບໍ່ສາມາດເກີດຂຶ້ນກັບເຂົາໄດ້ ພຣະເຈົ້າກ່າວວ່າ **"ບໍ່ມີສິ່ງໃດທີ່ມະນຸດຕ້ອງການໃຫ້ເກີດຂຶ້ນ ຍົກເວັ້ນມັນແມ່ນສິ່ງທີ່ພຣະເຈົ້າຕ້ອງການໃຫ້ມັນເກີດຂຶ້ນ."** (ອັຕຕັກວີຣ : 29)

ມຸສລິມຕ້ອງສັດທາວ່າພຣະເຈົ້າແມ່ນຜູ້ສ້າງທຸກສິ່ງ ບໍ່ວ່າຈະເປັນການກະທຳທຸກການເຄື່ອນໄຫວຂອງມະນຸດ ເພາະພຣະເຈົ້າຄືຜູ້ມອບພະລັງໃຫ້ແກ່ມະນຸດ ແຕ່ໃນຂະນະດຽວກັນ, ພຣະເຈົ້າກໍ່ໄດ້ມອບເຈດຕະນາອາລົມເສລີໃຫ້ມະນຸດເລືອກຈະເຮັດສິ່ງໃດກໍ່ໄດ້ ຈະເຮັດດີ ຫຼື ເຮັດຊົ່ວກໍ່ໄດ້ ພຣະເຈົ້າບໍ່ໄດ້ບັງຄັບ ມະນຸດຢາກເຮັດດີ ພຣະເຈົ້າກໍ່ປ່ອຍໃຫ້ເຂົາເຮັດ ແຕ່ຖ້າມະນຸດຕ້ອງການເຮັດຊົ່ວ ພຣະເຈົ້າກໍ່ຈະປ່ອຍໃຫ້ເຮັດ ແລ້ວທຸກຄົນກໍ່ຈະຖືກສອບສວນ ແລະ ພິພາກສາ ແລະ ໄດ້ຮັບການຕອບແທນ ພຣະເຈົ້າກ່າວວ່າ **"ຜູ້ໄດ້ບໍລິຈາກ ແລະ ຢຳນ ແລະ ສັດທາຕໍ່ສັດຈະທາອັນດີງາມ ເຮົາກໍ່ຈະປ່ອຍໃຫ້ເຂົາໄດ້ເຂົ້າສະຫວັນອັນເປັນທີ່ສະດວກສະບາຍ ສ່ວນຜູ້ໃດທີ່ຂີ້ຖີ່ ແລະ ຄິດວ່າເຮັດດີພໍແລ້ວ ແຖມຍັງປະຕິເສດຕໍ່ສັດຈະທຳອັນດີງາມ ເຮົາກໍ່ຈະປ່ອຍໃຫ້ເຂົາໄດ້ເຂົ້ານາລົກອັນເປັນທີ່ຢູ່ທີ່ທຸກຍາກລຳບາກ."** (ອັລ-ໄລ : 5-9)

ພຣະເຈົ້າໄດ້ສ້າງທຸກການກະທຳບໍ່ວ່າຈະດີ ຫຼື ຊົ່ວຂອງມະນຸດ ພຣະເຈົ້າກ່າວວ່າ **"ພຣະເຈົ້ານັ້ນໄດ້ສ້າງພວກທ່ານ ແລະ ສິ່ງທີ່ພວກທ່ານເຮັດ"** (ອັສສອຟຟາຕ : 96)

## 4.3 ຫລັກການອິສລາມ ພາກປະຕິບັດ

ຫລັກການອິສລາມພາກປະຕິບັດ ມີ 5 ຂໍ້ ມຸສລິມຜູ້ສັດທາເຊື່ອຈາເປັນຕ້ອງປະຕິບັດເພື່ອໃຫ້ສາສະຫນາອິສລາມຂອງເຂົາມີມາດຕະຖານທີ່ເຂັ້ມແຂງຕໍ່ໄປ ຫ້າປະການນີ້ຄືເສົາຫລັກຂອງອິສລາມທີ່ສໍາຄັນຫລາຍຢູ່ໃນຫະດິຊ(ແນວທາງ) ທີ່ສາດສະດາມູຮໍາມັດກ່າວວ່າ : ອິສລາມນັ້ນຖືກສ້າງຢູ່ເທິງຫລັກ 5 ປະການ :

1. ການປະຕິຍານຕົນວ່າ: **ບໍ່ມີພຣະເຈົ້າອື່ນໃດນອກຈາກພຣະອົງອັລລໍຫ໌ ແລະ ມູຮັມຫມັດເປັນສາດສະດາທູດຂອງພຣະອົງອັລລໍຫ໌**

2. ດໍາລົງການລະມາດ

3. ຈ່າຍພາສີ ຊະກາດ

4. ຖືສິ້ນອົດໃນເດືອນຣໍມະດອນ (ເດືອນ 9 ຂອງເດືອນອິສລາມ)

5. ປະກອບພິທີຮັຈສໍາຫລັບຜູ້ທີ່ມີຄວາມສາມາດເດີນທາງໄປໄດ້

### 4.3.1 ການປະຕິຍານຕົນ

ການປະຕິຍານຕົນ ຄືການກວ່າວ່າ : **ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ ແລະ ນາບີມູຮັມຫມັດເປັນສາດສະດາທູດຂອງອັລລໍຫ໌**

ມຸສລິມບໍ່ສາມາດນັບຖືສິ່ງອື່ນໄດ້ຄ່ຽງຄູ່ກັບພຣະອົງອັລລໍຫ໌ໄດ້ ແລະບໍ່ຈໍາເປັນຕ້ອງມີຫມໍຜີຮ່າງສິງໃດໆ ທີ່ມາເປັນຕົວກາງລະຫວ່າງມະນຸດ ແລະ ພຣະເຈົ້າ ເພາະຄວາມສາພັນລະຫວ່າງມະນຸດກັບພຣະເຈົ້ານັ້ນຄືຄວາມສໍາພັນທີ່ໃກ້ຊິດ ບໍ່ຈໍາເປັນຕ້ອງມີຄົນກາງໃດໆ ເຊັ່ນດຽວກັນ, ມຸສລິມຕ້ອງເຊື່ອວ່າມູຮັມຫມັດເປັນສາດສະດາທູດຂອງອັລລໍຫ໌ທີ່ຖືກສົ່ງມາໃຫ້ມະນຸດທັງມວນໃນຍຸກສຸດທ້າຍນີ້ ມຸສລິມຈໍາເປັນຕ້ອງເຊື່ອທຸກຢ່າງທີ່ເປັນຄໍາເວົ້າຄໍາສອນຂອງທ່ານ

ຫລັກການເຕົາຮີດຂໍ້ນີ້ເຮັດໃຫ້ອິສລາມແຕກຕ່າງຢ່າງຊັດເຈນ ພຣະເຈົ້າໄດ້ກ່າວວ່າ **"ເຮົາບໍ່ໄດ້ສ້າງຈິນ (ຜີ) ແລະ ມະນຸດ ມາເພື່ອສິ່ງໃດນອກຈາກມາເຄົາລົບກາບໄຫວ"**

(ອັຊຊາຣິຍາດ : 56)

ດັ່ງນັ້ນ, ເຮົາຈຶ່ງບໍ່ສາມາດເຄົາລົບສິ່ງອື່ນຄ່ຽງຄູ່ກັບພຣະເຈົ້າໄດ້

### 4.3.2 ການລະມາດ

ການລະມາດ ແມ່ນການຂໍພອນຕາມວິທີອິສລາມ ມຸສລິມຖ້າເຂົ້າຮັບອິສລາມກໍ່ຕ້ອງລະມາດທຸກມື້ ມື້ລະຫ້າເວລາ ພຣະເຈົ້າໄດ້ກ່າວວ່າ **"ຈົ່ງລະມາດ ຈ່າຍພາສີຊະກາດແລະກົ້ມໂຄ້ງພ້ອມກັບຜູ້ທີ່ກົ້ມໂຄ້ງຕໍ່ພຣະເຈົ້າທຸກຄົນ"** (ອັລບະກໍຣ໌ :43)

ການລະມາດ ຫມາຍເຖິງ ບົດຂໍພອນ ແລະ ທ່າທາງຕ່າງໆ ທີ່ມີຂໍ້ກໍານົດເອົາໄວ້ສະເພາະສາຫລັບການລະມາດ ມຸສລິມທຸກຄົນຕ້ອງລະມາດເວລາເຊົ້າມືດ ເວລາບ່າຍ ເວລາຄາຍແລ້ງ ເວລາຕາເວັນຫລັບຂອບຟ້າ ເວລາກາງຄືນ ເປັນ ຫ້າເວລາ ທຸກມື້ ແລະຕ້ອງປະຕິບັດຕາມເງື່ອນໄຂຮູບແບບຂອງທ່ານສາດສະດາທູດທີ່ໄດ້ສອນເອົາໄວ້

ການລະມາດຄືການເຊື່ອມຄວາມສໍາພັນລະຫວ່າງມະນຸດກັບພຣະເຈົ້າໂດຍກົງ ບໍ່ມີສື່ກາງແຕ່ຢ່າງໃດ ເຊັ່ນດຽວກັບທີ່ຮ່າງກາຍຕ້ອງການອາຫານ ເຊັ່ນດຽວກັບວິນຍານກໍ່ຕ້ອງການອາຫານຕ້ອງການຄວາມສຸກສະຫງົບໃນຈິດໃຈ ໃນການລະມາດນັ້ນຜູ້ສັດທາຈະຮູ້ສຶກມີຄວາມສຸກ ຮູ້ສຶກປາດສະຈາກຄວາມວິຕົກກັງວົນທຸກຢ່າງ ເພາະຄົນລະມາດນັ້ນຈະຮູ້ດີວ່າເຂົານັ້ນຢູ່ຕໍ່ຫນ້າຂອງພຣະເຈົ້າ ແລະ ພຣະເຈົ້າກໍ່ຮູ້ດີຕໍ່ສິ່ງທີ່ມະນຸດຄົນຫນຶ່ງໄດ້ພົບເຈີໃນແຕ່ລະມື້ ສິ່ງນີ້ຈະສ້າງຄວາມຄິດໃນແງ່ບວກຕໍ່ຄົນທີ່ລະມາດ

ການລະມາດຖືວ່າ ເປັນກຽດສິ່ງຫນຶ່ງທີ່ພຣະເຈົ້າໃຫ້ກັບມະນຸດໃຫ້ສາມາດຕິດຕໍ່ຫາພຣະເຈົ້າໄດ້ຕະຫລອດທັ້ງກາງເວັນ ແລະ ຍາມກາງຄືນ

### 4.3.3 ພາສີຊະກາດ

ພາສີຊະກາດ ຄື ສັບສິ້ນສ່ວນຫນຶ່ງທີ່ພຣະເຈົ້າໄດ້ກໍານົດວ່າໃຫ້ຄົນຮັ່ງມີຕ້ອງແຈກຈ່າຍໃຫ້ຄົນທຸກຍາກເພື່ອໃຫ້ສັງຄົມໄດ້ຮັບຄວາມເທົ່າທຽມກັນ

ປະໂຫຍດທີ່ໄດ້ຮັບຈາກຫລັກການຂໍ້ນີ້ :

1. ຮັກສາຄວາມສົມດຸນທາງເສດຖະກິດໃນສັງຄົມ ອັດຊ່ອງທາງຄົນທຸກຍາກ

2. ເພື່ອຍຶດຄວາມສໍາພັນຂອງຄົນໃນສັງຄົມລະຫວ່າງຄົນຮັ່ງມີ ແລະ ຄົນທຸກຍາກ ຊ່ວຍໃຫ້ຮັກແພງເຊິ່ງກັນແລະກັນ ຊ່ວຍເຫລືອກັນ ບໍ່ສຽດສີກັນ ກໍ່ເພາະທາມະຊາດຂອງມະນຸດຈະຮັກຄົນທີ່ເຮັດດີນໍາ

3. ເພື່ອຝຶກຝົນມຸສລິມໃຫ້ມີຄວາມໃຈບຸນໃຫ້ທານເອື້ອເຟື້ອເພື່ອແຜ່ ກັບຄົນທີ່ທຸກຍາກຂັດສົນ

4. ເພື່ອໃຫ້ຄົນຮັ່ງມີ ລະນຶກຄິດສະເຫມີວ່າສັບສິ້ນຂອງຕົນນັ້ນເປັນສິ່ງທີ່ພຣະເຈົ້າຝາກໃຫ້ເບິ່ງແຍ້ງ ຖ້າພຣະເຈົ້າຕ້ອງການ ແລະ ຈະໃຊ້ຄືນກໍ່ຕ້ອງໄດ້ ການນາສັບສິ້ນໄປຈ່າຍກໍ່ເປັນການສ້າງຄວາມໃກ້ຊິດພຣະເຈົ້າອີກແນວຫນື່ງ

5. ການເອື້ອເຟື່ອເມດຕາຕໍ່ຜູ້ຍາກຈົນສາມາດທີ່ຈັດການປັນຫາທາງດ້ານການປຸ້ນຈີ້ບໍ່ຫລາຍກໍ່ນ້ອຍ ເຊັ່ນການຂີ້ລັກມັກຈົກ ເພາະຄົນຂີ້ລັກສ່ວນຫລາຍແມ່ນຄົນທຸກຈົນທີ່ບໍ່ມີລາຍໄດ້ພຽງພໍ

### 4.3.4 ການຖືສິ້ນອົດໃນເດືອນຣໍມາດອນ

ການຖືສິ້ນອົດ ຫມາຍເຖີງການບໍ່ກິນບໍ່ດື່ມ ແລະ ບໍ່ມີເພດສຳພັນ ຕັ້ງແຕ່ເວລາເຊົ້າມືດຈົນຮອດເວລາດວງອາທິດຕົກດິນ ໃນເດືອນທີ 9 ຕາມປະຕິທິນອາຫຣັບຕະຫລອດທັ້ງເດືອນ

ການຖືສິ້ນອົດມີປະໂຫຍດຫລາຍຢ່າງ ເຊັ່ນ :

1. ຝຶກຝົນຮ່າງກາຍໃຫ້ມີຄວາມອົດທົນ ແລະ ຄວາມຍາກລຳບາກ
2. ຝຶກຝົນຈິດໃຈໃຫ້ຮູ້ສຶກສົງສານເຫັນອົກເຫັນໃຈຜູ້ທີ່ທຸກຍາກຂາດເຂີນ
3. ເຮັດໃຫ້ຈິດໃຈຮູ້ສຶກສະຫງົບສຸກຈາກກິເລດຄວາມຕ້ອງການຢາກກິນຢາກດື່ມ
4. ວິທະຍາສາດສະໄຫມໃຫມ່ຄົ້ນພົບປະໂຫຍດຢ່າງຫລວງຫລາຍຕໍ່ການຖືສິ້ນອົດ ທີ່ມີຕໍ່ຮ່າງກາຍ ເຊັ່ນ ໂປຣແກມຫລຸດນໍ້າຫນັກທຸກມື້ນີ້ ຫຼື ຟິດຮ່າງກາຍ ກໍ່ຍັງມີການອ່າງໂປຣແກມຖືສິ້ນອົດກຳນົດເວລາກິນ ແລະ ງົດອາຫານແຕ່ລະມື້ ເພື່ອໃຫ້ເກີດຜົນປະໂຫຍດສິງສຸດຕໍ່ຮ່າງກາຍ

### 4.3.5 ການໄປເຮັດຮັຈຫ໌

ຮັຈຫ໌ ແມ່ນການໄປສະແຫວງບຸນຢູ່ເມືອງມັກກະຫ໌ ປະເທດຊາອຸດີ ອາຣະເບຍ ເມືອງມັກກະຫ໌ເປັນຫນື່ງໃນເມືອງທີ່ສຳຄັນແລະສັກສິດຂອງສາສະຫນາອິສລາມ ເປັນທີ່ຕັ້ງຂອງອາຄານສີ່ຫຼຽມທີ່ຊື່ວ່າ **"ກະບະ"** ອັນເປັນມຸດທິດທີ່ມຸສລິມທຸກຄົນຈະຕ້ອງຫັ່ນຫນ້າໄປຫາເວລາລະມາດ ພຣະເຈົ້າໄດ້ການົດໃຫ້ມຸສລິມທຸກຄົນຕ້ອງມາເມືອງນີ້ຢ່າງນ້ອຍເທື່ອຫນື່ງໃນຊີວິດ ໂດຍຈະຕ້ອງປະກອບພິທີ່ກາທາງດ້ານສາສະຫນາບ້າງປະການໃນເດືອນທີ 10, 11, 12 ຕາມປະຕິທິນອິສລາມຂອງແຕ່ລະປີ

ການເຮັດຮັຈຫ໌ສົງຜົນດີຕໍ່ຊີວິດຢ່າງຫລວງຫລາຍສຳຫລັບຜູ້ທີ່ເຄີຍຜ່ານຊ່ວງເວລານີ້ມາແລ້ວ ເຊັ່ນ :

1. ມຸສລິມຈະຮູ້ສຶກມີແຮງສັດທາອັນເຂັ້ມແຂງຫລາຍຂື້ນ ແລະ ຮູ້ສຶກຢ້ານຍໍ້າເກງຕໍ່ພຣະເຈົ້າ

2. ການເຮັດຮັຈຫ໌ ຄືການຮ່ວມຕົວຂອງຄົນນັບລ້ານຢູ່ບ່ອນດຽວຂອງທຸກໆປີ ເຊິ່ງສາສະໜາອື່ນບໍ່ມີ

3. ການຮ່ວມຕົວຂອງມຸສລິມເຮັດໃຫ້ເກີດຄວາມເປັນໜຶ່ງດຽວ ມຸສລິມຈາກທົ່ວໂລກບໍ່ວ່າຈະສີຜິວ ພາສາໃດໆກໍ່ຕາມ

4. ການຮ່ວມຕົວກັນເຮັດໃຫ້ເກີດຄວາມສະເໝີພາກຢ່າງຖືກຕ້ອງທີ່ສຸດ ຜູ້ປະກອບພິທີຮັດຫ໌ທຸກຄົນຕ້ອງໃສ່ເສື້ອແບບດຽວກັນ ຕ້ອງເຮັດພິທີກຳແບບດຽວກັນໃນເວລາດຽວກັນ

## 5. ພຣະນາມ ຊື່ຂອງພຣະເຈົ້າທີ່ງົດງາມ

ທ່ານສາດສະດາທູດໄດ້ກ່າວວ່າ **"ພຣະເຈົ້ານັ້ນໄດ້ມີ 99 ຊື່ ນັ້ນກໍ່ຄື 100 ລົບ 1 ຜູ້ໃດທີ່ຮູ້ຊື່ທັ້ງຫມົດນີ້ໄດ້ກໍ່ຈະໄດ້ເຂົ້າສະຫວັນ"**

ຄວາມຫມາຍຂອງການຮູ້ທັ້ງຫມົດນີ້ໄດ້ ກໍ່ຄື : ທ່ອງຂຶ້ນໃຈໄດ້ທັ້ງຫມົດ ແລະກໍ່ຮູ້ຄວາມຫມາຍທີ່ແທ້ຈິ່ງ ແລະກໍ່ປະຕິບັດຕາມຄວາມຫມາຍທີ່ໄດ້ຮູ້ນັ້ນ, ເຊັ່ນ ການຂໍພອນຕໍ່ພຣະເຈົ້າໂດຍໃສ່ຊື່ຂອງພຣະເຈົ້າ

ຄໍາເວົ້າຂອງທ່ານສາດສະດາທູດຂ້າງເທິ່ງນັ້ນສອນເຮົາວ່າພື້ນຖານສໍາຄັນຂອງສາສະຫນາຄືຮູ້ຈັກພຣະເຈົ້າຖ້າເຮົາຮູ້ຈັກພຣະເຈົ້າ ເຮົາກໍ່ຈະຮັກພຣະອົງ ຖ້າເຮົາຮັກພຣະອົງ ເຮົາກໍ່ຈະເຊື່ອຟັງພຣະອົງ ເມື່ອເຮົາເຊື່ອຟັງພຣະອົງ ເຮົາກໍ່ຈະໄດ້ຮັບຄວາມສຸກທັ້ງໂລກນີ້ແລະໂລກຫນ້າ

ພຣະນາມຊື່ອັນງົດງາມບ້າງສ່ວນຂອງພຣະເຈົ້າເຊັ່ນ :

ອັລຄໍບີຣ(ຜູ້ຊົງຮູ້ລະອຽດຖີ່ຖ້ວນ)

ອັລອະລີມ (ຜູ້ຊົງຮອບຮູ້)

ອັສສະເມຼຍອ໌ (ຜູ້ຊົງໄດ້ຍິນທຸກສິ່ງ)

ອັລບະຊີຣ (ຜູ້ຊົງເບິ່ງເຫັນທຸກຢ່າງ)

ອັລອະຊີຊ (ຜູ້ຊົງຫຍິ່ງໃຫຍ່)

ອັລກໍຟູຣ (ຜູ້ຊົງອະໄພ)

ອັລຣໍຫ໌ມານ (ຜູ້ຊົງກະລຸນາປານີແທ້ຈິ່ງ)

ອັລຣໍຮີມ (ຜູ້ຊົງເມດຕາຈິ່ງ)

ອັລລະຕີຟ (ຜູ້ຊົງຫນຸ່ມນວນ)

ອັລເຕົາວາບ (ຜູ້ຊົງອະໄພໂທດ)

ອັລກາຣີມ (ຜູ້ຊົງໃຈບຸນ)

ອັລກໍດີຣ (ຜູ້ຊົງມີອໍານາດ)

ອັລຣໍຊາກ (ຜູ້ຊົງປະທານປັດໄຈຊີບ)

ອັລກໍນີ (ຜູ້ຊົງຮັ່ງມີ)

ອັລອະຊີມ (ຜູ້ຊົງຫຍິ່ງໃຫຍ່)

ອັລກໍວີ (ຜູ້ຊົງແຂງແຮງ)

ອັລມາລິກ (ຜູ້ຊົງເປັນເຈົ້າຊີວິດ)

ອັລກຸດດູ້ຊ (ຜູ້ຊົງບໍລິສຸດ)

ອັສສະລາມ (ຜູ້ຊົງເປັນສັນຕິ)

ອັລອັດລຸ (ຜູ້ຊົງຍຸຕິທຳ)

ອັລຄໍລິກ (ຜູ້ຊົງສ້າງ)

ອັລມຸຫ໌ຍີ (ຜູ້ຊົງໃຫ້ເປັນ)

ອັລມຸມີຕ (ຜູ້ຊົງໃຫ້ຕາຍ)

ແລະ ຫຍັງມີພຣະນາມຊື່ອື່ນໆ ອີກຢ່າງຫລວງຫລາຍ

ເມື່ອມຸສລິມໄດ້ສຶກສາພຣະນາມຊື່ ແລະ ລັກສະນະ ອັນງົດງາມທັ້ງຫລາຍນີ້ກໍ່ຈະຮູ້ວ່າ :

1. ອັລລໍຫ໌ຄືພຣະເຈົ້າທີ່ແທ້ຈິ່ງ ເປັນຜູ້ສ້າງບໍ່ແມ່ນຜູ້ຖືກສ້າງ

2. ພຣະເຈົ້າທີ່ແທ້ຈິ່ງມີພຽງອົງດຽວ ບໍ່ມີພາຄີຄ່ຽງຄູ່ ແລະບໍ່ມີຜູ້ໃດສະເຫມີໄດ້

3. ພຣະເຈົ້າບໍ່ມີຂໍ້ບົກພ່ອງ ແລະຄວາມບໍ່ສົມບູນແບບທັ້ງຫລາຍ ບໍ່ມີຮູບຮ່າງຄືສັບພະສິ່ງໃດໆ

4. ພຣະເຈົ້າຄືສິ່ງທີ່ມີໂດຍບໍ່ມີຈຸດເລີ່ມຕົ້ນ ແລະ ເປັນຜູ້ທີ່ຢູ່ທ້າຍສຸດ ເພາະພຣະອົງບໍ່ມີຈຸດຈົບ ເປັນອໍາມະຕະບໍ່ມີເສຍຊີວິດ ພຣະເຈົ້າບໍ່ຮູ້ສຶກຢາກນອນຄືມະນຸດ ບໍ່ລົງລືມຈາກການເບິ່ງແຍ້ງຄວບຄຸ້ມຈັກກະວານນີ້

5. ພຣະເຈົ້າເປັນທີ່ພື່ງພາຂອງທຸກສິ່ງ ແລະ ພຣະອົງບໍ່ຈຳເປັນຕ້ອງພື່ງພາສິ່ງໃດ ພຣະເຈົ້າບໍ່ມີພໍ່ແມ່ ບໍ່ມີເມຍ ບໍ່ມີລູກ ບໍ່ຕ້ອງການອາຫານ ແລະ ເຄື່ອງດື່ມ ຫຼື ຄວາມຊ່ວຍເຫລືອຈາກໃຜ ແຕ່ກົງກັນຂ້າມສັບພະສິ່ງທັ້ງຫມົດຕ້ອງພື່ງພາພຣະອົງ

6. ຄວາມຫຍິ່ງໃຫຍ່ ຄວາມງົດງາມ ແລະ ຄວາມສົມບູນແບບຂອງພຣະເຈົ້ານັ້ນບໍ່ມີຜູ້ໃດສະເຫມີທຽບທຽມໄດ້ພຽງແຕ່ເລັກນ້ອຍ ເຖິງແມ້ອາດຈະເປັນສິ່ງຫຍິ່ງໃຫຍ່ທີ່ສຸດໃນຈັກກະວານນີ້ກໍ່ບໍ່ສາມາດທຽບທຽມກັບພຣະເຈົ້າໄດ້ເລີຍ

**5.1 ເຮົາມາຮູ້ຈັກຊື່ພຣະນາມຂອງພຣະເຈົ້າບ້າງສ່ວນ**

**1.) ອັລກໍຟູຣ (ຜູ້ຊົງອະໄພ)**

ຊື່ ຜູ້ຊົງອະໄພ ນີ້ປະກົດໃນອັລກຸຣອານບໍ່ຕ່ຳກວ່າ 90 ເທື່ອ ເຊັ່ນພຣະເຈົ້າໄດ້ກ່າວໃນຄາພີອັລກຸຣອານວ່າ :

**"ພຣະອົງຈະຊົງອະໄພໃຫ້ຜູ້ທີ່ພຣະອົງປະສົງ ແລະ ຈະຊົງລົງໂທດຜູ້ທີ່ພຣະອົງປະສົງ ອັລລໍຫ໌ນັ້ນຄືຜູ້ຊົງອະໄພ ເມດຕາສະເຫມີ"** (ອາລິອິມຣອນ : 129)

**"ພຣະເຈົ້າຂອງເຈົ້ານັ້ນສາມາດລົງໂທດໄດ້ຢ່າງວ່ອງໄວ ແຕ່ພຣະອົງກໍ່ສາມາດອະໄພເມດຕາຢ່າງແທ້ຈິ່ງ"** (ອັລອັນອາມ : 165)

**"ບ່າວຂອງພຣະອົງທີ່ຈະຢ້ານຕໍ່ອັລລໍຫ໌ ຄື ບັນດາຜູ້ຮູ້ແທ້ຈິ່ງ ອັລລໍຫ໌ຄືຜູ້ຊົງຫຍິ່ງໃຫຍ່ ແລະ ອະໄພເມດຕາ"** (ຟາຕິຣ : 28)

ຄຳວ່າ **"ຜູ້ຊົງໃຫ້ອະໄພ"** ຫມາຍຄວາມວ່າ : ເປັນຜູ້ປົກປິດບາບຄວາມຜິດຂອງມະນຸດທັ້ງຫມົດ ເປັນຜູ້ທີ່ບໍ່ຖືສາຄວາມຜິດບາບໃດໆ ທີ່ມະນຸດສ້າງ ແລະ ບໍ່ເອົາໂທດ ດັ່ງນັ້ນ ບໍ່ວ່າມະນຸດຈະເຮັດຜິດເທົ່າໃດກໍ່ຕາມ ພຣະເຈົ້າກໍ່ສາມາດໃຫ້ອະໄພໃຫ້ໄດ້ຫມົດ

**(ບາບໃນອິສລາມນັ້ນແບ່ງອອກເປັນ 2 ປະເພດ)**

ຄື : ບາບນ້ອຍ ແລະ ບາບໃຫຍ່, ແຕ່ພຣະອົງກໍ່ສາມາດໃຫ້ອະໄພໄດ້ທັ້ງຫມົດເຖິງຈະຫລາຍພຽງໃດກໍ່ຕາມ ເມື່ອພຣະເຈົ້າໄດ້ປົກປິດ ແລະ ມອງຂ້າມບາບນັ້ນແລ້ວ ຫມາຍຄວາມວ່າພຣະເຈົ້າກໍ່ໄດ້ອະໄພໃຫ້ກັບມະນຸດຄົນນັ້ນ

ຜູ້ທີ່ຮັບສາສະຫນາອິສລາມໃຫມ່ບໍ່ວ່າອາຍຸຈະຫລາຍແລ້ວກໍ່ຕາມ ພຣະເຈົ້າຈະອະໄພໂທດຄົນນັ້ນທັ້ງຫມົດຄືດັ່ງກັບເດັກນ້ອຍເກີດໃຫມ່ ພຣະເຈົ້າໄດ້ກ່າວວ່າ **"ຈົ່ງກ່າວນາຜູ້ທີ່ບໍ່ສັດທາ ຫາກພວກເຂົາຫຍຸດກໍ່ຈະໄດ້ຮັບການອະໄພຍະໂທດໃນສິ່ງທີ່ຜ່ານມາແລ້ວ ແຕ່ຫາກພວກເຂົາຫຍັງຫັ່ນກັບມາຕໍ່ສູ້ ກໍ່ໃຫ້ຮູ້ຊະຕາກຳຂອງຄົນກ່ອນຫນ້າ"**

(ອັລອັນຟາລ : 38)

ທ່ານສາດສະດາທູດເຄີຍກ່າວກັບສະຫາຍຄົນຫນຶ່ງທີ່ຮັບອິສລາມໃຫມ່ວ່າ **"ທ່ານບໍ່ຮູ້ວ່າອິສລາມນັ້ນຈະລົບລ້າງບາບກ່ອນຫນ້າທັ້ງຫມົດ?"**

**2.) ອັລວາເຮດ (ຜູ້ຊົງເປັນຫນຶ່ງດຽວ)**

ພຣະນາມ **"ອັລວາເຮດ"** ນັ້ນປະກົດຢູ່ໃນຄາພີອັລກຸຣອານຫລາຍກວ່າ 20 ເທື່ອ ເຊັ່ນພຣະເຈົ້າໄດ້ກ່າວວ່າ :

**"ຈົ່ງກ່າວເຖີດ ວ່າອັລລໍຫ໌ນັ້ນຄືຜູ້ສ້າງທຸກສິ່ງ ພຣະອົງຄືຜູ້ເປັນຫນຶ່ງດຽວຜູ້ຄອບຄອງ"**

(ອັຣຣໍອ໌ດຸ : 16)

**"ມື້ນີ້ອຳນາດແມ່ນຂອງໃຜ? ເປັນຂອງອັລລໍຫ໌ຜູ້ເປັນຫນຶ່ງດຽວ ຜູ້ຄອບຄອງ"**

(ສູເຣາະຫ໌ກໍຟີຣ : 16)

ຄຳວ່າ "ຜູ້ຊົງເປັນຫນຶ່ງດຽວ" ຫມາຍເຖິງ ຫນຶ່ງດຽວໃນດ້ານຕົວຕົນ, ລັກສະນະ, ການກະທຳ, ຄວາມເປັນພຣະເຈົ້າ, ອຳນາດການເບິ່ງແຍ້ງ, ບໍ່ມີຜູ້ໃດຈະມີສິດອຳນາດແບບນີ້ຄືພຣະເຈົ້າໄດ້ອີກ ຄືຫລັກການສັດທາເຊື່ອເຕົາຮີດ (ການເຊື່ອເຖິງຄວາມເປັນຫນຶ່ງດຽວຂອງພຣະເຈົ້າ)

ພຣະອົງມີຕົວຕົນດຽວ ຫມາຍເຖິງ : ບໍ່ມີສ່ວນປະກອບທີ່ຄືກັບມະນຸດທີ່ຕ້ອງມີແຂນມີຂາ ພຣະອົງເປັນທີ່ພຶ່ງຂອງທຸກສິ່ງ, ບໍ່ມີພໍ່ບໍ່ມີລູກ ບໍ່ມີສິ່ງໃດສະເຫມີເຫມືອນພຣະອົງແລະພຣະເຈົ້າກໍ່ມີຄວາມເປັນຫນຶ່ງດຽວໃນດ້ານຄຸນລັກສະນະຂອງພຣະອົງ ຫມາຍເຖິງ : ບໍ່ມີສິ່ງໃດຄືກັບພຣະອົງໄດ້ເລີຍ ພຣະອົງຊົງໄດ້ເຫັນ ແລະ ຊົງໄດ້ຍິນທຸກຢ່າງ, ບໍ່ມີຜູ້ໃດມີຄວາມສາມາດແບບນີ້

ພຣະເຈົ້າຄືຜູ້ດຽວທີ່ຄວບຄຸ້ມດູແລຈັກກະວານ, ບໍ່ມີໃຜມີສິດອຳນາດແບບນີ້ຄ່ຽງຄູ່ກັບພຣະອົງ ພຣະອົງຄືຜູ້ທີ່ຄວນເຄົາລົບກາບໄຫວບູຊາພຽງຜູ້ດຽວ ຕ່າງກັບຄວາມເຊື່ອຂອງສາສະຫນາຄຣິດສະຕຽນວ່າພຣະເຈົ້າຫນຶ່ງດຽວນັ້ນມີສາມຮ່າງ, ມີພໍ່ ມີລູກ ແລະ ວິນຍານ ພຣະເຈົ້າໄດ້ກ່າວວ່າ **"ຫາກຖ້າຊັ້ນຟ້າ ແລະ ແຜ່ນດິນ ມີພຣະເຈົ້າອື່ນອີກນອກຈາກອັລລໍຫ໌ ແນ່ນອນວ່າຟ້າ ແລະ ແຜ່ນດິນຍອມຖືກພັງທະລາຍ ອັລລໍຫ໌ຜູ້ຊົງເປັນເຈົ້າຂອງບັນລັງ, ຜູ້ຊົງບໍລິສຸດຈາກສິ່ງທີ່ພວກເຂົານຶກຄິດ"** (ອັລອັນບິຍາອ໌ : 22)

**3.) ອັລຮາຟິຊ (ຜູ້ຊົງຮັກສາ)**

ຊື່ ອັລຮາຟິຊ ປະກົດໃນຄຳພີອັລກຸຣອານ 3 ເທື່ອ, ນັ້ນກໍ່ຄື :

**"ແທ້ຈິ່ງ, ພຣະເຈົ້ານັ້ນຄືຜູ້ຊົງຮັກສາທຸກສິ່ງ"** (ສຸເຣາະຫ໌ຮູດ : 57)

**"ແລະ ພຣະເຈົ້າຂອງເຈົ້ານັ້ນກໍ່ຄືຜູ້ຊົງຮັກສາທຸກສິ່ງ"** (ສະບະອ໌ : 27)

**"ສ່ວນຜູ້ທີ່ເຊື່ອສິ່ງອື່ນເປັນສິ່ງສັກສິດນອກຈາກອັລລໍຫ໌, ທັ້ງທີ່ອັລລໍຫ໌ນັ້ນຄືຜູ້ຊົງຮັກສາພວກເຂົາ"** (ສູເຣາະຫ໌ ອັຊຊູຣໍ : 6)

ຜູ້ຮັກສາ ຫມາຍເຖິງ : ຜູ້ປົກປ້ອງມະນຸດຈາກເລື່ອງບໍ່ດີທັ້ງຫລາຍ ພຣະເຈົ້າຫຍັງເປັນຜູ້ປົກປັກຮັກສາໂລກ ແລະ ຈັກກະວານທັ້ງຫມົດຮ່ວມກັບທຸກສັບພະສິ່ງທັ້ງຫລາຍໃຫ້ຢູ່ສະພາບເດີມຢ່າງປອດໄພ ພຣະນາມ **"ອັລຮາຟິຊ"** ນີ້ເປັນຊື່ທີ່ວ່າຄົນບໍ່ສະບາຍເຈັບປ່ວຍ ຫຼື ຄົນໄຂ້ ຄວນກ່າວເຖິງເມື່ອບໍ່ສະບາຍ

ພຣະເຈົ້າຫຍັງຮັກສາຜົນການປະພຶດຂອງມະນຸດ ແລະ ບັນທຶກໄວ້ ພຣະເຈົ້າຮອບຮູ້ເຈດຕະນາອັນລຶກໆ ທີ່ຢູ່ໃນໃຈຂອງມະນຸດທຸກຄົນ ພຣະເຈົ້າໄດ້ຮັກສາ ຫູ ຕາ ຮ່າງກາຍຂອງມະນຸດໃຫ້ເຮັດວຽກໄດ້ຕາມປົກກະຕິ ພຣະອົງຫຍັງໄດ້ປົກປ້ອງມະນຸດຈາກໄພພິບັດທັ້ງຫລາຍ ແຕ່ທັ້ງຫມົດນີ້ພຣະອົງຈະດູແລປົກປ້ອງຜູ້ທີ່ພຣະອົງປະສົງຕ້ອງການເທົ່ານັ້ນ

ເມື່ອເຮົາຮູ້ແລ້ວວ່າຄວາມເປັນຜູ້ຊົງຮັກສາຂອງພຣະເຈົ້າບໍ່ໄດ້ຈຳກັດຢູ່ທີ່ການປົກປ້ອງຢູ່ນຳພຽງໄພພິບັດອັນຕະລາຍ ແຕ່ຫຍັງຮັກສາຜົນການປະພຶດຂອງມະນຸດໂດຍການບັນທຶກຢ່າງດີ, ສິ່ງນີ້ຈະເຮັດໃຫ້ມະນຸດບໍ່ກ້າຝ່າຝືນເຮັດບາບ ແຕ່ຈະເພີ່ມການເຮັດຄວາມດີຕໍ່ໄປ

ທ່ານສາດສະດາທູດເຄີຍໄດ້ກ່າວດູອາຂໍພອນບົດຫນຶ່ງວ່າ *"ໂອ້ອັລລໍຫ໌, ຂໍຈົ່ງປົກປ້ອງຂ້ອຍດ້ວຍອິສລາມໃນຂະນັ້ນຢືນ ປົກປ້ອງຂ້ອຍດ້ວຍອິສລາມໃນຂະນະນັ່ງ ປົກປ້ອງຂ້ອຍດ້ວຍອິສລາມໃນຂະນະນອນ ຢ່າໄດ້ໃຫ້ສັດຕູຜູ້ອິດສາໄດ້ດ່າຂ້ອຍ ໂອ້ອັລລໍຫ໌, ຂ້ອຍຂໍສິ່ງດີໆ ຈາກພຣະອົງທີ່ຢູ່ພາຍໃຕ້ອຳນາດຂອງພຣະອົງ ແລະຂ້ອຍຂໍຄວາມຄຸ້ມຄອງຈາກພຣະອົງຈາກທຸກສິ່ງທີ່ຊົ່ວຮ້າຍທີ່ຢູ່ໃຕ້ອຳນາດຂອງພຣະອົງ."*

**4.) ອັລຣໍຊາກ (ຜູ້ຊົງປະທານປັດໄຈ)**

ຊື່ນີ້ປະກົດໃນຄຳພີພຽງເທື່ອດຽວ ນັ້ນກໍ່ຄືຄຳກ່າວຂອງພຣະເຈົ້າວ່າ :

**"ແທ້ຈິ່ງ ອັລລໍຫ໌ນັ້ນຄືຜູ້ຊົງປະທານປັດໄຈ, ຜູ້ແຂງແຮງ, ຜູ້ມີພະລັງ"** (ອັຊຊາຣຍາດ: 58)

ພຣະເຈົ້ານັ້ນເປັນຜູ້ປະທານສິ່ງຕ່າງໆ ໃຫ້ແກ່ມະນຸດເປັນປັດໄຈໃນການໃຊ້ຊີວິດ ສັບສິ້ນກໍ່ຄືປັດໄຈ, ສຸຂະພາບ, ຄວາມສຸກ, ພໍ່ແມ່, ລູກຫລານ, ຜົນປະພຶດ, ຄວາມສຸກສະບາຍທຸກຢ່າງ ລ້ວນເປັນປັດໄຈທີ່ພຣະເຈົ້າຜູ້ດຽວເທົ່ານັ້ນທີ່ປະທານໃຫ້ໄດ້ ເພາະທຸກສິ່ງຢູ່ພາຍໃຕ້ອານາດການເບິ່ງແຍ້ງຂອງພຣະເຈົ້າພຽງຜູ້ດຽວ

(ປັດໄຈທີ່ພຣະເຈົ້າມອບໃຫ້ມະນຸດມີຢູ່ 2 ປະເພດ) ຄື :

**- ປະເພດທີ່ 1** ຄື "ປັດໄຈໂດຍຮ່ວມ" ຫມາຍຄວາມວ່າ ສິ່ງທີ່ພຣະເຈົ້າມອບໃຫ້ສັບພະສິ່ງທັ້ງຫມົດ, ບໍ່ວ່າຈະເປັນມະນຸດ ຫຼື ສັດ ສິ່ງຕ່າງໆ ທີ່ຕ້ອງໃຊ້ໃນການດຳລົງຊີວິດ ຕັ້ງແຕ່ປາວານໃນທ້ອງທະເລຈົນຮອດເມັດເຊວນ້ອຍໆ ໃນຮ່າງກາຍຂອງມະນຸດກໍ່ຍັງໄດ້ຮັບປັດໄຈໃຫ້ໃຊ້ຊີວິດຕໍ່ໄປ, ບໍ່ວ່າປັດໄຈທີ່ໄດ້ຮັບນັ້ນຈະດີ ຫຼື ບໍ່ດີກໍ່ຕາມ, ບໍ່ວ່າຜູ້ທີ່ໄດ້ຮັບຈະເປັນຜູ້ສັດທາເຊື່ອໃນພຣະເຈົ້າ ຫຼື ບໍ່ສັດທາກໍ່ຕາມ ມະນຸດທຸກຄົນຈະໄດ້ຮັບທຸກຄົນບໍ່ວ່າຈະໄດ້ຫລາຍຫຼືນ້ອຍ.

**- ປະເພດທີ່ 2** ຄື "ປັດໄຈທີ່ໄດ້ຮັບຜົນປະໂຫຍດທັ້ງໂລກນີ້ແລະໂລກຫນ້າ" ເປັນປັດໄຈທີ່ດີ ເຊັ່ນ: ຄວາມຮູ້, ຄວາມສັດທາ ເພາະວິນຍານຂອງບຸຄຄົນທີ່ປະເສີດທີ່ສຸດນັ້ນກໍ່ຄືຜູ້ສະແຫວງຊອກຫາຄວາມຮູ້ ແລະ ຄວາມຈິ່ງ, ຍອມທີ່ຈະອຸທິຕົນຊອກຫາຄວາມຈິ່ງ ແລະ ຄວາມຮູ້ ນີ້ຄືຈິດວິນຍານຂອງມະນຸດທີ່ມີຄວາມສູງສົ່ງ ສຳຫລັບມຸສລິມຜູ້ສັດທາແລ້ວພຣະເຈົ້າຈະມອບປັດໄຈໃຫ້ທັ້ງສອງປະເພດເລີຍ

**5.) ອັຊຊາຟີ (ຜູ້ຊົງຮັກສາຄວາມເຈັບປ່ວຍ)**

ມີລາຍງານຈາກສະຫາຍທ່ານຫນຶ່ງຂອງສາດສະດາທູດວ່າ : ທ່ານສາດສະດາທູດໄດ້ມາຢ້ຽມຄົນເຈັບປ່ວຍ ແລະໄດ້ຂໍພອນໃຫ້ຄົນປ່ວຍວ່າ **"ໂອ້ພຣະເຈົ້າຂອງມະນຸດ, ຈົ່ງກຳຈັດສິ່ງບໍ່ດີໄປ ແລະ ຮັກສາໃຫ້ເຊົ່າ ພຣະອົງຄືຜູ້ຮັກສາຄວາມເຈັບປ່ວຍ ບໍ່ມີການຮັກສາໃດອີກແລ້ວນອກຈາກການຮັກສາຂອງພຣະອົງ ເປັນການຮັກສາທີ່ຈະບໍ່ນຳໄພໄຂ້ເຈັບມາອີກແລ້ວ"**

"ຜູ້ຊົງຮັກສາຄວາມເຈັບປວດ" ນັ້ນຫມາຍຄວາມວ່າ: ເປັນຜູ້ກາຈັດສິ່ງບໍ່ດີຂໍ້ພົກພ່ອງໃນຮ່າງກາງອອກໄປ, ບໍ່ວ່າຈະເປັນຜົນທີ່ເກີດຂຶ້ນທັ້ງຮ່າງການ ຫຼື ທາງຈິດໃຈກໍ່ຕາມ ເພາະບ້າງເທື່ອ, ໂລກຮ້າຍທີ່ມີກໍ່ຈະເຊົ່າໄປໄດ້ໂດຍບໍ່ຕ້ອງຜ່ານຢາ ຫຼື ເຄື່ອງມືໃດໆ ນັ້ນຍ້ອນວ່າຈິດໃຈຜູ້ເຈັບປ່ວຍມີການເຊື່ອແຕ່ບ້າງຄົນຕ້ອງໃຊ້ຢາຕະຫລອດແຕ່ກໍ່ບໍ່ເຊົ່າ ທັ້ງຫມົດນີ້ກໍ່ຕ້ອງຂຶ້ນຢູ່ກັບອຳນາດ ແລະ ຄວາມຕ້ອງການຂອງພຣະເຈົ້າ

ພຣະເຈົ້າຄືຜູ້ຮັກສາຄວາມເຈັບປ່ວຍ ເປັນຜູ້ສ້າງກົດເກນຂອງການແພດ, ການໃຊ້ຢາ ການຈະເຊົ່າຈາກໂລກຮ້າຍກໍ່ຕ້ອງກິນຢາ ແລະ ຜ່ານການຮັກສາຈາກຫມໍຕາມຄວາມປະສົງທີ່ພຣະອົງໄດ້ການົດໄວ້ເປັນກົດທຳມະຊາດ ພຣະອົງຈະຮັກສາຄົນເຈັບປ່ວຍ ໂດຍຄົນເຈັບປ່ວຍນັ້ນຕ້ອງໃຫ້ກຽດພຣະເຈົ້າໂດຍການປະຕິບັດຕາມກົດທຳມະຊາດ ແລະ ກົດການແພດນີ້ກ່ອນເທົ່ານັ້ນ ແຕ່ບ້າງເທື່ອພຣະເຈົ້າກໍ່ອາດຈະຮັກສາໂດຍບໍ່ຜ່ານກົດເກນນີ້ເລີຍແລ້ວແຕ່ຄວາມປະສົງຂອງພຣະເຈົ້າ

ການທີ່ເຮົາໃຫ້ກຽດພຣະເຈົ້າໂດຍການປະຕິບັດຕາມກົດເກນທຳມະຊາດ ຫລັກເຫດຜົນທາງວິທະຍາສາດ ເປັນບົດທົດສອບຂອງພຣະເຈົ້າ ເພາະບ້າງເທື່ອເຮົາອາດເຮັດທຸກຢ່າງແລ້ວແຕ່ບໍ່ສາມາດຮັກສາຄວາມເຈັບປວດໄດ້ ເຮົາກໍ່ຕ້ອງພະຍາຍາມຮັກສາທາງອື່ນອີກຕໍ່ໄປພ້ອມກັບຂໍພອນກັບພຣະເຈົ້າ ສ່ວນນີ້ຄືສິ່ງທີ່ສຳຄັນຫລາຍໃຫ້ເຮົາຂໍນຳພຣະເຈົ້າໂດຍເອີ້ຍຄຳວ່າ **"ອັຊຊາຟີ - ຜູ້ຊົງຮັກສາຄວາມເຈັບປ່ວຍ"**

ທັງ 5 ພະນາມຊື່ນີ້ເປັນພຽງສ່ວນຫນຶ່ງຈາກ 99 ຊື່ອັນງົດງາມຂອງພຣະເຈົ້າ ມຸສລິມທຸກຄົນສົມຄວນທີ່ຈະຮູ້ຈັກພຣະນາມ ແລະ ລັກສະນະຂອງພຣະເຈົ້າໃຫ້ຫລາຍທີ່ສຸດ ເພື່ອທີ່ຈະຊາບຊຶ້ງຄວາມຫຍິ່ງໃຫຍ່ຂອງພຣະເຈົ້າຜູ້ສ້າງທີ່ມຸສລິມເຊື່ອຖື.

## 5.2 ຂໍ້ດີຂອງການຮູ້ຊື່ພຣະນາມຂອງອັລລໍຫ໌

- ✓ ຈະໄດ້ເຂົ້າສະຫວັນ

ທ່ານສາດສະດາທູດເຄີຍກ່າວວ່າ *"ອັລລໍຫ໌ນັ້ນມີຢູ່ 99 ພຣະນາມຊື່ ນັ້ນກໍ່ຄື 100 ລົບ 1 ຄົນທີ່ຮູ້ຊື່ທັງຫມົດຢ່າງລຶກເຊິ່ງກໍ່ຈະໄດ້ເຂົ້າສະຫວັນ"* ຄາວ່າ 'ຮູ້ຢ່າງລຶກເຊິ່ງ' ແມ່ນການທ່ອງຈຳ ແລະ ເຂົ້າໃຈຄວາມຫມາຍພ້ອມ ແລະ ນຳຊື່ຕ່າງໆ ນີ້ມາກ່າວຂໍພອນ ອັລລໍຫ໌ໄດ້ກ່າວວ່າ **"ອັລລໍຫ໌ນັ້ນມີພຣະນາມຊື່ຢ່າງຫລວງຫລາຍອັນງົດງາມ ຈົ່ງຂໍນຳພຣະອົງດ້ວຍນາມຊື່ເຫຼົ່ານັ້ນ"**
(ອັລອະອ໌ຣອຟ : 180)

- ✓ ຄືສາເຫດທີ່ຈະເຮັດໃຫ້ເຮົາຮູ້ຈັກພຣະເຈົ້າຫລາຍຂຶ້ນ

ການຮູ້ຈັກພຣະເຈົ້ານັ້ນມີ 2 ແບບ :

1) ການຮູ້ຈັກທົ່ວໄປ : ຫມາຍເຖິງ ການຍອມຮັບທີ່ມຸສລິມທຸກຄົນກໍ່ເຊື່ອຄືກັນ, ບໍ່ວ່າຈະເປັນຄົນດີ ຫຼື ບໍ່ດີ

2) ການຮູ້ຈັກລະດັບສູງ : ຫມາຍເຖິງ ການສ້າງຄວາມສະນິດສະນົມລະຫວ່າງບ່າວກັບພຣະເຈົ້າຫລາຍຂຶ້ນ ເຮັດໃຫ້ເຮົາຮູ້ສຶກລະອາຍໃນຄວາມຜິດຮູ້ສຶກວ່າພຣະເຈົ້າແນ່ມເບິ່ງເຮົາຢູ່ຕະຫລອດເວລາ ເຮັດໃຫ້ເຮົາຮັກພຣະເຈົ້າຫລາຍຂຶ້ນ ຕ້ອງການທີ່ຈະພົບເຫັນພຣະອົງ ການຈະເຂົ້າຮອດລະດັບນີ້ໄດ້ຕ້ອງຜ່ານການຮູ້ຈັກນາມຊື່ທັງຫມົດເຫຼົ່ານີ້ມາກ່ອນ

- ✓ ຊື່ຂອງພຣະເຈົ້າແມ່ນສ່ວນສຳຄັນໃນການການເຮັດອິບາດະຫ໌ ຫຼື ການເຮັດຄວາມດີກາບໄຫວບູຊາພຣະເຈົ້າ

ການຮູ້ຈັກພຣະເຈົ້າຈະເຮັດໃຫ້ມະນຸດນັ້ນອອກຫ່າງໄກຈາກຄວາມຊົ່ວ ແລະ ເຂົ້າໃກ້ຈາກຄວາມດີຫລາຍຂຶ້ນ ຜູ້ທີ່ຈະຫ່າງໄກຈາກສິ່ງທີ່ພຣະເຈົ້າບໍ່ມັກຊັງ ແລະ ປະຕິບັດຕາມສິ່ງທີ່ພຣະອົງຮັກນັ້ນ ກໍ່ຄືຜູ້ທີ່ຮູ້ຈັກພຣະເຈົ້າຢ່າງແທ້ຈິງ

ໂດຍເຫດນີ້ທ່ານສາດສະດາທູດເມື່ອທ່ານສາດສະດາສົ່ງມູອາດໄປສອນສາສະຫນາຢູ່ປະເທດເຢເມັນຈຶ່ງເວົ້າກັບສະຫາຍມູອາດວ່າ *"ໃຫ້ສິ່ງທາອິດທີ່ທ່ານຮຽກຮ້ອງຜູ້ຄົນ ຄື ການເຊື່ອຄວາມເປັນຫນຶ່ງດຽວຂອງພຣະເຈົ້າ, ຖ້າຜູ້ຄົນຮູ້ຈັກອັລລໍຫ໌ແລ້ວ ກໍ່ໃຫ້ສອນວ່າອັລລໍຫ໌ນັ້ນສັ່ງໃຫ້ມຸສລິມນັ້ນລະມາດມື້ຫນຶ່ງ 5 ເວລາ, ຖ້າພວກເຂົາເຮັດແບບນີ້ແລ້ວ ກໍ່ບອກຕໍ່ອີກວ່າອັລລໍຫ໌ນັ້ນສັ່ງໃຫ້ຈ່າຍພາສີຊະກາດເຊິ່ງແມ່ນສັບສິ້ນທີ່ເກັບຈາກຄົນທີ່ຮັ່ງມີມາໃຫ້ຄືນກັບຄົນທຸກຈົນ"*

✓ ເປັນສາເຫດທີ່ສຳຄັນທີ່ຈະເຮັດໃຫ້ດຸອາ ຫຼື ການຂໍພອນຖືກຕອບຮັບ

ອັລລໍຫ໌ໄດ້ກ່າວວ່າ **"ອັລລໍຫ໌ນັ້ນມີນາມຊື່ທີ່ງົດງາມຢ່າງຫລວງຫລາຍ ຈົ່ງຂໍຕໍ່ພຣະອົງອັລລໍຫ໌ດ້ວຍນາມຊື່ເຫຼົ່ານັ້ນ"** (ອັລອະອ໌ຣອຟ : 180)

ອັລລໍຫ໌ສັນຍາວ່າຈະຕອບຮັບຄຳຂໍພອນ ຫຼື ດຸອາ ພຣະອົງໄດ້ກ່າວວ່າ **"ຈົ່ງຂໍກັບເຮົາ ແລ້ວເຮົາຈະຕອບຮັບ"** (ສູເຣາະຫ໌ຄໍຟີຣ : 60)

ດັ່ງນັ້ນເພື່ອບໍ່ໃຫ້ການເສຍມາລະຍາດຕໍ່ພຣະເຈົ້າ ເຮົາເອງກໍ່ຄວນເອີ້ຍພຣະນາມຊື່ທີ່ເຫມາະສົມກັບພຣະເຈົ້ານຳດ້ວຍ ເຊັ່ນ ຖ້າເຮົາຕ້ອງການຂໍອະໄພໂທດຈາກພຣະເຈົ້າ ເຮົາຈະບໍ່ເວົ້າພຽງແຕ່ວ່າ *"ໂອ້ອັລລໍຫ໌ ຂໍອະໄພໂທດໃຫ້ຂ້ອຍນຳແດ່."* ແຕ່ເຮົາຈະເວົ້າວ່າ *"ໂອ້ອັລລໍຫ໌ຜູ້ຊົງອະໄພຢ່າງແທ້ຈິງ ຂໍຈົ່ງໃຫ້ອະໄພແກ່ຂ້ອຍນຳແດ່ທອນ"*

ເຊັ່ນດຽວກັນນັ້ນເຮົາຈະບໍ່ພຽງແຕ່ເວົ້າວ່າ *"ໂອ້ອັລລໍຫ໌ ຈົ່ງໃຫ້ສິ່ງນັ້ນແກ່ຂ້ອຍແດ"* ແຕ່ເຮົາຈະຂໍແບບເຕັມໆ ວ່າ *"ໂອ້ອັລລໍຫ໌ຜູ້ຊົງປະທານ ຂໍຊົງໃຫ້ສິ່ງນັ້ນແກ່ຂ້ອຍດ້ວຍເຖີດ"*

ການເຕີມພຣະນາມຊື່ຂອງອັລລໍຫ໌ທີ່ເຫມາະສົມໃນບົດຂໍພອນນັ້ນເປັນສິ່ງທີ່ທ່ານສາດສະດາມູຮັມຫມັດໄດ້ປະຕິບັດຢູ່ສະເຫມີ ທ່ານເຄີຍຂໍດູອາວ່າ *“ໂອ້ອັລລໍຫ໌ ຜູ້ຊົງເປັນ ຜູ້ຊົງຄວບຄຸ້ມທຸກສິ່ງ ຂ້ອຍຂໍດ້ວຍຄວາມເມດຕາຂອງພຣະອົງ ຂໍໄດ້ປະທານໃຫ້ຊີວິດຂອງຂ້ອຍເປັນໄປດ້ວຍດີ ແລະ ຢ່າປ່ອຍໃຫ້ຂ້ອຍຫວັງພາດພຶ່ງຕົວເອງແມ້ແຕ່ພິບຕາດຽວ”*

✓ ອັລລໍຫ໌ຮັກຜູ້ທີ່ຮັກນາມຊື່ຂອງພຣະອົງ

ມີສະຫາຍທ່ານຫນຶ່ງຂອງທ່ານສາດສະດາທູດໄດ້ເປັນອິຫມ່າມ ຫຼື ຜູ້ນຳລະມາດ ແຕ່ທຸກເທື່ອທ່ານມັກອ່ານບົດ **"ຈົ່ງກ່າວເຖີດມູຮາມັດ ວ່າພຣະອົງຄືພຣະເຈົ້າພຽງຫນຶ່ງດຽວ"** (ອັລ

ກຸຣອານບົດທີ່ 112) ບັນດາສະຫາຍທັ້ງຫລາຍທີ່ລະມາດຕາມຫລັງທ່ານນັ້ນກໍ່ມາຖາມທ່ານສາດສະດາທູດວ່າ "ທ່ານມີຄວາມຄິດເຫັນແບບໃດຕໍ່ການກະທຳແບບນີ້?"

ທ່ານສາດສະດາທູດກໍ່ໃຫ້ໄປຖາມກັບສະຫາຍຜູ້ທີ່ນຳລະມາດທ່ານນັ້ນວ່າ "ເຫດໃດຈຶ່ງມັກອ່ານແບບນີ້?"

ເຂົາຕອບວ່າ *"ເພາະໃນບົດນີ້ມີຄຸນລັກສະນະທີ່ສາຄັນຂອງພຣະເຈົ້າ ຄື ຄວາມເປັນຫນຶ່ງດຽວ ແລະຂ້ອຍກໍ່ມັກ ຂ້ອຍຈຶ່ງອ່ານ*"

ທ່ານສາດສະດາທູດກໍ່ເລີຍຕອບວ່າ *"ດັ່ງນັ້ນ ກໍ່ບອກເຂົາວ່າອັລລໍຫ໌ກໍ່ຮັກເຂົາຄືກັນ"*

- ✓ ຜູ້ທີ່ຮູ້ຈັກພຣະນາມຊື່ ແລະ ຄຸນລັກສະນະຕ່າງໆ ຂອງພຣະເຈົ້າ ກໍ່ປຽບເຫມືອນເຂົານັ້ນຮູ້ທຸກສິ່ງ

ຄົນທີ່ຮູ້ວ່າອັລລໍຫ໌ນັ້ນຄືຜູ້ສ້າງ, ເຂົາກໍ່ຈະຮູ້ວ່າທຸກສິ່ງນອກເຫນືອຈາກພຣະອົງນັ້ນກໍ່ຄືສິ່ງຖືກສ້າງ ອັລລໍຫ໌ໄດ້ກ່າວວ່າ "ອັລລໍຫ໌ຄືຜູ້ຊົງສ້າງທຸກສິ່ງ." (ອັຊຊຸມັຣ : 62)

ຜູ້ທີ່ຮູ້ວ່າອັລລໍຫ໌ຄືຜູ້ໃຫ້, ເຂົາກໍ່ຈະເຊື່ອວ່າທຸກສິ່ງນອກເຫນືອຈາກພຣະອົງນັ້ນຄືຜູ້ຮັບ ອັລລໍຫ໌ໄດ້ກ່າວວ່າ **"ບໍ່ມີສັດໂຕໃດໃນໂລກນີ້ ຍົກເວັ້ນອັລລໍຫ໌ນັ້ນໄດ້ກາຫນົດປັດໄຈຊີບໄວ້ໃຫ້ແລ້ວ"** (ສູເຣາະຫ໌ ຮູດ : 6) ເຊັ່ນດຽວກັນ, ເຂົາກໍ່ຈະຮູ້ວ່າບໍ່ມີຜູ້ໃດມີອຳນາດມອບປັດໄຈໃຫ້ແກ່ຜູ້ອື່ນນອກຈາກພຣະອົງອັລລໍຫ໌ເທົ່ານັ້ນ ອັລລໍຫ໌ໄດ້ກ່າວວ່າ **"ຜູ້ໃດທີ່ປະທານປັດໄຈຈາກຟ້າ ແລະ ແຜ່ນດິນ? ມີພຣະເຈົ້າອື່ນຄຽງຄູ່ກັບພຣະອົງອັລລໍຫ໌ນຳບໍ່?"** (ອັນນັມລ໌ : 64)

ໃຜທີ່ຮູ້ວ່າອັລລໍຫ໌ຄືເຈົ້າຊີວິດ ເຂົາກໍ່ຈະຮູ້ວ່າທຸກສິ່ງນອກເຫນືອພຣະອົງນັ້ນຄືບ່າວຂອງພຣະອົງອັລລໍຫ໌ໄດ້ກ່າວວ່າ **"ພຣະອົງຊົງມີອານາດນອກເຫນືອຝາກຟ້າ ແລະ ແຜ່ນດິນທັ້ງຫມົດ, ຮ່ວມທັ້ງຫມົດທຸກສິ່ງລະຫວ່າງຟ້າ ແລະ ແຜ່ນດິນ ພຣະອົງໄດ້ສ້າງສິ່ງທີ່ພຣະອົງຕ້ອງການ"** (ອັລມາອິດະຫ໌ : 17)

- ✓ ການຮູ້ຈັກພຣະນາມຊື່ຂອງອັລລໍຫ໌ຈະເຮັດໃຫ້ຫ່າງໄກຈາກບາບ, ເຮັດໃຫ້ຮູ້ສຶກຢາກເຮັດຄວາມດີຫລາຍຂຶ້ນ

ຄືດັ່ງຄົນທີ່ຮູ້ດີວ່າຫົວຫນ້າຂອງຕົນເອງນັ້ນເປັນຜູ້ຮອບຮູ້ປານິດລະອຽດອ່ອນ ເຂົາກໍ່ຈະພະຍາຍາມເຮັດວຽກທີ່ມີຢູ່ຢ່າງປານີດ ແລະ ລະອຽດອ່ອນ ເພື່ອໃຫ້ຫົວຫນ້າຂອງເຂົາພໍໃຈ ເຊັ່ນດຽວກັນກັບຄົນທີ່ຮູ້ເຖິງຄວາມໃຈບຸນຂອງຄົນໆຫນຶ່ງ ເຂົາກໍ່ມັກທີ່ຈະໃກ້ຊິດກັບຄົນໆນັ້ນເພື່ອໃຫ້ໄດ້ຮັບສິ່ງດີໆຈາກເຂົາ

- ✓ ການຮູ້ຈັກພຣະນາມຊື່ ແລະ ຄຸນລັກສະນະຂອງພຣະເຈົ້ານັ້ນຈະເຮັດໃຫ້ເຮົາຮູ້ສຶກຢາກມີຄຸນລັກສະນະເຊັ່ນດຽວກັນນໍາ ຄຸນລັກສະນະ ແລະ ນາມຊື່ຕ່າງໆຂອງພຣະເຈົ້າ

ນັ້ນຄືຄຸນນະທໍາອັນສູງສຸດທີ່ມະນຸດທຸກຄົນຕ້ອງສະແຫວງຫາ ອັລລໍຫ໌ຮັກທີ່ຈະໃຫ້ມະນຸດນັ້ນມີຄວາມງົດງາມຄືດັ່ງທີ່ພຣະອົງນັ້ນມີຄຸນລັກສະນະອັນທີ່ງົດງາມ ແມ້ແຕ່ລະດັບຄວາມງົດງາມນີ້ຈະແຕກຕ່າງກັນຢ່າງບໍ່ສາມາດປຽບທຽບໄດ້ກໍ່ຕາມ

ອັລລໍຫ໌ຄືຜູ້ຊົງເມດຕາແທ້ຈິ່ງ ຊົງຮັກມະນຸດທີ່ມີມີຄວາມເມດຕາ.

ອັລລໍຫ໌ຄືຜູ້ຊົງຮູ້ຄຸນຄ່າ ພຣະອົງກໍ່ຮັກຜູ້ທີ່ມັກໃນການຂອບໃຈ.

ພຣະອົງຄືຜູ້ຊົງໃຈບຸນ ພຣະອົງກໍ່ຕ້ອງຮັກຜູ້ທີ່ມັກບໍລິຈາກທານ.

ພຣະອົງຄືຜູ້ຊົງອົດທົນຢ່າງແທ້ຈິ່ງ ກໍ່ຈະຮັກຜູ້ທີ່ອົດທົນ.

ພຣະອົງຄືຜູ້ຊົງໃຫ້ອະໄພທີ່ແທ້ຈິ່ງ ກໍ່ຈະຮັກຜູ້ທີ່ໃຫ້ອະໄພ.

ພຣະອົງຊົງຮອບຮູ້ ກໍ່ຈະຮັກຜູ້ທີ່ມີຄວາມຮູ້.

ພຣະອົງຄືຜູ້ຊົງງົດງາມ ກໍ່ຈະຮັກຄວາມງົດງາມ.

ພຣະອົງຄືຜູ້ຊົງປົດປັງແທ້ທີ່ງ ກໍ່ຈະຮັກຜູ້ທີ່ມີຄວາມອາຍ ແລະ ຍໍາເກງ.

ພຣະອົງຄືຜູ້ຊົງອ່ອນໂຍນທີ່ສຸດ ພຣະອົງກໍ່ຈະຮັກຜູ້ທີ່ຄົນທີ່ອ່ອນໂຍນ.

ດັ່ງນັ້ນ, ຜູ້ທີ່ເປັນທີ່ຮັກຂອງອັລລໍຫ໌ກໍ່ຄືຜູ້ທີ່ພະຍາຍາມສະແຫວງຫາພັດທະນາຝຶກຝົນຕົນເອງໃຫ້ມີຄຸນລັກສະນະທີ່ດີຂອງພຣະເຈົ້າ.

**6. ສິນທຳ ແລະ ສາມັນສຳນຶກໃນໃຈ (ອັລ-ອິຫ໌ຊານ)**

ອິສລາມຄືສາສະໜາທີ່ຫຍິ່ງໃຫຍ່ ອິສລາມນັ້ນໃຫ້ຄວາມສຳຄັນຕໍ່ຫລັກປະຕິບັດທາງກາຍພາຍນອກ ເຊັ່ນ: ການລະມາດ ການຖືສິ້ນອົດ ຮ່ວມເຖິງການມີມິດໄມຕີສຳພັນຕໍ່ກັບຄົນອື່ນ ເຊັ່ນ: ການເຮັດທຸລະກິດ ເລື່ອງພາຍໃນຄອບຄົວ ເຊັ່ນດຽວກັນ, ອິສລາມກໍ່ຄຳໜຶ່ງເຖິງການຂັດເກົາຈິດໃຈຂອງມະນຸດໃຫ້ມີສິລະທຳອັນດີງາມ

ອັລລໍຫ໌ໄດ້ກ່າວວ່າ **"ພຣະອົງຄືຜູ້ທີ່ສົ່ງທູດມາສູ່ກຸ່ມຄົນທີ່ອ່ານຂຽນບໍ່ໄດ້ ທູດຄົນນັ້ນກໍ່ເປັນພວກເຂົາເອງ ໂດຍຈະມາອ່ານບົດບັນຍັດຂອງພຣະເຈົ້າ ຂັດເກົາພວກເຈົ້າ ແລະສອນຄວາມຮູ້ພວກເຂົາ ເຖິງແມ້ກ່ອນຫນ້ານັ້ນ ພວກເຂົາຈະລົງທາງຢ່າງຊັດເຈນກໍ່ຕາມ"** (ອັລຈຸມຸອະຫ໌ : 2)

ຈະສັງເກດວ່າຄຳເວົ້າຄຳກ່າວຂອງພຣະເຈົ້ານີ້ໄດ້ເຊີດຊູການຂັດເກົາຈິດໃຈກ່ອນຮໍ່າຮຽນ ໂດຍເຫດນີ້ ອິສລາມຈຶ່ງຖືວ່າພາຍໃນໃຈນັ້ນແມ່ນມີຄວາມສຳຄັນກວ່າພາຍນອກທ່ານສາດສະດາທູດໄດ້ກ່າວວ່າ **"ອັລລໍຫ໌ນັ້ນຈະບໍ່ເບິ່ງທີ່ຮູບຮ່າງ ຫຼື ສີຜິວຂອງພວກເຈົ້າ ແຕ່ພຣະອົງຈະເບິ່ງທີ່ຫົວໃຈຂອງພວກເຈົ້າ"** ທ່ານສາດສະດາທູດຍັງໄດ້ກ່າວອີກວ່າ *"ໃນຮ່າງກາຍຂອງມະນຸດນັ້ນມີກ້ອນເນື້ອກ້ອນໜຶ່ງ ຖ້າຫາກມັນດີຮ່າງກາຍທັ້ງຫມົດກໍ່ຈະດີນຳ ແຕ່ຖ້າຫາກມັນບໍ່ດີຮ່າງກາຍທັ້ງຫມົດກໍ່ຈະບໍ່ດີນຳ ນັ້ນກໍ່ຄື* ***"ຫົວໃຈ"***

ດັ່ງນັ້ນ ການເຮັດດີດ້ວຍກາຍພາຍນອກນັ້ນຈະບໍ່ມີມື້ຖືກຕອບຮັບຈາກພຣະເຈົ້າ ຍົກເວັ້ນແຕ່ພາຍໃນໃຈກໍ່ຕ້ອງມີຄວາມດີນຳ ຜູ້ຮູ້ທ່ານຫນຶ່ງ ອິບນູກັອຍຍິມ ໄດ້ກ່າວວ່າ: *"ສຳນຶກໃນໃຈນັ້ນຄືພື້ນຖານສຸດຂອງມະນຸດ ສ່ວນການກະທຳພາຍນອກຄືສິ່ງທີ່ຈະຕາມ ມາເຕີມເຕັມ ເຈດຕະນາຂອງຄົນກໍ່ຄືວິນຍານ ສ່ວນການກະທຳຄືຮ່າງກາຍ ຫາກຮ່າງກາຍຂາດວິນຍານກໍ່ຕ້ອງຕາຍ ດັ່ງນັ້ນ ການຮູ້ເຖິງວິທີການເບິ່ງແຍ້ງຫົວໃຈຈຶ່ງສຳຄັນກວ່າການເບິ່ງແຍ້ງຮ່າງກາຍ"*

ຜູ້ຮູ້ອີກທ່ານຫນຶ່ງ ອິບນູໄຕມີຍະຫ໌ ໄດ້ກ່າວວ່າ: *"ສິນທຳ ຫຼື ສຳນຶກໃນໃຈນັ້ນ ເປັນພື້ນຖານສຳຄັນຂອງການມີສັດທາເຊື່ອມັ່ນ ເປັນຖານຫລັກຂອງສາສະຫນາ ເຊັ່ນ ການມີຄວາມຮັກຕໍ່ພຣະເຈົ້າ ແລະ ທ່ານສາດສະດາ ການມອບຫມາຍວ່າງໃຈໃນພຣະເຈົ້າ ຄວາມບໍລິສຸດໃຈຕໍ່ພຣະເຈົ້າ ການຂອບໃຈພຣະອົງ ການອົດທົນ ຄວາມຢ້ານ ແລະ ຄວາມຫວັງ ສິນລະທຳດັ່ງກ່າວນີ້ ລ້ວນແຕ່ເປັນສິ່ງຈຳເປັນທີ່ມະນຸດທຸກຄົນຕ້ອງມີຕາມຄວາມຄິດເຫັນຂອງນັກວິຊາການທຸກຝ່າຍ"*

ມະນຸດທຸກຄົນນັ້ນເປັນບ່າວຂອງພຣະເຈົ້າ ເຊິ່ງຄວາມເປັນບ່າວນີ້ມີ 2 ປະເພດຄື: **ຄວາມເປັນບ່າວພາຍໃນ ແລະຄວາມເປັນບ່າວພາຍນອກ**

ດັ່ງນັ້ນ ບໍ່ວ່າຈະເປັນທີ່ຫົວໃຈ ຢູ່ທີ່ລີ້ນ ຫຼືອະໄວຍະວະຕ່າງໆ ກໍ່ຕ້ອງມີຫນ້າທີ່ສະແດງອອກເຖິງຄວາມເປັນບ່າວຕໍ່ພຣະເຈົ້າ ດັ່ງນັ້ນ ການສະແດງອອກຄວາມເປັນບ່າວຂອງພຣະເຈົ້າພຽງແຕ່ຮູບຮ່າງພາຍນອກໂດຍທີ່ພາຍໃນໃຈນັ້ນວ່າງເປົ່າ ບໍ່ຮູ້ສຶກອີ່ຫຍັງ ສິ່ງເຫຼົ່ານີ້ບໍ່ໄດ້ສ້າງຄວາມໃກ້ຊິດຕໍ່ພຣະເຈົ້າໄດ້ເລີຍ.ແລະອາດຈະເຮັດໃຫ້ບໍ່ໄດ້ຮັບຜົນລະບຸນຈາກຄວາມດີທີ່ໄດ້ເຮັດລົງໄປ ເພາະຈຸດປະສົງຫລັກຂອງການເຮັດຄວາມດີຄືເພື່ອການຂັດເກົ່າຈິດໃຈ ດັ່ງນັ້ນ **ການເຮັດດີໂດຍປາດສະຈາກຄວາມຕັ້ງໃຈ ກໍ່ຄືຮ່າງກາຍທີ່ບໍ່ມີວິນຍານ**

## 6.1 ສິນລະທຳທີ່ສາຄັນ

### 1.) ຄວາມຮັກຕໍ່ພຣະເຈົ້າ

ຄວາມຮັກຕໍ່ອັລລໍຫ໌ນັ້ນເປັນຄວາມດີທີ່ຫຍິ່ງໃຫຍ່ທີ່ສຸດປະການຫນຶ່ງ ເປັນຈຸດມຸ້ງຫມາຍຕໍ່ການເຮັດຄວາມດີ ແລະເດີນທາງສູ່ພຣະເຈົ້າ ເພາະຄວາມຮັກຄືສິ່ງທີ່ນຳພາຜູ້ສັດທາໃຫ້ປາດຖະຫນາທີ່ຈະເຂົ້າໃກ້ພຣະອົງຫລາຍຂຶ້ນ ອັລລໍຫ໌ໄດ້ກ່າວເຖິງຜູ້ສັດທາທີ່ມີລັກສະນະແບບນີ້ວ່າ **"ໂອ້ຜູ້ສັດທາທັ້ງຫຼາຍ ພວກເຈົ້າຄົນໃດທີ່ຫັ່ນຫລັງໃຫ້ກັບສາສະຫນາ ອັລລໍຫ໌ກໍ່ຈະໃຫ້ເກີດຄົນອີກພວກຫນຶ່ງມາທີ່ພຣະອົງຊົງຮັກພວກເຂົາ ແລະພວກເຂົາກໍ່ຮັກພຣະອົງ"** (ອັຕເຕົາບະຫ໌: 54)

ທ່ານສາດສະດາທູດມູຮຳຫມັດຍັງໄດ້ກ່າວວ່າ ມີຢູ່ 3 ປະການ ທີ່ຖ້າຜູ້ໃດມີແລ້ວເຂົາກໍ່ຈະໄດ້ພົບເຈີຄວາມຫອມຫວານຂອງການສັດທາ:

1. ການທີ່ມີອັລລໍຫ໌ ແລະ ທ່ານສາດສະດາທູດເປັນຜູ້ທີ່ຮັກຫລາຍທີ່ສຸດເຫນືອສິ່ງອື່ນທັ້ງຫຼາຍ

2. ການທີ່ເຂົາຈະຮັກຄົນໆ ຫນຶ່ງເພື່ອອັລລໍຫ໌ເທົ່ານັ້ນ

3. ການຊັງ ຫຼື ລັງກຽດ ການກັບຄືນສູ່ສະພາບຜູ້ປະຕິເສດ ຫລັງຈາກພຣະເຈົ້າໄດ້ຊ່ອຍເຫລືອໃຫ້ເຂົາພົ້ນສູ່ສະພາບນັ້ນມາແລ້ວ ຄືດັ່ງທີ່ເຂົານັ້ນກຽດຊັງທີ່ຈະຖືກຈັບໂຍນໃສ່ໄຟນາລົກ" ດັ່ງນັ້ນການທີ່ຈະໄດ້ຮັບຄວາມຫອມຫວານຂອງການສັດທານັ້ນ ກໍ່ຕ້ອງເລີ່ມຕົ້ນຈາກການຮັກພຣະເຈົ້າກ່ອນການມີຄວາມຮັກຕໍ່ພຣະເຈົ້າຈະຕ້ອງຮອດລະດັບທີ່ຮັກພຣະອົງເຫນືອສິ່ງໃດທັ້ງຫມົດ ໂດຍການເຮັດຕາມສິ່ງທີ່ພຣະອົງໄດ້ບອກໄວ້ ແລະ ຫ່າງໄກອອກໄປຈາກສິ່ງທີ່ພຣະອົງໄດ້ຫ້າມເອົາໄວ້ ອີກຢ່າງຕ້ອງປະຕິບັດຕາມທ່ານສາດສະດາທູດໃນທຸກໆຄຳສັ່ງສອນບໍ່ວ່າຈະໃຫຍ່ ຫຼື ນ້ອຍ ທີ່ຕ້ອງປະຕິບັດຕາມສາດສະດາທູດນັ້ນກໍ່ຍ້ອນວ່າ ການມີຄວາມຮັກຕໍ່ພຣະເຈົ້າຢ່າງດຽວ ແຕ່ຂາດການປະຕິບັດຕາມຄາສອນທີ່ຖືກຕ້ອງ ສິ່ງນີ້ເອີ້ນວ່າຄວາມຮັກທີ່ບໍ່ຈິງໃຈ

ແຕ່ແນວນັ້ນກໍ່ຕາມ ຜູ້ທີ່ເດີນທາງສູ່ຄວາມຮັກຂອງພຣະເຈົ້ານັ້ນຕ້ອງພົບເຈີອຸປະສັກບົດທົດສອບຢ່າງຫລວງຫຼາຍ ເຊິ່ງຈະມາໃນຮູບແບບຂອງອາລົມໄຝ່ຕ່ຳ, ກິເລດ, ຄວາມໂລບ ຖ້າຫາກເຂົາຜູ້ນັ້ນຍອມຕົນຕໍ່ອາລົມ ແລະ ຍອມຖິ້ມຄວາມຮັກຕໍ່ພຣະເຈົ້າ ເຂົາຄົນນັ້ນກໍ່ຈະຂາດທຶນ ແລະ ລົ້ມເລວຢ່າງຫນັກຫນ່ວງ ແຕ່ຖ້າຫາກເຂົາມອບຄວາມຮັກຕໍ່ພຣະເຈົ້າເຫນືອອາລົມຕົນເອງ ແລະ ພະຍາຍາມຫ່າງໄກອອກຈາກຄວາມກິເລດຕ່ຳທັ້ງຫລາຍເພື່ອອັລລໍຫ໌ ເຂົາກໍ່ຈະປະສົບຜົນສຳເຫລັດ ແລະ ມີໄຊຊະນະ

ການມີຄວາມຮັກຕໍ່ພຣະເຈົ້າ ແລະ ທ່ານສາດສະດາທູດນີ້ເປັນສິ່ງຈຳເປັນທີ່ມຸສລິມທຸກຄົນຕ້ອງມີ ຕ້ອງຮັກພຣະເຈົ້າ ແລະ ສາດສະດາທູດຫລາຍກວ່າຄອບຄົວ ແຕ່ໃນຂະນະດຽວກັນມຸສລິມຜູ້ສັດທາກໍ່ສົມຄວນມອບຄວາມຮັກຕໍ່ຄົນອື່ນນຳເຊັ່ນກັນ ໂດຍຕ້ອງເປັນຄວາມຮັກທີ່ມີລະດັບຮອງລົງມາຈາກຄວາມຮັກທີ່ມີຕໍ່ພຣະເຈົ້າ ແລະ ທ່ານສາດສະດາທູດ ອັລລໍຫ໌ໄດ້ກ່າວວ່າ **"ຈົ່ງກ່າວເຖິດຫາກວ່າພໍ່ແມ່, ລູກໆ, ພີ່ນ້ອງ, ຜົວເມຍ, ຄອບຄົວ, ສັບສິ້ນທີ່ພວກເຈົ້າສະແຫວງຫາມາ, ການຄ້າທີ່ພວກເຈົ້າຢ້ານຈະຂາດທຶນ, ບ້ານເຮືອນທີ່ພວກເຈົ້າພໍໃຈ ເມື່ອສິ່ງເຫຼົ່ານີ້ເປັນທີ່ຮັກເຫນືອພຣະອົງອັລລໍຫ໌ ແລະທ່ານສາດສະດາທູດ ແລະການຕໍ່ສູ້ໃນຫົນທາງຂອງພຣະອົງ ມື້ນັ້ນແຫລະ ກໍ່ຈົ່ງລໍຖ້າເຖິງມື້ແຫ່ງການລົງໂທດຈາກພຣະອົງອັລລໍຫ໌ ອັລລໍຫ໌ນັ້ນຈະບໍ່ນຳທາງພວກທີ່ຝ່າຝືນ"** (ເຕົາບະຫ໌ : 24)

ມຸສລິມຜູ້ສັດທາທຸກຄົນນັ້ນ ຈຳເປັນຕ້ອງມີຄວາມຮັກຕໍ່ພຣະເຈົ້າ ແຕ່ມຸສລິມ ແຕ່ລະຄົນນັ້ນອາດຈະມອບຄວາມຮັກນັ້ນບໍ່ເທົ່າກັນ ຜູ້ທີ່ມີຄວາມຮັກຕໍ່ພຣະເຈົ້າໃນລະດັບທີ່ສູງທີ່ສຸດກໍ່ຕ້ອງເປັນຜູ້ໃກ້ຊິດຕໍ່ພຣະເຈົ້າໄດ້ຫຼາຍທີ່ສຸດ ຄົນປະເພດນີ້ຈະສະແດງຄວາມຮັກອອກມາດ້ວຍການກະທຳເຮັດດີ ເຊັ່ນທ່ານສາດສະດາທູດໄດ້ບອກວ່າ **"ອັລລໍຫ໌ໄດ້ກ່າວວ່າ :ບ່າວຂອງເຮົານັ້ນຍັງສ້າງຄວາມໃກ້ຊິດກັບເຮົາດ້ວຍການປະຕິບັດເຮັດຄວາມດີອາສາທີ່ເອີ້ນວ່າສຸນນະຫ໌ ຈົນເຮົານັ້ນໄດ້ຮັກເຂົາ ແລະຖ້າຫາກອັລລໍຫ໌ນັ້ນຊົງຮັກບ່າວຜູ້ໃດແລ້ວ ເຂົາກໍ່ຈະໄດ້ຮັບຄວາມສຳເລັດທັ້ງໂລກນີ້ ແລະ ໂລກຫນ້າແລະມະນຸດທຸກຄົນກໍ່ຈະຮັກເຂົາເຊັ່ນດຽວກັນ"**

ທ່ານສາດສະດາທູດກ່າວວ່າ "ຫາກພຣະອົງອັລລໍຫ໌ໄດ້ຮັກໃຜ ກໍ່ຈະເອີ້ນມາລາອິກະຫ໌ຍິບບາຣິນ ມາ ແລະກ່າວວ່າ **"ອັລລໍຫ໌ນັ້ນໄດ້ຮັກຄົນໆ ນັ້ນ ເຈົ້າກໍ່ຈົ່ງຮັກເຂົານຳ"** ມາລາອິກະຫ໌ຍິບບາຣິນ ກໍ່ຈະຮັກເຂົາ ແລ້ວຫລັງຈາກນັ້ນມະລາອິກະຫ໌ກໍ່ຈະໄປເອີ້ນບັນດາເທວະດາທັ້ງຫມົດໃນຊັ້ນຟາກຟ້າອາວະກາດແລະ ກ່າວວ່າ **"ອັລລໍຫ໌ນັ້ນໄດ້ຊົງຮັກຄົນໆ ນັ້ນ"** ມາລາອິກະຫ໌ທັ້ງຫມົດໃນຟາກຟ້າກໍ່ຈະຮັກເຂົາເຊັ່ນດຽວກັນ ດັ່ງນັ້ນ ຄວາມຮັກຕໍ່ ພຣະອົງອັລລໍຫ໌ທີ່ມີໃນໃຈຈຶ່ງເປັນສາມັນສິນທຳທີ່ຫຍິ່ງໃຫຍ່ທີ່ສຸດທີ່ຜູ້ສັດທາສົມຄວນມີ

## 6.2 ຄວາມອົດທົນ (ຊ໊ອບຣ໌)

ຫມາຍເຖິງການຫັກຫ້າມຈິດໃຈອອກຈາກການຝ່າຝືນພຣະເຈົ້າ ຄວາມພະຍາຍາມກະຕຸ້ນຕົວເອງໃຫ້ເຮັດຄວາມດີຕໍ່ພຣະເຈົ້າ ແລະ ກັ່ນຈິດໃຈບໍ່ໃຫ້ຮູ້ສຶກບໍ່ດີຕໍ່ເລື່ອງຮ້າຍໆ ທີ່ຕ້ອງພົບເຈີ

ອັລລໍຫ໌ໄດ້ດຳລັດວ່າ **"ຜູ້ທີ່ອົດທົນນັ້ນຈະໄດ້ຮັບການຕອບແທນຢ່າງບໍ່ສາມາດຄຳນວນໄດ້"** (ອັຊຊຸມັດ : 10)

ອັລລໍຫ໌ໄດ້ກ່າວອີກວ່າ **"ຈົ່ງບອກຂ່າວດີຕໍ່ຜູ້ອົດທົນ"** (ອັລບະກໍຣໍຫ໌ : 155)

ຜູ້ອົດທົນນັ້ນຈະໄດ້ຮັບຖານະດອນອັນຫຍິ່ງໃຫຍ່ໃນສວນສະຫວັນ ຄວາມອົດທົນນັ້ນຄືສີລະທຳອັນຫຍິ່ງໃຫຍ່ທີ່ຈະເຮັດໃຫ້ໄດ້ຮັບສວນສະຫວັນ ແລະ ຫລຸດພົ້ນຈາກໄຟນາລົກ ທ່ານສາດສະດາທູດກ່າວວ່າ **"ສະຫວັນນັ້ນຖືກອ້ອມຮອບໄປດ້ວຍສິ່ງທີ່ມະນຸດລັງກຽດ ແລະນະລົກນັ້ນຖືກອ້ອມຮອບໄປດ້ວຍກິເລດອາລົມ"**

- ***ຄວາມອົດທົນນັ້ນມີ 3 ຊະນິດ :***

1. ຄວາມອົດທົນຕໍ່ການເຮັດຄວາມດີ ເຊັ່ນ : ການລະມາດ, ຖືສິ້ນອົດ

2. ອົດທົນບໍ່ຝ່າຝືນພຣະເຈົ້າ ເຊັ່ນ : ການລະເມີດຜິດປະເວນີ, ການດື່ມສິ່ງມຶນເມົາ, ຂີ້ລັກມັກຈີກ

3. ອົດທົນຕໍ່ເລື່ອງຮ້າຍໆ ທີ່ພຣະເຈົ້າການົດໃຫ້ພົບເຈີ ເຊັ່ນ : ການສູນເສຍຄົນຮັກ, ຄອບຄົວ, ຫຼື ສັບສິ້ນ

- ***ສິ່ງຕ່າງໆ ທີ່ຈະຊ່ວຍໃຫ້ເຮົາອົດທົນຫຼາຍຂຶ້ນ :***

1. ຕ້ອງຮູ້ວ່າເປັນທາມະຊາດທີ່ມະນຸດນັ້ນຕ້ອງພົບເຈີເລື່ອງຮ້າຍໆ ແລະ ອຸປະສັກເປັນເລື່ອງທາມະດາ

2. ສັດທາວ່າໂລກນີ້ທັ້ງຫມົດເປັນຂອງພຣະເຈົ້າພຽງຜູ້ດຽວ

3. ເຊື່ອການຕອບແທນຄວາມດີໃນໂລກຫນ້າ

4. ເຊື່ອວ່າການອົດທົນນັ້ນຈະນາສູ່ຄວາມສາເລັດ

5. ຕ້ອງຂໍດຸອາ (ຂໍພອນ) ຕໍ່ອັລລໍຫ໌ ແລະ ຫວັງພຶ່ງພາຕໍ່ພຣະອົງພຽງຜູ້ດຽວ

6. ສັດທາຕໍ່ການການົດເລື່ອງດີ ແລະ ເລື່ອງບໍ່ດີຈາກພຣະເຈົ້າ

- ***ສ່ວນສິ່ງທີ່ຈະມາທຳລາຍຄວາມອົດທົນ :***

1.ຄວາມຮີບຮ້ອນ

2. ຄວາມໂມໂຫ້ຮ້າຍ ຫຼື ຮູ້ສຶກບໍ່ດີ

3. ການຫມົດຄວາມຫວັງ

ຄວາມອົດທົນນັ້ນຄືສິລະທຳສາມັນທາງໃຈຢ່າງຫນຶ່ງທີ່ມຸສລິມທຸກຄົນຕ້ອງມີ ໂດຍສະເພາະມຸສລິມໃຫມ່ ເພາະມຸສລິມໃຫມ່ຕ້ອງອົດທົນຕໍ່ບາບທີ່ຕົນເອງມັກເຮັດຢູ່ ກ່ອນຈະເຂົ້າມາຮັບອິສລາມ ບໍ່ວ່າຈະເປັນ ການດື່ມເຫລົ້າເບຍ ຫຼື ການແຕະຕ້ອງເນື້ອຖືກຕົວເພດກົງຂ້າມ ຫຼື ແມ້ການອົດທົນຕໍ່ການເຮັດສິ່ງທີ່ພຣະເຈົ້າໃຫ້ເຮັດ ບໍ່ວ່າຈະເປັນການລະມາດຫ້າເວລາ, ການຖືສິ້ນອົດ, ໃນເດືອນຣໍມາດອນ ມຸສລິມໃຫມ່ຍັງຕ້ອງອົດທົນຕໍ່ວິທີ່ຊີວິດທີ່ປ່ຽນໄປສັງຄົມໃຫມ່ໆ ທີ່ຕ້ອງພົບເຈີ ແຕ່ໃນທ້າຍທີ່ສຸດ ອັລລໍຫ໌ຈະຕອບແທນມຸສລິມໃຫມ່ຜູ້ນີ້ໂດຍກັບຄວາມສຸກທັ້ງໂລກນີ້ ແລະ ໂລກຫນ້າ

ແຕ່ເສັ້ນທາງຂອງມະນຸດທຸກຄົນຍັງຈະຕ້ອງພົບເຈີອຸກປະສັກອິກຍາວໄກ ແມ້ແຕ່ທ່ານສາດສະດາທູດອາດັມ, ທ່ານສາດສະດາທູດນົອະ (ໂນອາ) ຍັງຕ້ອງພົບເຈີຄວາມລຳບາກ, ທ່ານສາດສະດາທູດອິບຣໍຮີມ (ອາຣາມ) ຍັງຖືກໂຍນລົງກ້ອງໄຟ, ທ່ານສາດສະດາທູດມູຮັມຫມັດຢັງຖືກເພື່ອນພ່ອງກ່າວຫາວ່າເປັນຄົນບ້າ ເປັນຫມໍຜີ ຖືກຕາມລ່າ ຖືກເອົາຫີນໂຍນໃສ່ຈົນເລືອດອອກແຂ້ວຫັກ ແຕ່ສຸດທ້າຍທຸກທ່ານກໍ່ປະສົບຄວາມສຳເລັດ ທັ້ງຫມົດນີ້ກໍ່ຍ້ອນຄວາມອົດທົນທັ້ງນັ້ນ

## 6.3 ຄວາມບໍລິສຸດໃຈ "ອັລ-ອິກລ້າສ"

ຄວາມບໍລິສຸດໃຈ ຄື ການເຮັດຄວາມດີໂດຍເຈດຕະນາເພື່ອພຣະເຈົ້າເທົ່ານັ້ນ ບໍ່ໄດ້ຕ້ອງການການຕອບແທນ ຫຼື ຄຳສັນລະເສີນຈາກຜູ້ໃດອື່ນ ບໍ່ຕ້ອງການຜົນປະໂຫຍດໃດແອບແຝງ

ຄວາມບໍລິສຸດໃຈຄືພື້ນຖານຫນຶ່ງຂອງສາສະຫນາ ເປັນສິລະທາທີ່ສາດສະດາທູດທຸກຄົນສັ່ງສອນ ອັລລໍຫ໌ໄດ້ກ່າວວ່າ **"ຊາວຄຣິດສະຕຽນ ແລະ ຍິວ ໃນຍຸກທາອິດບໍ່ໄດ້ຖືກສັ່ງໃຫ້ໃຊ້ສິ່ງໄດ້ອື່ນ ນອກຈາກກາບໄຫວ້ພຣະເຈົ້າຢ່າງບໍລິສຸດໃຈ ແລະ ດາລົງຢູ່ໃນເສັ້ນທາງທີ່ທ່ຽງຕຮົງ** (ອັລບັຍຍິນະຫ໌ : 5)

ອິສລາມສອນວ່າການເຮັດຄວາມດີທີ່ພຣະເຈົ້າຈະຕອບຮັບນັ້ນຈະຕ້ອງປະກອບດ້ວຍ 2 ເງື່ອນໄຂ :

1. ການມີຄວາມບໍລິສຸດໃຈ ເຮັດຄວາມດີເພື່ອພຣະເຈົ້າພຽງຜູ້ດຽວ.
2. ປະຕິບັດຕາມຫລັກຄຳສອນຂອງທ່ານສາດສະດາທູດຢ່າງຖືກຕ້ອງ.

ຫາກຄວາມດີໃດປາດຊະຈາກ 2 ປະການນີ້ແລ້ວ ຄວາມດີນັ້ນກໍ່ບໍ່ຖືກຕອບຮັບຈາກພຣະເຈົ້າ ອັລລໍຫ໌ໄດ້ກ່າວວ່າ **"ຜູ້ໄດ້ທີ່ຫວັງພົບເຈີກັບພຣະເຈົ້າ ກໍ່ຈົ່ງປະຕິບັດເຮັດຄວາມດີ ແລະ ຢ່າໄດ້ມີການເອົາຜູ້ໃດມາຄຽງຄູ່ກັບພຣະເຈົ້າໃນການເຮັດຄວາມດີນັ້ນ"** (ອັລກະຫ໌ຟີ : 110)

- **ສິ່ງຕ່າງໆ ທີ່ຈະຊ່ວຍຝຶກຝົນໃຫ້ມີຄວາມບໍລິສຸດໃຈ :**

1. ການມີຄວາມເຊື່ອວ່າ ເຮົານັ້ນຄືບ່າວຂອງພຣະເຈົ້າແຕ່ພຽງຜູ້ດຽວ.

2. ສານຶກບຸນຄຸນ ແລະ ຄວາມດີ ທີ່ພຣະເຈົ້າໄດ້ມອບໃຫ້ເຮົາ.

3. ພະຍາຍາມກວດສອບຕົນເອງສະເຫມີ ຍອມຮັບວ່າຕົນເອງນັ້ນມີຄວາມຜິດພາດເນື່ອງຈາກການເຮັດຕາມອາລົມ ແລະ ໄຊຕອນ.

4. ມີຄວາມເຊື່ອຢ່າງແນ່ນອນວ່າໂລກນີ້ຕ້ອງສູນສະລາຍ ສ່ວນຄວາມອາມະຕະຖາວອນນັ້ນຢູ່ທີ່ໂລກຫນ້າ.

### 6.4 ການມອບຫມາຍວາງໃຈຕໍ່ອັລລໍຫ໌ "ການຕະວັກກັນ"

ຫມາຍຄວາມວ່າ ພຶ່ງຫວັງຕໍ່ພຣະເຈົ້າພຽງຜູ້ດຽວໃນການເຮັດສິ່ງຕ່າງໆ, ບໍ່ວ່າຈະເປັນການເຮັດສິ່ງທີ່ດີ ຫຼື ຄວາມພະຍາຍາມກຳຈັດ ແລະ ອອກຫ່າງຈາກສິ່ງບໍ່ດີ ໂດຍວາງໃຈວ່າອັລລໍຫ໌ພຣະອົງດຽວເທົ່ານັ້ນ ຈະເຮັດໃຫ້ສິ່ງຕ່າງໆເຫຼົ່ານີ້ສຳເລັດໄປໄດ້ ຂໍຄວາມສຳເລັດນີ້ນຳພຣະເຈົ້າພຽງຜູ້ດຽວ ແລະ ເຊື່ອວ່າສິ່ງໃດທີ່ພຣະອົງຕ້ອງການກໍ່ຕ້ອງເປັນໄປຕາມນັ້ນ ອັລລໍຫ໌ໄດ້ກ່າວວ່າ **"ຈົ່ງວາງໃຈຕໍ່ຜູ້ຊົງເປັນທີ່ບໍ່ມີມື້ຕາຍ ແລະຈົ່ງກ່າວສັນລະເສີນພຣະອົງ"** (ອັລຟຸຣກອນ :58)

ອັລລໍຫ໌ຍັງໄດ້ກ່າວອີກວ່າ **"ຜູ້ໃດທີ່ມອບຫມາຍວາງໃຈຕໍ່ອັລລໍຫ໌ ພຣະອົງກໍ່ຍອມພຽງພໍຕໍ່ເຂົາແລ້ວ"** (ອັຕຕໍລາກ : 3)

ທ່ານສາດສະດາທູດຍັງກ່າວອີກວ່າ *"ຖ້າຫາກພວກທ່ານວາງໃຈມອບຫມາຍຕໍ່ ພຣະອົງອັລລໍຫ໌ຢ່າງຈິ່ງໃຈ ພຣະອົງກໍ່ຈະປະທານປັດໄຈໃຫ້ແກ່ພວກທານ ຄືດັ່ງທີ່ພຣະອົງໄດ້ປະທານແກ່ນ່ອນນົກທີ່ບິນອອກຈາກຮັ່ງໂດຍທ້ອງເປົ່າວາງ ແລ້ວບິນກັບມາໂດຍທ້ອງທີ່ອີ່ມເຕັ້ມ"*

ແຕ່ການວາງໃຈຕໍ່ພຣະເຈົ້າຕາມຫລັກສາສະຫນາທີ່ຖືກຕ້ອງນັ້ນ ນອກຈາກຈະຕ້ອງວາງໃຈຕໍ່ພຣະເຈົ້າພຽງຜູ້ດຽວແລ້ວ ຕ້ອງປະຕິບັດຕາມຫລັກການເຫດຜົນຕາມທຳມະຊາດນຳເຊັ່ນກັນ ນີ້ຄືເງື່ອນໄຂ **2 ປະການຂອງການມອບຫມາຍ "ຕະອັກກັ່ນ" :**

1. ມອບຫມາຍວາງໃຈ.

2. ເຮັດຕາມຫຼັກເຫດຜົນຢ່າງສຸດຄວາມສາມາດ.

ດັ່ງນັ້ນ ການວາງໃຈຕໍ່ອັລລໍຫ໌ແຕ່ລະຖີ້ມເຫດແລະຜົນຄວາມຈິງຂອງໂລກ ຈຶ່ງເປັນສິ່ງທີ່ຂັດຄານຕໍ່ຫລັກສາສະຫນາ ຄືດັ່ງຄົນທີ່ຕ້ອງການເຊົ່າຈາກໂຣກພະຍາດ ແຕ່ຂໍດູອາຂໍພອນນາພຣະເຈົ້າຢ່າງດຽວແຕ່ບໍ່ຍອມກິນຢາ ເຊັ່ນດຽວກັນຄົນທີ່ເຮັດວຽກໃດຫນຶ່ງໂດຍບໍ່ວາງໃຈມອບຫມາຍຕໍ່ພຣະເຈົ້າເລີຍ ເຂົາກໍ່ຈະບໍ່ໄດ້ຮັບຄວາມສຳເລັດ

- **ຂໍ້ຄວນຮູ້ :**

1. ການມອບຫມາຍວາງໃຈຕໍ່ອັລລໍຫ໌ບໍ່ໄດ້ຫມາຍຄວາມວ່າໃຫ້ເຮົາປະຕິເສດເຫດຜົນຄວາມເປັນຈິງ ມີສະຫາຍຄົນຫນຶ່ງຖາມສາດສະດາທູດວ່າ **"ໂອ້ທ່ານສາດສະດາທູດ ອູດທີ່ຂ້ອຍມີນັ້ນຈະໃຫ້ຂ້ອຍຜູກໄວ້ໃນຄອກແລ້ວມອບຫມາຍຕໍ່ພຣະເຈົ້າ ຫຼື ໃຫ້ຂ້ອຍປ່ອຍມັນໄປເລີຍແລ້ວຈຶ່ງຄ່ອຍມອບຫມາຍຕໍ່ພຣະເຈົ້າ?"** ທ່ານສາດສະດາທູດກໍ່ຕອບວ່າ ***"ຈົ່ງຜູກເສືອກມັນໄວ້ ແລ້ວຈົ່ງມອບຫມາຍ"***

2. ມຸສລິມຕ້ອງຍຶດຕາມຫລັກເຫດຜົນຕາມຄວາມຈິ່ງນາ ເຖິງອາດແມ່ນເປັນສິ່ງເລັກນ້ອຍກໍ່ຕາມ ເຊັ່ນເຫດການທີ່ອັລລໍຫ໌ໄດ້ຊ່ວຍເຫລືອພຣະແມ່ມາຣຽມ ຫຼື ແມ່ຂອງພຣະເຢຊູ ໃຫ້ມີອິນທະພາລັມເງີຍງອກອອກຈາກຕົ້ນໂດຍທັນທີ ໂດຍແນວນັ້ນອັລລໍຫ໌ກໍ່ຍັງສັ່ງໃຫ້ພຣະແມ່ມາຣຽມຕ້ອງສັ່ນຕົ້ນອິນທະພາລັມຢ່າງສຸດແຮງເພື່ອໃຫ້ຫມາກອິນທະພາລັມລົ່ນລົງມາ ເຖິງແມ້ເວລານັ້ນພຣະແມ່ມາລຽມຈະຢູ່ໃນຊ່ວງເວລາຫລັງເກີດລູກທີ່ອ່ອນແອກໍ່ຕາມ ນັ້ນກໍ່ຍ້ອນຄວາມຊ່ວຍເຫລືອຂອງພຣະເຈົ້າຈະເກີດຕາມຫລັກເຫດຜົນຄວາມເປັນຈິ່ງ.

3. ບໍ່ຕ້ອງຍຶດເຫດຜົນຄວາມຈິ່ງຫຼາຍເກີນໄປຈົນລືມການມອບຫມາຍຕໍ່ພຣະເຈົ້າ.

ສະຫລຸບຄື ມຸສລິມຜູ້ສັດທານັ້ນ ຖ້າຈະເຮັດສິ່ງໃດກໍ່ຕ້ອງປະຕິບັດຕາມຫລັກເຫດຜົນເຖິງຄວາມເປັນຈິ່ງ ເພາະອິສລາມສອນວ່າພຣະເຈົ້າຄືຜູ້ສ້າງຫລັກເຫດຜົນທັ້ງຫມົດທາງວິທະຍາສາດ ແຕ່ຖ້າຫາກພຣະເຈົ້າຕ້ອງການປ່ຽນຫລັກເຫດຜົນຄວາມເປັນຈິ່ງ ກໍ່ສາມາດເປັນໄປໄດ້ຕາມຄວາມຕ້ອງການຂອງພຣະເຈົ້າ ເຊັ່ນ :

ໄຟ ໂດຍປົກກະຕິນັ້ນຍອມກໍ່ໃຫ້ເກີດຄວາມຮ້ອນ ແລະ ຈູດໄຫມ້ ແຕ່ທ່ານສາດສະດາທູດອິບຣໍຮີມ ຖືກຜູ້ນຳທີ່ໂຫດຮ້າຍຈັບລົງກ້ອງໄຟ ອັລລໍຫ໌ກໍ່ສາມາດປ່ຽນກ້ອງໄຟນັ້ນໃຫ້ເປັນແທນ

ເຊັ່ນດຽວທີ່ສາດສະດາທູດອິບຣໍຮີມ ຕ້ອງການເອົາມີດປາດຄໍລູກຊາຍ (ສາດສະດາທູດອິສມາອີນ) ຖວາຍໃຫ້ແກ່ພຣະເຈົ້າ ແຕ່ພຣະເຈົ້ານັ້ນກໍ່ເຮັດໃຫ້ມີດນັ້ນບໍ່ມີຄວາມຄົມ (ມີດບໍ່ເຄົ້າ) ບໍ່ສາມາດຕັດສິ່ງໃດໄດ້.

## 6.5 ການຂອບໃຈ "ຊຸໂກຣ"

ຫມາຍເຖິງ ການພະຍາຍາມຕອບແທນ ຫຼື ອາດຈະແມ່ນການສັນລະເສີນຍ້ອງຍໍຜູ້ທີ່ເຮັດຄວາມດີໃຫ້ ຜູ້ທີ່ສົມຄວນທີ່ໄດ້ຮັບການຂອບໃຈຫຼາຍທີ່ສຸດກໍ່ຄືພຣະເຈົ້າ ເພາະພຣະອົງຄືຜູ້ປະທານທຸກຢ່າງທີ່ມະນຸດຕ້ອງມີ ທຸກຄວາມສຸກໃນໂລກນີ້ ແລະ ໂລກຫນ້າ ມຸສລິມຜູ້ສັດທາຈະຂອບໃຈພຣະເຈົ້າໂດຍຜ່ານປາກການສັນລະເສີນພຣະອົງ ແລະ ດ້ວຍຈິດໃຈຜ່ານຄວາມຮັກ ແລະ ໂດຍກາຍພາຍນອກຜ່ານການເຮັດຄວາມດີ ອັລລໍຫ໌ໄດ້ກ່າວວ່າ **“ຈົ່ງລະລຳລຶກຫາພຣະອົງ ແລ້ວພຣະອົງຈະລະນຶກຫາພວກທ່ານ ຈົ່ງຂອບໃຈພຣະອົງ ແລະ ຢ່າໄດ້ເນລະຄຸນ”**

(ອັລບະກໍຣໍຫ໌ : 152)

ອັລລໍຫ໌ໄດ້ກ່າວອີກວ່າ **"ໂອ້ຜູ້ສັດທາທັ້ງຫຼາຍ ຈົ່ງບໍລິໂພກສິ່ງດີໆ ທີ່ພຣະອົງປະທານໃຫ້ພວກທ່ານ ແລະ ຈົ່ງຂອບໃຈ ຫາກພວກທ່ານຍັງເຄົາລົບພຣະອົງຜູ້ດຽວ"**

(ອັລບະກໍຣໍຫ໌ :172)

ທ່ານສາດສະດາທູດຍັງໄດ້ກ່າວວ່າ *"ຜູ້ສັດທາຄືມາແປກແທ້ເຫລືອເກີນ! ທຸກສິ່ງທີ່ປະສົບເຈີກັບເຂົາແມ່ນສິ່ງທີ່ດີໄປຫມົດ ບໍ່ມີໃຜເປັນແບບນີ້ນອກຜູ້ສັດທາ ຖ້າຫາກພົບເຈີສິ່ງດີໆ ກໍ່ຂອບໃຈ, ກໍ່ເປັນຄວາມດີຕໍ່ເຂົາເອງ ແລະຖ້າຫາກພົບເຈີເລື່ອງຮ້າຍໆ ກໍ່ອົດທົນ ກໍ່ຈະເປັນຄວາມດີກັບເຂົາອີກເຊັ່ນເດີມ"*

- ***ຄວາມປະເສີດຂອງການຂອບໃຈ :***

**1. ໄດ້ເປັນຜູ້ສັດທາຢ່າງສົມບູນ** ນັ້ນຍ້ອນວ່າຜູ້ສັດທາຈະແຕກຕ່າງກັບຜູ້ບໍ່ທີ່ສັດທາ ໃນການຂອບໃຈຕໍ່ພຣະອົງອັລລໍຫ໌ ຫາກແມ່ນເລື່ອງດີກໍ່ຮູ້ວ່າຈະຕ້ອງຂອບໃຈໃຜ ຫາກເຈີເລື່ອງຮ້າຍກໍ່ຮູ້ວ່າຈະອົດທົນເພື່ອໃຜ.

**2. ເຮັດໃຫ້ໄດ້ຮັບສິ່ງດີໆຫຼາຍຂຶ້ນໃນຊີວິດ** ເປັນຍ້ອນການຂອບໃຈພຣະອົງອັລລໍຫ໌ ພຣະອົງຈຶ່ງໄດ້ເພີ່ມພູນສິ່ງດີໆໃຫ້ຫລາຍຂຶ້ນອີກ.

**3. ໄດ້ຮັບການຕອບແທນຢ່າງຫຼວງຫຼາຍໃນໂລກໜ້າ** ພຣະອົງຈະໄດ້ຕອບແທນບ່າວຜູ້ຂອບໃຈ ຜູ້ຮູ້ບຸນຄຸນ ໃຫ້ຫຼາຍໃນໂລກໜ້າຫຼາຍກວ່າສິ່ງທີ່ເຂົາໄດ້ຮັບໃນໂລກນີ້ ອັລລໍຫ໌ກ່າວວ່າ **"ພຣະອົງຈະຕອບແທນຜູ້ຮູ້ຄຸນ"** (ອາລຸອິມຣອນ : 145)

**4. ການຂອບໃຈເຮັດໃຫ້ພຣະເຈົ້າພໍໃຈບ່າວຜູ້ນັ້ນຫຼາຍຂຶ້ນ.**

**5. ການຂອບໃຈເຮັດໃຫ້ຫລຸດພົ້ນຈາກການລົງໂທດຂອງພຣະອົງອັລລໍຫ໌** ເພາະພຣະເຈົ້ານັ້ນບໍ່ຕ້ອງການລົງໂທດບ່າວຜູ້ທີ່ຮູ້ບຸນຄຸນ ເພາະຜູ້ຮູ້ຄຸນກໍ່ຄືຜູ້ມີຄວາມສັດທາຕໍ່ພຣະອົງນັ້ນເອງ.

- ***ການຂອບໃຈປະເພດຕ່າງໆ :***

1. ການຂອບໃຈດ້ວຍຫົວໃຈ ແມ່ນໝາຍເຖິງ ການມີສາມັນສານຶກເຖິງຄຸນຄ່າສິ່ງດີໆ ຮອບຕົວທີ່ໄດ້ຮັບຈາກພຣະເຈົ້າ ການມີຄວາມເຊື່ອວ່າພຣະເຈົ້າຜູ້ດຽວເທົ່ານັ້ນທີ່ມອບສິ່ງດີໆ ຕ່າງໆ ເຫຼົ່ານີ້ໃຫ້ແກ່ເຮົາ ອັລລໍຫ໌ກ່າວວ່າ **"ບໍ່ວ່າຄວາມດີໃດທີ່ໄດ້ຮັບ ກໍ່ໄດ້ມາຈາກອັລລໍຫ໌ທັ້ງຫມົດ"**

(ອັນນະຫ໌ລຸ : 53)

2. ການຂອບໃຈດ້ວຍປາກ ແມ່ນໝາຍເຖິງ ການສັນລະເສີນອັລລໍຫ໌ຢູ່ສະເໝີ ທ່ານສາດສະດາທູດກ່າວວ່າ *"ອັລລໍຫ໌ນັ້ນຈະພໍໃຈບ່າວຜູ້ທີ່ກິນອາຫານແລ້ວກ່າວສັນລະເສີນພຣະອົງ, ດື່ມແລ້ວກໍ່ສັນລະເສີນພຣະອົງ"*

3. ການຂອບໃຈດ້ວຍອະໄວຍະວະພາຍນອກ ນັ້ນກໍ່ຄື ການໃຊ້ຂອງຂວັນຕ່າງໆ ທີ່ພຣະເຈົ້າມອບໃຫ້ ບໍ່ວ່າຈະເປັນອະໄວຍະວະຮ່າງກາຍ ໄປກັບການເຮັດຄວາມດີເພື່ອພຣະອົງອັລລໍຫ໌ ອັລລໍຫ໌ໄດ້ກ່າວວ່າ **"ຄອບຄົວຂອງດາວູດ (ດາວິດ) ເອີ້ຍ ຈົ່ງເຮັດຄວາມດີຢ່າງຮູ້ບຸນຄຸນ"**

(ສູເຣາະຫ໌ສະບະ : 13)

ບໍ່ເປັນສິ່ງທີ່ສົງໄສເລີຍວ່າຂອງຂວັນ ແລະ ຄວາມດີ ທີ່ພຣະເຈົ້າມອບໃຫ້ກັບມະນຸດນັ້ນມີຫຼວງຫຼາຍເກີນການຈິນຕະນາການ ຄວາມພະຍາຍາມໃນການນັບສິ່ງດີໆ ທັ້ງຫມົດທີ່ພຣະເຈົ້າມອບໃຫ້ຢູ່ເຫນືອຄວາມສາມາດຂອງມະນຸດ ດັ່ງທີ່ອັລລໍຫ໌ໄດ້ກ່າວວ່າ **"ເຖິງພວກທ່ານຈະນັ່ງນັບຄວາມດີທີ່ພຣະເຈົ້າມອບໃຫ້ ກໍ່ບໍ່ສາມາດຄໍານວນໄດ້ ອັລລໍຫ໌ນັ້ນເປັນຜູ້ຊົງອະໄພແທ້ຈິ່ງ ຜູ້ຊົງເມດຕາແທ້ຈິ່ງ"**

(ອັນນະຫ໌ລຸ : 18)

ການຂອບໃຈອັລລໍຫ໌ລະດັບສູງແຮງຂຶ້ນໄປອີກ ຄື ການຮູ້ສຶກວ່າຕົນເອງນັ້ນບໍ່ສາມາດຂອບໃຈອັລລໍຫ໌ໄດ້ດີເທົ່າທີ່ສົມຄວນ ນັ້ນຈະແຮງເຮັດໃຫ້ຮູ້ສຶກຢາກຂອບໃຈພຣະເຈົ້າຫລາຍເພີ່ມຂຶ້ນອີກ

- **ສະຖານະການຕ່າງໆ ທີ່ຄວນຂອບໃຈພຣະເຈົ້າ :**

1. ຖ້າພົບເຫັນສິ່ງດີໆ ບໍ່ວ່າຈະເປັນສັບສິ້ນ, ລູກຫລານ, ຫນ້າທີ່ການງານ.

2. ຫາກຜ່ານພົ້ນເລື່ອງຮ້າຍບໍ່ດີ ເຊັ່ນ ພຣະອົງໄດ້ຊ່ວຍເຫລືອເຮົາຈາກເຫດການທີ່ບໍ່ຄາດຄິດ ຫຼື ໂຣກຮ້າຍແຮງ.

3. ການຂອບໃຈອັລລໍຫ໌ທີ່ຕ້ອງພົບເຈີເລື່ອງຮ້າຍໆ ເຊັ່ນ ການສູນເສຍຄົນຮັກ ຫຼື ສັບສິ້ນ ນີ້ແມ່ນການຂອບໃຈລະດັບສູງ ເພາະແທນທີ່ຜູ້ທີ່ພົບເຈີເລື່ອງຮ້າຍນີ້ຈະຮູ້ສຶກເສຍໃຈ ແຕ່ກັບຂອບໃຈທີ່ພຣະເຈົ້າຈະມອບຄວາມດີຜ່ານຄວາມອົດທົນຕໍ່ເລື່ອງເຫດການຮ້າຍແຮງນີ້ ການຂອບໃຈລະດັບນີ້ບໍ່ມີສາສະຫນາໃດນອກຈາກອິສລາມສອນເອົາໄວ້ ເປັນສິລະທໍາລະດັບສູງຫລາຍທີ່ຜູ້ສັດທາສ່ວນນ້ອຍຈະໄຕ່ລະດັບຮອດ ຜູ້ອົດທົນ ແລະ ຍັງຂອບໃຈຕໍ່ເລື່ອງຮ້າຍແຮງທີ່ພົບເຈີ ເຂົາກໍ່ຕ້ອງໄດ້ຮັບການຕອບແທນໃນໂລກຫນ້າ ແລະອັລລໍຫ໌ນັ້ນຈະປ່ຽນສິ່ງບໍ່ດີໃນໂລກນີ້ໃຫ້ເປັນສິ່ງທີ່ດີຢ່າງທະວີຄູນຢ່າງແນ່ນອນໃນໂລກຫນ້າ.

ສິລະທໍາ ແລະ ສາມັນສໍານຶກໃນໃຈ ຍັງມີອີກຫຼວງຫຼາຍ ມຸສລິມຜູ້ສັດທາສົມຄວນທີ່ຕ້ອງຮຽນຮູ້ເພື່ອໃຫ້ຕົນເອງນັ້ນໃກ້ຊິດອັລລໍຫ໌ໄດ້ຫຼາຍທີ່ສຸດ.

# 7. ອິບາດະຫ໌

## 7.1 ການເຮັດຄວາມດີ ແລະ ພິທີທາງສາສະໜາ

ຄຳວ່າ **“ອິບາດະ”** ໝາຍເຖິງ ການເຮັດຄວາມດີໃນຮູບແບບຄຳເວົ້າ ແລະ ການກະທຳຕ່າງໆ ທີ່ພຣະເຈົ້າພໍໃຈ ແລະ ສົ່ງເສີມໃຫ້ມະນຸດປະຕິບັດ, ບໍ່ວ່າຈະເປັນການປະຕິບັດພາຍນອກກາຍ ເຊັ່ນ ການລະມາດ, ການຈ່າຍພາສີ, ການໄປປະກອບພິທີຮັຈ ຫຼື ຈະເປັນການສຳນຶກສິນລະທຳໃນໃຈ ເຊັ່ນ ຄວາມຮັກທີ່ມີຕໍ່ພຣະເຈົ້າ ແລະ ທ່ານສາດສະດາທູດ, ການຍຳເກງຕໍ່ພຣະເຈົ້າ, ການມອບໝາຍ ວາງໃຈຕໍ່ພຣະເຈົ້າ ເປັນຕົ້ນ

ອິບາດະຫ໌ໃນຄວາມໝາຍອີກດ້ານໜຶ່ງ ໝາຍເຖິງ **"ການສະແດງອອກເຖິງຄວາມເປັນບ່າວຜູ້ຮັບໃຊ້ພຣະເຈົ້າ"** ເຊິ່ງຄອບຄຸມທຸກການກະທາຂອງມະນຸດ ບໍ່ວ່າຈະເປັນການນັ່ງ ຢືນ ຍ່າງ ນອນ ກິນ ຫຼື ການດື່ມ ຖ້າຫາກເຈດຕະນາເຮັດໄປເພື່ອຄວາມພໍໃຈຕໍ່ ພຣະອົງ ກໍ່ລ້ວນແມ່ນການເຮັດອິບາດະຫ໌ ຫຼື ພິທີທາງສາສະໜາທັ້ງໝົດ ດັ່ງນັ້ນ, ການເຮັດອິບາດະຫ໌ຈຶ່ງບໍ່ໄດ້ກຳຈັດຢູ່ແຕ່ພຽງພິທີກຳທີ່ເປັນສັນຍາລັກຂອງສາສະໜາເຊັ່ນການ ລະມາດ ຫຼື ຖືສິ້ນອົດເທົ່ານັ້ນ ແຕ່ຍັງລວມການກະທຳທີ່ດີທັ້ງໝົດ ພ້ອມເຈດຕະນາທີ່ດີ ແລະ ສ່ອງຄ້ອງກັບຫລັກການທາງສາສະໜາກໍ່ຈະໄດ້ຮັບຜົນລະບຸນທັ້ງໝົດ

ໂດຍເຫດນີ້ຊີວິດທັ້ງໝົດຂອງຜູ້ສັດຈຶ່ງເປັນໄປເພື່ອອັລລໍຫ໌ ມຸສລິມຈະກິນເພື່ອໃຫ້ມີເຫື່ອແຮງເພື່ອຈະໄດ້ເຮັດຄວາມດີເພື່ອພຣະອົງອັລລໍຫ໌ ການກິນແບບນີ້ກໍ່ຈະເປັນການເຮັດອິບາດະຫ໌ຄວາມດີ ຈະແຕ່ງງານກໍ່ເປັນເຫດຜົນຂອງທາງສາສະໜາ ໃຫ້ຕົນເອງນັ້ນຫ່າງໄກຈາກສິ່ງຕ້ອງຫ້າມທີ່ມັກເກີດຂື້ນກັບເພດກົງຂ້າມ ການແຕ່ງງານນີ້ກໍ່ຈະເປັນອິບາດະຫ໌ຄວາມດີ ແມ້ແຕ່ການຄ້າຂາຍໂດຍເຈດຕະນາເພື່ອຊອກຫາລ້ຽງຄອບຄົວທີ່ຖືກຕາມຄຳສັ່ງຂອງພຣະອົງອັລລໍຫ໌ ແລະ ທ່ານສາດສະດາທູດ ການຄ້າຂາຍນີ້ກໍ່ຈະເປັນການອິບາດະຫ໌ຄວາມດີຄືກັນ ບໍ່ວ່າຈະເປັນການສະແຫວງຫາຄວາມຮູ້, ການທົດລອງຄົ້ນຄວ້າ, ການເບິ່ງແຍງດູແລຄອບຄົວລູກເມຍເຮືອນຊານບ້ານຊ່ອງ ແລະທຸກໆ ສິ່ງທີ່ດີ ຫາກເຈດຕະນາດີເພື່ອເປັນໄປທາງສາສະໜາ ແລະເພື່ອພຣະອົງອັລລໍຫ໌ແລ້ວ ກໍ່ຈະໄດ້ຮັບຜົນລະບຸນທັ້ງໝົດ

ອິບາດະຫ໌ ຄື ການສະແດງອອກເຖິງຄວາມເປັນບ່າວເຊິ່ງເປັນຈຸດປະສົງຂອງການສ້າງມະນຸດ ອັລລໍຫ໌ໄດ້ກ່າວວ່າ **"ພຣະອົງບໍ່ໄດ້ສ້າງມະນຸດ ແລະ ຜີຍິນ ມາເພື່ອສິ່ງອື່ນໃດ ນອກຈາກເປັນບ່າວຮັບໃຊ້ພຣະອົງ ພຣະອົງບໍ່ໄດ້ຕ້ອງການປັດໄຈໃດໆ ຈາກພວກເຈົ້າ ບໍ່ໄດ້ຕ້ອງການໃຫ້ພວກເຈົ້ານຳອາຫານມາໃຫ້ ແຕ່ແທ້ຈິ່ງອັລລໍຫ໌ນັ້ນຄືຜູ້ປະທານປັດໄຈ ຄືຜູ້ຊົງພະລັງອຳນາດທີ່ສຸດ"** (ອັຊ-ຊາຣິຍາຕ : 56-58)

ໃນຄຳພີອັລກຸຣອານນີ້ໄດ້ບອກເຮົາວ່າ ເຫດຜົນຂອງການສ້າງສັບພະສິ່ງທັ້ງມວນໃນຈັກກະວານນີ້ກໍ່ເພື່ອໃຫ້ມາປະຕິບັດຫນ້າທີ່ເປັນບ່າວເພື່ອພຣະເຈົ້າ ແຕ່ໃນຄວາມເປັນຈິງ, ເພື່ອໃຫ້ພຣະອົງຢູ່ໄດ້ພຣະອົງອັລລໍຫ໌ນັ້ນບໍ່ໄດ້ຕ້ອງການໃຫ້ມີຜູ້ໃດມາຮັບໃຊ້ ຫຼື ບູຊາພຣະອົງເລີຍ ສັບພະສິ່ງທັ້ງຫມົດຕ່າງຫາກທີ່ຈຳເປັນຕ້ອງເປັນບ່າວຮັບໃຊ້ພຣະອົງ ເພາະທຸກຢ່າງຕ້ອງພຶ່ງພາພຣະອົງອັລລໍຫ໌ນັ້ນເອງ

ຫາກມະນຸດລົງລືມຈຸດປະສົງການມີຊີວິດຢູ່ຂອງມະນຸດໃນຂໍ້ນີ້ ແລະ ຕົກຢູ່ພາຍໃຕ້ອາລົມໄຝ່ຕ່ຳ ຄຸນຄ່າຂອງຄົນນັ້ນກໍ່ບໍ່ຕ່າງຈາກສິ່ງຖືກສ້າງຂອງພຣະເຈົ້າອື່ນໆເລີຍ ສັດເດຍລະສານເອງກໍ່ກິນດື່ມຢ່າງຫລີ້ນໂດຍບໍ່ມີຈຸດມຸ້ງຫມາຍ ເຮັດຫຍັງໄປກໍ່ບໍ່ຕ້ອງຖືກສອບສວນພິພາກສາ ຕ່າງຈາກມະນຸດ, ອັລລໍຫ໌ໄດ້ກ່າວວ່າ **"ຜູ້ປະຕິເສດພຣະເຈົ້ານັ້ນຈະເພີດເພີນກິນດື່ມ ໃຊ້ຊີວິດ ຄືກັບສັດເດຍລະສານກິນ ແລ້ວໄຟນາຣົກນັ້ນຈະເປັນບ້ານຂອງພວກເຂົາ"**

(ສູເຣາະຫ໌ ມຸຮຳມັດ : 13)

ເປົ້າຫມາຍ ແລະ ພຶດຕິກຳຂອງຄົນທີ່ລືງລືມເຫຼົ່ານີ້ກໍ່ບໍ່ຕ່າງຄືກັບສັດເດຍລະສານ ຕ່າງກັນພຽງແຕ່ມະນຸດຈຳພວກນີ້ມີສະຕິປັນຍາແຍກຄວາມດີ ແລະ ຄວາມຊົ່ວ ແຕ່ບໍ່ໄດ້ໃຊ້ມັນເອງ

ອັລລໍຫ໌ໄດ້ກຳນົດພິທີກຳທາງສາສະຫນາ ແລະ ບົດບັນຍັດໄວ້ຫຼາຍປະການທີ່ມະນຸດທຸກຄົນສາມາດເຮັດໄດ້ ອັລລໍຫ໌ກ່າວວ່າ **"ພຣະອົງອັລລໍຫ໌ຈະບໍ່ບັງຄັບຜູ້ໃດເກີນຄວາມສາມາດ."**

(ອັລບະກໍຣໍຫ໌ : 286)

ບົດບັນຍັດທີ່ອິສລາມບັງຂັບນັ້ນມີນ້ອຍຫຼາຍ ເຊັ່ນ ການລະມາດມື້ຫນຶ່ງຫ້າເວລາ ຮ່ວມແລ້ວບໍ່ຮອດເຄິ່ງຊົ່ວໂມງດ້ວຍສ່ຳ, ພາສີທີ່ຕ້ອງຈ່າຍຊະກາດກໍພຽງປີລະ 2.5% ການໄປເຮັດຮັຈ ຢູ່ປະເທດຊາອຸດິອາລະເບຍກໍ່ພຽງແຕ່ເທື່ອຫນຶ່ງໃນຊີວິດຫາກມີຄວາມສາມາດນຳອີກ ຫາກມຸສລິມຜູ້ສັດທາປະຕິດບັດພິທີກຳທາງສາສະຫນາ ແລະ ສະແດງອອກເຖິງຄວາມເປັນບ່າວຢ່າງນອບນ້ອມຖອມຕົນຕາມທີ່ອັລລໍຫ໌ໄດ້ກຳນົດສັ່ງເອົາໄວ້ ກໍ່ຈະພົບເຈີແຕ່ຄວາມສຸກທັ້ງໂລກນີ້ ແລະ ໂລກຫນ້າ

### 7.1.1 ອິບາດະຫ໌ຕ້ອງປະກອບໄປດ້ວຍ 2 ສ່ວນນີ້ :

1. ຄວາມຢ້ານ ແລະ ນອບນ້ອມ.

2. ຄວາມຮັກຢ່າງລຶກເຊິ່ງຕໍ່ພຣະເຈົ້າ ແລະ ຫວັງສິ່ງດີໆ ນຳພຣະອົງ.

ຄວາມຮັກຢ່າງດຽວແຕ່ປາດສະຈາກຄວາມນອບນ້ອມນັ້ນ ກໍ່ຄືການລົງຮັກລົດຊາດຂອງອາຫານ ແລະ ສັບສິ້ນ ເຊັ່ນດຽວກັບຄວາມຢ້ານກົວທີ່ຂາດຄວາມຮັກ ກໍ່ຄືກັບການຢ້ານສັດທີ່ດຸຮ້າຍ ຫຼື ເຈົ້າຫນ້າທີ່ລັດທີ່ໂຫດຮ້າຍ ບໍ່ສາມາດນັບເປັນພຶດຕິກຳຂອງບ່າວຜູ້ທີ່ຮັບໃຊ້ທີ່ດີໄດ້ ດັ່ງນັ້ນ, ການສະແດງ

ອອກທີ່ເປັນບ່າວອິບາດະຫ໌ທີ່ດີນັ້ນຈະຕ້ອງປະກອບໄປດ້ວຍຄວາມຢ້ານກົວ ແລະ ນອບນ້ອມ ຮ່ວມທັ້ງຄວາມຮັກໃຫ້ກຽດ ແລະ ຫວັງຕໍ່ພຣະເຈົ້າແຕ່ພຽງຜູ້ດຽວ

### 7.1.2 ເງື່ອນໄຂຂອງການເຮັດອິບາດະຫ໌ :

1. ຕ້ອງບໍລິສຸດໃຈ **"ອິກລາສ"** ເຮັດເພື່ອອັລລໍຫ໌ອົງດຽວເທົ່ານັ້ນບໍ່ເຮັດເພື່ອຜູ້ອື່ນໃດອີກ

2. ຕ້ອງປະຕິບັດຕາມຄຳສອນຂອງສາດສະດາທູດທີ່ໄດ້ເຮັດເປັນແບບຢ່າງເອົາໄວ້ຢ່າງຄົບຖ້ວນ ອັລລໍຫ໌ກ່າວວ່າ **"ຜູ້ທີ່ຈະເຂົ້າສະຫວັນນັ້ນຄືຜູ້ທີ່ມອບທັ້ງກາຍໃຫ້ແກ່ພຣະເຈົ້າ ແລ້ວຍັງເຮັດດີ ເຂົາຈະໄດ້ຮັບການຕອບແທນຈາກພຣະເຈົ້າຈະບໍ່ມີຄວາມຢ້ານກົວໃດໆ ອີກ ແລະພວກເຂົາຈະບໍ່ຕ້ອງເສຍໃຈອີກ."**

(ອັລບະກໍຣໍຫ໌ : 121)

ຄຳວ່າ **"ຖະວາຍທັ້ງກາຍແກ່ພຣະເຈົ້າ"** ຫມາຍເຖິງ ເຊື່ອຫມັ້ນຕໍ່ຄວາມເປັນຫນຶ່ງດຽວຂອງພຣະເຈົ້າ ແລະເຮັດອິບາດະຫ໌ຕໍ່ພຣະອົງຢ່າງບໍລິສຸດໃຈໂດຍພຽງຜູ້ດຽວ ສ່ວນຄວາມຫມາຍຂອງການ **"ເຮັດດີ"** ຄື ປະຕິບັດຕາມຫລັກສາສະຫນາທີ່ອັລລໍຫ໌ໄດ້ກຳນົດເອົາໄວ້ ແລ້ວທ່ານສາດສະດາທູດກໍ່ເປັນຜູ້ນຳເອົາມາສັ່ງສອນ

## 7.2 ການເຮັດຄວາມສະອາດ ແລະ ການອາບນ້ຳລະມາດ

ສາສະຫນາອິສລາມນັ້ນສົ່ງເສີມເລື່ອງຄວາມສະອາດ ເຮົາຈະພົບເຈີເລື່ອງຄຳສອນເຮັດຄວາມສະອາດຢ່າງຫຼວງຫຼາຍໃນຄຳພີອັລກຸຣອານ ແລະ ຫະດີສຄຳເວົ້າຂອງທ່ານສາດສະດາທູດ ອັລລໍຫ໌ກ່າວວ່າ **"ອັລລໍຫ໌ຈະຮັກຜູ້ຂໍອະໄພ ແລະ ຈະຮັກຜູ້ມັກເຮັດຄວາມສະອາດ"**

**(**ອັລບະກໍຣໍຫ໌ : 222)

ມຸສລິມຜູ້ສັດທາຈຶ່ງເປັນຜູ້ທີ່ຕ້ອງຮັກສາຄວາມສະອາດຢູ່ຕະຫລອດເວລາສະເຫມີ ໃນມື້ຫນຶ່ງຕ້ອງອາບນ້ຳລະມາດເພື່ອລະມາດ 5 ເວລາ ແລະຕ້ອງອາບນ້ຳບ້າງສະຖານະການທີ່ສາສະຫນາບັງຄັບນຳອີກນຳ ມຸສລິມຕ້ອງຮັກສາຄວາມສະອາດທັ້ງຮ່າງກາຍ, ເຄື່ອງແຕ່ງກາຍນຸ່ງຮົມ, ສະຖານທີ່ ຈາກສິ່ງສົກກະປົກທັ້ງຫຼາຍ

**ຄວາມສະອາດນີ້ຄືຂໍ້ແຕກຕ່າງປະການຫນຶ່ງລະຫວ່າງ 3 ສາສະຫນາ ອິສລາມ, ຄຣິດສະຕຽນ, ແລະຍິວ**

ອິສລາມນັ້ນສອນໃຫ້ເດີນທາງຕາມເສັ້ນທາງສາຍກາງ ໃນສາສະຫນາຄຣິດສະຕຽນນັ້ນບົກພ່ອງໃນເລື່ອງຄວາມສະອາດ ສ່ວນສາະຫນາຍິວນັ້ນເຄັ່ງຄັດເຂັ້ມງວດເກີນໄປໃນເລື່ອງຄວາມສະອາດ

ອິສລາມສອນວ່າທຸກເທື່ອທີ່ຜົວເມຍໄດ້ຫລັບນອນນຳກັນມີເພດສຳພັນກັນ ຫລັງຈາກນັ້ນແມ່ນຕ້ອງອາບນ້ຳເພື່ອລ້າງຮ່າງກາຍໃຫ້ສະອາດ, ໃນຂະນະນັ້ນສາສະໜາຄຣິດສະຕຽນບໍ່ມີການສອນໃຫ້ອາບນ້ຳ, ສ່ວນສາສະໜາຍິວນັ້ນກໍ່ເຂັ້ມງວດເກີນໄປ ໂດຍສາສະໜາຍິວໄດ້ຖືວາຜົວເມຍທີ່ຫລັບນອນມີເພດສຳພັນກັນຈະກາຍເປັນຄົນທີ່ສົກກະປົກທັນທີ່ ເມື່ອເອົາມືມາແຕະຕ້ອງສິ່ງໃດສິ່ງນັ້ນກໍ່ຈະສົກກະປົກໄປນຳ ບໍ່ວ່າຈະອາບນ້ຳແລ້ວກໍ່ຕາມ

ເຊັ່ນດຽວກັນ, ສາສະໜາອິສລາມສອນວ່າຜູ້ຫຍິງທີ່ມີຮອບເດືອນ ຫຼື ເລືອດຫລັງເກີດລູກ ກໍ່ມີບົດບັນຍັດໂດຍສະເພາະບໍ່ໃຫ້ຜົວເມຍຮ່ວມຫຼັບນອນດ້ວຍກັນໃນລະຫວ່າງທີ່ເມຍນັ້ນຕົກເລືອດ ທີ່ວ່າມານີ້, ໃນຂະນະທີ່ສາສະໜາຄຣິດສະຕຽນນັ້ນບໍ່ມີບົດບັນຍັດສອນວ່າຜູ້ຫຍິງໃນຂະນະມີເລືອດປະຈຳເດືອນ ຫຼື ເລືອດຫລັງເກີດລູກຫ້າມເຮັດສິ່ງໃດແດ່, ສ່ວນສາສະໜາຍິວກໍ່ເຂັ້ມງວດກັບຜູ້ຫຍິງຫລາຍເກີນໄປ ໂດຍຖືວ່າເລືອດປະຈຳເດືອນນັ້ນແມ່ນການລົງໂທດຈາກພຣະເຈົ້າ ຜູ້ຫຍິງຄົນໃດທີ່ມີເລືອດປະຈຳເດືອນ ຈະຖືວ່າຄົນສົກກະປົກທັນທີ່ ໂດຍຫ້າມຜົວບໍ່ໃຫ້ຫລັບນອນຂ້າງໆ ເປັນເດັດຂາດພ້ອມທັ້ງຫ້າມອາໄສຢູ່ໃນເຮືອນດຽວກັນໃນຂະນະທີ່ລູກສາວ ຫຼື ເມຍມີເລືອດປະຈຳເດືອນ ຜົວຕ້ອງເອົາຜ້າປູ້ທີ່ນອນຜ້າຫົ່ມເສື້ອຜ້າຂອງຕົນເອງທີ່ເຄີຍໃຊ້ໃນເຮືອນທີ່ມີເມຍມີເລືອດປະຈຳເດືອນອອກໄປຊັກລ້າງໃຫ້ຫມົດເປັນການລົງໂທດ

### 7.2.1 ການເຮັດຄວາມສະອາດໃນຮູບແບບຕ່າງໆ

#### 1. ການເຮັດຄວາມສະອາດ "ສິ່ງສົກກະປົກທາງຮູບປະທຳ"

ຫມາຍເຖິງ ສິ່ງສິ່ງເປິເປື້ອນທີ່ສາມາດເບິ່ງເຫັນຈັບຕ້ອງໄດ້ ເຊັ່ນ ຂີ້ ຍ່ຽວ ການເຮັດຄວາມສະອາດສິ່ງເປິເປື້ອນປະເພດນີ້ ອັນດັບທຳອິດ ຕ້ອງກຳຈັດຄາບໃຫ້ຫມົດໄປກ່ອນ ແລ້ວລ້າງນ້າເພີ່ມບໍ່ໃຫ້ເຫລືອສີ ຫຼື ກິ່ນ

#### 2. ການເຮັດຄວາມສະອາດ "ສິ່ງສົກກະປົກນາມມະທຳ"

ເຊິ່ງແບ່ງອອກເປັນ 2 ປະເພດ ຄື :

2.1.1 ເຮັດຄວາມສະອາດໂດຍການອາບນ້າ ເອີ້ນວ່າ **"ຮະດັສໃຫຍ່"** ເຊັ່ນ ການຮ່ວມຫລັບນອນມີເພດສຳພັນກັນຂອງຜົວເມຍ, ຫລັງຈາກຜູ້ຫຍິງມີເລືອດປະຈະເດືອນ ຫຼື ມີເລືອດຫລັງເກີດລູກ

2.1.2 ການເຮັດຄວາມສະອາດໂດຍການອາບນ້າລະມາດ ເອີ້ນວ່າ **"ຮະດັສນ້ອຍ"**ເຊັ່ນ ເມື່ອມຸສລິມທີ່ຕື່ນຈາກການນອນ ຫຼື ມີການຂັບຖ່າຍ ແລ້ວຕ້ອງການໄປລະມາດ ກໍ່ຕ້ອງໄປອາບນ້າລະມາດກ່ອນ

### 7.2.2 ວິທີການອາບນ້ຳລະມາດ (ຍົກຣະດັສນ້ອຍ)

1. ລ້າງມືທັ້ງສອງເບື້ອງຄັ້ງລະ 3 ຮອບ ໂດຍເລີ່ມທາງມືຂວາກ່ອນ.

2. ບ້ວນປາກ 3 ເທື່ອ.

3. ຂະນະທີ່ບ້ວນປາກໃຫ້ເອົານ້ຳສູບເຂົ້າຮູດັງ ແລ້ວຊັ່ງອອກມາພ້ອມກັບການບ້ວນປາກ 3 ເທື່ອ.

4. ຫນ້າລ້າງໃຫ້ທົ່ວໃບຫນ້າ 3 ເທື່ອ.

5. ລ້າງມືຮອດຂໍ້ສອກ 3 ເທື່ອ.

6. ນຳເອົາມືທີ່ປຽກນ້ຳມາລູບຜົມ 3 ເທື່ອ. (ຫຼືເທື່ອດຽວກໍ່ໄດ້)

7. ເຊັດຫູ 3 ເທື່ອ. ເທື່ອ. (ຫຼືເທື່ອດຽວກໍ່ໄດ້)

8. ລ້າງຕີນ 3 ເທື່ອ.

### 7.2.3 ວິທີອາບນ້ຳ (ຍົກຣະດັສໃຫຍ່)

1. ຕັ້ງເຈດຕະນາໂດຍການຄິດໃນໃຈວ່າ **"ກາລັງອາບນ້ຳຕາມສາສະຫນາສັ່ງບອກໄວ້".**

2. ເລີ່ມຈາກລ້າງມືຂ້າງລະ 3 ເທື່ອ.

3. ໃຊ້ມືຊ້າຍລ້າງອະໄວຍະວະເພດ.

4. ອາບນ້ຳລະມາດ ໂດຍເຫລືອຂັ້ນຕອນສຸດທ້າຍໄວ້ລ້າງຕີນໂດຍໄວ້ເຮັດຕາມຫລັງ.

5. ໃຊ້ນິ້ວມືສ່າງຜົມໃຫ້ເຂົ້າຮອດຫນັງຫົວ ແລະ ທຸກເສັ້ນຜົມໃຫ້ຫມົດ.

6. ລ້າງຕົວໃຫ້ທົ່ວທຸກຮູຂຸມຂົນ ໂດຍເລີ່ມຈາກທາງເບື້ອງຂວາຂອງຮ່າງກາຍ ຫລັງຈາກນັ້ນກໍ່ລ້າງຕີນ ຖືວ່າສຳເລັດໃນການອາບນ້ຳ.

ຂັ້ນຕອນທີ່ໄດ້ກ່າວມານັ້ນເປັນການອາບນ້ຳທີ່ສົມບູນແບບທີ່ສຸດທີ່ທ່ານສາດສະດາທູດມູຮັມຫມັດໄດ້ສອນໄວ້ ແຕ່ການອາບນ້ຳໂດຍການລ້າງຕົວໃຫ້ທົ່ວຢ່າງດຽວພ້ອມເຈດຕະນາ ກໍ່ສາມາດຖືວ່າໃຊ້ໄດ້ແລ້ວ.

## 8. ການລະມາດ

ການລະມາດແມ່ນຮີດຄອງ ຫຼື ພິທີກຳທາງສາສະໜາທີ່ຫຍິ່ງໃຫຍ່ທີ່ສຸດເປັນຫລັກການອິສລາມທີ່ສຳຄັນທີ່ສຸດເປັນລຳດັບທີ່ 2 ຮອງລົງມາຈາກການກ່າວຄາປະຕິຍານຕົນ ອັລລໍຫ໌ໄດ້ສັ່ງໃຫ້ມຸສລິມຜູ້ເຊື່ອສັດທາ ດຳລົງການລະມາດທຸກມື້ມື້ລະ 5 ເວລາໃນທຸກສະຖານະການ, ບໍ່ວ່າຈະເປັນໃນລະຫວ່າງການເດີນທາງ, ຢູ່ໃນເສິກສົງຄາມ, ຍາມເວລາເຈັບປ່ວຍໄຂ້ ຫຼື ແນວໃດກໍ່ຕາມ ການລະມາດຈຳເປັນຕ້ອງເຮັດຢູ່ສະເຫມີໃນເວລາທີ່ກຳນົດໃນທຸກມື້ ຈະມີກໍ່ບ້າງສະຖານະການເທົ່ານັ້ນທີ່ບໍ່ຈາເປັນລະມາດ ເຊັ່ນ ເມື່ອຂາດສະຕິປັນຍາເປັນຄົນບ້າ ຫຼື ໃນກໍລະນີຜູ້ຫຍິງມີປະຈຳເດືອນ ຫຼື ເລືອດຫລັງເກີດລູກ

ການລະມາດຖືວ່າເປັນຊ່ວງເວລາທີ່ຜູ້ສັດທານັ້ນໄດ້ໃຊ້ໃນການເຂົ້າໃກ້ຊິດພຣະເຈົ້າໄດ້ຫຼາຍທີ່ສຸດ ຜູ້ລະມາດຈະຄົ້ນພົບຄວາມສຸກສະຫງົບໃນຈິດໃຈ ແລະ ຄວາມໃກ້ຊິດກັບພຣະເຈົ້າໃນເວລາລະມາດທ່ານນະບີໄດ້ກ່າວວ່າ *"ຄວາມສຸກຂອງເຮົາຢູ່ນາການລະມາດ"* ທ່ານນະບີຍັງເຄີຍກ່າວກັບຜູ້ທີ່ເຮັດໜ້າທີ່ປະກາດເວລາເຂົ້າລະມາດວ່າ "*ໄປປະກາດໃຫ້ພວກເຮົາມາພັກຜ່ອນເດີ້"* ເມື່ອທ່ານສາດສະດາທູດມີຄວາມກັງວົນອຸກໃຈໃນສິ່ງໃດ ທ່ານຈະຮີບເຂົ້າມາລະມາດເພື່ອໃຫ້ຈິດໃຈສະຫງົບສຸກບໍ່ວິຕົກກັງວົນ

### 8.1 ຂໍ້ດີຂອງການລະມາດ :

1. ເປັນການສໍາລະລ້າງບາບນ້ອຍ

ທ່ານນະບີກ່າວວ່າ *"ການລະມາດ 5 ເວລາ ແລະ ການລະມາດວັນສຸກ ຈາກວັນສຸກອາທິດນີ້ໄປຮອດອາທິດໜ້າ ຈະມີການສໍ່າລະລ້າງຄວາມຜິດບາບລະຫວ່າງທຸກຊ່ວງເວລາ ຕາບໃດທີ່ບໍ່ມີການກະທຳບາບໃຫຍ່"*

2. ການລະມາດຄືແສງລັດສະໝີ ຊຸກຍູ້ມຸສລິມສູ່ການເຮັດຄວາມດີ ແລະ ຫ່າງໄກຄວາມຊົ່ວ ອັລລໍຫ໌ໄດ້ກ່າວວ່າ **"ການລະມາດນັ້ນຈະຫັກຫ້າມຈາກເລື່ອງໄຮ້ສິລະທຳ ແລະ ສິ່ງບໍ່ດີ"** (ອັລອັງກະບູຕ : 45)

ທ່ານນະບີຍັງໄດ້ກ່າວອີກວ່າ **"ການລະມາດນັ້ນຄືແສງສະຫວ່າງ"**

3. ສິ່ງທຳອິດທີ່ມຸສລິມຜູ້ສັດທາຈະຖືກສອບສວນໃນມື້ສິ້ນໂລກ ຄື ການລະມາດ ວ່າໄດ້ເຮັດຕາມໜ້າທີ່ຢ່າງຄົບຖ້ວນສົມບູນບໍ່ ຫາກສົມບູນໄປດ້ວຍດີ ຜົນປະພຶດການກະທຳອື່ນໆ ກໍ່ຈະດີໄປນຳແຕ່ຖ້າຫາກການສອບສວນເລື່ອງລະມາດນັ້ນເປັນໄປບໍ່ດີ ຜົນປະພຶດການກະທຳອື່ນກໍ່ຈະໄປບໍ່ດີຄືກັນ

ທ່ານສາດສະດາທູດກ່າວວ່າ *"ສິ່ງທຳອິດທີ່ບ່າວຈະຖືກຖາມສອບສວນໃນມື້ສິ້ນໂລກຄືການລະມາດ ຖ້າຫາກຜົນການກະທຳໄປໄດ້ດີຜົນງານອື່ນກໍ່ຈະດີຕາມ ຖ້າຫາກຜົນງານບໍ່ດີສິ່ງອື່ນກໍ່ບໍ່ດີໄປນຳ"*

ຜູ້ທີ່ຈຳເປັນຕ້ອງລະມາດ 5 ເວລາ ຄື ມຸສລິມຜູ້ສັດທາທີ່ມີສະຕິປັນຍາຄົບສົມບູນ ບັນລຸພາວະເປັນຫນຸ່ມ ແລະ ບໍ່ແມ່ນຜູ້ຫຍິງທີ່ຢູ່ໃນຊ່ວງທີ່ມີປະຈຳເດືອນ ຫຼື ເລືອດຫລັງເກີດລູກ ດັ່ງນັ້ນ, ຜູ້ຫຍິງທີ່ມີເລືອດປະຈຳເດືອນຫຼືເລືອດຫລັງເກີດລູກກໍ່ບໍ່ຕ້ອງລະມາດ ແລ້ວຖ້າຫມົດເລືອດນັ້ນກໍ່ບໍ່ຈາເປັນຕ້ອງມາຊົດໃຊ້

## 8.2 ລະບຽບເງື່ອນໄຂທີ່ຕ້ອງສຳນຶກຄິດກ່ອນທີ່ຈະລະມາດ :

1. ຮ່າງກາຍ, ສະຖານທີ່, ເສື້ອຜ້າ ຕ້ອງສະອາດຈາກຮະດັສນ້ອຍ ແລະ ຮະດັສໃຫຍ່.

2. ຕ້ອງປົກປິດສ່ວນສະຫງວນຂອງຮ່າງກາຍທັ້ງຫມົດ ໂດຍກັບເສື້ອຜ້າທີ່ບໍ່ຮັດຮູບຮັດຊິ່ງ ຫຼື ບາງຈົນເຫັນເນື້ອໃນ ໂດຍສ່ວນສະຫງວນຂອງຮ່າງກາຍ **"ຜູ້ຊາຍ"** ຄື ລະຫວ່າງໄສ້ດຶ້ ຈົນຮອດຫົວເຄົ່າຈຳເປັນຕ້ອງປົກປິດ ແລະສ່ວນສະຫງວນຂອງຮ່າງກາຍ **"ຜູ້ຫຍິງ"** ແມ່ນຮ່າງກາຍທັ້ງຫມົດ ຍົກເວັ້ນໃບຫນ້າ ແລະ ຝ່າມື ສາມາດເປີດເຜີຍໄດ້

ມຸສລິມທີ່ຕ້ອງການເຮັດການລະມາດສົມຄວນທີ່ຈະໃສ່ເສື້ອຜ້າທີ່ງົດງາມ ແລະ ສະອາດທີ່ສຸດ ໂດຍສະເພາະຖ້າຕ້ອງການໄປລະມາດທີ່ມັສຍິດ ອັລລໍຫ໌ໄດ້ກ່າວວ່າ

**"ໂອ້ລູກຫລານຂອງອາດັມ, ຈົ່ງແຕ່ງກາຍຢ່າງຖືກຕ້ອງທີ່ໄປມັສຍິດ ຈົ່ງກິນ ແລະ ດື່ມ ໂດຍບໍ້ຕ້ອງຟຸ່ມເຟື່ອຍ"** (ອັລອະຮອຟ : 31)

3. ຫັ່ນຫນ້າເຂົ້າໄປຫາທິດກິບລະຫ໌ ອັລລໍຫ໌ໄດ້ກ່າວວ່າ **"ເທື່ອໃດທີ່ທ່ານຕ້ອງການເດີນທາງ ກໍ່ຈົ່ງຫັ່ນຫນ້າສູ່ທິດມັສຍິດຮະຣອມ"** (ອັລບະກໍຣໍຫ໌ : 145)

**'ມັສຍິດຮະຣອມ'** ຕັ້ງຢູ່ທີ່ເມືອງມັກກະຫ໌ ປະເທດຊາອຸດິອາລະເບຍ ເປັນສະຖານທີ່ສາຄັນທີ່ສຸດຂອງສາສະຫນາອິສລາມ ເປັນທີ່ຕັ້ງຂອງ **'ອາຄານກະບະຫ໌'** ເຊິ່ງເປັນຮູບຊົງສີ່ຫລ່ຽມ ທີ່ທ່ານສາດສະດາທູດ ອິບຣໍຮີມ (ອາຣາມ) ໄດ້ສ້າງໄວ້ ອາຄານກະບະຫ໌ນີ້ເປັນພຽງຫີນທາມະດາບໍ່ໄດ້ໃຫ້ຄຸນ ແລະໂທດກັບຜູ້ໃດໄດ້ ແຕ່ພຣະເຈົ້າສັ່ງໃຫ້ເຮົາທຸກຄົນຕ້ອງຫັ່ນຫນ້າໄປທິດກະບະຫ໌ ຫຼື ເອີ້ນວ່າທິດກິບລະຫ໌ນີ້ນັ້ນ ກໍ່ເປັນຍ້ອນເພື່ອໃຫ່ມຸສລິມທຸກຄົນໄດ້ຫັ່ນຫນ້າໄປທາງທິດດຽວກັນຢ່າງສະເຫມີພາບ ແລະພ້ອມພຽງກັນເທົ່ານັ້ນ

4. ຕ້ອງລະມາດລະມາດໃນເວລາທີ່ກຳນົດໄວ້ ເຮົາບໍ່ສາມາດລະມາດກ່ອນເຂົ້າເວລາໄດ້ ແລະ ຫ້າມຊັກຊ້າຕໍ່ການລະມາດຈົນຫມົດເວລາ ອັລລໍຫ໌ໄດ້ກ່າວວ່າ **"ການລະມາດນັ້ນເປັນຂໍດບັງຍັດທີ່ກຳນົດເວລາໄວ້ແລ້ວຕໍ່ຜູ້ສັດທາທຸກຄົນ"** (ອັນນິສາອ໌ : 103) ດັ່ງນັ້ນ, ໃຜທີ່ນອນ ຫຼື ລືມເວລາລະມາດຈົນຫມົດເວລາລະມາດນັ້ນໄປແລ້ວຖ້ານຶກໄດ້ກໍ່ຈຳເປັນຕ້ອງລະມາດຊົດໃຊ້ໃນພາຍຫລັງ ບໍ່ສະນັ້ນ ຈະຖືເປັນຫນີ້ກັບອັລລໍຫ໌

ເວລາລະມາດມື້ຫນຶ່ງນັ້ນມີພຽງ 5 ເວລາ ເຊິ່ງຈະສັງເກດໄດ້ຈາກດວງຕາເວັນ ໂດຍບໍ່ມີເວລາຕາມໂມງໄວ້ຢ່າງລະອຽດ ເພາະລະດູການຂອງປີນັ້ນແຕກຕ່າງຕ່າງກັນເຮັດໃຫ້ການຕົກ ຫຼື ຂຶ້ນຂອງດວງຕາເວັນນັ້ນແຕກຕ່າງກັນ

ການລະມາດນັ້ນຈະປະກອບທ່າທາງຢືນ, ລົງມາກົ້ມ, ແລ້ວກາບ, ແລ້ວກັບມາຢືນຂຶ້ນໃຫມ່ ເອີ້ນວ່າການລະມາດໄປແລ້ວຫນຶ່ງຊຸດ ຫຼື **"ຫນຶ່ງຣ໊ອກອະຫ໌"**

ການລະມາດໃນແຕ່ລະເວລານັ້ນມີຣ໊ອກອະຫ໌ບໍ່ເທົ່າກັນ ເຊັ່ນ :

ເວລາຕອນເຊົ້າມືດ (ຊຸບຮີ) ຕ້ອງລະມາດ 2 ຣ໊ອກອະຫ໌,

ເວລາຕອນສວຍ (ຊຸຫ໌ຣີ) ລະມາດ 4 ຣ໊ອກອະຫ໌,

ເວລາຕອນຄ່ອຍແລ້ງ (ອັສຣີ) ມີ 4 ຣ໊ອກອະຫ໌,

ເວລາດວງຕາເວັນຫລັບຂອບຟ້າ (ມັກເລັບ) ມີ 3 ຣ໊ອກອະຫ໌,

ເວລາກາງຄືນ (ອິຊາ) ມີ 4 ຣ໊ອກອະຫ໌,

ມຸສລິມທຸກຄົນສາມາດລະມາດໂດຍຕົວຄົນດຽວໄດ້ ແຕ່ທີ່ດີທີ່ສຸດສົມຄວນລະມາດຮ່ວມກັບຜູ້ອື່ນຢູ່ມັສຍິດ ຫຼື ອາດຈະເອີ້ນພີ່ນ້ອງຄອບຄົວມາລະມາດໃນເຮືອນກໍ່ໄດ້ຄືກັນ ເພາະເມື່ອລະມາດຮ່ວມກັນນັ້ນຈະເພີ່ມຄວາມຮັກ ແລະ ເພີ່ມຄວາມເປັນພີ່ນ້ອງ ສ້າງຄວາມຮູ້ສຶກເປັນຫ່ວງເຊິ່ງກັນແລະກັນ ການລະມາດຮ່ວມກັບຜູ້ອື່ນດີກວ່າການລະມາດຄົນດຽວຫຼາຍເທົ່າ ທ່ານນະບີກ່າວວ່າ *"ການລະມາດຮ່ວມກັນ ຫຼື ລະມາດຢາມະອະຫ໌ ດີກວ່າການລະມາດຄົນດຽວເທົ່າ 27 ເທື່ອ"*

ແນວໃດກໍ່ຕາມ, ການລະມາດກໍ່ສາມາດເຮັດໄດ້ທຸກໆ ສະຖານທີ່ ບໍ່ຈຳເປັນແມ່ນມັສຍິດເທົ່ານັ້ນ ນີ້ຄືຄວາມເມດຕາປະການຫນຶ່ງທີ່ພຣະເຈົ້າມີໃຫ້ແກ່ເຮົາ ທ່ານນະບີກ່າວວ່າ *"ໂລກນີ້ຖືກສ້າງໃຫ້ເປັນສະຖານທີ່ລະມາດໃຫ້ແກ່ເຮົາ ແລະ ເປັນສະຖານທີ່ສະອາດ ດັ່ງນັ້ນ, ຖ້າປະຊາຊົນຂອງເຮົາຄົນໃດໄດ້ເຂົ້າເວລາລະມາດແລ້ວ ກໍ່ຈົ່ງຮີບລະມາດ."*

### 8.3 ວິທີການລະມາດ

1. ຕັ້ງເຈດຕະນາ ຄິດໃນໃຈວ່າ **"ຂ້ອຍຕັ້ງໃຈລະມາດຕາມຫລັກສາສະຫນາສັ່ງໄວ້ໃນເວລາ......" ຖ້າເປັນຜູ້ລະມາດຕາມຄົນອື່ນກໍ່ໃຫ້ຄິດວ່າ "ລະມາດເປັນຜູ້ຕາມ."**

2. ການຕັ້ງເຈດຕະນາໃນຂໍ້ທຳອິດໃຫ້ເຮັດພ້ອມກັບການຍົກມືທັ້ງສອງເບື້ອງຂຶ້ນ ຮອດຫູ ໂດຍຝາມືຫັ່ນໄປທາງຫນ້າ ພ້ອມກ່າວຄຳວ່າ **"ອັລລໍຮຸອັກບັຣ"** ຄວາມຫມາຍຄື **"ອັລລໍຫ໌ຜູ້ຊົງຫຍິ່ງໃຫຍ່"** ນີ້ຄືການເລີ່ມເຂົ້າລະມາດ ຄຳໆ ນີ້ຈະເຮັດໃຫ້ເຮົາມີສະມາທິຈິດຈໍ້ໃນການລະມາດ ແລະ ບໍ່ສົນໃຈໃນເລື່ອງທີ່ເກີດຂຶ້ນພາຍໃນຮອບຕົວ ເພາະທັ້ງຫມົດນີ້ເປັນເລື່ອງເລັກນ້ອຍຖ້າທຽບກັບອັລລໍຫ໌.

3. ໃຫ້ວ່າງມືຂວາທັບມືຊ້າຍຢູ່ກາງເອິກ.

4. ອ່ານອັລກຸຣອານບົດອັລຟາຕິຫະຫ໌ ເຊິ່ງແມ່ນບົດທຳອິດຂອງອັລກຸຣອານ.

5. ຫາກຜູ້ລະມາດເປັນຜູ້ຕາມ (ມະມູມ) ໃຫ້ຟັງຜູ້ນຳລະມາດ (ອິມໍ່າ) ອ່ານອັລກຸຣອານ ແລະ ຖ້າອິມໍ່າອ່ານບົດອັລຟາຕິຫະຫ໌ຈົບແລ້ວ ໃຫ້ເຮົາກ່າວ **"ອາມີນ"** ສຽງດັງພ້ອມອີມ່າ ຄາວ່າ ອາມີນ ຫມາຍເຖິງ "ຂໍໃຫ້ອັລລໍຫ໌ຕອບຮັບດຸອາຄຳຂໍນຳ"

6. ຫລັງອ່ານບົດອັລຟາຕິຫະຫ໌ຈົບແລ້ວ ໃຫ້ອ່ານອັລກຸຣອານບົດໃດກໍ່ໄດ້ ແຕ່ຖ້າເປັນຜູ້ຕາມ (ມະມູມ) ກໍ່ບໍ່ຕ້ອງອ່ານ ແລະ ຖ້າຫາກເວລາໃດລະມາດທີ່ມີ 3 ເຖິງ 4 ຣ໋ອກອະຫ໌ ກໍ່ບໍ່ຈາເປັນອ່ານອັລກຸຣອານບົດອີກຫລັງຈາກອ່ານບົດອັລຟາຕິຫະຫ໌ໃນຣ໊ອກອະຫ໌ 3 ແລະ 4 ໂດຍໃນການອ່ານເວລາກາງເວັນແມ່ນອ່ານສຽງຄ່ອຍ (ຊ່ວງເວລາບ່າຍ ແລະ ຍາມຄອຍແລ້ງ) ແລະໃຫ້ອ່ານອອກສຽງໃນເວລາກາງຄືນ (ຕອນດວງຕາເວັນຕົກ, ການຄືນເວລາເຊົ້າມືດ) ຫລັງຈາກນັ້ນໃຫ້ກົ້ມໂຄ້ງເອົາມືແຕະຫົວເຂົ່າ ພ້ອມຫຍຸດນິ່ງຊື່ວຂະນະຫນຶ່ງ

7. ຫລັງຈາກນັ້ນໃຫ້ກັບມາຢືນກົງ ໂດຍກ່າວ **"ຊະມິອັລລໍຮຸ ລິມັນຮະມິດະຫ໌"** ປ່ອຍມືໄວ້ແນບຕົວ ພ້ອມຫຍຸດນິ່ງຂະນະຫນຶ່ງ.

8. ກົ້ມລົງກາບໂດຍຕ້ອງໃຫ້ອະໄວຍະວະທັ້ງ 7 ແນບຕິດພື້ນ (ນັ້ນກໍ່ຄື ຫນ້າຜາກ, ມືທັ້ງສອງ, ຫົວເຂົ່າທັ້ງສອງ, ແລະປາຍນີ້ວຕີນທັ້ງສອງ) ໃຫ້ຍົກຂໍ້ສອກຂຶ້ນບໍ່ໃຫ້ຕິດພື້ນ ການລົງກາບພາສາອາຫຣັບເອີ້ນວ່າ "ຊຸຈູດ" ເປັນທ່າທາງທີ່ມະນຸດຄົນຫນຶ່ງຈະໄດ້ໃກ້ຊິດພຣະເຈົ້າຫລາຍທີ່ສຸດ ຜູ້ລະມາດສາມາດຂໍພອນ (ດຸອາ) ລະຫວ່າງກົ້ມກາບໄດ້ ທ່ານສາດສະດາທູດໄດ້ກ່າວວ່າ *"ສະພາບທີ່ບ່າວຈະໄດ້ໃກ້ຊິດກັບພຣະເຈົ້າທີ່ສຸດຢູ່ລະຫວ່າງກົ້ມກາບ ສະນັ້ນ, ຈົ່ງຂໍພອນໃຫ້ຫຼາຍ."*

9. ຂຶ້ນມານັ່ງພັບຂາ ມືຢູ່ເທິງຫົວເຂົ່າ ພ້ອມຢຸດນິ່ງຂະນະຫນຶ່ງ.

10. ກົ້ມລົງໄປກາບຄັ້ງທີ່ສອງອີກຮອບ ພ້ອມຢຸດນິ່ງຂະນະໜຶ່ງ.

11. ລະຫວ່າງການປ່ຽນທ່າທາງທຸກເທື່ອ ໃຫ້ກ່າວຄໍາວ່າ "ອັລລໍຮຸອັກບັຣ" ຍົກເວັ້ນຂັ້ນຕອນປ່ຽນຈາກການກົ້ມໂຄ້ງຫົວຂຶ້ນມາຢືນ ໃຫ້ກ່າວວ່າ "ຊະມີອັລລໍຮຸ ລິມັນຮະມິດະຫ໌" ຖ້າຈື່ບໍ່ໄດ້ກໍ່ບໍ່ຕ້ອງເວົ້າອີ່ຫຍັງ (ຖ້າທ່າທາງທັ້ງຫມົດນີ້ເອີ້ນວ່າການລະມາດຄົບໜຶ່ງຣ້ອກອະຫ໌ ຫລັງຈາກນີ້ເຮົາຕ້ອງຂຶ້ນໄປຢືນຕຣົງໄປລະມາດຣ້ອກອະຫ໌ຄັ້ງທີ່ສອງ ໂດຍເຮັດຄືຣ້ອກອະຫ໌ທໍາອິດທຸກຢ່າງ)

12. ຫລັງຈາກກົ້ມລົງກາບຄັ້ງທີ່ສອງໃນຣ້ອກອະຫ໌ທີ່ສອງ ໃຫ້ຂຶ້ນມານັ່ງພັບເຄົາ ພ້ອມອ່ານດູອາຕະຊະຮຸດ:

**"ອັດຕະຮີຢາ ຕຸລິລລະ ອັສລາມມຸອະລັຍກ້າ ໄອຢຸຮັນນະບີຢຸ ອະເຣາະຫ໌ມາຕຸລລໍຮີ ອະບະຣໍກາຕຸຫ໌ ອັສສະລາມຸອະໄລນາ ອະອາລາອິບາດິລລາຮິຊ ຊໍລິຮີນ. (ອັຊຮະດຸອັລລາອິລາຮະ ອິລລັລລໍຫ໌. ວາອັຊຮະດຸອັນນະມຸຮັມມະດັຣ ຣໍຊູລຸລລໍຫ໌ ອັລລໍຮຸມມະຊໍລລິອະລາມຸຮັມມັດ ວະອະລາອາລິມຸຮັມມັດ.)**

13. ຫາກການລະມາດນັ້ນມີ 3 ຫຼື 4 ຣ້ອກອະຫ໌ ໃຫ້ຢືນຂຶ້ນມາຊື່ ແລ້ວເຮັດການລະມາດຄັ້ງທີ່ສາມຕໍ່ໄປ ໃນທ້າຍຣ້ອກອະກ໌ທີ່ 4 ສຸດທ້າຍ ກໍ່ອ່ານຕະຊະຮຸດຄືເກົ່າ

14. ຖ້າອານດູອາຕະຊະຮຸດຄັ້ງສຸດທ້າຍຈົບແລ້ວ ໃຫ້ກ່າວສະລາມຖືວ່າເປັນການ ລະມາດທີ່ສິ້ນສຸດ ໂດຍກ່າວວ່າ **"ອັສສະລາມຸອະລັຍກຸມ ອະເຣາະຫ໌ມາຕຸລລໍຣ໌"** ພ້ອມຫັ່ນຄໍໄປທາງຂວາແລ້ວໃຫ້ກ່າວສະລາມ ແລ້ວ ຫັ່ນຄໍໄປທາງຊ້າຍກ່າວສະລາມ ຖືວ່າຈົບແລ້ວການລະມາດ

ທ່ານສາດສະດາທູດກ່າວວ່າ **"ການເລີ່ມລະມາດຄືຕ້ອງກ່າວຄາວ່າ ອັລລໍຮຸອັກບັຣ ສ່ວນການສິ້ນສຸດຂອງການລະມາດຄືການກ່າວສະລາມ"**

ຫລັງຈາກຈົບການລະມາດບໍ່ຄວນຮີບຟ້າວລຸກໄປໃສ ສົມຄວນນັ່ງກ່າວຄໍາດູອາໃຫ້ຫຼາຍ ເຊັ່ນການກ່າວວ່າ **ສຸບບະຮານັລລໍຫ໌ 33 ເທື່ອ, ອັລຮັມດຸລິລລະຫ໌ 33 ເທື່ອ, ອັລລໍຮຸອັກບັຣ 34 ເທື່ອ. ຮ່ວມທັ້ງຫມົດ 100 ເທື່ອ ເປັນຕົ້ນ.**

ການລະມາດຍັງມີລາຍລະອຽດ ແລະ ບົດຂໍພອນດູອາອື່ນຢ່າງຫຼວງຫຼາຍ ຖ້າມຸສລິມໃຫມ່ສາມາດລະມາດຕາມຂັ້ນຕອນທີໄດ້ກ່າວມານີ້ໄດ້ຢ່າງຄ່ອງແຄ່ວແລ້ວ ກໍ່ສົມຄວນຮ່ໍາຮຽນບົດດູອາບົດຂໍພອນ ແລະ ລາຍລະອຽດຂອງການລະມາດໃຫ້ຫຼາຍຂຶ້ນ ສໍາຫລັບ ມຸສລິມໃຫມ່ທີ່ຫາກໍ່ເຂົ້າຮັບອິສລາມໃຫມ່ ທີ່ຍັງບໍ່ສາມາດອ່ານບົດອັລຟາຕິຫະຫ໌ ຫຼື ບົດດູອາໄດ້ ກໍ່ຄວນຝຶກຝົນທ່ອງຈໍາບົດຂໍພອນ ແລະ ອັລກຸຣອານພາສາອາຫຣັບໂດຍສະເພາະ ຄື :

1. ບົດອັລຟາຕິຫະຫ໌

2. ບົດດຸອາຕະຊະຮຸດ

3. **"ອັລລໍຮຸອັກບັຣ"**

4. **"ຊະມິອັລລໍຮຸ ລີມັນຮະມີດະຫ໌"** ແລະ ຄວນເພີ່ມໄປອີກວ່າ **"ຣ້ອບບະນາ ວະລາກັລຮໍາດຸ"**

5. ລະຫວ່າງການໂຄ້ງຕົວໃຫ້ກ່າວຄໍາວ່າ **"ຊຸບບະຮານະ ຣ້ອບບີຢັລອະຊີມ"**

6. ລະຫວ່າງກົ້ມກາບ ໃຫ້ກ່າວ **"ຊຸບບະຮານະຣ້ອບບີຢັລອະລາ"**

ສໍາຫລັບຜູ້ທີ່ເພິ່ງຮັບອິສລາມໃຫມ່ໃນອາທິດທໍາອິດ ບົດອັລຟາຕິຫະຫ໌ ແລະ ບົດດູອາຕະຊະຮຸດອ່ານຍາກ ແລະ ຍາວເກີນໄປ ກໍ່ຈໍາເປັນຕ້ອງຮັກສາລະມາດວັນລະ 5 ເວລາຄືກັນພຽງ ແຕ່ໃນຂັ້ນຕອນທີ່ຕ້ອງອ່ານບົດທີ່ຕົນເອງອ່ານບໍ່ໄດ້ ໃຫ້ສະຫງົບງຽບແທນ ແລະສົມຄວນລະມາດຮ່ວມກັບຄົນອື່ນໂດຍສະເພາະມຸສລິມຄົນເກົ່າ ເພື່ອສັງເກດວິທີ່ລະມາດ

ໂດຍການລະມາດຮ່ວມກັບຜູ້ອື່ນນັ້ນເອີ້ນວ່າ "ລະມາດຢະມາອະຫ໌" ຈະມີຄົນຫນຶ່ງເປັນຜູ້ນາລະມາດເອີ້ນວ່າ "ອີມໍ່າ" ແລະທີ່ເຫລືອຈະເປັນຜູ້ຕາມເອີ້ນວ່າ "ມະມູມ" ຖ້າຜູ້ຕາມລະມາດຜິດໃນຂັ້ນຕອນໃດ ຜູ້ເປັນອີມໍ່າຈະເປັນຜູ້ແບກຮັບຄວາມຜິດໄວ້ເອງ ເຮັດໃຫ້ຜູ້ຕາມ "ມະມູມ" ບໍ່ຕ້ອງກັບໄປແກ້ໄຂຂໍ້ຜິດພາດເລັກນ້ອຍບ້າງເທື່ອຂອງການລະມາດ

## 8.4 ສາເຫດທີ່ເຮັດໃຫ້ເສຍການລະມາດ

ການລະມາດນັ້ນຄືການເຂົ້າໃກ້ຊິດຕໍ່ພຣະເຈົ້າ ຄືການຕັດຂາດລະຫວ່າງໂລກພາຍນອກຮອບຕົວ ດັ່ງນັ້ນ, ຈຶ່ງມີຂໍ້ຫ້າມບ້າງຢ່າງທີ່ຜູ້ລະມາດລະຖິ້ມຈະເຮັດໃຫ້ການລະມາດນັ້ນໃຊ້ບໍ່ໄດ້ແລ້ວຈະຕ້ອງເລີ່ມລະມາດໄຫມ່ ເຊັ່ນ :

1. ການກິນ ແລະ ດື່ມ ໂດຍຕັ້ງໃຈ.

2. ການເວົ້າຈາໂດຍຕັ້ງໃຈ.

3. ການເຄື່ອນໄຫວຫຼາຍໂດຍມີການຕັ້ງໃຈ ເຊັ່ນ ການຍ່າງໄປສອງກ້າວ ຫຼື ການແກວ່ງແຂນໄປມາສອງເທື່ອ.

4. ການຫົວສຽງດັ່ງ ແຕ່ຖ້າຫາກຍິ້ມພຽງເລັກນ້ອຍກໍ່ບໍ່ເປັນຫຍັງບໍ່ເຮັດໃຫ້ເສຍລະມາດ.

5. ການປະຖິ້ມຂັ້ນຕອນໃດໜຶ່ງຂອງການລະມາດໂດຍຕັ້ງໃຈ ແຕ່ຖ້າຫາກບໍ່ໄດ້ຕັ້ງໃຈຖິ້ມ ກໍ່ໃຫ້ນຶກຍ້ອນມາເຮັດຂັ້ນທີ່ລືມນັ້ນໃຫມ່ ຫາກມີການບໍ່ແນ່ໃຈວ່າຕົນເອງລືມຂັ້ນຕອນໃດໄປແລ້ວ ກໍ່ໃຊ້ລະມາດເພີ່ມອີກໜຶ່ງຣ້ອກອະຫ໌ ຫລັງຈາກນັ້ນຖ້າອ່ານຕະຊະຮຸດທ້າຍສຸດ ໃຫ້ກົ້ມລົງກາບສອງເທື່ອເພື່ອເປັນການຊົດໃຊ້ການຜິດພາດ ເຊັ່ນດຽວກັນ, ຖ້າເມື່ອຈື່ບໍ່ໄດ້ວ່າລະມາດໄປຈັກເທື່ອແລ້ວ ກໍ່ໃຫ້ສັນນິຖານຈຳນວນນ້ອຍທີ່ສຸດໄວ້ກ່ອນ ແລ້ວກົ້ມກາບຊົດໃຊ້ພາຍຫລັງ.

6. ການບໍ່ປະຕິບັດຕາມເງື່ອນໄຂທີ່ຕ້ອງມີກ່ອນລະມາດ ເຊັ່ນ ບໍ່ປົກປິດຮ່າງກາຍທີ່ຈາເປັນທັ້ງທີ່ມີເສື້ອຜ້າ ຫຼື ບໍ່ໄດ້ອາບນ້ຳລະມາດເປັນຕົ້ນ.

***ຄວາມຫມາຍຂອງບົດອັລຟາຕິຫະຫ໌***

ຄຳວ່າ "ບົດ" ໃນພາສາອາຫຣັບເອີ້ນວ່າ **"ຊູເຣາະ"** ຊູເຣາະອັລຟາຕິຫະຫ໌ ແປວ່າ “ບົດເປີດ” ຫຼື “ບົດທຳອິດ” ຊູເຣາະອັລຟາຕິຫະຫ໌ ມີ 7 ໂອງການ ຫຼື ເອີ້ນວ່າ 7 ອາຍະຫ໌

1. ບິສມິລລາ ຣິຣຣໍຫ໌ມານ ນິຣຣໍຣີມ
2. ອັລຮໍາດູ ລິລລາຮີ ຣອບບິລ ອາລະມີນ
3. ອັຣຣໍຫ໌ ມານ ນິຣໍຣີມ
4. ມາລິກິ ເຢົາມິດດີນ
5. ອີຍາກະ ນະບຸດຸ ວະອີຍາກະ ນັສຕະອີນ
6. ອິຮ໌ດິນັສ ສິຣໍຕອລ ມຸສຕະກີມ
7. ສິຣໍຕອລ ລະຊີນະ ອັນອັມຕະ ອະໄລຮິມ

ກ໋ອຍຣີລ ມັກດູບິ ອະໄລຮິມ ວະລັດ ດອລລີນ

***ຄຳແປ :***

1. ດ້ວຍພຣະນາມຂອງອັລເລາະຫ໌ ຜູ້ຊົງກະລຸນາປານີ ຜູ້ຊົງເມດຕາສະເໝີ
2. ມອບການສັນລະເສີນທັ້ງຫມົດ ເປັນສິດຂອງອັລເລາະຫ໌ ພຣະເຈົ້າແຫ່ງສາກົນລະໂລກ
3. ຜູ້ຊົງກະລຸນາປານີ ຜູ້ຊົງເມດຕາສະເໝີ
4. ພຣະເຈົ້າແຫ່ງວັນຕອບແທນ

5. ພຣະອົງເທົ່ານັ້ນທີ່ເຮົາເຄົາລົບກາບໄຫວ້ ແລະ ພຣະອົງເທົ່ານັ້ນທີ່ເຮົາຂໍຄວາມເຫລືອ

6. ຂໍພຣະອົງຊົງຊີ້ນໍາເຮົາສູ່ເສັ້ນທາງທີ່ຊື່ກົງ

7. ຄື ເສັ້ນທາງຂອງຄົນທີ່ພຣະອົງພໍພະໄທ ບໍ່ແມ່ນ ພວກຄົນທີ່ພຣະອົງຊັງ ແລະບໍ່ແມ່ນ ພວກຄົນທີ່ຫລົງທາງ

***ຄໍາອະທິບາຍ :***

1. ຂ້ອຍຂໍເລີ່ມອ່ານດ້ວຍພຣະນາມຂອງອັລລໍຫ໌.

2. ຂໍສັນລະເສີນອັລລໍຫ໌ຕໍ່ທຸກຄຸນລັກສະນະ ແລະ ການກະທໍາຂອງພຣະອົງ, ແລະຕໍ່ທຸກຄວາມດີທີ່ພຣະອົງມີໃຫ້ແກ່ເຮົາ, ດ້ວຍຄວາມຮັກ ແລະ ຄວາມເຄົາລົບ ພຣະອົງຄືຜູ້ສ້າງ, ຜູ້ໃຫ້, ຜູ້ມີອໍານາດ, ຜູ້ຊົງຄວບຄຸ້ມໂລກຂອງສັບພະສິ່ງທັ້ງຫຼາຍ ບໍ່ວ່າຈະແມ່ນໂລກຂອງມະນຸດ, ໂລກຂອງຜີຍິນ, ໂລກຂອງທູດຟ້າມາລາອິກະຫ໌, ໂລກຂອງສັດ ແລະ ອື່ນໆ.

3. ອັຣຣໍຫ໌ມານ (ຜູ້ຊົງກະລຸນາປານີ) ຫມາຍເຖິງ ຜູ້ເມດຕາຫຼາຍຕໍ່ສັບພະສິ່ງທັ້ງຫມົດ ອັຣຣໍຮີມ (ຜູ້ຊົງເມດຕາສະເໝີ) ຫມາຍເຖິງ ຜູ້ມີຄວາມເມດຕາຫຼາຍຕໍ່ຜູ້ສັດທາເທົ່ານັ້ນ.

4. ຜູ້ມີອໍານາດແຕ່ພຽງຜູ້ດຽວໃນມື້ແຫ່ງການພິພາກສາມື້ສິ້ນໂລກ ໂອງການນີ້ເຮັດໃຫ້ເຮົາມາຄິດແຕ່ວ່າຕ້ອງເຮັດຄວາມດີເທົ່ານັ້ນ ຍ້ອນຢ້ານກົວການສອບສວນ.

5. ເຮົາກາບໄຫວ້ອັລລໍຫ໌ແຕ່ພຽງຜູ້ດຽວ ບໍ່ມີສິ່ງອື່ນມາທຽບຄ່ຽງໃນການເຮັດພິທີທາງສາສະຫນາ ແລະເຮົາຈະຂໍຄວາມຊ່ວຍເຫລືອກັບພຣະອົງອັລລໍຫ໌ເທົ່ານັ້ນ ໃນເລື່ອງທີ່ຕ້ອງພຶ່ງພາສິ່ງສັກສິດ ເພາະອໍານາດທັ້ງຫມົດແມ່ນຢູ່ນໍາພຣະອົງ ພຣະອົງຄືຜູ້ໃຫ້ຄຸນ ແລະ ໃຫ້ໂທດແຕ່ພຽງຜູ້ດຽວ.

6. ໄດ້ໂປດຊີ້ທາງນໍາເຮົາ ແລະ ສອນເຮົາສູ່ເສັ້ນທາງອັນທ່ຽງກົງ ແລະໃຫ້ເຮົາຢືນຍັດຢູ່ໃນເສັ້ນທາງນີ້ຈົນເຮົາຈະເສຍຊີວິດ ຄໍາວ່າ "ເສັ້ນທາງອັນຊື່ກົງ" ແມ່ນຫມາຍຄວາມວ່າ ສາສະຫນາອິສລາມ ເຊິ່ງເປັນຄໍາສອນດຽວທີ່ຈະນໍາພາເຮົາເຂົ້າສະຫວັນ ແລະ ຫຼຸດພົ້ນຈາກໄຟນາລົກໄດ້ ເປັນເສັ້ນທາງທີ່ບັນດາສາດສະດາທູດທັ້ງຫມົດຕັ້ງແຕ່ນະບີອາດັມຈົນຮອດນະບີມູຮັມມັດໄດ້ຕັກເຕືອນສອນກັນມາເປັນເສັ້ນທາງດຽວທີ່ມີຄວາມສຸກທັ້ງໂລກນີ້ ແລະ ໂລກຫນ້າ.

7. ຫມາຍຄວາມວ່າ ເສັ້ນທາງທີ່ອັລລໍຫ໌ເຄີຍໃຫ້ກັບຜູ້ທີ່ພຣະອົງຮັກມາກ່ອນ, ບໍ່ວ່າຈະເປັນບັນດາສາດສະດາທູດ ຫຼື ຄົນດີທັ້ງຫຼາຍ ແລະຂໍໃຫ້ເຮົານັ້ນຫ່າງຈາກວິທີທາງຂອງຄົນທີ່ອັລລໍຫ໌ບໍ່ມັກກຽດຊັງ ນັ້ນກໍ່ຄືກຸ່ມຄົນທີ່ຮູ້ດີຮູ້ຊົ່ວ ຮູ້ຖືກຮູ້ຜິດ ແຕ່ບໍ່ປະຕິບັດຕາມສິ່ງທີ່ບໍ່ຖືກຕ້ອງ ເຊັ່ນ**ຊາວຍິວ**

ແລະກໍ່ໃຫ້ເຮົາຫ່າງໄກຈາກພວກລົງທາງ ນັ້ນກໍ່ຄືກຸ່ມຄົນທີ່ບໍ່ຮູ້ຈັກຄວາມແທ້ຈິງ, ບໍ່ວ່າຈະຖືກຕົວະຍົວະ ຫຼື ແບບໃດກໍ່ຕາມ ຄືເຊັ່ນ**ຊາວຄຣິດສະຕຽນ** ທີ່ຖືກດັດແປງສາສະໜາ.

ສະມາທິໃນການລະມາດ ການລະມາດຄືການເຂົ້າເຝົ້າໃກ້ຊິດກັບພຣະອົງອັລລໍຫ໌ ຄືກັບປະຊາຊົນຢ່າງເຂົາໄປໃນພາລາດຊະວັງເພື່ອມາເຄົາລົບມາຫາກະສັດເຈົ້າຊີວິດ ສິ່ງທີ່ຜູ້ເຂົ້າເຝົ້າຈາເປັນຕ້ອງມີ ຄື ຄວາມນອບນ້ອມ ເຊິ່ງໄດ້ມາຈາກການສະມາທິ ພະຍາຍາມພິຈາລະນານຶກຄິດຫາຄວາມຫມາຍຂອງບົດຂໍພອນຕ່າງໆ ທີ່ຕົນເອງກ່າວ ແລະ ພະຍາຍາມຈິນຕະນາການນຶກຄິດສະເຫມີວ່າອັລລໍຫ໌ນັ້ນກໍາລັງແນ້ມເບິ່ງເຮົາຢູ່.

ໂດຍເຫດນີ້ການລະມາດຈຶ່ງເປັນພິທີກໍາທາງສາສະຫນາ ຫຼື ອິບາດະຫ໌ທີ່ຫຍິ່ງໃຫຍ່ທີ່ສຸດ ແລະດ້ວຍເຫດນີ້ເອງອັລລໍຫ໌ຈຶ່ງເນັ້ນຍໍ້າບໍ່ໃຫ້ຜູ້ສັດທາຢ່າລົງລືມການລະມາດເດັດຂາດ ອັລລໍຫ໌ກ່າວວ່າ **"ຜູ້ສັດທານັ້ນໄດ້ຮັບໄຊຊະນະແລ້ວນັ້ນ ກໍ່ຄືຜູ້ທີ່ມີຄວາມນອບນ້ອມໃນການລະມາດ"** (ອັລມຸມິນູນ :1-2) ຜູ້ທີ່ມີຄວາມນອບນ້ອມ ແລະ ມີສະມາທິໃນການລະມາດ ອັລລໍຫ໌ຈະໃຫ້ເຂົາມີຄວາມສຸກໃນຂະນະລະມາດ ແລະເຂົາເອງຈະກາຍເປັນຜູ້ທີ່ຮັກການລະມາດໂດຍດີ ທ່ານສາດສະດາທູດໄດ້ກ່າວວ່າ *"ຄວາມສຸກຂອງຂ້ອຍຢູ່ກັບການລະມາດ".*

## 9. ການຈ່າຍພາສີຊະກາດ

ຊະກາດແມ່ນ "ພາສີສາດສະຫນາ" ທີ່ຄົນອິດສະລາມທີ່ຮັ່ງມີຈະຕ້ອງຈ່າຍໃຫ້ຜູ້ທີ່ມີສິດໄດ້ຮັບມີ 8 ປະເພດ ເປັນຫຼັກການສາສະຫນາທີ່ສາຄັນທີ່ສຸດຕາມລາດັບຂໍ້ທີ 3 ຂອງອິສລາມ ເນື່ອງຈາກວ່າເປັນປະກັນສັງຄົມ ຫຼຸດຜ່ອນຊ່ອງຫວ່າງລະຫວ່າງຄົນຮັ່ງມີກັບຄົນທຸກຍາກ ແຈກຢາຍຄວາມຮັ່ງມີເທົ່າທຽມກັນ ເພາະຄົນລວຍຕ້ອງຫັກຊັບສິນຈຳນວນໜຶ່ງທີ່ເຂົາເຈົ້າມີໃຫ້ກັບ 8 ກຸ່ມຄົນຍາກລາບາກ

ການຈ່າຍເງິນຊະກາດຍັງເປັນສິ່ງທີ່ເຮັດໃຫ້ຈິດໃຈຂອງຄົນເຮົາບໍລິສຸດ ບໍ່ໃຫ້ມີຄວາມຮູ້ສຶກຂີ້ຫນຽວເຫັນແກ່ຕົວ ສາດສະດາມູຮຳມັດກ່າວໄວ້ວ່າ *"ຜູ້ທີ່ກິນອີ່ມໃນຂະນະທີ່ເພື່ອນບ້ານອຶດຫິວ ລາວບໍ່ແມ່ນຜູ້ສັດທາ"* ເນື່ອງຈາກວ່າໃນອິສລາມມີຄະຕິວ່າ ຄົນທຸກຍາກແມ່ນຄວາມຜິດຂອງຄົນຮັ່ງມີ.

ຊະກາດ ແມ່ນຫນຶ່ງໃນບັນດາສະຫວັດດີການສັງຄົມທຳອິດໃນໂລກ, ເປັນສິ່ງທີ່ຢືນຢັ້ນເຖິງຄວາມຊອບທຳຂອງອິດສະລາມ.

### 9.1 ຈ່າຍໃຫ້ໃຜ?

ຄົນ 8 ປະເພດທີ່ເຮົາຕ້ອງຈ່າຍຊະກາດໃຫ້ :

1. ຄົນຈົນທີ່ບໍ່ມີວຽກເຮັດ
2. ຄົນຈົນທີ່ມີວຽກເຮັດແຕ່ບໍ່ພໍຄ່າໃຊ້ຈ່າຍ
3. ພະນັກງານເກັບຊະກາດ
4. ຜູ້ຮັບອິດສະລາມໃຫມ່
5. ຊ່ວຍໃຫ້ທາດເປັນອິດສະຫຼະ (ປະຈຸບັນບໍ່ມີ)
6. ຜູ້ມີໜີ້ສິນຢ່າງສຸດຈະລິດ
7. ທະຫານທີ່ບໍ່ມີເງິນເດືອນ (ປະຈຸບັນບໍ່ມີ)
8. ຄົນເດີນທາງທີ່ບໍ່ມີຄ່າໃຊ້ຈ່າຍ

**ຄວນຈ່າຍໃຫ້ຢ່າງນ້ອຍ 3 ປະເພດເທົ່າ ໆ ກັນ**

ບໍ່ຈ່າຍໃຫ້ລູກ ພໍ່ແມ່ ຫຼືເມຍຂອງຕົວເອງ ແລະຈ່າຍໃຫ້ຄົນທີ່ແມ່ນອິດສະລາມເທົ່ານັ້ນ ອັລລໍຫ໌ກ່າວວ່າ **"ການຈ່າຍພາສີຊະກາດນັ້ນເປັນໄປເພື່ອຄົນບໍ່ມີ, ຄົນທຸກຍາກ, ເຈົ້າຫນ້າທີ່ເກັບ**

**ພາສີ, ມຸສລິມໃຫມ່, ຜູ້ມີຫນີ້ສິ້ນ, ນັກຮົບ, ຜູ້ເດີນທາງການ ການຈ່າຍນັ້ນເປັນຂໍ້ບັງຄັບຈ່າຍອັລລໍຫ໌  ພຣະອົງນັ້ນຄືຜູ້ຮູ້ດີ ແລະ ມີຄວາມຮູ້ແທ້ຈິ່ງ."**

(ອັຕເຕົາບະຫ໌ : 60)

**9.2 ພາສີຊະກາດປະເພດຕ່າງ ໆ :**

1. ຊະກາດເງິນ: ສໍາລັບຄົນທີ່ມີເງິນເປັນມູນຄ່າຄໍາ 5.66 ບາດຂຶ້ນໄປຕະຫຼອດທັງປີ ຈ່າຍປີລະ 2.5%

2. ຊະກາດທຸລະກິດ: ສໍາລັບຜູ້ເຮັດວຽກທຸລະກິດການຜະລິດ, ການຄ້າ, ການບໍລິການບາງປະເພດ ເມື່ອລວມເຂົ້າກັບເງິນສ່ວນບຸກຄົນທີ່ມີຢູ່ເປັນມູນຄ່າຄໍາ 5.66 ບາດຂຶ້ນໄປ ຈ່າຍປີລະ 2.5% ໂດຍໃຫ້ຄໍານວນໃນທ້າຍປີ:

2.1. ຖ້າຈໍາໜ່າຍຂາຍຕະຫຼອດປີ ຫຼືຕ້ອງຊື້ສິນຄ້າມາເກັບເກີນ 1 ປີ (ເຊັ່ນ ປະສຸສັດ, ໄມ້ເສດຖະກິດ) = ປະເມີນລາຄາສິນຄ້າ+ເງິນທັງຫມົດທີ່ມີ

2.2. ຖ້າບໍ່ໄດ້ຈໍາໜ່າຍຂາຍຕະຫຼອດປີ ຫຼືເຮັດການບໍລິການທີ່ມີການຈໍາໜ່າຍຂາຍ (ເຊັ່ນ ຮ້ານອາຫານ) = ຕົ້ນທຶນ+ກໍາໄລ+ເງິນທັງຫມົດທີ່ມີ

3. ຊະກາດສັດລ້ຽງ: ສໍາລັບຄົນທີ່ມີແບ້ ແກະ ງົວ ຄວາຍ ທີ່ລ້ຽງໂດຍທໍາມະຊາດ ແລະບໍ່ແມ່ນທີ່ລ້ຽງໄວ້ເຮັດວຽກຫຼືເພື່ອການຄ້າ ຈ່າຍປີລະເທື່ອ

1) ສໍາລັບຄົນທີ່ມີງົວຄວາຍຫຼາຍກວ່າ 30 ໂຕ

2) ຫຼືມີແບ້ແກະຫຼາຍກວ່າ 40 ໂຕ

(ຖ້າລ້ຽງເພື່ອການຄ້າໃຫ້ຄິດເປັນຊະກາດການຄ້າ)

4. ຊະກາດກະສິກໍາ: ສໍາລັບຜູ້ທີ່ມີໄຮ່ນາທັນຍາພືດ ສວນອະງຸ່ນ ຫຼື ອິນທະຜາລັມ ທີ່ມີຜົນຜະລິດຫຼາຍກ່ວາ 825 ກິໂລກາ ໃຫ້ຈ່າຍທຸກເທື່ອທີ່ເກັບກ່ຽວຜົນຜະລິດ

1) ຖ້າມີຄ່າໃຊ້ຈ່າຍໃນການປູກແລະເບິ່ງແຍງ ຈ່າຍ 5%

2) ຖ້າປູກຕາມທໍາມະຊາດ ບໍ່ມີຄ່າໃຊ້ຈ່າຍ ຈ່າຍ 10%

**9.3 ເຫດຜົນທີ່ຕ້ອງມີການບັງຄັບຈ່າຍພາສີຊະກາດ :**

1. ການຈ່າຍຊະກາດເປັນວິທີຫນຶ່ງທີ່ໃຊ້ຄັດເກົ່າຫົວໃຈຂອງມະນຸດ ສ້າງໃຫ້ຄົນນັ້ນເປັນຜູ້ທີ່ມີຈິດໃຈດີເອື້ອເຟື້ອເພື່ອແຜ່ ບໍ່ຂີ້ຖີ່ ຂີ້ຫນຽວ ສ້າງຄວາມຮູ້ສຶກເສຍສະຫຼະໃນການຊ່ວຍເຫລືອເພື່ອນມະນຸດ ແລະ ການເປັນມືບົນ "ຜູ້ໃຫ້".

2. ການຈ່າຍຊະກາດເຮັດໃຫ້ຫົວໃຈເບີກບານ ແລະ ຮູ້ສຶກດີເພາະໄດ້ເຮັດດີໃຫ້ແກ່ຜູ້ອື່ນ ເຮັດໃຫ້ຄົນອື່ນມີຄວາມສຸກ.

3. ການຈ່າຍຊະກາດເປັນການສ້າງຫລັກປະກັນສັງຄົມວິທີ່ຫນຶ່ງ ເພາະຄົນຮັ່ງມີຕ້ອງຈ່າຍໃຫ້ແກ່ຄົນທຸກຍາກ ຄົນມີຕ້ອງຈ່າຍໃຫ້ຄົນບໍ່ມີ ເຮັດໃຫ້ທຸກຄົນໃນສັງຄົມນັ້ນຮູ້ສຶກເປັນນໍ້າຫນຶ່ງດຽວກັນຕ້ອງຊ່ວຍເຫລືອເຊິ່ງກັນແລະກັນ.

4. ການຈ່າຍຊະກາດຈະຊ່ວຍຜ່ອນຄາຍຄວາມກົດດັ່ນຂອງຄົນທຸກຈົນ ແລະສ້າງຄວາມຮັກລະຫວ່າງຄົນຮັ່ງມີ ແລະ ຄົນທຸກຍາກ ບໍ່ໃຫ້ມີຄວາມເລື່ອມລໍ້າກັນຫຼາຍເກີນໄປ.

5. ການຈ່າຍຊະກາດສາມາດຫລຸດຜ່ອນການອາຊະຍະກຳຂີ້ລັກມັກຈົກໄດ້ ໂດຍມີປະສິດຕິພາບ ນັ້ນຍ້ອນອາຊະຍະກຳສ່ວນໃຫຍ່ນັ້ນແມ່ນມັກເກີດຂຶ້ນກັບຄວາມທຸກຍາກຂາດເກີນ ບໍ່ມີຫຍັງຈະກິນ ເຮັດໃຫ້ຄົນດີທີ່ທຸກຍາກຕ້ອງຫັ່ນມາພື່ງການຂີ້ລັກ ແຕ່ການຈ່າຍຊະກາດນັ້ນຈະເປັນການອຸດປັນຫາຄວາມບໍ່ມີຂອງຄົນທຸກຍາກ ເຮັດໃຫ້ຄວາມເລື່ອມລໍ້າໃນສັງຄົມຫລຸດຜ່ອນລົງ.

## 10. ການຖືສິ້ນອົດໃນເດືອນຣໍມາດອນ

ເດືອນຣໍມາດອນຄືເດືອນທີ່ 9 ຕາມປະຖິທິນອິສລາມ ເຊິ່ງເດືອນຂອງປະຖິທິນ ອິສລາມນັ້ນອາດມີ 29 ມື້ ຫຼື 30 ມື້ກໍ່ໄດ້ ຂຶ້ນຢູ່ກັບການເຫັນ ແລະ ບໍ່ເຫັນຂອງດວງເດືອນຄ່ຳເດືອນຂຶ້ນ.

**"ການຖືສິ້ນອົດ"** ເປັນພິທີກາທາງສາສະໜາ ຫຼື ການສະແດງອອກເຖິງຄວາມເປັນບ່າວຕໍ່ອັລລໍຫ໌ປະເພດໜຶ່ງ ໂດຍການງົດການກິນການດື່ມ ແລະ ການຮ່ວມຫລັບນອນຄູ່ຜົວເມຍໃນເວລາກາງເວັນ ຕັ້ງແຕ່ເວລາເຊົ້າມືດຈົນດວງຕາເວັນຕົກດິນ.

ເດືອນຣໍມາດອນ ຫຼື ເດືອນທີ່ 9 ນີ້ ເປັນເດືອນທີ່ປະເສີດທີ່ສຸດໃນຮອບປີ ຄວາມດີທີ່ເຮັດໃນເດືອນນີ້ຈະໄດ້ຮັບຜົນລະບຸນຢ່າງຫຼາຍກວ່າທຸກເດືອນ

### 10.1 ຄວາມປະເສີດຂອງເດືອນຣໍມາດອນ :

1. ເປັນເດືອນທຳອິດທີ່ມີການປະທານຄຳພີອັລກຸຣອານລົງມາໃຫ້ສາດສະດາທູດມູຮັມໝັດອັລລໍຫ໌ກ່າວວ່າ **"ເດືອນຣໍມາດອນຄືເດືອນທີ່ອັລກຸຣອານໄດ້ປະທານລົງມາເປັນທາງນາແກ່ມະນຸດປະຊາຊາດ ເປັນເດືອນທີ່ພິສູດໃນເສັ້ນທາງນຳ ແລະ ຂໍ້ພິສູດຄວາມແທ້ຈິ່ງ ແລະ ຫຼອກຫຼວງ ດັ່ງນັ້ນ, ໃຜທີ່ເຫັນເດືອນນີ້ກໍ່ຈົ່ງຖືສິ້ນອົດ."**

(ອັລບະກໍຣໍຫ໌ : 185)

2. ເດືອນຣໍມາດອນຄືເດືອນແຫ່ງການເຮັດອິບາດະຫ໌ເຮັດຄວາມດີ ທ່ານສາດສະດາທູດໄດ້ກ່າວວ່າ *"ຖ້າຫາກເຂົ້າເດືອນຣໍມາດອນ, ປະຕູສະຫວັນຈະເປີດ, ແລະປະຕູນາລົກຈະປິດ, ຊາຕານມານຮ້າຍກໍ່ຈະຖືກລ່າມໂຊເອົາໄວ້"* ດັ່ງນັ້ນ,ເດືອນນີ້ຈຶ່ງເປັນເດືອນທີ່ອັລລໍຫ໌ກຽມໄວ້ຕອນຮັບບ່າວຜູ້ເຮັດຄວາມດີຕໍ່ພຣະອົງ.

3. ເດືອນຣໍມາດອນເປັນເດືອນແຫ່ງການຖືສິ້ນອົດໃນເວລາກາງເວັນ ແລະ ລະມາດໃນເວລາກາງຄືນ ທ່ານນະບີໄດ້ກ່າວວ່າ *"ຄົນທີ່ຖືສິ້ນອົດໃນເດືອນຣໍມາດອນຢ່າງສັດທາແທ້ຈິ່ງ ແລະຫວັງຜົນລະບຸນຈາກພຣະອົງພຽງຜູ້ດຽວ ຈະໄດ້ຮັບການອະໄພໂທດທັ້ງໝົດຈາກບາບທັ້ງຫຼາຍທີ່ຜ່ານມາ"* ທ່ານນະບີຍັງໄດ້ກ່າວອີກເຊັ່ນດຽວກັນກັບ *"ຜູ້ທີ່ຢືນລະມາດໃນກາງຄືນເດືອນຣໍມາດອນຢ່າງສັດທາແທ້ ແລະ ຫວັງຜົນລະບຸນຈາກພຣະອົງອັລລໍຫ໌ຜູ້ດຽວກໍ່ຈະໄດ້ຮັບການອະໄພໂທດຈາກຄວາມຜິດບາບທັ້ງໝົດທີ່ຜ່ານມາ."*

4. ໃນເດືອນຣໍມາດອນນີ້ຈະມີຄືນໜຶ່ງທີ່ເປັນຄືນທີ່ປະເສີດທີ່ສຸດດີທີ່ສຸດຄື **"ຄືນໄລລະຕຸລກ໊ອດຣີ"** ເປັນຄືນດຽວທີ່ດີກວ່າ 1000 ເດືອນ ການເຮັດຄວາມດີໃນເດືອນນີ້ຈະໄດ້ຮັບຜົນລະບຸນຢ່າງຫຼວງຫຼາຍ ອັລລໍຫ໌ກ່າວວ່າ **"ຄືນໄລລາຕຸລກ໊ອດ ດີກວ່າພັນເດືອນ"**

(ອັລກ໊ອດຣີ : 3)

ແຕ່ຄືນນີ້ບໍ່ມີຜູ້ໃດຮູ້ວ່າໃນແຕ່ລະປີຈະຖືກກັບຄືນໃດ, ດັ່ງນັ້ນເຮົາຈຶ່ງຄວນເຮັດຄວາມດີລະມາດຫຼາຍໆ ໃນທຸກຄືນເພື່ອບໍ່ໃຫ້ພາດຄືນນັ້ນ.

## 10.2 ຂໍ້ດີຂອງການຖືສິ້ນອົດ :

1. ໄດ້ຝຶກຝົນຄວາມຢ້ານກົວ ຕັກວາ ເຊື່ອຟັງໃນອັລລໍຫ໌ ນັ້ນເພາະການຖືສິ້ນອົດເປັນການເຮັດດີພຽງຂໍ້ດຽວທີ່ຜູ້ອື່ນບໍ່ສາມາດຮູ້ໄດ້ວ່າເຮົາຖືສິ້ນອົດ ຫຼື ບໍ່ເພາະເຮົາສາມາດແອບໄປກິນດື່ມຄົນດຽວລັບຫລັງຄົນອື່ນກໍ່ໄດ້.

ດັ່ງນັ້ນ, ຄົນທີ່ຈະຖືສິ້ນອົດຢ່າງໃຈແທ້ຈິງຈຶ່ງຕ້ອງເປັນຄົນທີ່ຢ້ານກົວອັລລໍຫ໌ເທົ່ານັ້ນ ສາມາດຫັກຫ້າມອາລົມຄວາມອຶດຫິວ ກໍ່ເພາະວ່າພຣະອົງອັລລໍຫ໌ອົງດຽວເຊິ່ງສິ່ງນີ້ສາມາດສ້າງຄວາມຢ້ານກົວຢໍາເກງ ແລະ ສ້າງຄວາມໃກ້ຊິດຕໍ່ອັລລໍຫ໌ໃນທຸກສະຖານທີ່ ແລະ ການເວລາທັ້ງທີ່ເປີດເຜີຍ ແລະທີ່ປົດບັງ ອັລລໍຫ໌ຈຶ່ງກ່າວວ່າ **"ຜູ້ສັດທາທັ້ງຫຼາຍ,ການຖືສິ້ນອົດໄດ້ບັນຍັດແກ່ພວກທ່ານແລ້ວ ເຊັ່ນດຽວກັບບົດບັນຍັດແກ່ກຸ່ມຄົນທໍາອິດກ່ອນຫນ້ານີ້.ເພື່ອພວກທ່ານຈະມີຄວາມຢ້ານກົວ."** (ອັລບະກໍຣ໌ :185)

2. ການຖືສິ້ນອົດເປັນການຝຶກຝົນຕົວເຮົາໃຫ້ອອກຫ່າງຈາກຄວາມຜິດບາບ ເມື່ອຜູ້ຖືສິ້ນອົດສາມາດຫັກຫ້າມໃຈຕົວເອງຈາກການກິນດື່ມອາຫານທີ່ຢູ່ຕໍ່ຫນ້າໄດ້, ດັ່ງນັ້ນການຫັກຫ້າມຈິດໃຈຕົນເອງຈາກການຝ່າຝືນຈາກການເຮັດບາບກໍ່ຈະງ່າຍຂຶ້ນສໍາຫລັບເຂົາ.

3. ການຖືສິ້ນອົດເຮັດໃຫ້ເຮົານຶກເຖິງຜູ້ທຸກຍາກ ແລະ ຜູ້ບໍ່ມີ ນັ້ນກໍ່ຍ້ອນວ່າບໍ່ຄົນຮັ່ງມີ ຫຼື ຄົນທຸກຍາກກໍ່ຕ້ອງຖືສິ້ນອົດກັນທຸກຄົນ ແລະທຸກຄົນຈະໄດ້ຮັບຄວາມທໍ່ລະມານຈາກຄວາມອຶດຫິວ ແລະຄວາມກະຫາຍນໍ້າ ເຮັດໃຫ້ຄິດເຖິງຄົນທຸກຍາກທີ່ບໍ່ມີອີ່ຫຍັງຈະກິນ ສິ່ງນີ້ແຫລະ ຈະສ້າງຄວາມຮູ້ສຶກສົງສານ ຕ້ອງການມອບຄວາມຊ່ວຍເຫລືອໃຫ້ແກ່ຄົນເຫຼົ່ານີ້.

**10.3 ສິ່ງທີ່ເຮັດໃຫ້ເສຍການຖືສິ້ນອົດ :**

1. ການກິນ ແລະ ດື່ມ.

ອັລລໍຫ໌ໄດ້ກ່າວວ່າ **"ຈົ່ງກິນ ແລະ ດື່ມ ຈົນກວ່າທ່ານຈະເຫັນເສັ້ນແສງສີຂາວທີ່ຂຶ້ນມາຈາກເສັ້ນສີດໍາໃນເວລາເຊົ້າມືດ ແລ້ວກໍ່ຈົ່ງຖືສິ້ນອົດຈົນຮອດເວລາກາງຄືນ (ຕະເວັນຕົກ)."** (ອັລບະກໍຣໍຫ໌ :187)

ແຕ່ຖ້າຫາກຜູ້ໃດກິນ ຫຼື ດື່ມ ໂດຍບໍ່ໄດ້ຕັ້ງໃຈກໍ່ບໍ່ເປັນບາບ ຫຼື ເສຍສິ້ນອົດໃດໆ ທ່ານນະບີກ່າວວ່າ *"ຜູ້ທີ່ລືມວ່າຕົນເອງນັ້ນຖືສິ້ນອົດແລ້ວກໍ່ກິນ ຫຼື ດື່ມ ກໍ່ຈົ່ງຖືສິ້ນອົດຕໍ່ ຖືວ່າເປັນອາຫານ ແລະເຄື່ອງດື່ມທີ່ອັລລໍຫ໌ໃຫ້"*

ການກິນແລະດື່ມນີ້ ຮ່ວມເຖິງວັດຖຸແປກປ້ອມທີ່ອາດຈະເຂົ້າໄປໃນຄໍ ຫຼື ຮູເປີດຕ່າງພາຍນອກຮ່າງກາຍນໍາ ບໍ່ວ່າຈະເປັນ ດັງ, ດວງຕາ, ຫຼື ຮູກົ້ນ ຫຼືແມ້ແຕ່ການສູບຄ້ວນ ບໍ່ວ່າຈະເປັນຢາສູບ ຫຼືການພົ່ນຢາທີ່ມີລະອອງນໍ້າ

2. ການມີສິ່ງໃດເຂົ້າຮ່າງກາຍໂດຍມີວັດຖຸປະສົງເພື່ອທົດແທນອາຫານ ແລະ ເຄື່ອງດື່ມ ເຊັ່ນການເຈາະໃຫ້ນໍ້າເກືອ ຫຼື ສັກຢາແຮ່ທາດທາງອາຫານ ເຊັ່ນວິຕາມິນ ເພາະສິ່ງເຫຼົ່ານີ້ກໍ່ໃຫ້ຄຸນຄ່າທາງໂດສະນາການທາງອາຫານ.

3. ການຮ່ວມຫລັບນອນກັບຄູ່ຜົວເມຍໂດຍມີເພດສໍາພັນ

4. ການມີນໍ້າອາສຸຈິລັ່ງອອກມາຈາກຄວາມຕັ້ງໃຈ ແຕ່ຖ້າຫາກເປັນການຝັນປຽກກໍ່ບໍ່ເຮັດໃຫ້ເສຍສິ້ນອົດ ເພາະບໍ່ໄດ້ຕັ້ງໃຈ.

5. ຄວາມພະຍາຍາມຮາກໂດຍເຈດຕະນາ ຖ້າຫາກບໍ່ຕັ້ງໃຈກໍ່ບໍ່ເປັນຫຍັງ ທ່ານສາດສະດາທູດກ່າວວ່າ *"ຜູ້ທີ່ຮ່າງກາຍບັງຄັບໃຫ້ຮາກ ທັ້ງໆ ທີ່ກາລັງຖືສິ້ນອົດຢູ່ ບໍ່ຈາເປັນຕ້ອງຖືສິ້ນອົດໃຊ້ຄືນ ສ່ວນຜູ້ທີ່ຮາກໂດຍເຈດຕະນາແມ່ນຕ້ອງຖືສິ້ນອົດໃຊ້."*

6. ຜູ້ຫຍິງທີ່ມີເລືອດປະຈໍາເດືອນ ຫຼື ເລືອດຫລັງເກີດລູກ ຜູ້ຫຍິງທີ່ມີພາວະແນວນີ້ບໍ່ຈາເປັນຕ້ອງຖືສິ້ນອົດລະຫວ່າງມີເລືອດ ແຕ່ໃຫ້ຫຍຸດໃນການຖືສິ້ນອົດ ຖ້າໃຫ້ເຊົາ ຫລັງຈາກນັ້ນຖ້າຫມົດເດືອນຣໍມາດອນໃຫ້ມາຖືສິ້ນອົດໃຊ້ຕາມຈໍານວນທີ່ບໍ່ໄດ້ຖືໃນເດືອນຣໍມາດອນ ສ່ວນເລືອດທີ່ບໍ່ແມ່ນເລືອດປະຈໍາເດືອນ ຫຼື ເລືອດຫລັງເກີດລູກ ເຊິ່ງອາດເກີດຈາກຜິດປົກກະຕິທາງສຸຂະພາບຜູ້ຫຍິງທີ່ມີພາວະແບບນີ້ ກໍ່ຈໍາເປັນຕ້ອງຖືສິ້ນອົດຢູ່.

## 10.4 ຜູ້ທີ່ໄດ້ຮັບການຍົກເວັ້ນບໍ່ໃຫ້ຖືສິ້ນອົດ :

1. ຜູ້ເຈັບປ່ວຍ ໃຫ້ມາຖືສິ້ນອົດຊົດໃຊ້ຫລັງເດືອນຣໍມາດອນ.

2. ຜູ້ເຖົ້າແກ່ ຫຼື ຜູ້ເຈັບປ່ວຍເຮື້ອຮັງ ທີ່ບໍ່ສາມາດຖືສິ້ນອົດໄດ້ ບໍ່ຈຳເປັນຖືສິ້ນອົດ, ແຕ່ຈຳເປັນຕ້ອງໃຫ້ອາຫານຄົນທຸກຍາກທົດແທນເປັນເຂົ້າສານມື້ລະ 7 ຂີດ.

3. ຜູ້ເດີນທາງ ຫຼື ພຳນັກໃນສະຖານທີ່ໃດໜຶ່ງບໍ່ເກີນສີ່ມື້ ອັລລໍຫ໌ກ່າວວ່າ **"ຜູ້ທີ່ເຈັບປ່ວຍ ຫຼື ຢູ່ໃນລະຫວ່າງການເດີນທາງ ກໍ່ໃຫ້ມາຖືສິ້ນອົດຊົດໃຊ້ ໃນມື້ທີ່ນອກໃນເດືອນຣໍມາດອນ ອັລລໍຫ໌ຕ້ອງການຄວາມສະດວກງ່າຍດາຍນຳພວກທ່ານ ບໍ່ຕ້ອງການຄວາມຫຍຸ້ງຍາກໃຫ້ເກີດຄວາມລຳບາກ."** (ອັລບະກໍຣໍຫ໌ :184)

4. ຜູ້ຫຍິງທີ່ມີເລືອດປະຈຳເດືອນ ຫຼື ເລືອດຫລັງເກີດລູກຫ້າມຖືສິ້ນອົດເດັດຂາດແລະຕ້ອງມາຖືສິ້ນອົດຊົດໃຊ້ໃນພາຍຫລັງເດືອນຣໍມາດອນ.

5. ຜູ້ຫຍິງທີ່ຖືພາ ຫຼື ຢູ່ໃນລະຫວ່າງໃຫ້ນົມລູກ ສາມາດເວັ້ນການຖືສິ້ນອົດໄດ້ ແຕ່ຕ້ອງມາຊົດໃຊ້ໃນພາຍຫລັງ ແລະທີ່ດີຄວນຈ່າຍເຂົ້າສານມື້ລະ 7 ຂີດໃຫ້ຄົນທຸກຍາກນາ.

## 10.5 ຂໍ້ຕັດສິນສາຫລັບຜູ້ທີ່ບໍ່ຖືສິ້ນອົດໃນເດືອນຣໍມາດອນ :

ຜູ້ບໍ່ຖືສິ້ນອົດທັ້ງໆ ທີ່ບໍ່ມີຂໍ້ຍົກເວັ້ນ ຫຼື ອຸປະສັກໃດໆ ຈຳເປັນຕ້ອງຂໍອະໄພໂທດຕໍ່ອັລລໍຫ໌ເນື່ອງຈາກເຂົາກຳລັງເຮັດຄວາມຜິດອັນຫຍິງໃຫຍ່ ເປັນບາບທີ່ໃຫຍ່ຫຼວງປະການໜື່ງ ແລະຈາເປັນຕ້ອງຖືສິ້ນອົດຊົດໃຊ້ໃນພາຍຫລັງເດືອນຣໍມາດອນ

ແຕ່ສຳຫລັບຜູ້ທີ່ຮ່ວມຫລັບນອນກັບຄູ່ຜົວເມຍມີເພດສຳພັນລະຫວ່າງກາງເວັນໃນເດືອນຣໍມາດອນ ຈະມີຄ່າປັບໜັກນອກຈາກຈະຕ້ອງຊົດໃຊ້ຖືສິ້ນອົດໃນມື້ນັ້ນແລ້ວ ຕ້ອງຖືສິ້ນອົດຊົດໃຊ້ສອງເດືອນຕິດຕໍ່ກັນຫ້າມຫຍຸດ ຫາກບໍ່ມີຄວາມສາມາດກໍ່ຕ້ອງໃຫ້ອາຫານແກ່ຄົນທຸກຍາກໃຫ້ຄົບ 60 ຄົນ.

ນອກຈາກການຖືສິ້ນອົດທີ່ສາສະໜາບັງຄັບໃນເດືອນິຣໍມາດອນແລ້ວ ຍັງມີການຖືສິ້ນອົດທີ່ສາສະໜາສົ່ງເສີມແຕ່ບໍ່ໄດ້ບັງຄັບ ເອີ້ນວ່າ "ການຖືສິ້ນອົດຊຸນນະ" ເຊັ່ນ ການຖືສິ້ນອົດທຸກມື້ວັນຈັນກັບວັນພະຫັດໃນທຸກອາທິດ, ການຖືສິ້ນອົດໃນວັນທີ 13,14,15 ຂອງແຕ່ລະເດືອນ ເປັນຕົ້ນ.

## 11. ການປະຕິບັດພິທີຮັດ

**"ການເຮັດພິທີຮັຈ"** ແມ່ນຫລັກການປະຕິບັດຂອງສາສະໜາອິດສະລາມພາກປະຕິບັດທີ່ສຳຄັນທີ່ສຸດຕາມລຳດັບຂໍ້ທີ 5 ໂດຍແມ່ນເປັນການບັງຄັບສຳລັບຊາວມຸດສະລິມທຸກຄົນທີ່ມີຄວາມເຂັ້ມແຂງແລະຊັບສິນຈະຕ້ອງເດີນທາງໄປຢ່າງຫນ້ອຍຫນຶ່ງຄັ້ງໃນຊີວິດ

**"ການເຮັດພິທີຮັຈ"** ໝາຍເຖິງ ການສະແຫວງບຸນໂດຍການຍ່າງອ້ອມສະຖານທີ່ບ່ອນສຳຄັນຕ່າງໆ ທີ່ເມືອງມັກກະຮ໌ ປະເທດຊາອຸດີອາຣາເບຍ ເພື່ອເຮັດພິທີທາງສາສະໜາທີ່ມີການກາຫນົດໄວ້ສະເພາະແຕ່ລະບ່ອນສະຖານທີ່ ໃນລະຫວ່າງເດືອນ 12 ຂອງປະຕິທິນອິດສະລາມໃນທຸກປີ

1. ໂດຍຈະເລີ່ມຕົ້ນຈາກການທີ່ຜູ້ເຂົ້າຮ່ວມເຮັດພິທີຮັດແມ່ນຕ້ອງອາບນ້ຳແລະປ່ຽນເຄື່ອງນຸ່ງ (ສ່ວນຫຼາຍແມ່ນເລີ່ມແຕ່ມື້ວັນທີ 8 ເດືອນ 12) ຜູ້ຊາຍໃສ່ຜ້າຂາວສອງຜືນເພື່ອສະແດງໃຫ້ເຫັນວ່າທຸກຄົນມີຄວາມສະເໝີພາບເທົ່າທຽມກັນ ສ່ວນຜູ້ຫຍິງແມ່ນຕ້ອງໃສ່ເສື້ອຜ້າຄຸມທີ່ອ່ອນໂຍນສຸພາບ ຫຼັງຈາກນີ້ຈົນກ່ວາຈະສິ້ນສຸດຂອງການເຮັດພິທີຮັດຈະມີລະບຽບວິໄນບັງຄັບສະເພາະສຳຫລັບຜູ້ເຮັດພິທີຮັດທີ່ຈະຫລີກລ້ຽງສິ່ງທີ່ຕ້ອງຫ້າມທີ່ໄດ້ກຳນົດໄວ້.

2. ຕອນບ່າຍຂອງມື້ທີ 8 ເດືອນ 12: ໃຫ້ເດີນທາງໄປສະຖານທີ່ທົ່ງມີນາ (ຄັ້ງທຳອິດ) ແລະນອນຄ້າງຄືນຢູ່ທີ່ນັ້ນ.

3.ໃນຊ່ວງເວລາກາງເວັນວັນທີ 9: ໃຫ້ເດີນທາງໄປທີ່ພັກທົ່ງອາເຮາະຟະ ໃນລະຫວ່າງມື້ນີ້ ໃຫ້ມີການສຳນຶກຄິດການອະທິຖານຂໍພອນຫຼືອ່ານຄຳພີອັລກຣຸອານໃຫ້ຫຼາຍໆ.

4. ກາງຄືນຂອງວັນທີ 9 (ເທົ່າກັບຄືນວັນທີ 10 ຕາມປະຕິທິນອິດສະລາມ ເນື່ອງຈາກວ່າອິສລາມນັບມື້ໃຫມ່ນັບຕັ້ງແຕ່ຕາເວັນຕົກດິນ): ໃຫ້ເດີນທາງຄ້າງຄືນໃນທົ່ງມຸຊດະລິຟະ ﴿M

5. ເຊົ້າວັນທີ 10: ມື້ນີ້ເປັນມື້ສຳຄັນ ມີຫຼາຍພິທີທີ່ຕ້ອງໄດ້ເຮັດ.

- ໃຫ້ເດີນທາງກັບຄືນໄປບ່ອນທົ່ງມີນາ (ຄັ້ງທີສອງ) ແລະໂຍນກ້ອນຫີນທັ້ງຫມົດ7ກ້ອນ
- ຂ້າສັດເພື່ອແຈກຈ່າຍ
- ໂກນຜົມ ຫຼື ຕັດຜົມ
- ກັບຄືນສູ່ໃຈກາງຂອງມັກກະຮ໌ ແລະຍ່າງອ້ອມອາຄານກະບະ 7 ເທື່ອ
- ຍ່າງໄປມາລະຫວ່າງ 2 ເນີນ ຊໍຟາ ມັຣວະຫ໌ ຂ້າງອາຄານກະບະ 7 ເທື່ອ
- ຫຼັງຈາກນີ້ຈະຍົກເລີກວິໄນທີ່ບັງຄັບທຸກຂໍ້ຫ້າມບໍ່ໃຫ້ເຮັດຍົກເວັ້ນບາງຂໍ້ທີ່ກ່ຽວຂ້ອງກັບເພດ.

6. ວັນທີ 11-13 ໃຫ້ເດີນທາງກັບຄືນສູ່ທົ່ງມີນາ. (ຄັ້ງທີສາມ) ແລະ ໂຍນຖິ້ມກ້ອນຫີນໃສ່ເສົາຫີນທັ້ງສາມ ທຸກມື້ພາຍຫຼັງເວລາທ່ຽງ ເສົາຫີນລະ 7 ກ້ອນຕໍ່ເສົາ ນີ້ແມ່ນການສິ້ນສຸດຂອງການເຮັດພິທີຮັດ ແລະຍົກເລີກວິໄນບັງຄັບທັ້ງຫມົດ

7. ຫຼັງຈາກນີ້ ສົມຄວນຢ້ຽມຢາມສະຖານທີ່ສໍາຄັນຕ່າງໆ ທີ່ເມືອງມັກກະຮ໌ ແລະກ່ອນອອກຈາກເມືອງໃຫ້ມາທີ່ໃຈກາງຂອງເມືອງມັກກະຮ໌ ແລະຍ່າງອ້ອມກະບະ 7 ເທື່ອເພື່ອເປັນການອາລາ.

**"ການປະຕິບັດຮັຈ"** ແມ່ນການສະແດງອອກຂອງການເສຍສະຫລະທີ່ຍິ່ງໃຫຍ່ໃນແງ່ຂອງເວລາ, ຄວາມເຂັ້ມແຂງຂອງຮ່າງກາຍ, ແລະຊັບສິ້ນ ຜູ້ທີ່ປະກອບເຮັດພິທີຮັດໄດ້ສໍາເລັດສົມບູນຈະໄດ້ຮັບການຊໍາລະລ້າງບາບທັງຫມົດທີ່ເຂົາເຈົ້າໄດ້ເຮັດຄືກັບເດັກນ້ອຍເກີດໃຫມ່ ອີກທັ້ງການເຮັດຮັຈຫຍັງເປັນການສະແດງອອກໃຫ້ເຫັນເຖິງຄວາມສາມັກຄີການເປັນປຶກແຜ່ນແລະຄວາມເປັນພີ່ນ້ອງກັນຂອງຊາວມຸດສະລິມຈາກທົ່ວໂລກທີ່ມາຮ່ວມກັນຢ່າງເປັນຮູບປະທໍາທີ່ສຸດ ສາມາດເຫັນແລະສໍາຜັດໄດ້ເນື່ອງຈາກວ່າບໍ່ມີການຈໍາແນກຊົນຊັ້ນ, ພາສາ, ເຊື້ອຊາດ ທຸກຄົນຕ້ອງເຮັດຄືກັນ ຍ່າງຄຽງຂ້າງ ແລະມີລະບຽບວິໄນດຽວກັນໂດຍບໍ່ມີຂໍ້ຍົກເວັ້ນ

ນອກຈາກນີ້ ເທດສະການຮັຈຍັງມີການບໍລິຈາກຊີ້ນສັດຂອງຄົນທີ່ປະກອບເຮັດພິທີຮັຈຂ້າເພື່ອແຈກຢາຍໃຫ້ຜູ້ທຸກຍາກ ເປັນການບໍລິຈາກທີ່ຍິ່ງໃຫຍ່ທີ່ສຸດໃນໂລກທີ່ມີເຮັດໃນແຕ່ລະປີ.

## 12. ການດະອະຫ໌ ເຊີນຊວນສູ່ສາສະໜາຂອງພຣະເຈົ້າ

ການງານທີ່ປະເສີດແລະດີທີ່ສຸດ ຄື ການຮຽກຮ້ອງເຊີນຊວນສູ່ສາສະໜາຂອງພຣະເຈົ້າ ໃຫ້ມະນຸດທັ້ງຫລາຍຮູ້ຈັກພຣະອົງ ນີ້ຄືວຽກຂອງບັນດາສາດສະດາທູດທັ້ງຫລາຍຕັ້ງແຕ່ສາສະດາທູດອາດໍາຈົນຮອດສາດສະດາທູດມູຮັມມັດ ເພາະໜ້າທີ່ຫລັກຂອງສາດສະດາທູດທຸກຄົນ ຄື ແມ່ນການຮຽກຮ້ອງສູ່ແນວທາງຂອງພຣະເຈົ້າ

ການຮຽກຮອງສູ່ພຣະເຈົ້າ ຄື ຄວາມສຸກຂອງຊີວິດ ເປັນສິ່ງໜຶ່ງທີ່ຈະເຮັດໃຫ້ມະນຸດຄົນໜຶ່ງໄດ້ຊີ້ມລົດຊາດຂອງຄວາມຫອມຫວານຂອງຜູ້ສັດທາ ທ່ານສາດສະດາທູດນັວະຫ໌ (ໂນອາ) ໄດ້ຮຽກຮ້ອງຜູ້ຄົນສູ່ສາສະໜາຂອງພຣະເຈົ້າເປັນໄລຍະເວລາ 950 ປີ ທ່ານໄດ້ໃຊ້ທຸກສີ່ວິທີການໂດຍການສອນສາສະໜາ ທັ້ງກາງເວັນແລະກາງຄືນ ທັ້ງແບບປົດບັງແລະເປີດເຜີຍ ແຕ່ບໍ່ມີຜູ້ໃດສັດທາຕໍ່ທ່ານເລີຍ ຍົກເວັ້ນພຽງຈໍານວນນ້ອຍ ເຖິງເປັນແນວນັ້ນທ່ານນະບີນັວະຫ໌ກໍ່ຍັງອົດທົນແລະດໍາເນີນວຽກງານສັ່ງສອນຜູ້ຄົນໄປ ຄືດັ່ງທ່ານສາດສະດາທູດມູຮັມໜັດທີ່ຮຽກຮອງຜູ້ຄົນໃນໄລຍະເວລາ 23 ປີ ຈົນຮອດມື້ທ່ານເສຍຊີວິດ

ການຮຽກຮ້ອງສູ່ສາສະໜາຂອງອັລລໍຫ໌ ເຮັດໃຫ້ມະນຸດປະຊາຊາດຮູ້ຈັກພຣະເຈົ້າຢ່າງແທ້ຈິງ ນີ້ຄືວຽກງານທີ່ປະເສີດທີ່ສຸດ ເພາະພຣະເຈົ້າຄືຜູ້ທີ່ ບັນດາຜູ້ສັດທາຮັກຫລາຍທີ່ສຸດ ພຣະເຈົ້າຄືຜູ້ທີ່ງົດງາມ ແລະ ສົມບູນແບບໃນທຸກໆ ສິ່ງ ພຣະເຈົ້າຄືຜູ້ປະທານສິ່ງຕ່າງໆ ໃຫ້ໃນຊີວິດເຮົາ ເຮົາຈື່ງສົມຄວນຮັກພຣະອົງ ແລະ ເຮົາສົມຄວນມອບຄວາມຮູ້ສຶກອັນເລິກຊຶ້ງໃຫ້ແກ່ທຸກໆ ຄົນ

ທໍາມະຊາດຂອງມະນຸດຖ້າຮັກສິ່ງໃດແລ້ວ ກໍ່ຍອມເວົ້າຈາເອີ້ຍໃນສິ່ງນັ້ນຫລາຍ ຄືນໍ້າໃນແກ້ວຖ້າມັນເຕັມກໍ່ຈະເອ່ຍລົ້ນອອກມາ ດັ່ງນັ້ນ ຖ້າຫົວໃຈຄົນໆ ໜຶ່ງທີ່ເຕັ້ມໄປດ້ວຍຄວາມຮັກພຣະເຈົ້າຜູ້ສ້າງ ຜູ້ໃຫ້ຕ່າງໆໃນຊີວິດເຮົາ ຜູ້ງົດງາມ ເຮົາກໍ່ຈະເວົ້າເຖິງພຣະອົງຫລາຍ ໂດຍເຫດຜົນນີ້ເອງຜູ້ທີ່ເຮັດວຽກສັ່ງສອນຜູ້ຄົນເຊີນຊວນສູ່ສາສະໜາຂອງພຣະເຈົ້າຈຶ່ງໄດ້ຮັບຜົນລະບຸນອັນໃຫຍ່ຫລວງ

ການເຊີນຊວນຜູ້ຄົນໃຫ້ຮູ້ຈັກພຣະເຈົ້າ ຄື ວຽກອັນທໍາອິດທີ່ສາດສະດາທູດໄດ້ຮັບ ຄາພີອັລກຸຣອານກ່າວວ່າ **"(ທ່ານສາດສະດາມູຮັມມັດ) ຈົ່ງລຸກຂຶ້ນ ຈົ່ງໄປຕັກເຕືອນ ແລະ ຈົ່ງໄປຖະວາຍຄວາມຫຍິ່ງໃຫຍ່ຂອງພຣະເຈົ້າ"** (ອັລມຸດດັສສິຣ : 2-3) ນີ້ຄືວຽກຂອງທ່ານສາດສະດາທູດ ແລະ ສະຫາຍຜູ້ຕິດຕາມຈົນຮອດມື້ສິ້ນໂລກ

ໃນເມື່ອເຮົາຮູ້ແບບນີ້ແລ້ວ ກໍ່ບໍ່ຄວນທີ່ຈະລະຖິ້ມວຽກງານອັນມີກຽດນີ້ ແລະເຮົາເອງກໍ່ສົມຄວນອຸທິດຕົວຕົນເສຍສະຫລະຮຽກຮອງຜູ້ຄົນ ບໍ່ແມ່ນເຮັດເພື່ອຕົວເອງ ແຕ່ເພື່ອມະນຸດປະຊາ

ຊາດທັ້ງຫລາຍ ເພາະບໍ່ມີໃຜຢາກເຫັນຄົນອື່ນທີ່ຈະຕ້ອງຖືກການລົງໂທດ ບໍ່ມີໃຜຢາກເຫັນຄົນອື່ນຕ້ອງທົນທຸກໃນໂລກນີ້ ແລະ ໂລກໜ້າ ໂດຍທີ່ເຮົາບໍ່ສາມາດຊ່ວຍເຫລືອໄດ້ເລີຍ

ການຮຽກຮ້ອງສູ່ພຣະເຈົ້າ ຄື ວຽກງານທີ່ປະເສີດທີ່ສຸດພຣະເຈົ້າໄດ້ກ່າວໄວ້ໃນຄຳພີອັລກຸຣອານວ່າ **"ແມ່ນໃຜຈະມີຄາເວົ້າທີ່ປະເສີດທີ່ສຸດໄປກວ່າ ຄົນທີ່ຮຽກຮອງໄປສູ່ພຣະເຈົ້າ ແລະ ປະຕິບັດຄວາມດີ, ແລະ ຫຍັງກ່າວວ່າເຮົານັ້ນຄືຜູ້ສັດທາສ່ວນຫນຶ່ງ"** (ຟຸສສິລັຕ : 33)

ພຣະເຈົ້າໄດ້ກ່າວອີກວ່າ **"ຈົ່ງກ່າວເຖີດວ່າ : ນີ້ຄືວິທີທາງຂອງເຮົາ ເຮົາແລະ ຜູ້ປະຕິບັດຕາມເຮົາຕ່າງຮຽກຮ້ອງສູ່ພຣະເຈົ້າດ້ວຍຫລັກຖານອັນຊັດເຈນ"** (ຍູຊຸຟ : 108) ດັ່ງນັ້ນ, ການຮຽກຮອງສູ່ພຣະເຈົ້າ ຄື ວຽກຂອງສາດສະດາທູດຂອງເຮົາ ຖ້າຫາກເຮົາຮັກພຣະເຈົ້າແທ້ຈິ່ງ ແລະ ຮັກທ່ານສາດສະດາທູດຢ່າງແທ້ຈິງເຮົາກໍ່ຕ້ອງປະຕິບັດຕາມທ່ານ

ການຮຽກຮອງເຊີນຊວນສູ່ພຣະເຈົ້ານັ້ນຈະໄດ້ຮັບຜົນລະບຸນອັນໃຫຍ່ຫລວງ ທ່ານສາດສະດາທູດ "ນະບີ" ກ່າວວ່າ **"ຂໍສາບານນາພຣະອົງອັລລໍຫ໌ ການທີ່ອັລລໍຫ໌ໄດ້ໃຫ້ທາງນຳແກ່ຜູ້ຫນຶ່ງຜ່ານທ່ານນັ້ນ ດີກວ່າໂລກທັ້ງໃບ ແລະ ສັບພະສິ່ງທັ້ງຫມົດໃນນັ້ນນຳ"**

ດັ່ງນັ້ນ ການທີ່ທ່ານເປັນສາເຫດໃຫ້ຜູ້ຫນຶ່ງໄດ້ຮັບທາງນຳນັ້ນດີກວ່າທີ່ທ່ານໄດ້ຄອບຄອງຊັບສົມບັດທັ້ງຫມົດໃນເທົ່ງໂລກນີ້ ທັ້ງຫມົດນີ້ພຽງແຕ່ມີຄົນຮັບອິສລາມນຳທ່ານພຽງຄົນຫນຶ່ງເທົ່ານັ້ນ ແລ້ວຖ້າຫາກມີຜູ້ຮັບອິສລາມກັບທ່ານຫຼາຍຄົນກໍຈະຍິ່ງເພີ່ມຄວາມດີອີກຫຼວງຫຼາຍ ຄວາມປະເສີດຢ່າງຫນຶ່ງຂອງການເຜີຍແຜ່ເຊີນຊວນຜູ້ອື່ນສູ່ສາສະຫນາຂອງພຣະອັລລໍຫ໌ ຄື ທ່ານນະບີກ່າວວ່າ **"ຜູ້ທີ່ຊີ້ນຳສູ່ຄວາມດີ ກໍ່ຄືຜູ້ເຮັດຄວາມດີນຳ"** ນີ້ຄືຄວາມເມດຕາຫນຶ່ງຂອງອັລລໍຫ໌ ຖ້າຫາກທ່ານໄດ້ຊີ້ນຳແນະນຳໃຫ້ຄົນໆ ຫນຶ່ງ ແລ້ວເຂົາກໍ່ຮັບອິສລາມ ທ່ານກໍ່ຈະໄດ້ຮັບຜົນລະບຸນ ຫາກເຂົາລະມາດທ່ານກໍ່ຈະໄດ້ຮັບຜົນລະບຸນການລະມາດຂອງເຂົາ ຫາກເຂົາເຮັດສິ່ງດີໃດທ່ານກໍ່ຈະໄດ້ຮັບຄວາມດີຄືກັບເຂົານຳ ເທົ່າກັບວ່າທ່ານຈະໄດ້ຮັບຄວາມດີຫຼວງຫຼາຍ ແລະ ເພີ່ມພູນຢູ່ຕະຫລອດ

ໂດຍເຫດນີ້ ຄົນດີໆ ຢ່າງຫຼວງຫຼາຍຈຶ່ງຕ້ອງຮຽກຮ້ອງໃຫ້ສູ່ສາສະຫນາຂອງພຣະອົງອັລລໍຫ໌ທັ້ງກາງເວັນ ແລະ ກາງຄືນ ໂດຍສື່ຕ່າງໆ ບໍ່ວ່າຈະເປັນງານຂຽນ, ການເວົ້າອະພິປາຍ, ການໂອ້ລົມ, ການລ້ຽງອາຫານ ແລະ ອື່ນໆອີກຢ່າງຫຼວງຫຼາຍ ພວກເຮົານັ້ນສະແຫວງຫາວິທີການຕ່າງໆ ໃຫ້ໄດ້ຫຼາຍທີ່ສຸດເທົ່າທີ່ຈະຄິດໄດ້ ເພື່ອໃຫ້ຄົນໄດ້ຮັບທາງນຳຈາກອັລລໍຫ໌ ນັ້ນຄືສາສະຫນາອິສລາມ

ໂດຍເຫດນີ້ **"ການດະອະ"** ການເຊີນຊວນຜູ້ຄົນສູ່ສາສະໜາອິສລາມ ຈຶ່ງເປັນຄວາມດີທີ່ຫຍິ່ງໃຫຍ່ທີ່ສຸດຫນຶ່ງຢ່າງ ນໍາມາສູ່ຈຸດຈົບອັນສວຍງາມໃນບັນປາຍຊີວິດຂອງຜູ້ເຮັດຄວາມດີຂໍ້ນີ້ ແລະ ເສີມສ້າງຄວາມຫນັກແຫນ້ນຕໍ່ສາສະໜາໃນໃຈຂອງຜູ້ເຮັດຫນ້າທີ່ແບບນີ້

## 12.1 ຄວາມສາຄັນຂອງການເຜີຍແຜ່ສາສະຫນາອິສລາມ

1. ເຮັດໃຫ້ສາສະຫນາອິສລາມນັ້ນແຜ່ຂະຫຍາຍມີຜູ້ຮັບເຊື່ອຫຼາຍຂຶ້ນ ແລະ ມອບຕົວເປັນບ່າວຕໍ່ພຣະອົງອັລລໍຫ໌ຫຼາຍຂຶ້ນ.

2. ເປັນການໃຫ້ທາງນໍາແກ່ຜູ້ຄົນ ສອນເລື່ອງສາສະຫນາໃຫ້ແກ່ເຂົາ ໃຫ້ຜູ້ຄົນຮູ້ຈັກສິ່ງທີ່ພຣະອົງອັລລໍຫ໌ ອານຸຍາດ (ຮະລ້າລ) ແລະ ສິ່ງທີ່ພຣະອົງອັລລໍຫ໌ບໍ່ອານຸຍາດ (ຮະຣອມ) ໃຫ້ຮູ້ຈັກກອບຂອບເຂດວິໄນທີ່ພຣະອົງອັລລໍຫ໌ກໍານົດຕໍ່ມະນຸດ.

3. ເພື່ອໃຫ້ຊີວິດໄດ້ດໍາເນີນໄປຢ່າງສະຫງົບສຸກ ບໍ່ວ່າຈະຢູ່ໃນດ້ານການຄ້າ, ເລື່ອງຄອບຄົວ, ເລື່ອງຂອງການມິດໄມຕີສໍາພັນກັບຄົນອື່ນ.

4. ຖ້າຜູ້ຄົນຮັບຮູ້ສິນທໍາທີ່ອິສລາມສອນ ກໍ່ຈະຜ່ອນຄາຍຄວາມຄິດໃນແງ່ລົບທີ່ມີນໍາກັນ ຄົນແຂງແຮງຈະຊ່ວຍເຫລືອຄົນທີ່ອ່ອນແອ.

5. ທັ້ງຜູ້ຮຽກຮ້ອງ ແລະ ຜູ້ທີ່ໄດ້ຮັບຄໍາຮຽກຮ້ອງໃຫ້ໄດ້ຮັບອິສລາມ ຈະໄດ້ຮັບຄວາມສຸກທັ້ງໂລກນີ້ ແລະ ໂລກຫນ້າ.

6. ຖ້າທຸກຄົນຍອມຮັບຄໍາສອນຂອງສາສະຫນາອິສລາມແລ້ວ ສິດທິຕ່າງໆ ຈະໄດ້ຮັບການປົກປ້ອງ ບໍ່ວ່າຈະເປັນດ້ານຊັບສິ້ນ, ກຽດສັກສີ, ເລືອດເນື້ອ ດ້ວຍເຫດນີ້ສັງຄົມຈະໄດ້ຮັບຄວາມສະຫງົບສຸກ.

ແຕ່ການຮຽກຮອງສູ່ສາສະຫນາອິສລາມນັ້ນຕ້ອງອາໄສຄວາມຮູ້ ອັລລໍຫ໌ກ່າວວ່າ **"ຈົ່ງກ່າວນີ້ຄືເສັ້ນທາງຂອງເຮົາ ເຮົາ ແລະ ຜູ້ປະຕິບັດຕາມເຮົາຕ່າງຮຽກຮ້ອງສູ່ພຣະເຈົ້າດ້ວຍຫລັກຖານອັນຊັດເຈນ"** (ຍູຊຸຟ : 108) ຄໍາວ່າ "ຫລັກຖານອັນຊັດເຈນ" ນີ້ຄື ການຮູ້ຈັກພຣະອົງອັລລໍຫ໌ ແລະ ຮູ້ຈັກຄໍາສອນໃນສາສະຫນາຂອງພຣະອົງ

ດ້ວຍເຫດນີ້, ຜູ້ທີ່ຈະເຮັດຫນ້າທີ່ຮຽກຮ້ອງນັກດະອະຫ໌ ຈະຕ້ອງຮຽນຮູ້ສາສະຫນາໃນລະດັບຫນຶ່ງມາກ່ອນ ນັ້ນເພາະການສຶກສາຫາຄວາມຮູ້ນັ້ນຄືເສັ້ນທາງສູ່ສະຫວັນ ຜູ້ຮູ້ຈະໄດ້ຮັບຄາຂໍອະໄພໂທດຈາກສັບພະສິ່ງໃນຊັ້ນຟ້າ ແລະ ແຜ່ນດິນ ຜູ້ຮູ້ຄືສາຍຕະກູນຂອງບັນດາສາດສະດາທູດ ທ່ານນະບີກ່າວວ່າ *"ຜູ້ໃດທີ່ເດີນທາງສະແຫວງຫາຄວາມຮູ້ ອັລລໍຫ໌ຈະໃຫ້ເສັ້ນທາງສູ່ສະຫວັນຂອງເຂົາງ່າຍຂຶ້ນ ມາລາອິກະຫ໌ນັ້ນຈະຫວ່າງປີກໃຫ້ກັບຜູ້ສຶກສາຄວາມຮູ້ ເນື່ອງຈາກພໍໃຈໃນຄວາມດີທີ່ເຂົາໄດ້ເຮັດ ສັບພະສິ່ງທັ້ງຫຼາຍໃນຟາກຟ້າ ແລະ ແຜ່ນດິນ ຈະຂໍການອະໄພໂທດໃຫ້ແກ່ເຂົາ ແມ້ແຕ່ປາໃນນ້ຳ*

ຄວາມປະເສີດຂອງຜູ້ຮູ້ເຫນືອກວ່າຜູ້ເຮັດຄວາມດີແຕ່ບໍ່ຮູ້ສິ່ງນັ້ນ ກໍ່ຄືຄວາມງາມຂອງດວງເດືອນເຫນືອດາວທັ້ງຫຼາຍ ຜູ້ຮູ້ນັ້ນຄືຕະກູນເຊື້ອສາຍຂອງບັນດາສາດສະດາທູດ ນັ້ນກໍ່ຍ້ອນວ່າສາດສະດາທູດທັ້ງຫມົດບໍ່ໄດ້ຖິ້ມມໍລະດົກເປັນເງິນທອງໄວ້ ແຕ່ຖິ້ມມໍລະດົກເປັນຄວາມຮູ້ ສະນັ້ນ, ໃຜທີ່ຮັບຄວາມຮູ້ນີ້ໄວ້ກໍ່ຄືຜູ້ທີ່ໄດ້ຮັບມໍລະດົກຢ່າງຢ່າງສົມບູນແນ່ນອນ

## 13. ຊີວະປະຫວັດທ່ານສາດສະດາທູດມຸຮັມມັດ (ຂໍໃຫ້ອັລລໍຫ໌ໄດ້ໂປດເມດຕາ ແລະ ໃຫ້ຄວາມສັນຕິກັບທ່ານ)

ທ່ານນະບີມູຮັມຫມັດເກີດຢູ່ເມືອງມັກກະຫ໌ ປະເທດຊາອຸດິອາລະເບຍ ປີ ຄ.ສ. 571 ໃນໄວຫນຸ່ມທ່ານເປັນທີ່ຮູ້ຈັກໃນສາຍຍາ **"ອັລອາມີນ"** ແປວ່າ **"ຜູ້ຊື່ຕຣົງ"** ເມື່ອທ່ານອາຍຸ 40 ປີ ທ່ານໄດ້ຮັບຄຳສັ່ງຈາກພຣະອົງອັລລໍຫໃຫ້ເປັນສາດສະດາທູດ ໃນ 3 ປີທຳອິດທ່ານໄດ້ເຜີຍແຜ່ແກ່ຄອບຄົວ ແລະ ພີ່ນ້ອງໃກ້ຊິດ ແລະຫມູ່ສະນິດເທົ່ານັ້ນ ຜູ້ທີ່ຮັບອິສລາມເປັນຄົນທຳອິດຄື ເມຍຂອງທ່ານ "ທ່ານຍິງຄໍດີຍະຫ໌"

ຫລັງຈາກນັ້ນອັລລໍຫກໍ່ໄດ້ສັ່ງໃຫ້ທ່ານສາດສະດາທູດເຜີຍແຜ່ຄາສອນອິສລາມໃຫ້ມະນຸດທຸກຄົນ ໃນລະຫວ່າງ 23 ປີທີ່ທ່ານເຮັດຫນ້າທີ່ເຜີຍແຜ່ຄຳສອນອິສລາມນັ້ນ ທ່ານເປັນແບບຢ່າງທີ່ງົດງາມແກ່ຜູ້ຄົນໃນທຸກດ້ານ, ບໍ່ວ່າຈະເປັນໃນດ້ານຄວາມເປັນຜູ້ນຳ, ໃນດ້ານມາລະຍາດສິນທຳ, ການເຮັດຄວາມດີ ທ່ານເສຍຊີວິດໃນປີ ຄ.ສ. 635 ຕອນອາຍຸໄດ້ 63 ປີ

### *ຊ່ວງເລີ່ມຕົ້ນຂອງການເປັນສາດສະດາທູດ*

ເມື່ອທ່ານສາດສະດາທູດອາຍຸໄດ້ເກືອບ 40 ປີ ທ່ານມັກຈະອອກຫ່າງຈາກຜູ້ຄົນໄປຢູ່ຜູ້ດຽວໃນພູເຂົາໃນຖ້ຳ **"ຮິຣໍຫ໌"** ໃນຄືນຫນຶ່ງໃນຄ່ຳຄືນຂອງເດືອນຣໍມາດອນເຊິ່ງເປັນເດືອນທີ 9 ຂອງປະຕິທິນອິສລາມ ໄດ້ມີທູດຟ້າ (ມະລາອິກະຫ໌) ທີ່ຊື່ວ່າ "ຍິບຣິລ" ມາຫາທ່ານ ພ້ອມກ່າວວ່າ "ອິກເຣາະ" ແປວ່າ "ຈົ່ງອ່ານ"

ທ່ານສາດສະດາທູດກໍ່ຕອບວ່າ "ຂ້ອຍອ່ານບໍ່ເປັນ" ທ່ານຢ້ານຫຼາຍ

ເທວະດາຍິບຣິລໄດ້ກ່າວຊ້ຳອີກ 3 ເທື່ອ ທ່ານສາດສະດາທູດກໍ່ຕອບທຸກເທື່ອວ່າ "ອ່ານບໍ່ເປັນ" ເພາະທ່ານສາດສະດາທູດນັ້ນບໍ່ເຄີຍໄດ້ຮຽນອ່ານ ຂຽນ

ແລະໃນຄັ້ງທີ່ 4 ສຸດທ້າຍຍິບຣິລກໍ່ໄດ້ກ່າວອັລກຸຣອານທີ່ມາຈາກອັລລໍຫ໌ໃຫ້ທ່ານສາດສະດາທູດຟັງວ່າ "ຈົ່ງອ່ານ ດ້ວຍພຣະນາມພຣະເຈົ້າຂອງທ່ານ ຜູ້ຊົງສ້າງ, ຜູ້ຊົງສ້າງມະນຸດຈາກກ້ອນເລືອດ, ຈົ່ງກ່າວ ພຣະເຈົ້າຂອງທ່ານໃຈບຸນທີ່ສຸດ, ຜູ້ຊົງສອນດ້ວຍປາກກາ, ສອນມະນຸດໃນສິ່ງທີ່ເຂົາບໍ່ຮູ້"

(ອັລອະລັກ : 1-5)

ຫຼັງຈາກນັ້ນ, ທ່ານສາດສະດາທູດໄດ້ກັບມາເຮືອນຫາເມຍຂອງທ່ານ "ຄໍດີຍະຫ໌" ໃນຂະນະທ່ານມີຄວາມຢ້ານກົວຢ່າງຫຼາຍທີ່ທ່ານໄດ້ເຈີ ເມຍຂອງທ່ານເປັນຜູ້ທີ່ມີໄຫວພິບປັນຍາ ໄດ້ຊວນທ່ານໄປຫາຊາວອາຫຣັບຜູ້ຮູ້ຈາກຄຳພີອັນເກົ່າດັ່ງເດີມຂອງສາສະໜາຄຣິດສະຕຽນ ແລະ ຍິວ ທ່ານນັ້ນມີຊື່ວ່າ "ວໍຣໍເກາະຫ໌ ອິບນຸ ເນົາຟັລ" ເຊິ່ງແມ່ນຄົນທີ່ເຖົ້າແກ່ອາຍຸຫຼາຍແລ້ວ ແລະ ຕາແນມບໍ່ເຫັນ ແລະ ເປັນຜູ້ມີຄວາມຮູ້ໃນພາສາເຮັບເຣີໃນພາສາຍິວ

ທ່ານຮູ້ດີວ່າເຫດການທີ່ທ່ານສາດສະດາທູດມູຮັມຫມັດເຈີນັ້ນເປັນສິ່ງທີ່ຖືກລະບຸໄວ້ໃນຄຳພີດັ້ງເດີມຂອງຍິວ ແລະ ຄຣິສະຕຽນໄວ້ແລ້ວ ວ່າຈະມີທ່ານສາດສະດາທູດຄົນສຸດທ້າຍຖືກສົ່ງມາ ທ່ານວໍຣໍເກາະຫ໌ ເລີຍຕອບກັບທ່ານສາດສະດາທູດກັບວ່າ **"ຜູ້ທີ່ມາຫາທ່ານນັ້ນຄື ທູດສະຫວັນຄົນດຽວກັນທີ່ມາຫາໂມເຊ (ສາດສະດາທູດມູຊາ) ຂ້ອຍນ່າຈະມີຊີວິດຢູ່ຈົນຮອດເວລາທີ່ຄົນຂອງທ່ານໄລ່ອອກຈາກເມືອງ"**

ທ່ານນະບີຈຶ່ງຖາມວ່າ "ພວກເຂົາຈະໄລ່ຂ້ອຍອອກຈາກເມືອງຫວາ?" ວໍຣໍເກາະຫ໌ ກໍ່ຕອບວ່າ "ແມ່ນ ທຸກຄົນທີ່ນຳຄຳສອນແບບດຽວກັບທ່ານຍອມຖືກທຳຮ້າຍ ຫາກວ່າຂ້ອຍຍັງມີຊີວິດຢູ່ທັນເວລານັ້ນ ຂ້ອຍກໍ່ຈະຊ່ວຍເຫລືອທ່ານແນ່ນອນ"

ຫຼັງຈາກນັ້ນຫຼາຍມື້ ທ່ານສາດສະດາທູດກໍ່ໄດ້ຍິນສຽງເອີ້ນຫາຈາກຟາກຟ້າອີກ ທູດຟ້າຍິບຣິລ (ຄັບຣິເອນ) ມາຫາທ່ານພ້ອມກັບນາອັລກຸຣອານມາໃຫ້ທ່ານອີກຄື ໂອງການວ່າ **"ໂອ້ຜູ້ຫົ່ມຮ່າງກາຍຈົ່ງລຸກຂຶ້ນ ແລະ ໄປຕັກເຕືອນ, ຈົ່ງກ່າວຄວາມຫຍິ່ງໃຫຍ່ຂອງພຣະເຈົ້າຂອງທ່ານ, ຈົ່ງເຮັດຄວາມສະອາດເສື້ອຜ້າຂອງທ່ານ, ແລະ ຈົ່ງອອກຫ່າງຈາກສິ່ງສົກກະປົກ,"** (ອັລມຸດດັຊຊິຣ : 1-5)

ນີ້ຄືໂອງການຄຳສັ່ງໃຫ້ທ່ານສາດສະດາທູດເລີ່ມຕົ້ນລຸກຂຶ້ນເຜີຍແຜ່ຄຳສອນສາສະໜາອິສລາມຈາກພຣະເຈົ້າ ທ່ານສາດສະດາທູດມຸຮັມໝັດໄດ້ປະຕິບັດໜ້າທີ່ເປັນຜູ້ເຜີຍແຜ່ຄຳສອນຈາກພຣະເຈົ້າ 23 ປີ ໂດຍແບ່ງເປັນຊ່ວງເວລາທີ່ຢູ່ໃນເມືອງມັກກະຫ໌ 13 ປີ ແລະ ຢູ່ເມືອງມະດີນະຫ໌ 10 ປີ

**13.1 ການເຜີຍແຜ່ທີ່ເມືອງມັກກະຫ໌ແບ່ງອອກເປັນ 2 ໄລຍະ ຄື :**

1. ການເຜີຍແຜ່ແບບປິດບັງ ຫຼື ແບບລັບໆ ເປັນໄລຍະເວລາ 3 ປີ.

ເນື່ອງຈາກເມືອງມັກກະຫ໌ໃນຍຸກນັ້ນ ຮ່ວມທັ້ງແຜ່ນດິນອາຫຣັບ ແລະອານາຈັກອື່ນໆ ຂອງໂລກທັ້ງໝົດເຕັມໄປດ້ວຍຄວາມຊົ່ວ ບໍ່ມີສິນທຳ, ບູຊາຮູບປັ້ນທີ່ບໍ່ໃຫ້ຄຸນ ແລະ ບໍ່ໃຫ້ໂທດໃດໆ ໂດຍເຫດນີ້ ການຮຽກຮ້ອງສູ່ສາສະໜາອິສລາມທີ່ສອນໃຫ້ກາບໄຫວພຣະອົງອັລລໍຫ໌ພຽງຜູ້ດຽວຈຶ່ງເປັນເລື່ອງທີ່ຍາກຫຼາຍ ດ້ວຍເຫດນີ້, ທ່ານສາດສະດາທູດຈຶ່ງຕ້ອງອາໄສການເຜີຍແຜ່ແບບຄ່ອຍເປັນຄ່ອຍໄປໂດຍເລີ່ມຕົ້ນຈາກຄອບຄົວຂອງທ່ານ ແລະ ເພື່ອນສະນິດກ່ອນ ໃຫ້ຮູ້ຈັກຄວາມຈິງ

ດັ່ງນັ້ນ, ເມຍຂອງທ່ານ "ຄໍດີຍະຫ໌" ແລະຄົນຮັບໃຊ້ຂອງທ່ານ "ເຊດ" ແລະລູກພີ່ລູກນ້ອງຂອງທ່ານ "ອະລີ" ແລະ ເພື່ອນສະນິດຂອງທ່ານ "ອະບູບັກ" ຈຶ່ງເປັນຜູ້ຄົນທາອິດທີ່ຕອບຮັບຄາເຊີນຊວນສູ່ສາສະໜາອິສລາມຂອງທ່ານສາດສະດາທູດ ຈາກນັ້ນອະບູບັກກໍ່ໄດ້ເຊີນຊວນໝູ່ສະນິດຂອງທ່ານອີກໃຫ້ຮູ້ຈັກສາສະໜາອິສລາມ ຈຶ່ງມີຄົນຮັບອິສລາມເພີ່ມ ບໍ່ວ່າຈະເປັນທ່ານ ອຸສມານ, ທ່ານສຸເບດ, ທ່ານອັບດຸຣເຣາະຫ໌ມານ, ທ່ານສະອັດ, ທ່ານຕອລຫະຫ໌ ແລະ ອິສລາມກໍ່ໄດ້ເຜີຍແຜ່ໃນເມືອງມັກກະຫ໌ທີ່ລະຄົນໃນຊ່ວງເວລາໄລຍະ 3 ປີນີ້ ຄົນທີ່ຮັບອິສລາມນັ້ນບ້າງຄົນກໍ່ເປັນຜູ້ຮັ່ງມີ ມີຊາດຕະກູນ, ແຕ່ບ້າງຄົນກໍ່ເປັນຄົນທຸກທີ່ສຸດ ແລະບ້າງຄົນກໍ່ເປັນທາສ

2. ການເຜີຍແຜ່ສາສະໜາຢ່າງເປີດເຜີຍ.

ພາຍຫລັງ 3 ປີທາອິດ, ອັລລໍຫ໌ໄດ້ສັ່ງໃຫ້ທ່ານສາດສະດາທູດເລີ່ມເຜີຍແຜ່ກັບຍາດຕິພີ່ນ້ອງທັ້ງໝົດ ອັລລໍຫ໌ກ່າວວ່າ **"ຈົ່ງຕັກເຕືອນຍາດຕິພີ່ນ້ອງຂອງທ່ານທີ່ໃກ້ຊິດ"** (ອັຊຊຸອະຣໍ 214)

ຫຼັງຈາກນັ້ນ, ທ່ານສາດສະດາທູດຈຶ່ງໄດ້ຍ່າງຂຶ້ນມາໃນເນີນພູເຂົາຊໍຟາເພື່ອປະກາດເອີ້ນ "ຕະກູນກຸເຣຊ" ຂອງທ່ານທັ້ງໝົດ ແລະ ສອນໃຫ້ຮູ້ຈັກພຣະເຈົ້າ ແຕ່ຄົນພວກນັ້ນກັບດູຖູກທ່ານທັ້ງກ່ອນໜ້ານັ້ນເຄີຍໄວ້ເນື້ອເຊື່ອໃຈທ່ານມາຕະຫຼອດ ຄົນພວກນີ້ປະຕິເສດຄາເຊີນຊວນທ່ານສາດສະດາທູດ ແຕ່ທ່ານສາດສະດາທູດກໍ່ບໍ່ສົນໃຈຈາກຄຳດູຖູກຈາກພວກເຫຼົ່ານີ້ພ້ອມຍັງໜັກແໜ້ນຕໍ່ໜ້າທີ່ຕໍ່ການຮຽກຮ້ອງມະນຸດສູ່ຄຳສອນຂອງອິສລາມຕໍ່ໄປ

ຫລັງຈາກນັ້ນບໍ່ດົນ ເມື່ອຕະກູນກຸເຣຊເຊິ່ງແມ່ນຕະກູນຜູ້ປົກຄອງໃນເມືອງມັກກະຫ໌ໃນຍຸກນັ້ນ ແລະ ເປັນຕະກູນທີ່ມີອຳນາດສູງຂອງຊົນເຜົ່າອາຫຣັບ ແລະ ເປັນຕະກູນຂອງທ່ານສາດສະດາທູດ

ເອງ, ພວກເຂົາເລີ່ມຮູ້ສຶກສູນເສຍອິດທິພົນຈາກການທີ່ມີຄົນພາຍໃຕ້ອິດທິພົນຫຼາຍຄົນໄປເຂົ້າຮັບອິສລາມ ຕະກູນກຸເຣຊຈຶ່ງນຳຄົນທີ່ຮັບອິສລາມມາລົງໂທດຢ່າງຮຸນແຮງເພື່ອໃຫ້ອອກຈາກສາສະຫນາອິສລາມ ແຕ່ພວກເຂົາທຸກຄົນກໍ່ຢືນຢັດໃນສາສະຫນາ ແມ້ອາດຈະຕາຍກໍ່ຕາມ

ເມື່ອບໍ່ພົບເຫັນເສັ້ນທາງທີ່ຈະທຳລາຍສາສະຫນາຂອງທ່ານສາດສະດາທູດໄດ້ແລ້ວ ຕະກູນກຸເຣຊກໍ່ໄດ້ດຳເນີນການຕັດຂາດ ແລະ ປິດລອມມຸສລິມຜູ້ສັດທາທີ່ພູເຂົາແຫ່ງຫນຶ່ງ ການຕັດຂາດນີ້ຫມາຍເຖິງ : ບໍ່ຊື້ຂາຍ, ບໍ່ແຕ່ງງານ, ບໍ່ໂອ້ລົມນຳ ຕະກູນກຸເຣຊໄດ້ຂຽນບັນທຶກໄວ້ແລ້ວໄປຜູກໄວ້ບົນອາຄານກະບະຫ໌ ການຕັດຂາດນີ້ດຳເນີນຕໍ່ໄລຍະ 3 ປີ ມຸສລິມຕ້ອງທຸກຍາກຢ່າງຫຼວງຫຼາຍເນື່ອງຈາກຂາດອາຫານ ແລະ ນ້ຳດື່ມ ທ່ານສາດສະດາທູດເຖິງຂັ້ນຕ້ອງກິນໃບໄມ້ ແຕ່ແນວນັ້ນຄົນດີບ້າງຄົນທີ່ບໍ່ໄດ້ຮັບສາສະຫນາອິສລາມກໍ່ຮູ້ສຶກສົງສານ ແລະ ແອບນຳອາຫານມາໃຫ້ຢູ່ເລື້ອຍໆ ຈົນຄົນໃນຕະກູນກຸເຣຊຄົນຫນຶ່ງທີ່ທົນບໍ່ໄດ້ກັບການກະທຳນີ້ໄດ້ອອກມາປະທ້ວງ ແລະ ກໍ່ໄດ້ພົບວ່າບັນທຶກການຕັດຂາດນີ້ທີ່ຖືກຜູກມັດເອົາໄວ້ຂ້າງອາຄານກະບະຫ໌ໄດ້ຂາດຫມົດແລ້ວ ໂດຍອຳນາດຈາກພຣະອົງອັລລໍຫ໌

ໃນຊ່ວງປີສຸດທ້າຍໃນການຕັດຂາດນີ້ ທ່ານສາດສະດາທູດໄດ້ຮັບຄວາມທຸກເສົ້າ ຢ່າງຫຼວງຫຼາຍທີ່ໄດ້ສູນເສຍເມຍຄົນທຳອິດຂອງທ່ານ ຄໍດີຍະຫ໌ ແລະ ລຸງຂອງທ່ານ ທີ່ຄ່ອຍປົກປ້ອງທ່ານມາຕະຫຼອດ ຄື "ອາບູຕໍລິບ"

***ການດະວະຫ໌ເຊີນຊວນ ສາສະຫນານອກເມືອງມັກກະຫ໌***

ເມື່ອທ່ານສາດສະດາທູດຮູ້ສຶກວ່າການສອນສາສະຫນາໃນເມືອງມັກກະຫ໌ບໍ່ເກີດຜົນ ທ່ານຈຶ່ງລອງໄປສອນສາສະຫນາໃນເມືອງຂ້າງໆ ມັກກະຫ໌ ຄື ເມືອງ "ຕໍອິຟ" ເຊິ່ງມີ "ຕະກູນສະກີຟ" ເປັນຜູ້ປົກຄອງເບິ່ງແຍ້ງ ແຕ່ສິ່ງທີ່ທ່ານໄດ້ຮັບຄືການຍຽດຍາມດູຖູກ ແລະ ຖືກໂຍນກ້ອນຫີນໄລ່ ເມື່ອທ່ານກັບມາເມືອງມັກກະຫ໌ອັລລໍຫ໌ໄດ້ປອບໂຍນທ່ານ ໂດຍໃນຂະນະທີ່ທ່ານສອນອິສລາມແກ່ຜູ້ເດີນທາງມາສະແຫວງບຸນມາເມືອງມັກກະຫ໌ທຸກປີ ປະກົດວ່າມີຄະນະຫນຶ່ງທີ່ມາຈາກເມືອງມະດີນະຫ໌ທາງຕອນເຫນືອຂອງມັກກະຫ໌ສົນໃຈຄຳສອນອິສລາມຂອງທ່ານ ຊາວມາດີນະຫ໌ກຸ່ມນີ້ຈຶ່ງຂໍໃຫ້ທ່ານສາດສະດາທູດສົ່ງສະຫາຍ ຫຼື ຊໍຮາບະຫ໌ຂອງທ່ານໄປເປັນຕົວແທນສອນສາສະຫນາອິສລາມທີ່ເມືອງມາດີນະຫ໌ ຫຼັງຈາກນັ້ນເມືອງມາດີນະຫ໌ກໍ່ເຕັ້ມໄປດ້ວຍຜູ້ຄົນທີ່ປ່ຽນມາຮັບສາສະຫນາອິສລາມ

## 13.2 ການເຜີຍແຜ່ອິສລາມໃນເມືອງມາດີນະຫ໌

ມຸສລິມຢ່າງຫຼວງຫຼາຍໄດ້ອົບພະຍົບຍ້າຍເຮືອນມາຢູ່ເມືອງມາດີນະຫ໌ເພື່ອຫລີກລ້ຽງຈາກການຖືກທຳລາຍຈາກຜູ້ປະຕິເສດອິສລາມໃນເມືອງມັກກະຫ໌ ແລະ ເພື່ອສ້າງດິນແດນໃຫມ່ທີ່ຈະໃຊ້ຊີວິດໄດ້ຢ່າງສະຫງົບສຸກ ບັນດາຊໍຮາບະຫ໌ ຫຼື ສະຫາຍຂອງທ່ານສາດສະດາທູດໄດ້ປະຖິ້ມບ້ານເກີດເມືອງ

ນອນລະຖິ້ມທຸກສິ່ງທຸກຢ່າງເພື່ອອິສລາມ ອົບພະຍົບຍ້າຍມາຢູ່ເມືອງມາດີນະຫ໌ ຈົນເມືອງມັກກະຫ໌ເກືອບບໍ່ມີມຸສລິມຢູ່ເລີຍຍົກເວັ້ນທ່ານສາດສະດາທູດ ແລະ ຜູ້ສັດທາບ້າງຄົນ

ຕະກູນກຸເຣຊຈຶ່ງຮູ້ສຶກວ່າຕໍ່ໄປພາຍພາກໜ້າອິສລາມນີ້ ອາດຈະມາຄອບຄອງເມືອງມັກກະຫ໌ອີກໄດ້ ຕະກູນກຸເຣຊຈຶ່ງປະຊຸມກັນ ແລະ ມີມະຕິໃຫ້ສັ່ງຂ້າທ່ານສາດສະດາທູດ ແຕ່ເພື່ອໃຫ້ທຸກຕະກູນຮັບຜິດຊອບໃນການຂ້າຕະກຳນີ້ຮ່ວມກັນ ທຸກຕະກູນຈະຕ້ອງນາສົ່ງຄົນມາຮ່ວມຂ້າທ່ານສາດສະດາທູດນຳກັນໂດຍຕະກູນລະ 1 ຄົນ ເມື່ອເຮັດແນວນີ້ແລ້ວຕະກູນຂອງທ່ານສາດສະດາທູດກໍ່ບໍ່ກ້າຮຽກຮ້ອງສິດເລືອດເນື້ອໃດໆ ແຕ່ອັລລໍຫ໌ໄດ້ຊ່ວຍເຫລືອທ່ານສາດສະດາທູດ ໂດຍສັ່ງໃຫ້ທ່ານສາດສະດາທູດອົບພະຍົບໜີ້ມາຈາກເມືອງມັກກະຫ໌ອອກມາພ້ອມໝູ່ສະນິດຂອງທ່ານອາບູບັກ ແລະ ແອບເດີນທາງມາເມືອງມາດີນະຫ໌ ທ່ານມາຮອດ "ກຸ່ມບ້ານກຸບາ" ອັນດັບທຳອິດ ແລະໄດ້ສ້າງມັສຍິດຢູ່ບ້ານກຸບາ

'ມັສຍິດ' ຄື ວັດ ຫຼື ໂບດຂອງສາສະໜາອິສລາມ ເປັນສະຖານທີ່ຮ່ວມຕົວກັນເພື່ອການລະມາດ ແລະ ຮ່ຳຮຽນຄຳສອນສາສະໜາ ແລະຍັງເປັນສະຖານທີ່ຮ່ວມນ້ຳໃຈຂອງມຸສລິມເປັນນຳໜຶ່ງດຽວກັນ ການສ້າງມັສຍິດຄືຈຸດເລີ່ມຕົ້ນຂອງການສ້າງຊາດອິສລາມ

ຫລັງຈາກນັ້ນ, ທ່ານສາດສະດາທູດໄດ້ສ້າງມັສຍິດ "ນະບະວີ" ໃນໃຈກາງເມືອງມາດີນະຫ໌ ແລະໄດ້ອອກກົດລະບຽບໃຫ້ຜູ້ອົບພະຍົບຈາກເມືອງມັກກະຫ໌ຈັບຄູ່ກັບຊາວເມືອງມາດີນະຫ໌ເປັນພີ່ນ້ອງກັນເພື່ອຊ່ວຍເຫລືອເຊິ່ງກັນແລະກັນ ນັ້ນກໍ່ຍ້ອນວ່າການສ້າງຄວາມສາພັນໃນໝູ່ປະຊາຊົນໂດຍມີຄວາມຮັກທີ່ມີຕໍ່ອັລລໍຫ໌ ແລະ ທ່ານສາດສະດາທູດເປັນສິ່ງຊຸກຍູ້ ຍອມເປັນຖານຮາກຂອງຊາດທີ່ແຂງແຮງ

ເມືອງມາດີນະຫ໌ຍັງຕ້ອງການການອອກກົດໝາຍກົດລະບຽບຕ່າງໆ ທ່ານສາດສະດາທູດຈຶ່ງຂຽນຮ່າງກົດໝາຍຂຶ້ນມາທີ່ທຸກຄົນໃນເມືອງມາດີນະຫ໌ຈະຕ້ອງໃຊ້ຮ່ວມກັນ, ບໍ່ວ່າຈະເປັນຄົນທີ່ອົບພະຍົບ (ຊາວມຸຮາຈິຣີນ) ຫຼື ຊາວເມືອງມາດີນະຫ໌ຜູ້ຕ້ອນຮັບ (ຊາວອັນຊໍຣ), ຮ່ວມທັງຊາວຍິວທີ່ບໍ່ໄດ້ປ່ຽນຮັບການນັບຖືສາສະໜາອິສລາມ ກົດໝາຍທີ່ທ່ານສາດສະດາທູດອອກນີ້ເປັນຄຳສອນໂດຍກົງຈາກອັລລໍຫ໌ ມີຄວາມສຳຄັນທຽບເທົ່າລັດຖະທຳມະນູນຂອງປະເທດຕ່າງໆ ໃນປະຈຸບັນ ມີທັ້ງກົດໝາຍຄວາມສຳພັນພາຍໃນປະເທດ ແລະ ພາຍນອກປະເທດ, ແລະມີກົດໝາຍຄວບຄຸ້ມທຸກໝວດມາດຕາ ບໍ່ວ່າຈະເປັນທາງດ້ານພິທີ່ທາງສາສະໜາ, ດ້ານການຄ້າຂາຍ, ດ້ານຄອບຄົວ ຫຼື ອາຊະຍະກຳ ຫຼື ການປົກຄອງ

ລັດຖະທຳມະນູນຂອງອິສລາມນີ້ ມີຄວາມຍຸຕິທຳ ແມ້ແຕ່ກັບຜູ້ທີ່ບໍ່ໄດ້ນັບຖືສາສະໜາອິສລາມ ກົດລະບຽບ 4 ຂໍ້ນີ້ທີ່ສາດສະດາທູດໄດ້ຮ່າງເອົາໄວ້ຄື :

1. ສາສະໜາອິສລາມຍຶດຫລັກຄວາມເປັນໜື່ງດຽວຂອງປະຊາຊົນ.

2. ສັງຄົມອິສລາມຕ້ອງຮັບປະກັນຄວາມສະຫງົບສຸກໃຫ້ກັບທຸກຄົນໃນສັງຄົມ ແຕ່ທຸກຄົນກໍ່ຕ້ອງປະຕິບັດຕາມບົດບາດໜ້າທີ່ຂອງຕົນເອງຄືກັນ.

3. ອິສລາມມີຄວາມຍຸຕິທຳແມ້ແຕ່ໃນເລື່ອງທີ່ລະອຽດອ່ອນທີ່ສຸດ.

4. ມຸສລິມຜູ້ນັບຖືສາສະໜາອິສລາມຈະຕ້ອງໃຊ້ຄຳສອນຂອງອັລລໍຫ໌ ແລະ ທ່ານສາດສະດາທູດ ເປັນຫລັກໃນການດຳເນີນຊີວິດ ແລະ ເປັນກົດໝາຍ.

ເມື່ອຕະກູນໃນກຸເຣຊໃນເມືອງມັກກະຫ໌ຮູ້ເລື່ອງຄວາມສາເລັດໃນການກໍ່ຕັ້ງຊາດຂອງທ່ານສາດສະດາທູດທີ່ເມືອງມາດີນະຫ໌ ແລະ ຢ້ານທີ່ຈະສູນເສຍອິດທິພົນຂອງຕົນໃນເມືອງມັກກະຫ໌ ຕະກູນກຸເຣຊຈື່ງໄດ້ຮອບຮ່ວມກອງທັບມາບຸກໂຈມຕີເມືອງມາດີນະຫ໌ຂອງທ່ານສາດສະດາທູດ ແຕ່ທ່ານສາດສະດາທູດກໍ່ໄດ້ຮັບໄຊຊະນະຢູ່ຕະຫຼອດ, ບໍ່ວ່າຈະເປັນສະໜາມຮົບບາດັຣ໌ ຫຼື ສະໜາມຮົບອຸຮຸດ ຫຼື ສົງຄາມສະໜາມເພາະທີ່ຕະກູນກຸເຣຊໄດ້ຮອບຮ່ວມທັບຄົນອາຫຣັບນັບໝື່ນມາປິດອ້ອມເມືອງມາດີນະຫ໌ກໍ່ຕາມ

## 13.3 ການພິຊິດເມືອງມັກກະຫ໌

ຫລັງທີ່ທ່ານສາດສະດາທູດໄດ້ຮັບໄຊຊະນະໃນທຸກໆສະໜາມຮົບ ແລະ ມີຊົນເຜົ່າຫຼາກຫຼາຍໃນຄາບມະຫາສະມຸດອາຫຣັບສົ່ງຄະນະທູດມາຮັບຟັງຄຳສອນ ແລະ ຮັບສາສະໜາອິສລາມຕາມທ່ານສາດສະດາທູດແລ້ວ, ທ່ານສາດສະດາທູດກໍ່ໄດ້ລະດົມພົນຕຽມຕົວເດີນທາງເຄື່ອນທັບມາສູ່ເມືອງມັກກະຫ໌ອັນເປັນບ້ານເກີດຂອງທ່ານ ເມື່ອທ່ານເດີນທາງມາສູ່ເມືອງມັກກະຫ໌ກໍ່ປະກົດວ່າບໍ່ມີໃຜກ້າອອກມາຕໍ່ສູ້ກັບທ່ານ ເພາະທຸກຄົນຢ້ານຈະຖືກທ່ານສາດສະດາທູດແກ້ແຄນທີ່ເຄີຍເຮັດຮ້າຍກັບທ່ານສາດສະດາທູດກ່ອນໜ້ານັ້ນ ແຕ່ທ່ານສາດສະດາທູດເມື່ອເຂົ້າສູ່ເມືອງມັກກະຫ໌ ທ່ານໄດ້ກ່າວວ່າທ່ານອະໄພໃຫ້ທຸກຄົນທັ້ງຫມົດ ແລະ ທ່ານໄດ້ສັ່ງໃຫ້ທຳລາຍຮູບປັ້ນທັ້ງຫມົດໃນຄາບສະມຸດອາຫຣັບໂດຍສະເພາະໃນເມືອງມັກກະຫ໌

ຫຼັງຈາກນັ້ນ, ທ່ານໄດ້ຂະຫຍາຍຂອບເຂດຂອງທ່ານ ໂດຍການສົ່ງສານໜັງສືສານໄປເຖິງກະສັດຂອງອານາຈັກຕ່າງໆ ບໍ່ວ່າຈະເປັນອານາຈັກເປີເຊຍ, ໂຣມັນ, ຫຼື ອາຟຣິກາ ຜູ້ນຳ ຫຼື ກະສັດ

ບ້າງຄົນກໍ່ຕອບຮັບສາສະຫນາອິສລາມໂດຍດີ, ບ້າງຄົນບໍ່ຮັບອິສລາມ ແຕ່ປະຕິບັດຕົນຢ່າງດີຕໍ່ຄະນະທູດຂອງທ່ານສາດສະດາທູດ ເຊັ່ນ ຈັກກະພັດໂຣມັນ, ແຕ່ກະສັດບ້າງຄົນກໍ່ກັບດູຖູກຄະນະທູດຂອງທ່ານສາດສະດາທູດ ເຊັ່ນ ຈັກກະພັດຂອງເປີເຊຍ.

ເມື່ອຊົນເຜົ່າຕ່າງໆ ໃນຄາບສະມຸດອາຫຣັບຮັບຮູ້ເຖິງສາສະຫນາອິສລາມກໍ່ໄດ້ສົ່ງຄະນະທູດເຂົ້າມາຍ້ຽມຍາມທ່ານ ແລະ ເຂົ້າຮັບສາສະຫນາອິສລາມກັບທ່ານ ມີຄະນະທູດຕົວແທນຈາກເຜົ່າຕະກູນຕ່າງໆຢ່າງຫຼາຍກວ່າ 70 ເດີນທາງມາຫາທ່ານຢູ່ເມືອງມາດີນະຫ໌ ຫຼັງຈາກນັ້ນທ່ານສາດສະດາທູດກໍ່ໄດ້ສົ່ງສະຫາຍຊໍຮາບະຂອງທ່ານທີ່ເປັນຜູ້ຮູ້ໄປສັ່ງສອນຢູ່ສະຖານທີ່ຕ່າງໆ ທີ່ຮັບສາສະຫນາອິສລາມ

## 13.4 ເຫດການຮັດອາລາ

ຫລັກການປະຕິບັດທີ່ສຳຄັນທີ່ສຸດຂອງສາສະຫນາອິສລາມ ຂໍ້ 5 ຄື ພິທີ່ການໄປເຮັດຮັຈທີ່ເມືອງມັກກະຫ໌ ຫຼັງຈາກໄດ້ຮັບໄຊຊະນະສຳເລັດແລ້ວ ທ່ານສາດສະດາທູດໄດ້ປະກອບພິທີ່ຮັຈໃນປີຕໍ່ມາ ໂດຍມີຊາວອາຫຣັບຮ່ວມເຮັດພິທີ່ຮັດກັບທ່ານສາດສະດາທູດຫນຶ່ງແສນຄົນ ໃນຄັ້ງນັ້ນ, ທ່ານໄດ້ເຜີຍແຜ່ຄຳສອນຕໍ່ຫນ້າປະຊາຊົນທັ້ງຫມົດ ບໍ່ວ່າຈະໃນເລື່ອງຂອງການຫ້າມກິນດອກເບ້ຍ, ຄວາມສຳຄັນໃນການຍຶດຄຳພີອັລກຸຣອານ ແລະ ສຸນນະແນວທາງຂອງທ່ານເປັນແບບຢ່າງໃຊ້ໃນການດາເນີນຊີວິດ, ການປະຕິບັດຕາມຄຳສອນຂອງທ່ານ ແລະ ຄຳສັ່ງຫ້າມຂອງທ່ານ, ການປົກປ້ອງ ຊີວິດ ຊັບສິ້ນ

ຫຼັງຈາກນັ້ນ, ໃນປີຕໍ່ມາທ່ານສາດສະດາທູດໄດ້ເສຍຊີວິດໃນວັນຈັນທີ່ **12 ເດືອນ ຣໍບິອຸລເອົາວັລ ຫຼື ເດືອນທີ່ 3 ຂອງປະຕິທິນອິສລາມ ເມື່ອທ່ານອາຍຸໄດ້ 63 ປີ**

***ຕໍ່ໄປນີ້ຄືການສະຫລຸບເຫດການທີ່ສາຄັນໃນຊີວິດທ່ານສາດສະດາທູດມຸຮັມມັດ :***

ສາດສະດາມຸຮັມມັດ ລູກຊາຍອັບດຸລລໍຫ໌ ເປັນຊາວອາຫຣັບ ເກີດທີ່ເມືອງມັກກະຮ໌ ປະເທດຊາອຸດີອາລະເບຍ ໃນຕະກູນຜູ້ທີ່ມີກຽດ ສະໄຫມກ່ອນຊາວອາຫຣັບມີການປົກຄອງດ້ວຍລະບົບຊົນເຜົ່າບໍ່ມີຜູ້ນຳກະສັດ ນັບຖືສາສະຫນາຜີປູຊາຮູບປັ້ນ/ຢິວ/ຄຣິດສະຕຽນ ລາວກາພ້າພໍ່ແລະແມ່ແຕ່ຍັງນ້ອຍ ຕອນເປັນໄວລຸ້ນລາວມີຊາຍາວ່າ "ອະມີນ" ແປວ່າຜູ້ຊື່ສັດ ລາວບໍ່ເຄີຍຂີ້ຕົວະແລະມັກບໍລິຈາກ

- ອາຍຸ 25 ປີ ແມ່ຫຍິງຜູ້ຮັ່ງມີຄົນຫນຶ່ງຂໍໃຫ້ທ່ານນາກອງຂະບວນໄປຄ້າຂາຍທີ່ຊີເຣຍ ຜົນງານທ່ານເປັນທີ່ປະທັບໃຈຍ້ອນລາວບໍ່ຄົດໂກງຄືພໍ່ຄ້າຄົນອື່ນ ແລະເນື່ອງຈາກຊື່ສຽງດ້ານມາລະຍາດແລະຄວາມຊື່ສັດ ແມ່ຫຍິງຈຶ່ງຂໍແຕ່ງງານກັບທ່ານ

- ອາຍຸ 40 ປີ ທ່ານມັກຫລີກລ່ຽງການພົບປະຜູ້ຄົນໃນຍຸກນັ້ນທີ່ຫມົກມຸ່ນຢູ່ກັບຄວາມຊົ່ວ ໄປຢູ່ເທິງພູເຂົາ ຈົນມີເທວະດານຳຄຳສັ່ງຈາກພຣະເຈົ້າມາແຕ່ງຕັ້ງທ່ານເປັນສາດສະດາ ຫລື ນະບີ

ລະຫວ່າງນີ້ທ່ານໄດ້ເຜີຍແຜ່ສາສະຫນາກັບຄອບຄົວຄົນໃກ້ຊິດມິດສະຫາຍແບບເປັນຄວາມລັບ

- ອາຍຸ 43 ປີ ທ່ານໄດ້ເຜີຍແຜ່ສາສະຫນາຢ່າງເປີດເຜີຍ ແຕ່ຕ້ອງພົບເຈີການຕໍ່ຕ້ານຢ່າງຮຸນແຮງ ແມ້ວ່າກ່ອນຫນ້ານີ້ ທ່ານຈະເປັນຜູ້ໄດ້ຮັບຄວາມເຄົາລົບມາຕະຫລອດກໍ່ຕາມ ຍ້ອນຄົນມີອິດທິພົນບໍ່ຢາກເສຍອຳນາດ ຜູ້ສັດທາສ່ວນໃຫຍ່ເປັນຄົນຈົນ ຫລື ທາດທີ່ບໍ່ມີອຳນາດອິດທິພົນ ບໍ່ມີໃຜປົກປ້ອງເຮັດໃຫ້ຖືກທໍລະມານຢ່າງຫນັກ

- 47 ປີ ຖືກຕັດອອກຈາກຊຸມຊົນ

- 50 ປີ ເມຍແລະລຸງທີ່ປກປ້ອງລາວມາຕະຫລອດໄດ້ເສຍຊີວິດ ລາວຈຶ່ງລອງໄປເຜີຍແຜ່ສາສະຫນາອີກເມືອງຫນຶ່ງແຕ່ກໍ່ຖືກໄລ່ກັບມາ

- 51 ປີ ມີຊາວເມືອງມາດີນະຫ໌ມາເມືອງມັກກະຫ໌ ທ່ານຈຶ່ງໄດ້ເຜີຍແຜ່ສາສະຫນາໃຫ້ ປະກົດວ່າສ້າງຄວາມປະທັບໃຈໃຫ້ຊາວເມືອງມະດີນະຫ໌

ລະຫວ່າງນີ້ເມືອງມະດີນະຫ໌ສົ່ງທູດມາຫາທ່ານປີລະເທື່ອ ຍ້ອນຢາກຟັງພຣະທາຄາສອນແລະຂໍໃຫ້ທ່ານຍ້າຍໄປຢູ່ເມືອງມາດີນະຫ໌ຍ້ອນເມືອງມະດີນະຫ໌ຮັບອິດສະລາມກັນເກືອບຫມົດແລ້ວ  ທ່ານຈຶ່ງສັ່ງໃຫ້ສະຫາຍທັງຫມົດຍ້າຍໄປກ່ອນ

- 53 ປີ ລາວໄດ້ຍົກຍ້າຍໄປເມືອງມາດີນະຫ໌ເປັນເຫດການທີ່ສາຄັນຫລາຍຂອງສາສະຫນາອິດສະລາມ ທ່ານໄດ້ສ້າງມັດສະຍິດ (ໂບດ) ເພື່ອເປັນສູນຮ່ວມຂອງຊຸມຊົນເມືອງ ແລະຂຽນກົດຫມາຍຂຶ້ນມາຄຸ້ມຄອງປະຊາຊົນ ສ້າງຄວາມເປັນພີ່ນ້ອງ  ພ້ອມເຮັດສົນທິສັນຍາກັບຊາວຢິວ 3 ເຜົ່າໃນເມືອງທີ່ຍັງບໍ່ຮັບອິດສະລາມນຳ

ລະຫວ່າງນີ້ຊາວເມືອງມັກກະຫ໌ສົ່ງທະຫານອອກມາໂຈມຕີຕະຫລອດ ທ່ານສາດສະດາຕ້ອງກຽມຕົວປ້ອງກັນເມືອງ ແລະມັກໄດ້ຮັບໄຊຊະນະສະເໝີ

ເຜົ່າຢິວທັ້ງ 3 ຫັກຫລັງແລະຜິດສົນທິສັນຍາ ແຕ່ມີເຜົ່າຫນຶ່ງທີ່ສາດສະດາແຕ່ງງານກັບລູກສາວຫົວຫນ້າເຜົ່າເຮັດໃຫ້ຄົນທັງເຜົ່າກັບໃຈກັນມາຮັບອິດສະລາມ

ກິດຈະວັດປະຈໍາວັນຂອງທ່ານແມ່ນສອນວິໄນແລະພຣະທໍາ, ຄຸ້ມຄອງປະເທດ, ຢ້ຽມຢາມຄົນເຈັບ, ຢ້ຽມຢາມງານບຸນ, ຢ້ຽມຢາມບ້ານຫ່າງໄກ, ທ່ານເຮັດວຽກແມ້ພຽງແຕ່ງານນ້ອຍ ໆ ໃນເຮືອນຂອງພັນລະຍາທ່ານ, ທ່ານເປັນຜູ້ຊາຍທີ່ທຸກຍາກ, ສະຫາຍຂອງທ່ານບາງຄົນໄດ້ລາຍງານວ່າ ທ່ານອາໄສຢູ່ເປັນເດືອນໂດຍບໍ່ໄດ້ຈູດໄຟເພື່ອເຮັດອາຫານໂດຍອາໄສກິນຫມາກໄມ້

- 59 ປີ ເຮັດສັນຍາສະຫງົບເສິກກັບເມືອງມັກກະຫ໌

ລະຫວ່າງນີ້ລາວສົ່ງຄະນະທູດໄປເຜົ່າອາຫຣັບຕ່າງໆ ແລະອານາຈັກໃຫຍ່ໆ ເຊັ່ນໂຣມັນ ເປີເຊຍເພື່ອເຜີຍແຜ່ສາສະຫນາ   ບາງເຜົ່າກໍ່ສົ່ງຄະນະທູດມາເຊື່ອມສໍາພັນກັບລາວ

- 61 ປີ ເມືອງມັກກະຫ໌ຫັກຫລັງຜິດສັນຍາລັກບຸກໂຈມຕີຊາວມຸດສະລິມ ທ່ານຈຶ່ງປຸກລະດົມພົນທະຫານມາເມືອງມັກກະຫ໌ແຕ່ຊາວເມືອງກັບຕອນຮັບທ່ານ ທ່ານໃຫ້ອະໄພໃຫ້ທຸກຄົນທີ່ເຄີຍທໍາຮ້າຍທ່ານ ການຊະນະເມືອງມັກກະຮ໌ເທື່ອນີ້ບໍ່ມີໃຜສູນເສຍ ຈາກນັ້ນສາດສະດາສັ່ງໃຫ້ທາລາຍຮູບປັ້ນທັ້ງຫມົດ ລະຫວ່າງນີ້ຊາວອາຫຣັບທັ້ງຫມົດຫັນມານັບຖືສາສະຫນາອິດສະລາມ

- ອາຍຸ 63 ປີ ທ່ານສາດສະດາໄດ້ເສຍຊີວິດທີ່ເມືອງມາດີນະຮ໌ ຢູ່ບົນຕັກຂອງເມຍລາວ ແລ້ວສາດສະໜາອິດສະລາມກໍ່ໄດ້ແຜ່ຫລາຍໄປທົ່ວປະເທດອື່ນໆ

## 13.5 ຄວາມສາພັນຂອງທ່ານສາດສະດາທູດມູຮັມຫມັດ ແລະ ພຣະເຢຊູ

ທ່ານສາດສະດາທູດມູຮັມຫມັດ ຄື ສາດສະດາທູດຜູ້ເຜີຍແຜ່ຄໍາສອນຂອງພຣະເຈົ້າຄົນສຸດທ້າຍ ການມາຂອງທ່ານສາດສະດາທູດມຸຮັມມັດໄດ້ຮັບການບອກເລົ່າມາຈາກສາດສະດາທູດຫຼາຍທ່ານກ່ອນຫນ້າທ່ານ,  ບໍ່ວ່າຈະເປັນທ່ານສາດສະດາທູດ "ອີຊາ" ຫຼື ທີ່ຮູ້ຈັກກັນມາຄື "ພຣະເຢຊູ"

ທ່ານສາດສະດາທູດໄດ້ກ່າວວ່າ *"ໃຜທີ່ເຄີຍສັດທາຕໍ່ສາດສະດາທູດອີຊາ ລູກຂອງ ມັຣຍາ (ມາລຽມ),  ຈາກນັ້ນກໍ່ສັດທາຕໍ່ເຮົາ ເຂົາຈະໄດ້ຮັບສອງຜົນລະບຸນ"* ນັ້ນກໍ່ຄື  ໃຜທີ່ເຄີຍນັບຖືສາສະຫນາຄຣິດດັ່ງເດີມ (ບໍ່ແມ່ນສາສະຫນາຄຣິດທີ່ຖືກດັດແປງຄໍາສອນມາແລ້ວ)  ແລ້ວຫລັງຈາກນັ້ນກໍ່ມານັບຖືສາສະຫນາອິສລາມກໍ່ຈະໄດ້ຮັບຜົນລະບຸນສອງປະການນີ້ ທ່ານສາດສະດາທູດໄດ້ກ່າວອີກວ່າ *''ເຮົາຄືຜູ້ທີ່ໃກ້ຊິດສາດສະດາທູດອີຊາ ລູກຂອງ ມາລຽມ ຫຼາຍທີ່ສຸດບໍ່ວ່າໂລກນີ້ ຫຼື ໂລກຫນ້າ''* ບັນດາທ່ານສາດສະດາທູດທັ້ງຫມົດກໍ່ຄືພີ່ນ້ອງກັນ  ມີຄວາມສໍາພັນກັນ  ເຖິງຈະມາຈາກຫຼາຍ

ແມ່ ແລະມີສາສະໜາດຽວກັນ ຄຳກ່າວຂອງທ່ານສາດສະດາທູດ ຫຼື ຮະດີສ ບົດນີ້ເຮັດໃຫ້ເຮົາເຫັນວ່າທ່ານສາດສະດາທູດໃຫ້ກຽດທ່ານສາດສະດາທູດອີຊາພຣະເຢຊູແບບໃດ

ໃນຄຳພີໄບເບິນບົດໂຢຮັນ 14 ຂໍ້ທີ16 ກ່າວວ່າ **"ຝ່າຍເຮົາຈະທູນຂໍພຣະບິດາເຈົ້າ ແລະພຣະອົງຈະຊົງປະທານຜູ້ຊ່ວຍອີກອົງຫນຶ່ງໃຫ້ແກ່ພວກເຈົ້າ ເພື່ອຈະຢູ່ກັບພວກເຈົ້າຕະຫຼອດໄປ"** ຄາວ້າ "ຜູ້ຊ່ວຍ" ຫຼື ພາສາກຣີກວ່າ "ພະລາກະລີໂຕສ" ນັ້ນ ທີ່ແທ້ຄວນຈະແປວ່າ "ຜູ້ໄດ້ຮັບຄາສັນລະເສີນ" ເຊິ່ງຕົງກັບຄາວ່າ "ມຸຮັມມັດ" ໃນພາສາອາຫຣັບ ນັ້ນແປວ່າຄາພີໄບເບິນດັ້ງເດີມຂອງສາສະໜາຄຣິດສະຕຽນບອກເລົ່າຂອງການມາຂອງທ່ານສາດສະດາທູດມຸຮັມມັດໄວ້ແລ້ວ

ໃນບົດໂຢຮັນ 16 ຂໍ້ທີ່ 13 ຮອດຂໍ້ທີ 15 ກ່າວເຖິງວ່າ **"ຖ້າພຣະອົງນັ້ນຄືພຣະວິນຍານແຫ່ງຄວາມຈິງຈະສະເດັດລົງມາ ແລະ ພຣະອົງຈະນາພວກເຈົ້າທັ້ງຫຼາຍໄປສູ່ຄວາມເປັນຈິ່ງທັ້ງຫມົດ ເພາະພຣະອົງຈະບໍ່ກ່າວແຕ່ຄົນດຽວ ແຕ່ພຣະອົງໄດ້ຍິນສຽງສິ່ງໄດ້ກໍ່ຈະກ່າວສິ່ງນັ້ນ ແລະ ຈະປະກາດສິ່ງທັ້ງຫຼາຍໃຫ້ເຈົ້າຮູ້ສິ່ງເຫຼົ່ານັ້ນທີ່ຈະເກີດຂຶ້ນພຣະອົງຈະໃຫ້ເຮົາຮັບສະຫງ່າລາສີເພາະພຣະອົງຈະນໍາສິ່ງທີ່ເຮົາກ່າວມານັ້ນມາປະກາດໃຫ້ແກ່ພວກເຈົ້າທັ້ງຫຼາຍ."** ຄຸນລັກສະນະທີ່ຄາພີໄບເບິນຮ໌ກ່າວໄວ້ນີ້ສອດຄ່ອງທຸກປະການກັບຄຸນລັກສະນະຂອງທ່ານສາດສະດາທູດມຸຮັມມັດ

ໃນຄຳພີໄບເບິນ ບົດບານາບັຮ 22 ກ່າວວ່າ **"ເລື່ອງແບບນີ້ຈະມີຢູ່ຕໍ່ໄປຈົນຮອດການມາຂອງທ່ານສາດສະດາທູດມຸຮັມມັດ ເມື່ອທ່ານມາທ່ານຈະມາເປີດເຜີຍຄວາມບໍ່ຍຸຕິທາທີ່ມີຕໍ່ຜູ້ສັດທາຕໍ່ສາສະໜາຂອງພຣະເຈົ້າ."** ຈຶ່ງຮູ້ວ່າບົດບານາບັຮໃນຄາພີໄບເບິນນີ້ບໍ່ແມ່ນທີ່ຍອມຮັບຂອງຊາວຄຣິດສະຕຽນໂດຍສ່ວນໃຫຍ່ ເພາະກ່າວເຖິງການມາຂອງທ່ານສາດສະດາທູດມຸຮັມມັດຢ່າງແທ້ຈິງ

ນອກຈາກນີ້, ຍັງມີການຄົ້ນພົບໃນບົດເອເຊຢາຍຸກກ່ອນວ່າມີຂໍ້ຄວາມວ່າ **"ເຮົາໄດ້ໃຫ້ເຈົ້າຊື່ມຸຮັມມັດ ໂອ້ມຸຮັມມັດ! ພຣະວິນຍານບໍລິສຸດຂອງພຣະເຈົ້າ ຊື່ຊອງເຈົ້າຈະມີຕະຫຼອດໄປ"** ແລະອີກຂໍ້ຄວາມໃນບົດດຽວກັນວ່າ **"ສິ່ງທີ່ເຮົາໄດ້ປະທານແກ່ເຂົາ ເຮົາບໍ່ໄດ້ປະທານໃຫ້ຜູ້ອື່ນ ຜູ້ຊື່ວ່າອະຫ໌ມັດ, ພຣະເຈົ້າໄດ້ສັນລະເສີນເຂົາຢ່າງດີທີ່ສຸດໃນພື້ນໂລກ ສັບພະສິ່ງທັ້ງຫຼາຍຕ່າງເບີກບານຖະວາຍຄວາມເປັນຫນຶ່ງດຽວໃຫ້ແກ່ພຣະເຈົ້າໃນທຸກໆ ພູເຂົາໃນກຽດພຣະອົງ"**

## 13.6 ທ່ານສາດສະດາທູດ "ນະບີມຸຮັມມັດ" ໃນຖານະບຸກຄົນຜູ້ມີອິດທິພົນອັນດັບຫນຶ່ງຂອງໂລກ.

ເມື່ອປີ 1978 “ໄມເຄີນ ເອຊ ຮາທຣ໌” ນັກດາລາສາດຊາວອັງກິດໄດ້ຕິດພິມຫນັງສື "100 ບຸກຄົນຜູ້ມີອິດທິພົນທີ່ສຸດຂອງໂລກ" ໂດຍໄດ້ເລືອກໃຫ້ທ່ານສາດສະດາທູດມຸຮັມມັດຂຶ້ນເປັນອັນດັບທີ່ຫນຶ່ງຂອງໂລກດ້ວຍຫຼາຍເຫດຜົນ ຫນຶ່ງໃນນັ້ນຄືທ່ານສາດສະດາທູດມຸຮັມມັດໄດ້ຫຼໍ່ຫຼອມຮ່ວມໃຈຊາວອາຫລັບທີ່ເຄີຍແຕກແຍກ ຍາດດິນແດນຂ້າກັນເອງ ຈົນເປັນຫນຶ່ງດຽວສາມາດເອົາໄຊຊະນະກອງທັບທີ່ຫຍິ່ງໃຫຍ່ທີ່ສຸດໃນໂລກຍຸກນັ້ນຄືໂຣມັນ ແລະ ເປີເຊຍໄດ້. ບໍ່ແມ່ນແຕ່ຊາວອາຫລັບ, ແຕ່ຍັງໄດ້ຮ່ວມຈິດໃຈຂອງຄົນຈາກຫຼາຍຊົນຊາດໃຫ້ເປັນຫນຶ່ງດຽວພາຍໃຕ້ຄຳສອນຂອງສາສະຫນາອັນດຽວກັນ, ລະມາດຫັ້ນຫນ້າໄປທາງທິດດຽວກັນ, ແລະສ້າງໃຫ້ເກີດເຫດການສຳຄັນຂອງໂລກຢ່າງຫຼວງຫຼາຍ

ຖ້າຫາກນັກຂ່າວ, ນັກຽນ, ນັກປະຫວັດສາດ ແລະ ນັກວິໄຈ ທີ່ເບິ່ງການວິເຄາະທີ່ເປັນສາຍກາງເຖິງຊີວະປະຫວັດຂອງທ່ານສາດສະດາທູດມຸຮັມມັດຕັ້ງແຕ່ໄວເດັກນ້ອຍ, ໄວຫນຸ່ມ ຈົນຮອດ ໄວຜູ້ໃຫຍ່ ແລະ ຂະນະທີ່ເຮັດຫນ້າທີ່ເປັນສາດສະດາທູດ ຈົນຮອດມື້ທ່ານເສຍຊີວິດແນ່ນອນ ພວກເຂົາຈະຄົ້ນພົບວ່າຊີວະປະຫວັດຂອງທ່ານສາດສະດາທູດມູຮັມຫມັດນັ້ນເຕັ້ມໄປດ້ວຍຄວາມເມດຕາ, ຄວາມດີ, ຄວາມຊື່ສັດ, ຄວາມຈິ່ງໃຈ, ຄວາມນອບນ້ອມ ແລະຄວາມຫຍິ່ງໃຫຍ່ຢູ່ພາຍໃນຄົນດຽວກັນ

## 13.7 ຂໍ້ມູນການພັນລະນາຂອງທ່ານສາດສະດາທູດມຸຮາມັດ.

ທັ້ງຫມົດໂດຍລະອຽດໄດ້ຖືກບັນທຶກໄວ້ຕັ້ງແຕ່ຍຸກທ່ານສາດສະດາທູດຈົນຮອດປະຈຸບັນ ໂດຍເຫດນີ້, ນັກປັດສະຍາຊາວອິນເດຍສາດາຈານ "ລາມາກຣິດສະນະ" ໄດ້ຂຽນຫນັງສືຂອງທ່ານວ່າ "ມຸຮັມມັດ ສາດສະດາທູດ ນະບີຂອງອິສລາມ" ໂດຍໄດ້ກ່າວວ່າ : "ສາດສະດາທູດນັ້ນເປັນແບບຢ່າງທີ່ສົມບູນແບບຂອງການເປັນມະນຸດທຳມະດາຄົນຫນຶ່ງ"

ດຣ. ລາມາກຣິດສະນະ ຍັງໄດ້ກ່າວອີກວ່າ : "ເປັນເລື່ອງທີ່ຍາກຫຼາຍທີ່ຈະເຂົ້າເຖິງຕົວຕົນທີ່ແທ້ຈິງຂອງທ່ານສາດສະດາທູດມູຮັມຫມັດ ເພາະທ່ານມູຮັມຫມັດນັ້ນເປັນທັ້ງຜູ້ເຜີຍແຜ່ສາສະໜາ, ເປັນທັ້ງນັກຮົບ, ເປັນທັ້ງພໍ່ຄ້າ, ເປັນເຈົ້າຫນ້າທີ່ລັດ, ເປັນຜູ້ຕັກເຕື່ອນ, ເປັນຜູ້ຟື້ນຟູສັງຄົມ, ເປັນຜູ້ເບິ່ງແຍ້ງເດັກກໍ່າພ້າ, ເປັນຜູ້ເບິ່ງແຍ້ງຄົນອ່ອນແອແມ່ມາຍ, ເປັນຜູ້ພິພາກສາຕັດສິ້ນ, ເປັນຜູ້ປົກຄອງ."

ທ່ານສາດສະດາທູດມູຮັມຫມັດເປັນທຸກໆ ດ້ານທີ່ກ່າວມານີ້ ແລະ ນອກເຫນືອຈາກນີ້ເທົ່ານັ້ນບໍ່ພໍທ່ານຍັງເດັ່ນສົມບູນແບບທີ່ສຸດໃນທຸກດ້ານ ນອກຈາກນີ້ນັກປະຫວັດສາດຍັງໄດ້ບັນທຶກໄວ້ອີກວ່າ:

ທ່ານສາດສະດາທູດໃນຊ່ວງໄລຍະເວລາສັ້ນໆ 23 ປີ ທ່ານສາມາດທີ່ຈະປ່ຽນຄາບສະມຸດອາຫຣັບຈາກສັງຄົມທີ່ວຸ້ນວາຍ ມາສູ່ສັງຄົມທີ່ເປັນລະບຽບໄດ້,

- ປ່ຽນຈາກການເຄົາລົບບູຊາຮູບປັ້ນ ມາເປັນການນັບຖືພຣະເຈົ້າອົງດຽວ,

- ຈາກຄວາມວຸ້ນວາຍ ແລະ ສົງຄາມຂ້າຟັນ ມາສູ່ຄວາມເປັນພີ່ນ້ອງນຳຫນຶ່ງດຽວກັນ,

- ປ່ຽນຈາກສິນທຳອັນເຊື່ອມໂຊມ ບໍ່ວ່າຈະເປັນນ້ຳເຫຼົ້າເມົາຢາ, ໂສເພນີ…ສູ່ຈາລິຍະທຳອັນດີງາມ,

- ປ່ຽນຈາກກຸ່ມຄົນທີ່ບໍ່ມີອາລິຍະທຳວິຊາການ ສູ່ຜູ້ເປັນເຈົ້າຂອງອາລິຍະທຳ ແລະ ໂລກແຫ່ງວິຊາການອັນດັບໂລກຂອງຍຸກກາງນັ້ນ.

ນັບຕັ້ງແຕ່ໂລກຖືກກຳເນີນມາບໍ່ເຄີຍມີການບັນທຶກໃດໆ ວ່າຈະມີຜູ້ໃດສາມາດເຮັດແບບນີ້ໄດ້ໃນໄລຍະເວລາສັ້ນໆ ນີ້ ຜູ້ທີ່ເຮັດແບບນີ້ໄດ້ຕ້ອງເປັນຜູ້ທີ່ມີຄວາມສາມາດ ແລະ ເປັນຄວາມມະຫັດສະຈັນຂອງໂລກ ເມື່ອທ່ານສາດສະດາທູດມີປິຕິສຳພັນກັບຜູ້ໃດ ທຸກຄົນຈະເຫັນເຖິງມາລະຍາດຂອງທ່ານ, ຄວາມເມດຕາ, ຄວາມຊື່ສັດ, ຄວາມຈິງໃຈ, ຄວາມເອື້ອເຟື້ອເພື່ອແຜ່, ຄວາມນອບນ້ອມ, ຄວາມໃຈບຸນ, ຄວາມມີການໃຫ້ອະໄພ, ຄວາມອົດທົນ ແລະ ສິລະທາມາລະຍາດອື່ນອີກຫຼວງຫຼາຍທີ່ທ່ານມີ

ທີ່ກ່າວມານີ້ບໍ່ແມ່ນຄຳເວົ້າແບບລອຍໆ ທີ່ໃຜຈະເວົ້າອ້າງຂຶ້ນມາກໍ່ໄດ້ ແຕ່ເຕັມໄປດ້ວຍຫລັກຖານໃນຮູບແບບການບັນທຶກຣະດິສຂອງທ່ານສາດສະດາທູດເຊິ່ງຖ່າຍທອດກັນມາທຸກຍຸກທຸກສະໄຫມໃນຮູບແບບຂອງຫນັງສື ແລະ ການທ່ອງຈຳ ກໍ່ໃຫ້ເຮົາມາເບິ່ງຕົວຢ່າງດຽວເທົ່ານັ້ນ ກໍ່ຄືເຫດການທີ່ທ່ານສາດສະດາທູດກັບມາຕໍ່ສູ້ເອົາໄຊຊະນະເມືອງມັກກະຫ໌ສຳເລັດບໍ່ດົນກ່ອນທີ່ທ່ານຈະເສຍຊີວິດ

ທ່ານໄດ້ປະຕິບັດແບບໃດກັບຊາວເມືອງທີ່ເຄີຍເປັນສັດຕູກັບທ່ານ, ເຄີຍຕໍ່ຕ້ານຄົນຂອງທ່ານ, ພະຍາຍາມລັກຂ້າທ່ານ, ຂັບໄລ່ທ່ານ ແລະ ຍາດມິດເພື່ອນຝູງຂອງທ່ານອອກຈາກເມືອງມັກກະຫ໌ ບ້ານເກີດເມືອງນອນ, ໃຫ້ຕ້ອງລະຖິ້ມຊັບສິນ ແລະ ຄອບຄົວ? ທ່ານສາດສະດາທູດປະຕິບັດແບບໃດກັບຜູ້ທີ່ເຄີຍເຮັດແບບນີ້ກັບທ່ານໃນຂະນະທີ່ທ່ານມີອຳນາດທັງຫມົດໃນມື ທ່ານສາມາດເຮັດຫຍັງກໍ່ໄດ້?

ທ່ານສາດສະດາທູດໄດ້ຮອບຮ່ວມຄົນທັ້ງຫມົດທີ່ເຄີຍເປັນສັດຕູກັບທ່ານມາ ທຸກຄົນຕ່າງຢ້ານກົວ ແລະ ມາຮ່ວມຕົວຕາມຄຳສັ່ງຂອງທ່ານສາດສະດາທູດມຸຮັມມັດ ທ່ານສາດສະດາທູດຖາມພວກເຂົາວ່າ **"ຄິດບໍ່ຂ້ອຍຈະເຮັດແບບໃດກັບພວກເຈົ້າ?"**

ພວກເຂົາຕອບວ່າ **"ທ່ານເປັນພີ່ນ້ອງຜູ້ປະເສີດ ລູກຂອງຜູ້ປະເສີດ"**

ສາດສະດາທູດຈຶ່ງກ່າວຕອບວ່າ **"ພວກທ່ານໄປຊະ, ພວກທ່ານໄດ້ຮັບການອະໄພໂທດ ແລະ ຖືກປົດປ່ອຍແລ້ວ."**

ຜູ້ອ່ານລອງຄິດເບິ່ງວ່າມີໃຜອີກບໍ່ ທີ່ມີໃນໜ້າປະຫວັດສາດທີ່ເຮັດແບບນີ້? ທ່ານສຳພັດເຖິງຄວາມເມດຕານີ້ບໍ່? ສາດສະດາຈານ ດຣ ລາມາກຣິດສະນະ ໄດ້ກ່າວເຖິງເຫດການນີ້ວ່າ : *"ທ່ານສາດສະດາທູດພະຍາຍາມຫລີກລ້ຽງການແກ້ແຄ້ນ ແຕ່ທ່ານພະຍາຍາມເບິ່ງເລື່ອງທີ່ທ່ານມີຕໍ່ສັດຕູຂອງທ່ານດ້ວຍສາຍຕາເປັນກາງ ແລະ ໃຫ້ອະໄພພວກເຂົາ ແຖມທີ່ຈະຍົກຈັບດາບອອກມາລົງໂທດ ໂດຍເຫດນີ້, ຊາວເມືອງມັກກະຫ໌ທັງໝົດຈຶ່ງເຂົ້າຮັບສາສະໜາອິສລາມ."*

ຍ້ອນມາເບິ່ງໂລກປະຈຸບັນ ເມື່ອເຮົາອ່ານຂ່າວຕ່າງປະເທດສົງຄາມຕ່າງໆ ທີ່ເກີດຈາກຊາດມະຫາອຳນາດທີ່ເຂົ້າໄປໂຈມຕີ ຮຸກຮານປະເທດທີ່ທຸກຍາກທຸກມື້ນີ້

- ຊາດທີ່ຖືກຮຸນຮານເຫຼົ່ານີ້ຕ້ອງດອຍການພັດທະນາແບບໃດ?

- ເດັກ ຜູ້ຫຍິງ ຄົນເຖົ້າແກ່ ຖືກປະຕິບັດແບບໃດ?

- ໃນສະໄໝຍຸກລ່າອານານິຄົມ ສັບພະຍາກອນຂອງປະເທດໄດ້ຖືກດຶງດູດໄປເທົ່າໃດ?

- ບ້ານເຮືອນຈັກຫຼັງຕ້ອງຖືກລະເບີດຖິ້ມຈາກເຄື່ອງບິນ?

- ຮ່າງກາຍທີ່ໄຮ້ວິນຍານເທົ່າໃດທີ່ຕ້ອງຖືກຝັງ ອັນເປັນສົງຄາມຈາກປະເທດມະຫາອານາດນັ້ນ?

ຂໍໃຫ້ເຮົານຶກສະພາບສົງຄາມໂລກຄັ້ງທີ 2, ການສັ່ງຫານຂ້າໝູ່ໃນຣັດເຊຍ, ໃນຍີປຸ່ນ, ແລະສົງຄາມທີ່ມີຜູ້ເສຍຊີວິດຢ່າງຫຼວງຫຼາຍເປັນອັນດັບຕົ້ນໆ ຂອງໂລກ…ບໍ່ມີສາສະໜາອິສລາມເຂົ້າໄປຫຍຸ້ງກ່ຽວທັງໝົດ ນັ້ນຍ້ອນວ່າທະຫານມຸສລິມປະຕິບັດຕາມທີ່ທ່ານສາດສະດາທູດມຸຮັມມັດໄດ້ປະຕິບັດໄວ້ ເມື່ອເຮົາຮູ້ເຖິງຄວາມໂຫດຮ້າຍ ແລະ ໂສກອະນາດຕະກຳທີ່ເກີດຂຶ້ນຈາກຊາດຕ່າງໆ ໃນປະຈຸບັນນີ້ ແລ້ວເບິ່ງໃນອີກມຸມໜຶ່ງ ເຮົາຈະພົບຄວາມເມດຕາທຳ ແລະ ສິນທາອັນສູງໃຫຍ່ທີ່ຢູ່ໃນຕົວຕົນຂອງທ່ານສາດສະດາທູດມຸຮັມມັດ

ອັລລໍຫ໌ໄດ້ກ່າວວ່າ **"ເຮົາບໍ່ໄດ້ສົ່ງທ່ານ (ສາດສະດາທູດມຸຮັມມັດ) ມາເພື່ອອື່ນໃດນອກຈາກເພື່ອເປັນພຣະເມດຕາໃຫ້ແກ່ສັບພະສິ່ງທັງຫຼາຍ."** (ອັລອັມບີຍາ : 107)